# ຕອບປັນຫາ ລາໃຈຜູ້ໃຝ່ທັມ

## Question, Good Answer

ຂຽນໂດຍ : Ven.S.Dhammika ( ສ. ທັມມິກະ )
ແປໂດຍ : ພຣະ ໄຊຍະເດດ ວົງໂສພາ

Printed in Taiwan for free distribution by
**The Corporate Body of Buddha Educational Foundation**

# ຕອບບັນຫາຄາໃຈຜູ້ໄຝ່ທັມ

# Good Question, Good Answer

ຂຽນໂດຍ : ພຣະອາຈານ ສ.ທັມມິກະ Ven.S.Dhammika
ແປລາວໂດຍ : ພຣະໄຊຍະເດດ ວົງໂສພາ (ຊ. ວົງໂສພາ)
ບັນນາທິການພາສາລາວໂດຍ : ດຣ. ທອງຄຳ ອ່ອນມະນີສອນ

ພິມຄັ້ງທີ 1 : ເດືອນມິຖຸນາ, 2009
ພິມທີ່ : ໂຮງພິມສີສະຫວາດ
ຕາມທະບຽນ: 009ພຈ31032009
ຈຳນວນ :  4.000 ເຫຼັ້ມ
ອຸປະກຳໂດຍ: ເພື່ອນສະຫະທຳມິກຊາວມາເລເຊຍ
© ສະຫງວນລິຂະສິດ *ຜົນງານແປລາວ ໂດຍ ຊ.ວົງໂສພາ*
ອອກແບບປົກພິມແລະຈັດໜ້າໂດຍ ຊ. ວົງໂສພາ

First Printing: 4,000 copies February 2010
Kindly Sponsored by Malaysian Dhamma Friends

Second Printing: 0000 copies
Printed for free distribution
**The Corporate Body of Buddha Educational Foundation**
11F; 55 Hang Chow South Road Sec1, Taipei, Taiwan, R.O.C.
Tel: 886-2-23951198, Fax:886-2-23913415
Email:overseas@budaedu.org.tw
Website: http://www.budaedu.org.tw

This book is strictly for free distribution; it is not to be sold.

Dedicated to
All mothers on earth

ຂໍອຸທິດແດ່ ມານດາທຸກທ່ານໃນໂລກ



# ຄຳນຳໃນການພິມຄັ້ງທີ ໔ ສະບັບປັບປຸງໃໝ່

ເມື່ອ ໑໗ ປີທີ່ຜ່ານມາ ໄດ້ມີກຸ່ມຂອງນັກສຶກສາພຸດທະສາສະໜາ ຈາກມະຫາວິທະຍາໄລສິງກະໂປ ຈຳນວນໜຶ່ງມາຫາອາຕະມາ ຕ່າງກໍພາກັນຈົ່ມເຖິງຄວາມຍາກລຳບາກວ່າ ພວກເຂົາໄດ້ພົບກັບຄວາມຫຍຸ້ງຍາກໃນການຕອບຄຳຖາມກ່ຽວກັບພຣະພຸດທະສາສະໜາ ເຊິ່ງມັກຈະມີຄົນຖາມພວກເຂົາເຈົ້າຢູ່ເລື້ອຍໆ. ອາຕະມາໃຫ້ພວກເຂົາເຈົ້າຍົກຕົວຢ່າງບາງຄຳຖາມເຫຼົ່ານີ້ມາເມື່ອ ພວກເຂົາຍົກມາອາຕະມາຮູ້ສຶກແປກໃຈທີ່ພວກໄວໜຸ່ມຊາວພຸດທັງສະຫຼາດ ແລະມີການສຶກສາດີ ຄວນຈະມີຄວາມຮູ້ແດ່ເລັກນ້ອຍກ່ຽວກັບສາສະໜາຂອງຕົນ ພວກເຂົາເຈົ້າຍັງມີຄວາມລັງເລໃຈ ກ່ຽວກັບການອະທິບາຍຕໍ່ຄົນອື່ນ. ອາຕະມາ ໄດ້ບັນທຶກຄຳຖາມຫຼາຍຢ່າງຈາກພວກເຂົາແລ້ວຫາມາເພີ່ມໃສ່ອີກ ດ້ວຍເຫດນີ້ ຈຶ່ງເກີດມີປຶ້ມ ***ຕອບບັນຫາຄາໃຈຜູ້ໄຝ່ທັມ"*** ຂຶ້ນມາສູ່ສາຍຕາທ່ານຜູ້ອ່ານ. ສິ່ງທີ່ພິມຂຶ້ນມາ ໝາຍຄວາມວ່າ ສ່ວນໃຫຍ່ແມ່ນ ເນັ້ນໃສ່ຜູ້ອ່ານຊາວສິງກະໂປ, ແຕ່ສິ່ງທີ່ເຮັດໃຫ້ອາຕະມາແປກໃຈ ແລະພໍໃຈນັ້ນກໍຄືວ່າ ໜັງສືເຫຼັ້ມ ນີ້ໄດ້ໄປເຖິງຜູ້ອ່ານລະດັບສາກົນ. ໄດ້ມີການຕີພິມເປັນພາສາອັງກິດຈຳນວນ ໑໕໐. ໐໐໐ ກ່ວາເຫຼັ້ມ ແລະຖືກພິມຄືນໃໝ່ອີກເປັນຈຳນວນຫຼາຍຄັ້ງໃນສະຫະລັດອາເມຣິກາ, ມາເລເຊຍ, ອິນເດຍ, ໄທ, ສີລັງກາ ແລະໄຕ້ຫວັນ. ນອກຈາກນີ້ ຍັງໄດ້ຖືກແປອອກເປັນ ໑໔ ພາສາ ເຊິ່ງສ່ວນໃຫຍ່ເປັນພາສາອິນໂດເນເຊຍ ແລະພາສາສະເປນ. ໃນການພິມສະບັບປັບປຸງ ແລະເພີ່ມເຕີມຄັ້ງທີ ໔ ນີ້, ອາຕະມາໄດ້ເພີ່ມ ຄຳຖາມເຂົ້າໄປຕື່ມອີກ ແລະຫວັງວ່າ ໄດ້ເພີ່ມຄຳຕອບດີໆເຂົ້າໄປ. ນອກຈາກ ນີ້ຍັງໄດ້ເພີ່ມບົດເຂົ້າ ໄປອີກ ຊຶ່ງປະກອບດ້ວຍພຸດທະພາສິດຈຳນວນໜຶ່ງ. ຂໍໃຫ້ປຶ້ມນ້ອຍໆຫົວນີ້ ສືບຕໍ່ກະຕຸ້ນຄວາມສົນໃຈໃນພຸດທະທຳຕໍ່ໄປ.

ສ. ທັມມິກະ

ສິງກະໂປ, ໔໐໐໕

# ຄຳນຳໃນການພິມຄັ້ງທີ ໕

ໃນຫຼາຍໆປີຜ່ານມາ ອາຕະມາໄດ້ຮັບຈົດໝາຍ ຈຳນວນຫຼາຍສະບັບ ຈາກຜູ້ອ່ານທົ່ວໂລກ ຂໍຮ້ອງໃຫ້ອາຕະມາຕື່ມຄຳຖາມເຂົ້າໄປອີກ ແລະກໍເຮັດໃຫ້ອາຕະມາມີແຮງບັນດານໃຈ ທີ່ຈະຕອບສະໜອງຕາມຄຳຂໍນັ້ນ. ປັດຈຸບັນ ຈຳນວນພິມຂອງ ***"ຕອບບັນຫາຄາໃຈຜູ້ໄຝ່ທັມ"*** ໄດ້ເພີ່ມຂຶ້ນເຖິງ ໔໔໖. ໐໐໐ ໄດ້ຖືກພິມອອກເປັນພາສາອັງກິດ ແລະພາສາອື່ນໆເປັນຈຳນວນຫຼາຍຄັ້ງ. ອາຕະມາມີ ຄວາມປິຕິຍິນດີຫຼາຍທີ່ສາມາດຊ່ວຍເຫຼືອຜູ້ອື່ນ ເພື່ອໃຫ້ເຂົ້າໃຈໃນຄຳສອນຂອງພຣະພຸດທະເຈົ້າ ຕື່ມອີກ.

ສ. ທັມມິກະ

ສິງກະໂປ, ກັນຍາ, ໔໐໐໗

# ຄຳເຫັນຂອງຜູ້ຂຽນ

ເຖິງແມ່ນວ່າປະເທດລາວ ໄດ້ເປັນດິນແດນແຫ່ງພຣະພຸດທະສາສະໜາ ມາຫຼາຍສະຕະວັດ ແລ້ວກໍຕາມ ແຕ່ກໍບໍ່ໝາຍຄວາມວ່າທຸກຄົນຈະເຂົ້າໃຈພຸດທະທຳ(ພຸດທະທັມມະ)ເປັນຢ່າງດີ. ຄວາມຈິງກໍເປັນເຊັ່ນດຽວກັນກັບບັນດາປະເທດອື່ນໆທີ່ນັບຖືພຣະພຸດທະສາສະໜາ. ດວ້ຍເຫດນີ້ເອງ ໃນປີ ໑໙໘໗ ຂ້າພະເຈົ້າໄດ້ເລືອກເອົາຫຼາຍຫົວຂໍ້ທີ່ຄວນຮູ້ກ່ຽວກັບທຳມະ(ທັມມະ) ແລະຫຼາຍຄຳຖາມທີ່ຖືກຖາມຢູ່ເລື້ອຍໆ ເພື່ອຮີບໂຮມເປັນແບບຄຳຖາມ ແລະຄຳຕອບ ແລະໄດ້ພິມອອກມາ. ນັບແຕ່ນັ້ນເປັນຕົ້ນມາ ປື້ມນ້ອຍຫົວນີ້ ກໍໄດ້ຖືກແປອອກເປັນ ໑໙ ພາສາ ແລະຖືກພິມເຜີຍແຜ່. ປື້ມທີ່ທ່ານກຳລັງຖືຢູ່ນີ້ ເປັນສຳນວນແປພາສາລາວໂດຍ ເອກັກຄະຈິດໂຕ ພິກຂຸ(ຊ.ວົງໂສພາ) ຂ້າພະເຈົ້າຮູ້ສຶກດີໃຈ ແລະຍິນດີອະນຸຍາດໃຫ້ພິມເຜີຍແຜ່.

ທ່ານພຣະອາຈານ ທັມມິກະ

໑໒ ທັນວາ ໒໕໕໑

# ຄຳເຫັນ

# ຂອງຜູ້ອຳນວຍການວິທະຍາໄລສົງ

ເມື່ອຂ້າພະເຈົ້າໄດ້ອ່ານປື້ມທັມມະ "**ຕອບບັນຫາຄາໃຈຜູ້ໄຝ່ທັມ**" ເຫັນວ່າມີປະໂຫຍດ ແລະມີສາລະດີໆຫຼາຍຢ່າງທີ່ຄວນສຶກສາ ຫວັງວ່າຈະເກີດປະໂຫຍດແກ່ທ່ານຜູ້ອ່ານທັງຫຼາຍ. ຂໍຂອບໃຈນຳພຣະອາຈານ ສະວັດສະຕິ ທັມມິກະ(ຜູ້ຂຽນ) ແລະພຣະໄຊຍະເດດ ວົງໂສພາ (ຜູ້ແປ)ທີ່ໄດ້ມອບຜົນງານດີໆຢ່າງນີ້ເອົາໄວ້ ຂໍໃຫ້ທ່ານທັງສອງຈົ່ງຈະເລີນດ້ວຍ ອາຍຸ ວັນນະ ສຸຂະ ພະລາ ແລະງອກງາມໄພບູນ ໃນພຣະບໍວອນພຸດທະສາສະໜາ.

ວຽງຈັນ, ວັນທີ ໑໘ ພຶດສະພາ ໒໕໕໑ (໒໐໐໙)

**ຜູ້ອຳນວຍການວິທະຍາໄລສົງ(ອົງຕື້)**



ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ

# ຄຳພາລົບ

# ຂອງ

# ດຣ.ທອງຄຳ ອ່ອນມະນີສອນ



ຂ້າພະເຈົ້າຮູ້ສຶກພາກພູມໃຈ ແລະຖືເປັນບຸນກຸສົນຢ່າງຍິ່ງ ທີ່ໄດ້ຮັບຄຳຮ້ອງຂໍໃຫ້ປະກອບສ່ວນເປັນທີ່ປຶກສາ ແລະບັນນາທິການ ການແປປຶ້ມທີ່ມີຊື່ວ່າ: ***"ຕອບບັນຫາຄາໃຈຜູ້ໄຝ່ທັມ"*** ເຊິ່ງແປອອກເປັນພາສາລາວໂດຍ ພຣະອາຈານ ໄຊຍະເດດ ວົງໂສພາ.

ປຶ້ມດັ່ງກ່າວນີ້ ຂຽນຂຶ້ນໂດຍ ພຣະອາຈານ ສະວັດສະຕິ ທັມມິກະ ຊາວອອດສະເຕຣເລຍ ເຊິ່ງບັນຈຸເນື້ອໃນພຸດທະທຳທີ່ສຳຄັນ ໑໔ ຫົວຂໍ້ໃຫຍ່ເຊັ່ນ: - ພຣະພຸດທະສາສະໜາແມ່ນຫຍັງ? - ພຣະພຸດທະສາສະໜາ ແລະຄວາມເຊື່ອກ່ຽວກັບພຣະເຈົ້າ - ການເກີດໃໝ່ - ການຝຶກສະມາທິ...ໃນບັນດາປະເດັນຫຼັກເຫຼົ່ານີ້ ພຣະອາຈານ ສ.ທັມມິກະ (ຜູ້ຂຽນ) ໄດ້ຮີບໂຮມເອົາຄຳຖາມທີ່ໜ້າຮູ້ໜ້າສົນໃຈຈາກຊາວອາຊີ ແລະຊາວຕາເວັນຕົກ ທີ່ຕັ້ງກະທູ້ຖາມຂຶ້ນດ້ວຍຄວາມຢາກຮູ້ຢາກເຫັນຈຳນວນ ໑໓໔ ຂໍ້ ໂດຍໄດ້ໃຫ້ຄຳຕອບຢ່າງສະຫຼາດສະຫຼຽວ ກະທັດຮັດໜັກແໜ້ນສົມເຫດສົມຜົນ ແລະເປັນສັດຈະທັມໄປທຸກໆຂໍ້. ນອກນີ້ ເພິ່ນຍັງມວ້ນທ້າຍດວ້ຍພຸດທະສຸພາສິດອັນເລີກລ້ຳຍອດຍິ່ງ ເຊິ່ງຄວນທີ່ຈະຈົດຈຳຈື່ໄວ້ເປັນແວ່ນແຍງຊີວິດຈຳນວນ ໓໖ ບົດອີກດ້ວຍ.

- ປຶ້ມ "**ຕອບບັນຫາຄາໃຈຜູ້ໄຝ່ທັມ**" ເປັນແສງສະຫວ່າງສ່ອງເຍືອງເສັ້ນທາງສັດຈະທຳ ຫຼືຂັດຂ້ອງສົງໄສ ກ່ຽວກັບພຣະພຸດທະສາສະໜາ.
- ປຶ້ມນີ້ ຈະຕອບບັນຫາຕ່າງໆ ທີ່ທ່ານໄດ້ຖາມ ຫຼືຢາກຈະຖາມ ແຕ່ຜ່ານມາບໍ່ໄດ້ຮັບຄຳຕອບທີ່ແຈ່ມແຈ້ງຊັດເຈນເທື່ອ.
- ຄົນໄວໜຸ່ມ ບ່າວສາວ ນັກຮຽນນັກສຶກສາ ປັນຍາຊົນຄົນໄຝ່ການສຶກສາ ຫາຄວາມຮູ້ທີ່ມີຄວາມເຊື່ອຖືແບບສົມເຫດສົມຜົນ ບໍ່ຍອມຮັບຄຳຕອບໃດໆທີ່ພົວເພີນ ແລະບໍ່ມີເຫດຜົນນັ້ນ ເມື່ອອ່ານປຶ້ມນີ້ແລ້ວ ຈະຮູ້ສຶກເບົາສະຫວ່າງ ເຫັນແຈ້ງເຂົ້າໃຈຈິງ, ເກີດສັດທາ ແລະເກີດປັນຍາຢ່າງບໍ່ຄາດຄິດມາກ່ອນເລີຍ.

ທ່ານຜູ້ອ່ານທີ່ເຄົາລົບ !

ເມື່ອເວົ້າເຖິງຜູ້ຂຽນຜູ້ປະພັນປື້ມ ແລະຄຸນຄ່າຂອງປື້ມມາສົມຄວນແລ້ວ ກໍຢາກຂໍກ່າວເຖິງ ຜູ້ແປປື້ມນີ້ອອກມາເປັນພາສາລາວຕື່ມອີກ ເພື່ອຈະໄດ້ຮູ້ເບື້ອງຫຼັງເບື້ອງໜ້າ ແລະຄວາມເປັນໄປເປັນມາແຫ່ງການອຸທິດເສຍສະຫຼະ ທີ່ຜູ້ກ່ຽວໄດ້ມອບໃຫ້ແກ່ງານນີ້.

ພາຍຫຼັງທີ່ຂ້າພະເຈົ້າໄດ້ອ່ານທົບທວນ ເບິ່ງເນື້ອໃນບົດແປຫຼາຍຖ້ຽວ ຫຼາຍເທື່ອ, ໄດ້ຊ່ອຍປັບປຸງແກ້ໄຂສັບສຳນວນ ແລະລະບົບການນຳໃຊ້ອັກສອນຈຳນວນໜຶ່ງແລ້ວ ຂ້າພະເຈົ້າເຫັນວ່າ ເປັນຜົນງານທີ່ດີ ມີສາລະປະໂຫຍດໃນການໃຫ້ການສຶກສາອົບຮົມພຸດທະສາສະນິກະຊົນ ກໍຄືໃຫ້ແກ່ນຄວາມຮູ້ອັນຈຳເປັນ ກ່ຽວກັບພຣະພຸດທະສາສະໜາແກ່ເພື່ອນຮ່ວມຊາດ ແລະມວນມະນຸດຮ່ວມໂລກທີ່ສົນໃຈໃນຫຼັກພຸດທະທຳ.

ເວົ້າອີກຢ່າງໜຶ່ງ ທ່ານຜູ້ແປນີ້ ຄື ພຣະທຳມະທູດ ທີ່ນຳເອົາແສງສະຫວ່າງແຫ່ງປັນຍາມາສູ່ພໍ່ແມ່ປະຊາຊົນທຸກຊັ້ນຄົນ ໂດຍມີຈຸດປະສົງມຸ້ງໝາຍພຽງເພື່ອຄວາມສະຫງົບສຸກ ເພື່ອບັນເທົາທຸກຄ້າງຄາໜີບແໜ້ນຢູ່ໃນຫົວໃຈ ໃຫ້ເຫັນແຈ້ງຄວາມເປັນຈິງຂອງຊີວິດ ຄິດໃນທາງສຸກສັນຕິ ແລະສ້າງສັນຮູ້ແບ່ງປັນແຮງເມດຕາ ໃຫ້ຄວາມຮັກຄວາມກະລຸນາ ທີ່ບໍ່ມີພົມແດນຂວາງຂີດກີດກັ້ນແກ່ກັນ ແລະກັນ.

ທ່ານເປັນພຣະສົງລາວຜູ້ໜຸ່ມນ້ອຍອົງທຳອິດແຫ່ງຍຸກ ສ.ປ.ປ.ລາວ ທີ່ມີສາຍຕາແຫຼມເລີກ ມີວິໄສທັດ ເບິ່ງກວ້າງເຫັນໄກ ມີປະນິທານອັນໝັ້ນທ່ຽງໜັກແໜ້ນ ມີຄວາມມຸ່ງໝັ້ນ ທີ່ບໍ່ຫວັ່ນໄຫວຄອນແຄນມີຄວາມປາຖະໜາອັນແຮງກ້າ ອຸທິດສະຕິປັນຍາ ວິຊາຄວາມຮູ້ບູຊາພຣະຣັດຕະນະໄຕ ໂດຍຕັ້ງໃຈສ້າງຜົນງານການແປປື້ມພຸດທະທຳ ***"ຕອບບັນຫາຄາໃຈຜູ້ໄຝ່ທັມ"*** ອັນມີຄຸນຄ່າລະດັບສາກົນທົວທຳອິດອອກມາເຜີຍແຜ່ເປັນທຳມະທານ.

ໝາກຜົນ ຫຼືຄວາມສຳເລັດອັນສະຫງ່າງາມນີ້ ຈະເປັນສິລິສີສວຍງາມປະດັບບຸນຍາປາລະມີປະຈຳຕົວຂອງທ່ານຕະຫຼອດໄປ ແລະທັງຈະເປັ່ງປະກາຍແສງສະຫວ່າງແຫ່ງລັດສະໝີພຸດທະທຳ ອັນໜ້າບູຊາສັນລະເສີນ ແລະສະທ້ອນຕົວຢ່າງທີ່ດີຈາກດວງໃຈອັນບໍລິສຸດດວງໃຈໜຶ່ງ ໄປສູ່ຫຼາຍໝື່ນຫຼາຍແສນດວງທີ່ລໍຄອຍຊື່ນຊົມຜົນງານ ອັນເຕັມໄປດ້ວຍແຮງເສຍສະຫຼະ ແລະພະລັງອຸທິດນີ້ຢູ່.

ຂ້າພະເຈົ້າເຄີຍຂຽນບົດຄວາມ ***"ບົດບາດຂອງການສຶກສາສົງກັບສັງຄົມລາວ"*** ລົງໃນປື້ມ ***"ທັມມານຸສອນ"*** ຂອງນິດສິດວິທະຍາໄລສົງຮຸ່ນທີ ໔ ເມື່ອ ພ.ສ. ໒໕໔໗ ຄ.ສ. ໒໐໐໔ ເຊິ່ງມີຕອນໜຶ່ງໄດ້ເນັ້ນໜັກວ່າ:

- ຕ້ອງມີພຣະສົງລາວຜູ້ເກັ່ງກ້າ ປັນຍາສາມາດສະຫຼາດຫຼັກແຫຼມ ເປັນແວ່ນແຍງຂອງຊາດ.
- ຕ້ອງມີພຣະພິກຂຸຜູ້ເປັນເພັດໜ່ວຍປະເສີດຂອງແຜ່ນດິນ.
- ພຣະສົງຜູ້ມີຄວາມຮູ້ ຄວາມສາມາດ ແລະແຕກສານລ້ຳເລີກໃນພຸດທະທຳ ບໍ່ແມ່ນວ່າ ຈະສຶກປະລາເພດພົ້ນມະຈັນ ໄປຈາກພຣະພຸດທະສາສະໜາຈົນໝົດທຸກອົງ.

- ປະຫວັດສາດໄດ້ຢັ້ງຢືນວ່າໄດ້ມີ ແລະຈະຕ້ອງມີພຣະສົງນັກເສຍສະຫຼະ ແລະອຸທິດຕົນເພື່ອຄວາມກ້າວໜ້າຂອງການສຶກສາສົງ ເພື່ອສ້າງປະໂຫຍດສຸກສັນຕິອັນສູງສົ່ງ ໃຫ້ແກ່ພຣະພຸດທະສາສະໜາປະເທດຊາດ ແລະສັງຄົມລາວຕໍ່ໄປ.

ຂໍນ້ອມຂາບຄາລະວະ ແລະອວຍພອນອັນປະເສີດແດ່ ພຣະອາຈານ ສະວັດສະຕິ ທັມມິກະ (ຜູ້ຂຽນ) ແລະພຣະອາຈານ ໄຊຍະເດດ ວົງໂສພາ (ຜູ້ແປ) ຈົ່ງສຸກສັນຕິ ດວ້ຍອາຍຸ ວັນນະ ສຸຂະ ພະລະ ແລະຈົ່ງຍືນຍົງຄົງຢູ່ຄູ່ພຣະພຸດທະສາສະໜາ ນຳເອົາແສງສະຫວ່າງແຫ່ງປັນຍາຈາກພຸດທະທຳ ມາສູ່ມວນມະນຸດຊາດທົ່ວໂລກໂລກາຕະຫຼອດໄປເທີ້ນ !

ວຽງຈັນ, ວັນທີ ໒໐ ກຸມພາ ໒໕໕໑ (໒໐໐໗)



ດຣ. ທອງຄຳ ອ່ອນມະນີສອນ

# ຄວາມເຫັນຂອງກົມສາສະໜາ

ປື້ມຄູ່ມືຊື່ວ່າ " **ຕອບບັນຫາຄາໃຈຜູ້ໄຝ່ທັມ** " ຫົວນີ້ ເກີດຂື້ນໄດ້ຍ້ອນຄວາມດຸໝັ່ນຂະຫຍັນພຽນ, ຄວາມຕັ້ງອົກຕັ້ງໃຈ ແລະຫົວຄິດປະດິດສ້າງແບບປັນຍາລວມໝູ່ ຂຽນໂດຍພຣະອາຈານ ສະວັດສະຕິ ທັມມິກະ ແຫ່ງປະເທດອົດສະເຕຣເລຍ ແລະຄົ້ນຄວ້າແປໂດຍ ພຣະອາຈານໄຊຍະເດດ ວົງໂສພາ ອະດີດນັກສຶກສາວິທະຍາໄລສົງອົງຕື້ມະຫາວິຫານນະຄອນຫຼວງວຽງຈັນ ແລະປັດຈຸບັນ ສຳເລັດການສຶກສາຈາກມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ແຫ່ງປະເທດໄທ.

ປື້ມຄູ່ມື "**ຕອບບັນຫາຄາໃຈຜູ້ໄຝ່ທັມ** " ເຊິ່ງປະກົດສູ່ສາຍຕາຂອງທ່ານຜູ້ອ່ານທັງຫຼາຍ ເວລານີ້ ແມ່ນມີຄວາມສຳຄັນ ແລະມີປະໂຫຍດທີ່ສຸດຕໍ່ສັງຄົມ ເພາະໄດ້ກາຍເປັນບ່ອນອີງໃຫ້ພຣະສົງ-ສາມະເນນ, ຊາວພຸດລາວເຜົ່າຕ່າງໆ ແລະຜູ້ຝັກໃຝ່ສົນໃຈໃນທັມທັງຫຼາຍ ສາມາດຄົ້ນຄວ້າ, ຮ່ຳຮຽນຫາຄວາມຈິງໄດ້...ປື້ມດັ່ງກ່າວນີ້ ໄດ້ເຕົ້າໂຮມຄຳຖາມ, ຄຳຕອບທີ່ຖືກຕ້ອງກ່ຽວກັບສະພາບຄວາມເປັນຈິງ, ບົດບາດທາດແທ້, ຫຼັກທັມຄຳສັ່ງສອນທາງພຣະພຸດທະສາສະໜາ ເຊິ່ງເປັນບົດຮຽນທີ່ດີໃຫ້ແກ່ທຸກ ທ່ານໃນການແກ້ໄຂບັນຫາຕ່າງໆໃນໃຈຕົນເອງ ດ້ວຍຕົນເອງຢ່າງຖືກຕ້ອງ.

ໃນນາມກົມສາສະໜາສູນກາງແນວລາວສ້າງຊາດ ແລະໃນນາມສ່ວນຕົວຂະນ້ອຍ ມີຄວາມປິຕິຊົມຊື່ນ, ຄວາມພາກພູມໃຈ ແລະຂໍສະແດງຄວາມຊົມເຊີຍ ຄວາມມຸທິຕາຈິດຕໍ່ພຣະອາຈານທັງສອງ ທີ່ໄດ້ພ້ອມກັນອຸທິດເຫື່ອແຮງ ສະຕິປັນຍາມັນສະໝອງຂອງຕົນເຂົ້າໃນການຄົ້ນຄວ້າ ເຮັດໃຫ້ປື້ມທີ່ມີຄຸນຄ່ານີ້ ຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະດ້ວຍອຳນາດແຫ່ງບຸນກຸສົນທັງຫຼາຍ ຂໍໃຫ້ພຣະອາຈານທັງສອງ ມີຄວາມສະຫຼຽວສະຫຼາດ, ມີຄວາມສຸກຄວາມຈະເລີນໝັ້ນຄົງຂະໜົງແກ່ນໃນພຣະບໍວອນພຸດທະສາສະໜາຕະຫຼອດໄປຊົ່ວກາລະນານເທີ້ນ.

ນະຄອນຫຼວງວຽງຈັນ, ວັນທີ ໒໗ ກຸມພາ ໒໐໐໙

**ຫົວໜ້າກົມສາສະໜາ**

ທ່ານອາຈານ ຂາວພອນ ວັນນະບຸດ

# ຄຳເຫັນຂອງຫ້ອງການ
# ສູນກາງອົງການພຸດທະສາສະໜາສຳພັນລາວ

ຄຳສອນໃນພຣະພຸດທະສາສະໜາ ເປັນຄຳສອນທີ່ລະອຽດອ່ອນສຸຂຸມຄຳພີຣະພາບ ສົມບູນໄປດ້ວຍເຫດແລະຜົນ ອັນຊົງຄຸນຄ່າສູງທາງປັນຍາ. ນັກຄິດ, ນັກຂຽນ, ນັກຂຽນ ແລະນັກຮຽນຮູ້ປັນຍາຊົນ ຈຳເປັນຕ້ອງສຶກສາຄົ້ນຄ້ວາ ຊອກຫາຄວາມຮູ້ທີ່ແທ້ຈິງໃນທາງພຣະພຸດທະສາສະໜາຈຶ່ງຈະເຮັດ ໃຫ້ເຂົ້າໃຈຖ່ອງແທ້ ໃນຄຳສອນຂອງອົງສົມເດັດພຣະສຳມາສຳພຸດທະເຈົ້າ, ບັນດາຄຳສອນທັງຫຼາຍໃນພຣະຄຳພີພຣະໄຕຣປີດົກ ຈະນຶກຄິດ, ຈິນຕະນາການ ໂດຍຍຶດຖືເອົາ **ອັດຕະໂນມະຕິ** ຂອງຕົນເປັນບ່ອນອີງ ໃນການຕັດສິນຄວາມຖືກຕ້ອງຄຳສອນຂອງພຣະພຸດທະສາສະໜານັ້ນ ເປັນການບໍ່ຖືກຕ້ອງ.

ເປົ້າໝາຍສຳຄັນທີ່ຈະຢືນຢັນວ່າຖືກຕ້ອງໄດ້ນັ້ນ ນັກຮຽນຮູ້, ປັນຍາຊົນ, ອຸປາສົກ ແລະອຸປາສິກາ ຕ້ອງໄດ້ສຶກສາຄົ້ນຄ້ວາທາງພຣະຄຳພີ, ປະຕິບັດ ພິສູດທົດລອງ ຕາມທີ່ຕົນໄດ້ສຶກສາຄົ້ນຄ້ວາຮຽນຮູ້ມາ ໃຫ້ປະສົບກັບເຫດການທີ່ເປັນຈິງ ແລະເກີດຜົນໄດ້ຮັບຈາກການປະຕິບັດຕົວຈິງທາງສະຕິປັນຍາ ຫາຍຄວາມສົງໄສ ຫາຍຂໍ້ຂ້ອງໃຈໄດ້ ນັ້ນແລ ເປັນບ່ອນອີງແຫ່ງຄວາມຖືກຕ້ອງ.

ປຶ້ມ "**ຕອບບັນຫາຄາໃຈຜູ້ໄຝ່ທັມ** " ຫົວນີ້ ເປັນສ່ວນໜຶ່ງທີ່ສຳຄັນ ທີ່ຈະຊ່ວຍໃຫ້ທ່ານຜູ້ ໄຝ່ສຶກສາຄົ້ນຄ້ວາຫາຄວາມຮູ້ ແລະເຂົ້າໃຈຄຳສັ່ງສອນໃນທາງພຣະພຸດທະສາສະໜາ ໄດ້ເປັນຢ່າງດີ ເພາະວ່າເນື້ອຫາສາຣະໃນປຶ້ມຫົວນີ້ ສົມບູນໄປດ້ວຍບັນຫາ, ການຕອບບັນຫາ ແລະແກ້ຂອດຂໍ້ຂ້ອງໃຈຂອງທ່ານຜູ້ອ່ານໄດ້ຢ່າງສົມເຫດສົມຜົນ.

ໃນນາມຫ້ອງການ ສູນກາງອົງການພຸດທະສາສະໜາສຳພັນລາວ ແລະໃນນາມສ່ວນຕົວ ຂໍສະແດງມຸທິຕາຈິດ ອະນຸໂມທະນາໃນຄວາມເສຍສະຫຼະ, ອຸທິດສະຕິປັນຍາ ຂອງທ່ານພຣະອາຈານສະວັດສະຕິ ທັມມິກະ (ຜູ້ຂຽນ) ແລະທ່ານພຣະອາຈານ ໄຊຍະເດດ ວົງໂສພາ (ຜູ້ແປພາສາອັງກິດ ສູ່ພາສາລາວ) ທີ່ໄດ້ສ້າງສັນຜົນງານອັນສູງຄ່ານີ້ ອອກສູ່ສາຍຕາທ່ານຜູ້ອ່ານ ແລະກຳລັງຊ່ວຍທ່ານຜູ້ອ່ານໃຫ້ເຂົ້າໃຈ, ຫາຍຄວາມລັ່ງເລສົງໄສໃນຄຳສອນຂອງພຣະພຸດທະສາສະໜາ.

ອໍອວຍພອນໄຊອັນປະເສີດ ໃຫ້ແກ່ທ່ານພຣະອາຈານທັງສອງ ຈົ່ງມີຄວາມສຸກຄວາມຈະເຣີນ, ມີຄວາມງອກງາມໃນທັມ, ໝັ້ນຄົງຢູ່ໃນພຣະບໍວອນພຸດທະສາສະໜາ ແລະອຸທິດຕົນສ້າງສັນຜົນງານເຜີຍແຜ່ທັມອອກໄປສູ່ມະຫາຊົນຊາວໂລກໃຫ້ກ້ວາງຂວາງ.

ວຽງຈັນ, ວັນທີ ໒໔ ເດືອນມີນາ ໒໐໐໗

**ຫ້ອງການສູນກາງອົງການພຸດທະສາສະໜາສຳພັນລາວ**



ພຣະອາຈານ ມະຫາ ພູສະຫວັນ ຊົນະວັງໂສ

# ຄຳເຫັນຂອງຜູ້ແປ

ມະນຸດສ່ວນໃຫຍ່ ເປັນຜູ້ທີ່ສົນໃຈ ສົງໄສ ແລະໄຝ່ຮູ້ຢູ່ສະເໝີ ຍ້ອນເຫດນີ້ເອງຈຶ່ງເກີດມີຄຳຖາມມາກມາຍພາຍໃນໃຈ ແລ້ວສະແຫວງຫາຄຳຕອບເທົ່າທີ່ຄວາມສາມາດຂອງຕົນຈະເອື້ອມເຖິງ. ຖ້າເວົ້າເຖິງເລື່ອງຄວາມເຊື່ອຖືສາສະໜາ ຄຳຖາມທີ່ໜີບໍ່ພົ້ນກໍເຫັນຈະໄດ້ແກ່ ບາບ, ບຸນ, ສະຫວັນ, ນະຮົກ, ຊາດໜ້າ, ຊາດກ່ອນ...ແນ່ນອນ ຄຳຖາມເຫຼົ່ານີ້ ຍ່ອມມີຄຳຕອບໃນພຣະພຸດທະສາສະໜາມີທັງໃນຕຳລາ ແລະໃນພາກປະຕິບັດ ຄຳຕອບທີ່ເຊື່ອຖືໄດ້ທີ່ແທ້ຈິງນັ້ນ ຕ້ອງເກີດຈາກປະສົບການຮູ້ໄດ້ດ້ວຍຕົນເອງຫຼາຍກ່ວາໃນຕຳລາ ແລະການຄົ້ນຫາຈາກຄຳເລົ່າຂານຂອງຄົນອື່ນ.

ປຶ້ມທຳມະ(ທັມມະ) **"ຕອບບັນຫາຄາໃຈຜູ້ໄຝ່ທັມ"** ທີ່ທ່ານກຳລັງຖືຢູ່ນີ້ ເກີດຂຶ້ນໄດ້ຍ້ອນທາງເຈົ້າພາບຜູ້ສະໜັບສະໜຸນການພິມ ໄດ້ແນະນຳໃຫ້ຂ້າພະເຈົ້າແປ ເພື່ອພິມແຈກເປັນທຳມະທານແກ່ພຸດທະສາສະນິກຊົນຊາວລາວ ທັງໆທີ່ພວກເຂົາບໍ່ແມ່ນຄົນລາວ ບໍ່ຮູ້ພາສາລາວ ແຕ່ມີນ້ຳໃຈໃສສັດທາໃນພຣະພຸດທະສາສະໜາ ຢາກແບ່ງປັນຄວາມຮູ້ທາງທຳມະທີ່ພວກເຂົາເຈົ້າ ໄດ້ອ່ານເປັນພາສາອັງກິດຈາກຕົ້ນສະບັບທີ່ທ່ານພຣະອາຈານ ສະວັດສະຕິ ທັມມິກະໄດ້ແຕ່ງໄວ້.

ປຶ້ມຫົວນີ້ ໄດ້ໃຫ້ຄຳຕອບບາງສ່ວນຂອງຜູ້ສົນໃຈໃນພຣະພຸດທະສາສະໜາ ໂດຍສະເພາະແມ່ນຊາວຕາເວັນຕົກ ຜູ້ທີ່ມີພື້ນຖານຄວາມເຊື່ອໃນສາສະໜາອື່ນມາກ່ອນ ຫຼືບໍ່ເຄີຍນັບຖືສາສະໜາໃດເລີຍ. ອາຕະມາຄິດວ່າ ຄຳຖາມທີ່ໄດ້ຍົກຂຶ້ນມາຖາມໃນປຶ້ມຫົວນີ້ ລ້ວນແຕ່ແມ່ນຄຳຖາມ ທີ່ແຝງດ້ວຍຄວາມຢາກຮູ້ຢາກເຫັນແທ້ ແລະເຊື່ອແນ່ວ່າ ແມ່ນແຕ່ຄົນລາວເຮົາກໍຍັງມີຫຼາຍຄົນທີ່ຍັງບໍ່ທັນເຂົ້າໃຈຢ່າງຖ່ອງແທ້ໃນສາສະໜາພຸດ ທີ່ປູ່ຍ່າຕາຍາຍຂອງຕົນພາເຊື່ອຖືສືບມາ. ອີກຢ່າງໜຶ່ງ, ສື່ການສຶກສາທຳມະຢູ່ບ້ານເຮົາຍັງຂາດແຄນຢູ່ ເມື່ອເປັນເຊັ່ນນີ້ ປຶ້ມຫົວນີ້ຈຶ່ງເປັນອີກສ່ວນໜຶ່ງໃນ ການສື່ສານທາງທຳມະເພື່ອໃຫ້ສາທຸຊົນທັງຫຼາຍຜູ້ສົນໃຈໄຝ່ສຶກສາ ໄດ້ມີໂອກາດຮຽນຮູ້ ແລະເຂົ້າໃຈໃນຫຼັກທຳຄຳສອນຂອງພຣະພຸດທະສາສະໜາດີຂຶ້ນຕື່ມອີກ.

ໃນນາມຂອງຜູ້ແປ ຈຶ່ງຂໍອຸທິດຜົນງານການແປຄັ້ງນີ້ ເພື່ອບູຊາຄຸນຂອງພຣະພຸດທະສາສະໜາ, ຕອບແທນບຸນຄຸນເຂົ້າກົ້ນບາດທີ່ຍາດໂຍມໄດ້ລ້ຽງດູມາ, ບູຊາຄຸນຄູບາອາຈານ ຜູ້ເພິ່ນໄດ້ປະສິດປະສາດຄວາມຮູ້ໃຫ້ຂ້າພະເຈົ້າຜ່ານມາ ທັງທາງໂລກແລະທາງທັມ, ຂໍອຸທິດແດ່ບິດາມານດາທຸກທ່ານໃນໂລກ ແລະຂໍມອບແດ່ພີ່ນ້ອງຊາວລາວ ຜູ້ທີ່ສົນໃຈໄຝ່ສຶກສາທຳມະເມື່ອເຫັນວ່າຄຳຕອບໃດເໝາະສົມກັບສະພາບເງື່ອນໄຂຕົວຈິງຂອງຕົນ ຈຶ່ງໄດ້ນຳໄປປະຕິບັດໃຫ້ເກີດປະໂຫຍດແກ່ການດຳລົງຊີວິດປະຈຳວັນ ເພື່ອຄວາມຢູ່ເຢັນເປັນສຸກຂອງຕົນເອງ, ຄົນອື່ນ, ສັງຄົມ ແລະປະເທດຊາດ.

ພຣະອາຈານ ໄຊຍະເດດ ວົງໂສພາ

໒໕ ຕຸລາ ໒໕໕໑

# ຄຳອະນຸໂມທະນາ

ໃນການພິມສະບັບພາສາລາວ

ເທື່ອທີສອງ

ການພິມປື້ມທັມມະທີ່ແປມາຈາກ Good Question, Good Answer ເຊິ່ງຂຽນໂດຍພຣະອາຈານ ສະວັດສະຕິ ທັມມິກະ ໂດຍໄດ້ຮັບການເປັນເຈົ້າພາບຈາກຍາດໂຍມ ເພື່ອນສະຫະທັມມິກ ຊາວມາເລເຊຍ ເມື່ອປີ 2009 ທີ່ຜ່ານມາ ເຫັນວ່າໄດ້ແຈກຢາຍໝົດແລ້ວ ແລະມີສາທຸຊົນຍາດໂຍມຍັງສົນໃຈແລະຕ້ອງການຕື່ມອີກ ແຕ່ວ່າຍັງຂາດທຶນຮອນໃນການພິມຄັ້ງໃໝ່. ສະນັ້ນ, ຈິ່ງໄດ້ຕິດຕໍ່ມາຍັງມູນນິທິສະໜັບສະໜູນການສຶກສາທາງພຸດທະສາສະໜາທີ່ປະເທດໄຕ້ຫວັນ ເພື່ອຂໍທຶນພິມປື້ມເຫຼັ້ມນີ້ ແຈກເປັນທັມມະທານແກ່ສາທຸຊົນຄົນລາວ ຜູ້ທີ່ມີຄວາມສົນໃຈສື່ທັມມະຈາກທົ່ວທຸກມູມໂລກ ເພື່ອມີໄວ້ສຶກສາຮ່ຳຮຽນແລ້ວດຳລົງໄວ້ເຊິ່ງພຣະພຸດທະສາສະໜາຊ່ວຍກັນຕໍ່ໄປພາຍພາກໜ້າ.

ພ້ອມນີ້ ກໍຖືໂອກາດສະແດງຄວາມອະນຸໂມທະນາ ໃນກຸສົນເຈຕະນາຂອງມູນນິທິ ທີ່ໄດ້ໃຫ້ການສະໜັບສະໜຸນໃນການພິມປື້ມທັມມະເຫຼັ້ມນີ້ ຂໍໃຫ້ຄະນະບໍລິຫານງານພ້ອມດ້ວຍສະມາຊິກຂອງອົງການຈົ່ງຈະເລີນສະຖາພອນຍິ່ງໆຂຶ້ນໄປຊົ່ວກາລະນານເຖີ້ນ.

ວັນທີ 22 ມັງກອນ 2011

ພຣະອາຈານ ໄຊຍະເດດ ວົງໂສພາ

ວັດອົງຕື້ມະຫາວິຫານ, ນະຄອນຫຼວງວຽງຈັນ

# ສາລະບານ


- ຄຳນຳໃນການພິມຄັ້ງທີ ໔ ແລະທີ ໕ (i)
- ຄຳເຫັນຂອງຜູ້ຂຽນ ແລະຄຳເຫັນຂອງຜູ້ອຳນວຍການວິທະຍາໄລສົງ (ii)
- ຄຳຜາລົບຂອງທ່ານ ດຣ. ທອງຄຳ ອ່ອນມະນີສອນ (iii)
- ຄຳເຫັນຂອງຫົວໜ້າກົມສາສະໜາ (vi)
- ຄຳເຫັນຂອງຫ້ອງການສູນກາງ ອ.ພ.ສ (vii)
- ຄຳເຫັນຂອງຜູ້ແປ (viii)
- ຄຳເຫັນໃນການພິມສະບັບພາສາລາວເທື່ອທີສອງ (ix)

໑. ພຣະພຸດທະສາສະໜາແມ່ນຫຍັງ? 1

໒. ຄຳສອນພື້ນຖານຂອງພຣະພຸດທະສາສະໜາ 15

໓. ພຣະພຸດທະສາສະໜາ ແລະຄວາມເຊື່ອກ່ຽວກັບພຣະເຈົ້າ 20

໔. ສິນຫ້າ 26

໕. ການເກີດໃໝ່ 34

໖. ການຝຶກສະມາທິ 46

໗. ປັນຍາ ແລະຄວາມກະລຸນາ(ກະຣຸນາ) 54

໘. ມັງສະວິລັດ(ມັງສະວິຣັຕ), ການບໍ່ຮັບປະທານຊີ້ນ 59

໙. ຄວາມໂຊກດີ ແລະ ໂຊກຊະຕາກຳ 62

໑໐. ພຣະສົງ ແລະ ພິກຂຸນີ(ລວມທັງແມ່ຂາວ) 65

໑໑. ຄຳພີໃນທາງພຣະພຸດທະສາສະໜາ 69

໑໒. ປະຫວັດສາດ ແລະການພັດທະນາ 74

໑໓. ການເປັນຊາວພຸດ 81

໑໔. ບາງພຸດທະສຸພາສິດ 86

໑໕. ພາກຜະໜວກ Appendix 97

# ໑. ພຣະພຸດທະສາສະໜາແມ່ນຫຍັງ?

**ຄຳຖາມ: ພຣະພຸດທະສາສະໜາແມ່ນຫຍັງ?**

**ຄຳຕອບ**: ຊື່ວ່າ ພຣະພຸດທະສາສະໜາ ມາຈາກຄຳວ່າ *ພຸດທິ* ເຊິ່ງໝາຍຄວາມວ່າ "ຕື່ນຂຶ້ນ, ເບີກບານ, ຕັດສະຣູ້" ແລະພຣະພຸດທະສາສະໜາສາມາດເວົ້າ ໄດ້ວ່າເປັນປັດຊະຍາ(ປຣັຊຍາ) ຂອງຄວາມຕື່ນຕົວ. ປັດຊະຍານີ້ ໄດ້ມີຕົ້ນກຳເນີດມາຈາກປະສົບການຂອງບຸລຸດຄົນໜຶ່ງມີນາມວ່າ ສິດທັດຖະໂຄຕະມະ ຫຼືເປັນທີ່ຮູ້ກັນດີໃນນາມພຣະພຸດທະເຈົ້າ ຜູ້ທີ່ຕັດສະຣູ້ດີແລ້ວດ້ວຍພຣະອົງເອງເມື່ອອາຍຸໄດ້ ໓໕ ພັນສາ. ປັດຈຸບັນ ພຣະພຸດທະສາສະໜາມີອາຍຸໄດ້ ໒໕໐໐ ກວ່າປີ ມີຜູ້ນັບຖືທົ່ວໂລກປະມານ ໓໗໐ ລ້ານຄົນ. ຈົນຮອດຮ້ອຍກວ່າປີຕໍ່ມາ ພຣະພຸດທະສາສະໜາ ຈຶ່ງໄດ້ກາຍມາມີບົດບາດສ່ວນໃຫຍ່ໃນປັດຊະຍາຂອງຊາວເອເຊຍ ນອກຈາກນີ້ ຍັງເລີ່ມມີຜູ້ສັດທານັບຖືເພີ່ມຂຶ້ນຫຼາຍຈາກຢູໂຣບ, ອອດສະເຕຣເລຍ ແລະອາເມຣິກາ.

**ຄຳຖາມ: ຖ້າເຊັ່ນນັ້ນພຸດທະສາສະໜາກໍເປັນພຽງປັດຊະຍາແມ່ນບໍ?**

**ຄຳຕອບ:** ຄຳວ່າ *ປັດຊະຍາ* (ປຣັຊຍາ) ມາຈາກຄຳສອງຄຳຄື : *philo* ແປວ່າ "ຮັກ" ແລະ *Sophia* ແປວ່າ "ປັນຍາ". ດັ່ງນັ້ນ, ປັດຊະຍາ ແມ່ນ *ຄວາມຮັກແຫ່ງປັນຍາ* ຫຼື *ຄວາມຮັກ* ແລະ *ປັນຍາ* ທັງສອງຄວາມໝາຍ ໄດ້ອະທິບາຍນິຍາມພຣະພຸດທະສາສະໜາໄດ້ຢ່າງສົມບູນ. ພຣະພຸດທະສາສະໜາສອນໃຫ້ຮູ້ວ່າ ເຮົາຄວນພັດທະນາຄວາມສາມາດທາງດ້ານປັນຍາຂອງຕົນໃຫ້ໄດ້ຢ່າງເຕັມປ່ຽມ ເພື່ອວ່າພວກເຮົາຈະໄດ້ເຂົ້າໃຈຢ່າງແຈ່ມແຈ້ງ ນອກນີ້ ຍັງສອນໃຫ້ເຮົາພັດທະນາຄວາມຮັກ ແລະຄວາມເມດຕາ ເພື່ອວ່າເຮົາຈະສາມາດເປັນກັນລະຍານະມິດກັບເພື່ອນຄົນອື່ນໆ. ດັ່ງນັ້ນ, ພຣະພຸດທະສາສະໜາຈຶ່ງເປັນປັດຊະຍາ ທີ່ບໍ່ເປັນພຽງແຕ່ປັດຊະຍາເທົ່ານັ້ນ ມັນຍັງແມ່ນປັດຊະຍາທີ່ສູງສຸດອີກດ້ວຍ.

**ຄຳຖາມ: ພຣະພຸດທະເຈົ້າແມ່ນໃຜ?**

**ຄຳຕອບ:** ເມື່ອ ໕໖໓ ປີກ່ອນ ຄ.ສ. ມີພຣະໂອລົດອົງໜຶ່ງໄດ້ອຸບັດຂຶ້ນ ໃນຄອບຄົວຂອງກະສັດອົງໜຶ່ງ ທາງພາກເໜືອຂອງປະເທດອິນເດຍ. ພຣະອົງໄດ້ຈະເລີນໄວຂຶ້ນມາໃນທ່າມກາງຄວາມຮັ່ງມີ ແລະຫຼູຫຼາ ແຕ່ໃນທີ່ສຸດກໍໄດ້ຮູ້ວ່າ ຄວາມສະດວກສະບາຍໃນ

ທາງໂລກ ບໍ່ສາມາດຮັບປະກັນຄວາມສຸກໄດ້. ພຣະອົງໄດ້ມີຄວາມຮູ້ສຶກຫວັ່ນພຣະໄທຢ່າງຍິ່ງ ຈາກຄວາມທຸກທີ່ໄດ້ທອດພຣະເນດເຫັນສິ່ງທີ່ຢູ່ອ້ອມຂ້າງ ແລະອະທິດຖານວ່າຈະຕ້ອງສະແຫວງຫາກຸນແຈສໍາຄັນສູ່ຄວາມສຸກຂອງມະນຸດ. ເມື່ອພຣະອົງມີອາຍຸໄດ້ ໒໙ ພັນສາ ພຣະອົງໄດ້ອອກເດີນທາງໜີຈາກເມຍ ແລະລູກແລ້ວໄປສະແຫວງຫາຄູຂອງລັດທິນິກາຍສາສະໜາອື່ນໆ ໃນຍຸກນັ້ນເພື່ອຮຽນຮູ້ຈາກພວກເຂົາ. ພວກເຂົາເຈົ້າໄດ້ສອນພຣະອົງຫຼາຍຢ່າງ. ແຕ່ບໍ່ມີໃຜຮູ້ໄດ້ຢ່າງແທ້ຈິງເຖິງສາເຫດຂອງຄວາມທຸກ ແລະວິທີທາງທີ່ຈະດັບທຸກ. ໃນທີ່ສຸດ, ຫຼັງຈາກສຶກສາ ແລະປະຕິບັດພໍ່າເພັງພຽນສະມາທິ ພຣະອົງກໍໄດ້ສໍາຜັດກັບຄວາມສິ້ນໄປແຫ່ງອະວິດຊາ(ອະວິຊຊາ) ແລະທັນໃດນັ້ນ ກໍໄດ້ຕັດສະຣູ້ທັມ. ຫຼັງຈາກວັນນັ້ນເປັນຕົ້ນມາ, ພຣະອົງຈິ່ງໄດ້ຮັບຂະໜານນາມວ່າ ພຣະພຸດທະເຈົ້າ, ຜູ້ຕັດສະຣູ້ດີແລ້ວ. ພຣະອົງໄດ້ປະຕິບັດພຸດທະກິດຕໍ່ມາເປັນເວລາ ໔໕ ພັນສາ ເພື່ອທ່ຽວສັ່ງສອນຜູ້ອື່ນ ໃນສິ່ງທີ່ໄດ້ຄົ້ນພົບ ທົ່ວພາກເໜືອຂອງປະເທດອິນເດຍ. ຄວາມມີພຣະມະຫາກະລຸນາທິຄຸນ ແລະວິລິຍະຄຸນຂອງພຣະອົງ ໄດ້ກາຍເປັນຕໍານານ ແລະພຣະອົງໄດ້ມີສາວົກຫຼາຍພັນຄົນ. ເມື່ອອາຍຸໄດ້ ໘໐ ພັນສາ ພຣະອົງໄດ້ເຖິງຄາວແກ່ຊະລາພາບ ແລະຊົງອາພາດ, ແຕ່ຍັງສະຫງົບໃນທີ່ສຸດກໍດັບຂັນປະລິນິບພານ(ປະຣິນິພພານະ).

**ຄໍາຖາມ: ມັນຈະບໍ່ເປັນການບໍ່ມີຄວາມຮັບຜິດຊອບຕໍ່ເມຍ ແລະລູກບໍ ທີ່ພຣະພຸດທະເຈົ້າໄດ້ລັກອອກບວດ?**

**ຄໍາຕອບ:** ມັນບໍ່ແມ່ນເລື່ອງງ່າຍດາຍສໍາລັບພຣະພຸດທະເຈົ້າ ທີ່ຈະໜີຈາກຄອບຄົວ. ພຣະອົງຄົງຈະມີຄວາມກັງວົນ ແລະຫວ່ງໜ້າພະວົງຫຼັງຢູ່ດົນນານພໍສົມຄວນ ກ່ອນທີ່ຈະອອກເດີນທາງໃນທີ່ສຸດ. ແຕ່ພຣະອົງມີທາງເລືອກລະຫວ່າງການອຸທິດຕົນເອງເພື່ອຄອບຄົວ ແລະ ການອຸທິດຕົນເອງເພື່ອຊາວໂລກ. ໃນທີ່ສຸດ, ດ້ວຍຄວາມມີພຣະມະຫາກະລຸນາທິຄຸນຂອງພຣະອົງ ຈິ່ງເຮັດໃຫ້ພຣະອົງເສຍສະຫຼະຕົນເອງເພື່ອໂລກທັງມວນ ແລະໂລກທັງຜອງຍັງໄດ້ຮັບຜົນປະໂຫຍດຈາກການເສຍສະຫຼະຂອງພຣະອົງ. ນີ້ບໍ່ແມ່ນການໄຮ້ຄວາມຮັບຜິດຊອບ ແຕ່ມັນອາດແມ່ນການເສຍສະຫຼະທີ່ສໍາຄັນທີ່ສຸດເທົ່າທີ່ເຄີຍມີມາ.

**ຄໍາຖາມ: ຖ້າພຣະພຸດທະເຈົ້າປະລິນິບພານ(ຕາຍ)ແລ້ວ ເພິ່ນຈະຊ່ວຍເຮົາໄດ້ຢ່າງໃດ?**

**ຄຳຕອບ:** ຟາຣະເດ Faraday ຜູ້ຄົ້ນພົບໄຟຟ້າກໍຕາຍໄປແລ້ວ, ແຕ່ສິ່ງທີ່ລາວໄດ້ຄົ້ນພົບ ຍັງສາມາດຊ່ວຍພວກເຮົາໄດ້ຢູ່. ຫຼຸຍພາສເຕີ້ Luis Pasteur ຜູ້ຄົ້ນພົບວິທີຮັກສາເຊື້ອພະຍາດຫຼາຍຊະນິດກໍຕາຍໄປແລ້ວເຊັ່ນກັນ, ແຕ່ຜົນງານການຄົ້ນພົບທາງດ້ານການແພດຂອງເຂົາຍັງສາມາດຊ່ວຍຊີວິດພວກເຮົາໄດ້. ລີໂອນາໂດ ດາວິນຊີ Leonardo da Vinci ຜູ້ສ້າງສັນຈິດຕະກຳສິ້ນເອກ ກໍຕາຍແລ້ວ, ແຕ່ສິ່ງທີ່ເຂົາໄດ້ສ້າງໄວ້ ຍັງຄົງເຮັດໃຫ້ຈິດໃຈຂອງຜູ້ພົບເຫັນຍິນດີ ແລະມີຄວາມສຸກໄດ້. ມະຫາວິລະບຸລຸດ ແລະວິລະສະຕີອາດໄດ້ຕາຍໄປຫຼາຍສະຕະວັດແລ້ວ ແຕ່ເມື່ອພວກເຮົາໄດ້ອ່ານກຽດປະຫວັດ ແລະການປະສົບຜົນສຳເລັດຂອງພວກເຂົາ ພວກເຮົາກໍຍັງມີແຮງບັນດານໃຈທີ່ຈະເຮັດຕາມພວກເຂົາເຈົ້າ. ເຊັ່ນດຽວກັນ, ເຖິງແມ່ນວ່າພຣະພຸດທະເຈົ້າຈະປະລິນິບພານນານ ເປັນເວລາ ໒໕໐໐ ກ່ວາປີແລ້ວກໍຕາມ ແຕ່ຄຳສອນຂອງພຣະພຸດທະອົງ ກໍຍັງຄົງຊ່ວຍເຫຼືອປະຊາຊົນ, ຕົວຢ່າງ ການດຳລົງຊີວິດຂອງພຣະພຸດທະອົງ ຍັງເປັນແຮງບັນດານໃຈ, ຄຳສອນຂອງພຣະພຸດທະອົງ ຍັງສາມາດປ່ຽນແປງວິຖີຊີວິດໄດ້. ຄົງມີພຽງແຕ່ພຣະພຸດທະເຈົ້າເທົ່ານັ້ນທີ່ມີເຕຊານຸພາບຫຼາຍສະຕະວັດ ຫຼັງຈາກປະລິນິບພານແລ້ວ.

**ຄຳຖາມ: ພຣະພຸດທະເຈົ້າເປັນພຣະເຈົ້າບໍ?**
**ຄຳຕອບ:** ບໍ່ ພຣະພຸດທະອົງບໍ່ແມ່ນພຣະເຈົ້າ. ພຣະພຸດທະອົງບໍ່ໄດ້ປະກາດຕົນເອງວ່າເປັນພຣະເຈົ້າ, ລູກຂອງພຣະຜູ້ເປັນເຈົ້າ ຫຼືແມ່ນແຕ່ຜູ້ສື່ສານຈາກພຣະເຈົ້າ. ພຣະພຸດທະອົງເປັນມະນຸດຜູ້ທີ່ພ່ຳເພັງຕົນໃຫ້ສົມບູນແບບດ້ວຍພຣະອົງເອງ ແລະຍັງສອນວ່າ ຖ້າຫາກພວກເຮົາປະຕິບັດຕາມແບບຢ່າງຂອງພຣະພຸດທະອົງ ກໍຈະເຮັດໃຫ້ພວກເຮົາສົມບູນແບບໄດ້ເຊັ່ນກັນ.

**ຄຳຖາມ: ຖ້າຫາກວ່າພຣະພຸດທະເຈົ້າບໍ່ແມ່ນພຣະເຈົ້າ ເປັນຫຍັງປະຊາຊົນຈິ່ງເຄົາລົບເພິ່ນ?**
**ຄຳຕອບ:** ການເຄົາລົບບູຊາມີຫຼາຍປະເພດ. ເມື່ອບາງຄົນເຄົາລົບບູຊາພຣະເຈົ້າ ພວກເຂົາສັນລະເສີນພຣະເຈົ້າ, ຫາເຄື່ອງສັກກາລະມາບູຊາ ແລະຮ້ອງຂໍຄວາມຊ່ວຍເຫຼືອດ້ວຍການເຊື່ອກັນວ່າ ພຣະເຈົ້າຈະໄດ້ຍິນຄຳສັນລະເສີນນັ້ນ, ໄດ້ຮັບເຄື່ອງສັກກາລະບູຊາ ແລະຕອບຮັບຄຳວິງວອນຂອງພວກເຂົາ. ພຸດທະສາສະນິກະຊົນ ບໍ່ໄດ້ປະຕິບັດແບບບູຊາປະເພດນີ້. ການບູຊາອີກແບບໜຶ່ງຄື ການສະແດງຄວາມເຄົາລົບຕໍ່ບຸກຄົນ ຫຼື

ສິ່ງຂອງທີ່ເຮົາຊື່ນຊົມ. ເຊັ່ນເມື່ອເຫັນນາຍຄູຍ່າງເຂົ້າໃນຫ້ອງຮຽນ ພວກເຮົາພາກັນຍືນຂຶ້ນ, ເມື່ອເຫັນບຸກຄົນຜູ້ມີກຽດເຮົາກໍຈັບມືທັກທາຍ, ແລະເມື່ອມີການຮ້ອງເພງຊາດ ພວກເຮົາກໍສະແດງຄວາມຄໍານັບ. ທັງໝົດເຫຼົ່ານີ້ ລວ້ນແຕ່ແມ່ນການສະແດງອອກເຊິ່ງຄວາມເຄົາລົບ ແລະບູຊາ ບົ່ງບອກເຖິງການຊື່ນຊົມຍິນດີຂອງເຮົາຕໍ່ບຸກຄົນ ຫຼືສິ່ງຂອງໃດໜຶ່ງ. ນີ້ແມ່ນປະເພດການເຄົາລົບບູຊາທີ່ຊາວພຸດໄດ້ຖືປະຕິບັດກັນມາ. ພຣະພຸດທະຮູບທີ່ມີພຣະຫັດ(ແຂນ)ວາງຢູ່ເທິງຕັກຢ່າງສະຫງ່າງາມ ແລະແຍ້ມພຣະໂອດ(ຍິ້ມ) ທີ່ມີມະຫາກະລຸນາ ກະຕຸ້ນເຕືອນໃຫ້ພວກເຮົາພະຍາຍາມພັດທະນາຄວາມສະຫງົບ ແລະຄວາມຮັກພາຍໃນຕົວພວກເຮົາເອງ. ກິ່ນຫອມຫວນຈາກກະທູບ ເຕືອນໃຫ້ເຮົາຄຶດຫງໍາເຖິງຄວາມມີອິດທິພົນຂອງສິນ, ດວງປະທີບເຕືອນໃຫ້ເຮົາຮູ້ເຖິງແສງສະຫວ່າງແຫ່ງດວງປັນຍາ ແລະດອກໄມ້ທີ່ອີກບໍ່ນານກໍຈະຫ່ຽວແຫ້ງ ແລະຕາຍ ເປັນສິ່ງເຕືອນສະຕິເຮົາໃຫ້ຮູ້ເຖິງຄວາມເປັນອະນິດຈັງ. ເມື່ອພວກເຮົາຂາບລົງ ເຮົາສະແດງຄວາມກະຕັນຍູຕໍ່ພຣະພຸດທະເຈົ້າ ໃນຄໍາສອນທີ່ພຣະພຸດທະອົງໄດ້ສອນພວກເຮົາມາ. ນີ້ຄືຄວາມໝາຍໃນການບູຊາຂອງຊາວພຸດ.

**ຄໍາຖາມ: ແຕ່ຂ້າພະເຈົ້າໄດ້ຍິນມາວ່າຊາວພຸດບູຊາຮູບປັ້ນ (idols).**

**ຄໍາຕອບ:** ຄໍາກ່າວເຊັ່ນນັ້ນ ພຽງແຕ່ສະທ້ອນໃຫ້ເຫັນເຖິງຄວາມເຂົ້າໃຈຜິດຂອງຄົນທີ່ສ້າງມັນຂຶ້ນມາເອງ. ໃນພົດຈະນານຸກົມໄດ້ໃຫ້ຄວາມໝາຍຂອງ idol ວ່າ ໝາຍເຖິງ *ຮູບ* an image ຫຼືຮູບປັ້ນທີ່ບູຊາເໝືອນພຣະເຈົ້າ statue worshiped as a god, ດັ່ງທີ່ພວກເຮົາເຫັນວ່າ ຊາວພຸດບໍ່ໄດ້ນັບຖືວ່າພຣະພຸດທະເຈົ້າເປັນພຣະເຈົ້າ, ຖ້າເປັນດັ່ງນັ້ນ ເປັນໄປໄດ້ແນວໃດທີ່ພວກເຂົາເຊື່ອວ່າ ສິ້ນສ່ວນໄມ້ ຫຼືໂລຫະໃດໜຶ່ງ ເປັນພຣະເຈົ້າ? ທຸກສາສະໜາໃຊ້ສັນຍະລັກ ເພື່ອເປັນຕົວແທນຂອງຄວາມເຊື່ອຢ່າງມາກມາຍ. ໃນສາສະໜາເຕົ໋າ, ຍິງ-ຢາງ ying-yang ໃຊ້ເພື່ອເປັນສັນຍະລັກຂອງຄວາມກົມກືນກັນລະຫວ່າງສິ່ງກົງກັນຂ້າມກັນ. ໃນສາສະໜາສິກ, ດາບ ເປັນສັນຍະລັກຂອງຄວາມສູ້ຊົນຂອງຈິດວິນຍານ(ຈິຕຕະວິນຍານະ). ໃນສາສະໜາຄຣິດ, ປາ ເປັນສັນຍະລັກຂອງການສະຖິດຢູ່ຂອງພຣະເຢຊູຄຣິດ ແລະໄມ້ກາງເຂນ ເປັນສັນຍະລັກແທນຄວາມເສຍສະຫຼະຂອງພຣະອົງ. ໃນພຣະພຸດທະສາສະໜາ, ພຣະພຸດທະຮູບ ເຕືອນໃຫ້ເຮົາຮູ້ເຖິງມິຕິຂອງມະນຸດໃນຄໍາສອນຂອງພຣະພຸດທະເຈົ້າ, ເຊິ່ງຄວາມເປັນຈິງແລ້ວພຣະພຸດທະສາສະໜາ

ເປັນສາສະໜາທີ່ມີມະນຸດເປັນຈຸດສູນກາງ ຫຼາຍກວ່າພຣະເຈົ້າເປັນສູນກາງ. ສະນັ້ນ, ພວກເຮົາເບິ່ງເຂົ້າໄປຂ້າງໃນ, ບໍ່ແມ່ນເບິ່ງອອກໄປຂ້າງນອກເພື່ອຄົ້ນຫາຄວາມສົມບູນ ແລະຄວາມເຂົ້າໃຈ. ສະນັ້ນ, ການກ່າວວ່າ ຊາວພຸດບູຊາຮູບປັ້ນ ກໍໂງ່ເທົ່າໆກັນກັບ ການເວົ້າວ່າ ຊາວຄຣິດບູຊາປາ ຫຼືຮູບເປັນຫຼ່ຽມຄືໃນເລຂາຄະນິດ.

**ຄໍາຖາມ: ເປັນຫຍັງຈິ່ງມີຜູ້ຄົນປະຕິບັດແນວແປກໆຢູ່ໃນວັດພຣະພຸດທະສາສະໜາ?**
**ຄໍາຕອບ:** ມີຫຼາຍຢ່າງເບິ່ງຄືວ່າຈະແປກສໍາລັບພວກເຮົາ ເມື່ອພວກເຮົາຍັງບໍ່ທັນເຂົ້າໃຈ. ແທນທີ່ຈະປ່ອຍປະສິ່ງເຫຼົ່ານັ້ນໃຫ້ເປັນສິ່ງທີ່ແປກ, ພວກເຮົາຄວນພະຍາຍາມສະແຫວງ ຫາຄວາມໝາຍຂອງມັນ. ແຕ່ເຖິງຢ່າງໃດກໍຕາມ, ມັນເປັນຄວາມຈິງທີ່ວ່າ ບາງຢ່າງໃນ ພຣະພຸດທະສາສະໜາ ມີທີ່ມາຈາກຄວາມເຊື່ອຖືແບບງົມງວາຍ ແລະເຂົ້າໃຈຜິດຫຼາຍ ກວ່າຄໍາສອນຂອງພຣະພຸດທະເຈົ້າ ແລະຄວາມເຂົ້າໃຈຜິດເຊັ່ນນັ້ນ ບໍ່ພຽງແຕ່ຖືກພົບ ເຫັນໃນພຣະພຸດທະສາສະໜາເທົ່ານັ້ນ ແຕ່ກໍຍັງຄືບຄານເຂົ້າໃນສາສະໜາຕ່າງໆ ຈາກ ຍຸກສູ່ຍຸກແລ້ວ. ພຣະພຸດທະເຈົ້າໄດ້ສອນໄວ້ຢ່າງແຈ່ມແຈ້ງ ແລະລະອຽດ ແຕ່ຖ້າໃຜບໍ່ ເຂົ້າໃຈຢ່າງຖີ່ຖ້ວນ, ພຣະພຸດທະອົງ ກໍບໍ່ຄວນຈະໄດ້ຮັບການຕໍານິເຊັ່ນນັ້ນ. ມີພຸດທະ ພົດໄດ້ຕັດໄວ້ວ່າ:

*"ຖ້າຫາກຄົນເຮົາໄດ້ຮັບຄວາມທຸກຈາກຄວາມເຈັບໄຂ້ ແຕ່ບໍ່ສະແຫວງຫາການປິ່ນປົວ ເຖິງແມ່ນວ່າຈະຢູ່ໃກ້ທ່ານໝໍກໍຕາມ, ນັ້ນກໍບໍ່ແມ່ນຄວາມຜິດຂອງທ່ານໝໍ. ໃນທໍານອງ ດຽວກັນ, ຖ້າຄົນເຮົາຖືກບຽດບຽນແລະທໍລະມານຈາກໂລກຂອງກິເລດ, ແຕ່ບໍ່ສະແຫວງ ຫາການຊ່ວຍເຫຼືອຈາກພຣະພຸດທະເຈົ້າ, ນັ້ນກໍບໍ່ແມ່ນຄວາມຜິດຂອງພຣະພຸດທະເຈົ້າ."*

*Jn.28-9*

ບໍ່ຄວນຈະຕັດສິນພຣະພຸດທະສາສະໜາ ຫຼືສາສະໜາໃດໜຶ່ງ ໂດຍບຸກຄົນທີ່ບໍ່ປະຕິບັດ ສາສະໜານັ້ນຢ່າງເຖິງຖອງ. ຖ້າຫາກວ່າທ່ານປາຖະໜາຢາກຮູ້ຄໍາສອນທີ່ແທ້ຈິງຂອງ ພຣະພຸດທະສາສະໜາ ກໍຄວນອ່ານຄໍາສອນຂອງພຣະພຸດທະເຈົ້າ ແລະສົນທະນາທັມ ກັບບຸກຄົນຜູ້ທີ່ເຂົ້າໃຈຄໍາສອນຢ່າງຖືກຕ້ອງ.

**ຄໍາຖາມ: ມີງານບຸນໃດແນ່ທີ່ຄ້າຍຄືກັນກັບວັນຄຣິດມາດ?**

**ຄຳຕອບ:** ອີງຕາມປະເພນີ, ເຈົ້າຊາຍສິດທັດຖະອຸບັດຂຶ້ນ, ກາຍເປັນພຣະພຸດທະເຈົ້າ ແລະປະລິນິບພານໃນເວັນເພັງ ໑໕ ຄ່ຳຂອງເດືອນວິສາຂະ(ເດືອນຫົກ), ເປັນເດືອນທີສອງຂອງປີແບບອິນເດຍ ເຊິ່ງກົງກັບເດືອນເມສາຕໍ່ເດືອນພຶດສະພາຂອງປະຕິທິນຊາວຕາເວັນຕົກ. ເນື່ອງໃນວັນນັ້ນເອງ, ຊາວພຸດຢູ່ທົ່ວສາລະທິດຕ່າງກໍພາກັນສະເຫຼີມສະຫຼອງເຫດການນີ້ ໂດຍການໄປວັດເພື່ອເຂົ້າຮ່ວມໃນພິທີຕ່າງໆ ຫຼືບາງທີກໍປະຕິບັດທຳໝົດມື້.

**ຄຳຖາມ: ຖ້າຫາກພຣະພຸດທະສາສະໜາດີແບບນັ້ນເປັນຫຍັງບາງປະເທດທີ່ນັບຖືພຣະພຸດທະສາສະໜາຈິ່ງທຸກຍາກ?**

**ຄຳຕອບ:** ຖ້າຫາກວ່າຄວາມທຸກຍາກທີ່ເຈົ້າໝາຍເຖິງນັ້ນ ແມ່ນທຸກຍາກທາງດ້ານເສດຖະກິດ ກໍເຫັນສົມຄວນວ່າຖືກ ທີ່ບາງປະເທດທີ່ນັບຖືພຣະພຸດທະສາສະໜາຍາກຈົນ. ແຕ່ຖ້າຄວາມທຸກທີ່ເຈົ້າໝາຍເຖິງນັ້ນ ແມ່ນຄວາມທຸກຍາກທາງຄຸນນະພາບຊີວິດ ເຫັນວ່າບາງປະເທດທີ່ນັບຖືພຣະພຸດທະສາສະໜາຂ້ອນຂ້າງຮັ່ງມີຊ້ຳ ຕົວຢ່າງເຊັ່ນ ປະເທດອາເມຣິກາທີ່ຮັ່ງມີທາງດ້ານເສດຖະກິດ ແລະເປັນປະເທດທີ່ມີອຳນາດ ແຕ່ວ່າອັດຕາການກໍ່ອາດຊະຍາກຳແມ່ນສູງທີ່ສຸດໃນໂລກ. ມີປະຊາກອນຜູ້ແກ່ຊະລາ ຖືກປ່ອຍປະລະໄລຈາກລູກຫຼານ ແລະຕາຍຢ່າງໂດດດ່ຽວໃນເຮືອນຄົນຊະລາ, ຄວາມຮຸນແຮງພາຍໃນປະເທດ, ການທາລຸນເດັກນ້ອຍ, ການຕິດຢາເສບຕິດເປັນບັນຫາສຳຄັນ ແລະໜຶ່ງໃນຄູ່ແຕ່ງງານສາມຄູ່ຈະມີການຢ່າຮ້າງກັນ. ຄວາມຮັ່ງມີທາງເສດຖະກິດ ແຕ່ອາດທຸກຍາກທາງດ້ານຄຸນນະພາບຊີວິດ. ມາບັດນີ້, ເຮົາລອງມາເບິ່ງໃນບາງປະເທດທີ່ນັບຖືພຣະພຸດທະສາສະໜາແບບດັ້ງເດີມ ທ່ານສາມາດເຫັນສະພາບທີ່ແຕກຕ່າງກັນຫຼາຍຢ່າງ. ລູກເຄົາລົບນັບຖືໃຫ້ກຽດພໍ່ ແລະແມ່, ອັດຕາການກໍ່ອາດຊະຍາກຳແມ່ນຕ່ຳ, ການຢ່າຮ້າງ ແລະການຂ້າຕົວຕາຍແມ່ນຫາຍາກ ແລະຄຸນຄ່າທາງດ້ານປະເພນີເຊັ່ນ ຄວາມສຸພາບອ່ອນໂຍນ, ຄວາມມີນ້ຳໃຈເພື່ອແຜ່, ຄວາມເອື້ອເຟື້ອອາລີຕໍ່ຄົນແປກໜ້າຄວາມອົດທົນອົດກັ້ນ ແລະຄວາມເຄົາລົບຕໍ່ຜູ້ອື່ນ ຍັງມີການປະຕິບັດເຂັ້ມແຂງຢູ່. ຄວາມຫຼ້າຫຼັງທາງດ້ານເສດຖະກິດ ແຕ່ບາງທີ ຄຸນນະພາບຊີວິດ ສູງສົ່ງກວ່າປະເທດໃດໜຶ່ງເຊັ່ນ ປະເທດອາເມຣິກາ. ແຕ່ເຖິງຢ່າງໃດກໍຕາມ, ເຖິງແມ່ນວ່າພວກເຮົາຈະຕັດສິນປະເທດທີ່ນັບຖືພຣະພຸດທະສາສະໜາທາງດ້ານເສດຖະກິດຢ່າງດຽວ, ໜຶ່ງໃນບັນດາປະເທດທີ່ນັບຖື ພຣ

ພຸດທະສາສະໜາທີ່ຮັ່ງມີທີ່ສຸດ ແລະມີຄວາມກ້າວໜ້າທາງດ້ານເສດຖະກິດທີ່ສຸດໃນໂລກ ຍີ່ປຸ່ນ ເຊິ່ງມີຈຳນວນປະຊາກອນຢ່າງຫຼວງຫຼາຍທີ່ເອີ້ນ ພວກເຂົາເຈົ້າເອງວ່າ *ຊາວພຸດ*.

**ຄຳຖາມ: ເປັນຫຍັງ ພວກທ່ານຈຶ່ງບໍ່ຄ່ອຍໄດ້ຍິນຂ່າວກ່ຽວກັບວຽກສົງເຄາະຊ່ວຍເຫຼືອຈັດຂຶ້ນໂດຍຊາວພຸດ?**

**ຄຳຕອບ:** ບາງທີ ອາດເປັນຍ້ອນວ່າຊາວພຸດບໍ່ຮູ້ສຶກຈຳເປັນທີ່ຈະໂອ້ອວດກ່ຽວກັບຄວາມດີທີ່ພວກເຂົາເຈົ້າເຮັດໄປ. ຫຼາຍປີຜ່ານມາ ຜູ້ນຳຊາວພຸດຍີ່ປຸ່ນ ນິໂກ້ ນິວະໂນ້ Nikkho Nirwano ໄດ້ຮັບຮາງວັນ Templeton Prize ໃນການເຮັດວຽກເພື່ອສົ່ງເສີມຄວາມສາມັກຄີລະຫວ່າງສາສະໜາ. ເຊັ່ນດຽວກັນ, ເມື່ອບໍ່ດົນມານີ້ ມີພຣະສົງໄທໄດ້ຮັບຮາງວັນມັກໄຊໄຊ Magsaysay Prize ຈາກການມີຜົນງານດີເດັ່ນກ່ຽວກັບການບຳບັດຜູ້ຕິດຢາເສບຕິດ. ໃນປີ ໑໙໘໗ ມີພຣະສົງໄທອີກອົງໜຶ່ງ, ພຣະກັນຕະຍາພິວັດ ໄດ້ຮັບຮາງວັນສັນຕິພາບສຳລັບເດັກນ້ອຍຈາກປະເທດນໍຣ໌ແວ ເນື່ອງຈາກວ່າ ໄດ້ຊວ່ຍເຫຼືອເດັກນ້ອຍອະນາຖາໃນເຂດຊົນນະບົດ. ແລະກ່ຽວກັບໂຄງການຊ່ວຍເຫຼືອສັງຄົມຂະໜາດໃຫຍ່ຂອງຊາວພຸດຕາເວັນຕົກ ເພື່ອຊວ່ຍເຫຼືອຄົນທຸກຍາກຢູ່ປະເທດອິນເດຍອີກ? ພວກເຂົາເຈົ້າໄດ້ສ້າງໂຮງຮຽນ, ສ້າງສູນຝຶກອົບຮົມຈິດໃຈເດັກນ້ອຍ, ສະຖານທີ່ປິ່ນປົວ, ແລະອຸດສາຫະກຳຂະໜາດນ້ອຍ ເພື່ອການດຳລົງຊີວິດແບບກຸ້ມຕົນເອງ. ຊາວພຸດເຫັນວ່າການຊວ່ຍເຫຼືອສົງເຄາະຄົນອື່ນ ເປັນການສະແດງອອກທາງການປະຕິບັດຕໍ່ສາສະໜາຂອງຕົນ ເຊັ່ນດຽວກັນກັບສາສະໜາອື່ນປະຕິບັດກັນ ແຕ່ພວກເຂົາເຈົ້າເຊື່ອກັນວ່າ ຈະຕ້ອງເຮັດແບບງຽບໆໂດຍປາສະຈາກການໂຄສະນາຕົນເອງ.

**ຄຳຖາມ: ເປັນຫຍັງພຣະພຸດທະສາສະໜາຈຶ່ງມີຫຼາຍປະເພດແທ້?**

**ຄຳຕອບ:** ແມ່ນແຕ່ນ້ຳຕານກໍຍັງມີຫຼາຍຊະນິດ ມີນ້ຳຕານເຫຼືອງ, ນ້ຳຕານຂາວ, ນ້ຳຕານແຂງ, ນ້ຳເຊື່ອມ ແລະນ້ຳຕານເຢັນ ແຕ່ທັງໝົດນັ້ນກໍລ້ວນແຕ່ແມ່ນນ້ຳຕານ ທີ່ມີລົດຊາດຫວານຄືກັນ. ມັນໄດ້ຖືກຜະລິດຈາກຫຼາຍຮູບແບບ ດັ່ງນັ້ນຈຶ່ງໄດ້ຖືກນຳໃຊ້ແຕກຕ່າງກັນ. ພຣະພຸດທະສາສະໜາກໍເຊັ່ນດຽວກັນ: ມີພຣະພຸດທະສາສະໜານິກາຍເຖລະວາດ(ເຖຣະວາທະ), ພຣະພຸດທະສາສະໜານິກາຍເຊນ, ພຣະພຸດທະສາສະໜານິກາຍສຸຂາວະດີ, ພຣະພຸດທະສາສະໜານິກາຍໂຍຄາຈານ(ໂຍຄາຈາຣະ) ແລະນິກາຍວັດຊະຣະຍານ ແຕ່ທັງໝົດກໍລ້ວນແລ້ວແຕ່ແມ່ນຄຳສອນຂອງພຣະພຸດທະເຈົ້າ ແລະທັງໝົດ

ນັ້ນ ກໍມີລົດຊາດອັນດຽວກັນ ຄື ລົດແຫ່ງຄວາມວິມຸດຫຼຸດພົ້ນ. ພຣະພຸດທະສາສະໜາໄດ້ມີການວິວັດທະນາການໄປເປັນຫຼາຍຮູບແບບ ເພື່ອເຮັດໃຫ້ແທດເໝາະກັບວັດທະນະທຳໃນທີ່ນັ້ນໆ, ໄດ້ຖືກແປຄືນເກືອບຫຼາຍສະຕະວັດແລ້ວ. ດ້ວຍເຫດນີ້ ມັນຈຶ່ງຍັງຄົງຢູ່ແທດເໝາະກັບຄົນຍຸກໃໝ່. ນອກຈາກນີ້, ເຖິງແມ່ນວ່າພຣະພຸດທະສາສະໜາເບິ່ງຄືວ່າຈະມີຫຼາຍປະເພດແຕກຕ່າງກັນແທ້ ແຕ່ແກ່ນແທ້ທັງໝົດຂອງແຕ່ລະນິກາຍແມ່ນອະລິຍະສັດສີ່(ອະຣິຍະສັຈຈະ) ແລະອະລິຍະມັກ(ອະຣິຍະມັຄຄະ)ມີອົງແປດ. ທຸກສາສະໜາໃຫຍ່ໆໃນໂລກ ລວມທັງພຣະພຸດທະສາສະໜາ ກໍຍັງແບ່ງອອກເປັນຫຼາຍລັດທິ ແລະນິກາຍ. ບາງທີຄວາມແຕກຕ່າງລະຫວ່າງພຣະພຸດທະສາສະໜາ ແລະສາສະໜາອື່ນນັ້ນຄື ຄວາມແຕກຕ່າງທາງນິກາຍ ທີ່ຍາມໃດກໍມີຄວາມອົດທົນຍອມຮັບ ແລະການເປັນມິດຕໍ່ກັນ ແລະກັນ.

**ຄຳຖາມ: ແນ່ນອນວ່າທ່ານຕ້ອງຄຶດວ່າພຣະພຸດທະສາສະໜາສູງສົ່ງ. ຂ້ານ້ອຍຄຶດວ່າທ່ານຄືຈະຄຶດວ່າ ມັນເປັນສາສະໜາໜຶ່ງດຽວເທົ່ານັ້ນທີ່ແທ້ຈິງ ສ່ວນສາສະໜາອື່ນແມ່ນບໍ່ຈິງ.**

**ຄຳຕອບ:** ບໍ່ມີພຸດທະສາສະນິກະຊົນຄົນໃດ ຜູ້ທີ່ເຂົ້າໃຈຄຳສອນຂອງພຣະພຸດທະເຈົ້າຄຶດວ່າ ສາສະໜາອື່ນຜິດ. ບໍ່ມີບຸກຄົນໃດ ຜູ້ທີ່ພະຍາຍາມດ້ວຍຄວາມຈິງໃຈ ເພື່ອສຶກສາສາສະໜາອື່ນດ້ວຍໃຈເປີດກວ້າງ ກໍຈະຄຶດແບບນັ້ນເຊັ່ນກັນ. ສິ່ງທຳອິດ ທີ່ທ່ານສັງເກດເຫັນ ເມື່ອສຶກສາສາສະໜາອື່ນທີ່ແຕກຕ່າງນັ້ນ ພຽງເພື່ອຮູ້ວ່າ ມັນມີສ່ວນຄືກັນພຽງໃດ. ທຸກສາສະໜາຍອມຮັບວ່າ ພາວະປັດຈຸບັນຂອງມະນຸດເປັນທຸກ. ທຸກສາສະໜາເຊື່ອວ່າການແລກປ່ຽນກັນທາງດ້ານທັດສະນະ ແລະພຶດຕິກຳ ແມ່ນມີຄວາມຈຳເປັນຖ້າຫາກວ່າສະພາບຂອງມະນຸດມີການປັບປຸງດີຂຶ້ນ. ທຸກສາສະໜາສອນສີລະທຳ(ສີລະທັມ)ທີ່ລວມເອົາຄວາມຮັກ, ຄວາມກະລຸນາ, ຄວາມອົດທົນ, ຄວາມເອື້ອເຟື້ອເພື່ອແຜ່, ແລະຄວາມຮັບຜິດຊອບຕໍ່ສັງຄົມ ແລະທຸກສາສະໜາຍອມຮັບການມີຢູ່ຂອງຮູບແບບຜູ້ມີອຳນາດສູງສຸດ. ພວກເຂົາເຈົ້າໃຊ້ພາສາ, ຊື່, ແລະສັນຍະລັກທີ່ແຕກຕ່າງກັນ ເພື່ອພັນລະນາ ແລະອະທິບາຍສິ່ງເຫຼົ່ານີ້. ພຽງແຕ່ຄົນເຮົາໄປຍຶດຕິດຢ່າງມີຈິດໃຈຄັບແຄບຕໍ່ທັດສະນະສະເພາະຂອງການເບິ່ງສິ່ງຕ່າງໆດ້ວຍຄວາມບໍ່ອົດທົນ, ຖືຕົວ, ແລະຄວາມເຫັນວ່າ ມີພຽງຕົນເອງຖືກຕ້ອງເກີດຂຶ້ນ.

ລອງຈິນຕະນາການເບິ່ງວ່າ ມີຄົນຊາວອັງກິດ, ຄົນຝຣັ່ງ, ຄົນຈີນ ແລະຄົນອິນໂດເນເຊຍ ທັງໝົດຕ່າງກໍແນມເບິ່ງຈອກໜ່ວຍໜຶ່ງ. ຄົນອັງກິດເວົ້າຂຶ້ນວ່າ, "ນັ້ນແມ່ນຄັບ That's a cup " ຄົນຝຣັ່ງຕອບວ່າ, " ບໍ່ ມັນບໍ່ແມ່ນ. ມັນແມ່ນຕັສເຊ No it's not. It's a tasse" ແລະຄົນຈີນໃຫ້ຄຳເຫັນມາວ່າ, "ພວກເຈົ້າທັງສອງຜິດ. ມັນແມ່ນເປ You are both wrong. It's a pei" ໃນທີ່ສຸດຄົນອິນໂດເນເຊຍ ກໍໄດ້ຫົວໃສ່ຄົນອື່ນແລ້ວເວົ້າວ່າ "ພວກເຈົ້າຄືໂງ່ແທ້ ມັນແມ່ນຄາວັນ. What fools you are. It's a cawan." ແລະແລ້ວຄົນອັງກິດກໍໄດ້ເອົາພົດຈະນານຸກົມອອກມາສະແດງໃຫ້ຄົນອື່ນເບິ່ງແລ້ວເວົ້າວ່າ, "ຂ້ອຍສາມາດພິສູດໄດ້ວ່າ ມັນແມ່ນຄັບ. ພົດຈະນານຸກົມຂອງຂ້ອຍວ່າແນວນັ້ນ. I can prove that it is a cup. My dictionary says so." " ຄັນຊັ້ນ ພົດຈະນານຸກົມຂອງເຈົ້າຜິດ." ຄົນຝຣັ່ງເວົ້າຂຶ້ນ. "ເພາະວ່າພົດຈະນຸກົມຂອງຂ້ອຍບອກຢ່າງແຈ່ມແຈ້ງວ່າ ມັນແມ່ນຕັດເຊ Because my dictionary clearly says, it is a tasse." ຄົນຈີນເວົ້າຂຶ້ນຢ່າງເຍີ້ຍຫຍັນວ່າ; "ພົດຈະນານຸກົມຂອງຂ້ອຍວ່າແມ່ນເປ ແລະພົດຈະນານຸກົມຂອງຂ້ອຍມີອາຍຸຫຼາຍພັນປີດົນກວ່າ ຂອງພວກເຈົ້າ ດັ່ງນັ້ນ ມັນຈິ່ງຄວນຖືກຕ້ອງ. ແລະນອກຈາກນີ້, ຍັງມີຄົນເວົ້າພາສາຈີນ ຫຼາຍກວ່າພາສາອື່ນອີກ. ດັ່ງນັ້ນ, ມັນຄວນຈະແມ່ນເປ. ໃນຂະນະທີ່ພວກເຂົາຖົກຖຽງຕອບກັນໄປກັນມາ, ມີຊາຍຄົນໜຶ່ງມາເຖິງ, ດື່ມຈາກຈອກນັ້ນແລ້ວເວົ້າຕໍ່ພວກນັ້ນວ່າ, "ເຖິງແມ່ນວ່າ ພວກເຈົ້າຈະເອີ້ນມັນວ່າ *ຄັບ, ຕັສເຊ, ເປ ຫຼື ຄາວັນ.* ຈຸດປະສົງຂອງຈອກນັ້ນ ແມ່ນເພື່ອໃສ່ນ້ຳເພື່ອດື່ມ. ເຊົາຖົກຖຽງກັນ ແລະດື່ມກັນເທາະ, ເຊົາໂຕ້ແຍ້ງກັນ ແລ້ວບັນເທົາຄວາມຫິວເທາະ. ນີ້ຄືທັດສະນະຂອງພຣະພຸດທະສາສະໜາ ທີ່ມີຕໍ່ສາສະໜາອື່ນໆ.

**ຄຳຖາມ: ບາງຄົນເວົ້າວ່າ "ທຸກສາສະໜາແມ່ນຄືກັນ" ທ່ານເຫັນດີກັບພວກເຂົາບໍ?**

**ຄຳຕອບ:** ສາສະໜາບໍ່ໄດ້ມີຄວາມສະຫຼັບສັບຊ້ອນ ແລະຫຼາກຫຼາຍເພື່ອຈະເຮັດໃຫ້ມາລວມລົງເປັນອັນດຽວກັນພຽງຄຳກ່າວລອຍໆເຊັ່ນນັ້ນ. ພຸດທະສາສະນິກະຊົນອາດເວົ້າວ່າ ຄຳເວົ້ານີ້ລວມເອົາທັງຖືກ ແລະຜິດ. ພຣະພຸດທະສາສະໜາສອນວ່າ ບໍ່ມີພຣະເຈົ້າ ແຕ່ໃນຂະນະດຽວກັນ ສາສະໜາຄຣິດສອນວ່າມີພຣະເຈົ້າ. ພຣະພຸດທະສາສະໜາກ່າວວ່າ ການຕັດສະຣູ້ແມ່ນມີໄດ້ສຳລັບທຸກຄົນ ຜູ້ທີ່ສາມາດຂັດເກົາຈິດໃຈຂອງຕົນ ແຕ່ສາສະໜາຄຣິດຢືນຢັນວ່າ ການໄຖ່ບາບເປັນໄປໄດ້ສະເພາະກັບບຸກຄົນຜູ້ທີ່ເຊື່ອໃນພຣະເຍ

ຊູ. ອາຕະມາຄິດວ່າ ນີ້ຄືຄວາມແຕກຕ່າງທີ່ເຫັນໄດ້ຢ່າງຊັດເຈນ. ແຕ່ເຖິງຢ່າງໃດກໍຕາມ, ຍັງມີຖ້ອຍຄຳທີ່ງົດງາມ ກ່າວໄວ້ໃນຄຳພີໄບເບີນວ່າ:

*"ຖ້າຫາກເຮົາເວົ້າພາສາຂອງມວນມະນຸດ ແລະເທບພະເຈົ້າ ແຕ່ບໍ່ມີຄວາມຮັກ, ເຮົາກໍເປັນພຽງແຕ່ສຽງກອງທີ່ລຳຄານ ຫຼືສຽງສິ່ງທີ່ດັງໜວກຫູ. ຖ້າຫາກວ່າ ເຮົາສາມາດພະຍາກອນໄດ້ ແລະເຂົ້າໃຈທຸກຄວາມເລິກລັບ ແລະທຸກສາດຂອງຄວາມຮູ້, ແລະຖ້າຫາກເຮົາມີສັດທາຢ່າງແຮງກ້າຈົນວ່າ ສາມາດຍົກພູເຂົາທັງໜ່ວຍໄດ້, ແຕ່ຫາກເຮົາບໍ່ມີຄວາມຮັກ, ເຮົາກໍບໍ່ມີຄວາມໝາຍຫຍັງ. ຖ້າຫາກເຮົາໃຫ້ສິ່ງຂອງທັງໝົດທີ່ມີຢູ່ແກ່ຄົນທຸກຍາກ ຫຼືແມ່ນແຕ່ເສຍສະຫຼະຮ່າງກາຍໃຫ້ໄໝ້ເປັນແປວໄຟ ແຕ່ເຮົາບໍ່ມີຄວາມຮັກ, ເຮົາກໍບໍ່ໄດ້ຫຍັງ. ຄວາມຮັກຄື ຄວາມອົດທົນ, ຄວາມຮັກຄືຄວາມກະລຸນາ, ບໍ່ມີຄວາມອິດສາ, ບໍ່ໂອ້ອວດ, ບໍ່ຫຼົງໂຕເອງ. ຄວາມຮັກບໍ່ໄຮ້ມາລະຍາດ, ມັນແມ່ນການຄົ້ນຫາຕົວເອງ, ບໍ່ໂມໂຫງ່າຍໆ, ບໍ່ບັນທຶກໄວ້ເຊິ່ງການກະທຳທີ່ບໍ່ດີ. ຄວາມຮັກ ບໍ່ແມ່ນການຍິນດີໃນສິ່ງທີ່ຊົ່ວຮ້າຍ, ແຕ່ຊື່ນຊົມຍິນດີໃນຄວາມຈິງ. ປົກປ້ອງຢູ່ສະເໝີ, ເຊື່ອໃຈກັນສະເໝີ, ສະຫງວນຮັກສາໄວ້ສະເໝີ."*

*I Cor.13-7*

ນີ້ຄືສິ່ງທີ່ພຸດທະສາສະໜາສອນແທ້ໆ. ສະພາບຂອງໃຈເຮົາສຳຄັນກວ່າ ອຳນາດເໜືອທຳມະຊາດໃດໆທີ່ເຮົາອາດມີ, ຄວາມສາມາດໃນການພະຍາກອນອະນາຄົດ, ຄວາມໝັ້ນຄົງໃນສັດທາຂອງເຮົາ ຫຼືການສະແດງອອກທີ່ເໜືອຄວາມເປັນຈິງທີ່ເຮົາອາດມີ. ດັ່ງນັ້ນ, ເມື່ອເວົ້າເຖິງທັດສະນະທາງສາສະໜາ ແລະໃນທາງທິດສະດີ, ພຣະພຸດທະສາສະໜາ ແລະຄຣິດຕະສາສະໜາແມ່ນແຕກຕ່າງກັນຢ່າງແນ່ນອນ. ແຕ່ຖ້າເວົ້າເຖິງຄຸນນະພາບທາງດ້ານຈິດໃຈ, ສີລະທຳ(ສີລະທັມ), ແລະການປະພຶດແມ່ນມີຄວາມຄ້າຍຄືກັນແທ້.

**ຄຳຖາມ: ພຣະພຸດທະສາສະໜາມີລັກສະນະເປັນວິທະຍາສາດບໍ?**

**ຄຳຕອບ:** ກ່ອນທີ່ພວກເຮົາຈະມາຕອບຄຳຖາມນັ້ນ ມັນອາດຈະເປັນການດີ ທີ່ຈະໃຫ້ນິຍາມ ຂອງຄຳວ່າ "*ວິທະຍາສາດ Science*". ຄຳວ່າ *ວິທະຍາສາດ* ອີງຕາມພົດຈະນານຸກົມໝາຍເຖິງ, "ຄວາມຮູ້ທີ່ຖືກຈັດສັນໄວ້ເປັນລະບົບ, ເຊິ່ງຂຶ້ນຢູ່ກັບການເຫັນ ແລະການທົດລອງຄວາມຈິງ ແລະການກ່າວເຖິງກົດເກນທຳມະຊາດໂດຍທົ່ວໄປ, ຫຼືສາຂາວິຊາ

ໃດໜຶ່ງ ທີ່ສາມາດຄົ້ນຄ້ວາໄດ້ຢ່າງຊັດເຈນ.” ມີທັດສະນະຂອງພຣະພຸດທະສາສະໜາ ທີ່ບໍ່ອາດເໝາະສົມກັບຄຳນິຍາມນີ້ ແຕ່ວ່າ ແກ່ນຄຳສອນຂອງພຣະພຸດທະສາສະໜາ, ຄື ອະລິຍະສັດສີ່(ອະຣິຍະສັຈຈະ) ເປັນສິ່ງທີ່ເໝາະສົມທີ່ສຸດ. ທຸກ(ທຸກຂະ), ເປັນອະລິຍະສັດ ຂໍ້ທີໜຶ່ງ ມັນແມ່ນປະສົບການທີ່ສາມາດນິຍາມ, ສຳຜັດ ແລະປະເມີນໄດ້. ບໍ່ມີຄວາມພະຍາຍາມໃດ ທີ່ອະທິບາຍຄວາມທຸກດ້ວຍທັດສະນະຂອງອະພິປັດຊະຍາ(ອະພິປຣັຊຍາ) ຫຼືສາດແຫ່ງຄວາມເລິກລັບ. ອີງຕາມອະລິຍະສັດຂໍ້ທີສາມ, ຄວາມທຸກສິ້ນສຸດລົງ, ບໍ່ແມ່ນເກີດຈາກການອາໄສພຣະເຈົ້າ, ດ້ວຍສັດທາ, ຫຼືດ້ວຍການວິງວອນ, ພຽງແຕ່ຍ້ອນການໄຖ່ຖອນສະມຸທັຍ(ເຫດແຫ່ງຄວາມທຸກ). ນີ້ເປັນຄວາມສັດຈິງ. ອະລິຍະສັດສີ່, ຫົນທາງໄປສູ່ຄວາມດັບທຸກ, ອີກຄັ້ງໜຶ່ງ, ນີ້ບໍ່ໄດ້ກ່ຽວກັບເລື່ອງຂອງອະພິປັດຊະຍາ ແຕ່ຂຶ້ນຢູ່ກັບການປະພຶດປະຕິບັດໃນວິທີທາງສະເພາະໃດໜຶ່ງເທົ່ານັ້ນ. ບໍ່ພຽງເທົ່ານັ້ນ, ການປະພຶດປະຕິບັດຍັງເປີດກວ້າງເພື່ອການພິສູດ. ພຣະພຸດທະສາສະໜາ ສັ່ງສອນໂດຍປາສະຈາກແນວຄວາມຄິດກ່ຽວກັບສິ່ງມີອິດທິພົນເໜືອທຳມະຊາດ, ເຊັ່ນດຽວກັນກັບວິທະຍາສາດ, ແລະອະທິບາຍກ່ຽວກັບຕົ້ນກຳເນີດ ແລະວິວັດທະນາການຂອງຈັກກະວານ ໃນແງ່ມູນຂອງກົດເກນທຳມະຊາດ. ສິ່ງທັງໝົດນີ້ ສາມາດສະແດງໃຫ້ເຫັນທາດແທ້ຂອງວິທະຍາສາດ. ບໍ່ສະເພາະເທົ່ານັ້ນ, ພຣະພຸດທະອົງຍັງສັ່ງສອນຢູ່ເລື້ອຍໆວ່າ ພວກເຮົາບໍ່ຄວນເຊື່ອຖືແບບງົມງວາຍ, ແຕ່ຄວນຈະຖາມ, ກວດກາ, ໄຕ່ຖາມ ແລະອາໄສການພິສູດດ້ວຍຕົນເອງ, ນີ້ແມ່ນທັດສະນະທີ່ກ່ຽວຂ້ອງກັບວິທະຍາສາດ. ໃນບົດ*ກາລາມະສູດ* ທີ່ມັກໄດ້ຍິນຢູ່ສະເໝພຣະພຸດທະອົງຕັດໄວ້ວ່າ:

*“ຢ່າປົງໃຈເຊື່ອຍ້ອນການເລົ່າສືບກັນມາຫຼືຕາມປະເພນີ, ຢ່າປົງໃຈເຊື່ອຍ້ອນຂ່າວລືຫຼືຈາກຕຳລາ, ຢ່າປົງໃຈເຊື່ອດ້ວຍຂ່າວລື ຫຼືພຽງແຕ່ຕາມຫຼັກເຫດຜົນ, ຢ່າປົງໃຈເຊື່ອພຽງເປັນຄວາມຄິດເຫັນ ຫຼືຈາກຄວາມສາມາດຂອງຄົນອື່ນວ່າ “ທ່ານເປັນຄູຂອງເຮົາ”, ແຕ່ເມື່ອເຮົາຮູ້ດ້ວຍຕົນເອງວ່າ ນັ້ນຄືສິ່ງທີ່ດີ, ນັ້ນຄືສິ່ງທີ່ເຊື່ອຖືໄດ້, ນັ້ນຄືສິ່ງທີ່ໄດ້ສັນລະເສີນໂດຍຜູ້ຮູ້(ບັນດິດ) ແລະເມື່ອປະຕິບັດຕາມ, ສະມາທານໄວ້ ແລ້ວນຳໄປສູ່ຄວາມສຸກ(ສຸຂະ) ຈິ່ງຄວນປະຕິບັດຕາມສິ່ງນັ້ນ.”*

*A.I, 188*

ດັ່ງນັ້ນ, ພວກເຮົາອາດສາມາດເວົ້າໄດ້ວ່າ ເຖິງແມ່ນວ່າພຣະພຸດທະສາສະໜາ ບໍ່ແມ່ນວິທະຍາສາດທັງມວນ, ແຕ່ມັນກໍມີລັກສະນະທາງວິທະຍາສາດຢ່າງແນ່ນອນ ແລະຍິ່ງມີລັກສະນະວິທະຍາສາດກວ່າສາສະໜາອື່ນໃດ. ສຳຄັນແມ່ນ ແອລເບີດ ໄອສະໄຕນ໌ Albert Einstein, ນັກວິທະຍາສາດຜູ້ຍິ່ງໃຫຍ່ຂອງສະຕະວັດທີ ໒໐ ໄດ້ກ່າວເຖິງພຣະພຸດທະສາສະໜາໄວ້ວ່າ:

*" ສາສະໜາໃນອະນາຄົດ ຈະເປັນສາສະໜາແຫ່ງຈັກກະວານ. ມັນຄວນຈະເປັນສິ່ງເໜືອກວ່າພຣະເຈົ້າ ແລະຫຼີກລ່ຽງລັດທິຄວາມເຊື່ອ ແລະສາສະໜາວິທະຍາ. ລວມເອົາທັງທຳມະຊາດ ແລະຈິດວິນຍານ(ຈິຕຕະວິນຍານະ),ມັນຄວນຈະອີງອາໄສຄວາມໝາຍຂອງສາສະໜາ ທີ່ເກີດຈາກການປະຕິບັດຕົວຈິງຂອງສິ່ງທັງປວງ, ຢ່າງເປັນທຳມະຊາດ ແລະຈິດວິນຍານ ແລະມີຄວາມໝາຍກົມກຽວກັນ. ພຣະພຸດທະສາສະໜາຕອບກັບຄຳພັນລະນາຂ້າງເທິງນັ້ນ. ຖ້າຈະມີສາສະໜາໃດ ທີ່ທົນທານຕໍ່ຄວາມຕ້ອງການຂອງວິທະຍາສາດສະໄໝໃໝ່, ມັນຄວນຈະແມ່ນພຣະພຸດທະສາສະໜາ."*

**ຄຳຖາມ: ບາງຄັ້ງຂ້ານ້ອຍໄດ້ຍິນວ່າ ຄຳສອນຂອງພຣະພຸດທະເຈົ້າເອີ້ນວ່າ *ທາງສາຍກາງ.* ຄຳນີ້ ໝາຍຄວາມວ່າແນວໃດ?**

**ຄຳຕອບ:** ພຣະພຸດທະເຈົ້າໃສ່ຊື່ຂອງອະລິຍະມັກ(ອະຣິຍະມັຄຄະ) ມີອົງແປດອີກຊື່ໜຶ່ງ, ຄື ມັດຊິມາປະຕິປະທາ, ເຊິ່ງໝາຍຄວາມວ່າ "*ທາງສາຍກາງ*". ນີ້ເປັນຊື່ທີ່ສຳຄັນເພາະວ່າ ມັນບໍ່ພຽງແຕ່ແນະນຳໃຫ້ເຮົາເດີນຕາມທາງນັ້ນ, ແຕ່ຍັງຈະຕ້ອງດຳເນີນຕາມໃນທາງປະຕິບັດອີກດ້ວຍ. ຄົນເຮົາອາດກາຍເປັນຄົນເຂັ້ມງວດກ່ຽວກັບຫຼັກສາສະໜາ, ການປະຕິບັດ ແລະການກາຍເປັນຜູ້ຫຼົງໄຫຼໃນສາສະໜາ. ໃນພຣະພຸດທະສາສະໜາ ກົດລະບຽບວິໄນຈະຕ້ອງໄດ້ປະຕິບັດຕາມ ແລະການປະຕິບັດໄປພ້ອມໆກັນຕາມທັດສະນະທີ່ ມີເຫດຜົນ, ຫຼີກລຽງຈາກການປະຕິບັດແບບຊ້າຍຈັດຂວາໂພດ ແລະເກີນໄປ. ຊາວໂຣມັນບູຮານກ່າວວ່າ "ຄວາມຮູ້ຈັກພໍປະມານໃນທຸກສິ່ງ" ພຣະພຸດທະສາສະໜາ ກໍເຫັນດ້ວຍໃນຄຳເວົ້ານີ້.

**ຄຳຖາມ: ຂ້ານ້ອຍເຄີຍອ່ານມາວ່າ ພຣະພຸດທະສາສະໜາເປັນພຽງປະເພດໜຶ່ງຂອງສາສະໜາຮິນດູ. ມັນແມ່ນແທ້ບໍ?**

**ຄຳຕອບ:** ບໍ່ ບໍ່ແມ່ນດອກ. ພຣະພຸດທະສາສະໜາ ແລະສາສະໜາຮິນດູ ມີຄຳສອນທາງສີລະທຳ(ສີລະທັມ)ຮ່ວມກັນ, ພວກເຂົາໃຊ້ຄຳສັບຄ້າຍກັນ ເຊັ່ນຄຳວ່າ ກຳ(ກັມມະ), ສະມາທິ ແລະນິບພານ ທັງສອງສາສະໜາແມ່ນມີຕົ້ນກຳເນີດຈາກປະເທດອິນເດຍ. ນີ້ເປັນເຫດໃຫ້ມີຄົນຄິດວ່າ ທັງສອງສາສະໜາເປັນອັນດຽວກັນ ຫຼືຄ້າຍຄືກັນຫຼາຍ. ແຕ່ຖ້າພວກເຮົາເບິ່ງກາຍຄວາມຄ້າຍຄືກັນຢ່າງຜິວເຜີນນັ້ນ ເຮົາກໍຈະເຫັນວ່າ ທັງສອງສາສະໜານີ້ ມີຄວາມແຕກຕ່າງກັນຢ່າງສິ້ນເຊີງ. ຕົວຢ່າງເຊັ່ນ ຊາວຮິນດູເຊື່ອໃນພຣະເຈົ້າຜູ້ສູງສຸດ ແຕ່ພຣະພຸດທະສາສະໜາບໍ່ເຊື່ອເລີຍ. ໜຶ່ງໃນຫຼັກຄຳສອນກ່ຽວກັບປັດຊະຍາຂອງສັງຄົມຮິນດູ ແມ່ນຄວາມຄິດກ່ຽວກັບຊົນຊັ້ນວັນນະ ເຊິ່ງພຣະພຸດທະສາສະໜາ ປະຕິເສດຢ່າງໜັກແໜ້ນ. ພິທີກຳທົດສອບຄວາມບໍລິສຸດ ແມ່ນການປະຕິບັດທີ່ສຳຄັນໃນສາສະໜາຮິນດູ ແຕ່ບໍ່ມີໃນພຣະພຸດທະສາສະໜາ. ໃນຄຳພີທາງພຣະພຸດທະສາສະໜາ, ພຣະພຸດທະເຈົ້າເປັນຕົວຢ່າງທີ່ດີ ທີ່ວິຈານກ່ຽວກັບຊົນຊັ້ນພາມ, ນັກບວດໃນສາສະໜາຮິນດູ, ໄດ້ສັ່ງສອນ ແລະມີບາງຄຳສອນທີ່ສຳຄັນຂອງພຸດທະອົງ ກ່ຽວກັບເລື່ອງນີ້. ນີ້ຄືສິ່ງທີ່ຢືນຢັນວ່າ ພຣະພຸດທະສາສະໜາ ແລະສາສະໜາຮິນດູບໍ່ຄືກັນ.

**ຄຳຖາມ: ແຕ່ພຣະພຸດທະເຈົ້າໄດ້ຮຽນແບບຄຳສອນ ກ່ຽວກັບກົດແຫ່ງກຳ(ກັມມະ) ຈາກສາສະໜາພາມ ແມ່ນບໍ?**

**ຄຳຕອບ:** ສາສະໜາຮິນດູ ສອນກ່ຽວກັບລັດທິກົດແຫ່ງກຳ(ກັມມະ) ແລະການກັບຊາດມາເກີດ. ແຕ່ເຖິງຢ່າງໃດກໍຕາມ, ຄວາມໝາຍຂອງທັງສອງຄຳສອນ ແມ່ນມີຄວາມແຕກຕ່າງກັນຫຼາຍຈາກສາສະໜາພຸດ. ຕົວຢ່າງ, ສາສະໜາຮິນດູເຊື່ອວ່າ ພວກເຮົາຖືກກຳນົດໂດຍກຳ(ກັມມະ)ຂອງພວກເຮົາເອງ, ໃນຂະນະທີ່ພຸດທະສາສະໜາສອນວ່າກຳ(ກັມມະ) ຫຼືການກະທຳຂອງເຮົາເອງເຮັດໃຫ້ເຮົາເປັນໄປ. ອີງຕາມສາສະໜາຮິນດູ, ວິນຍານອະມະຕະ ຫຼືອັດຕະມັນ(Atman) ຜ່ານຈາກຊາດໜຶ່ງໄປສູ່ອີກຊາດໜຶ່ງ ແຕ່ວ່າພຣະພຸດທະສາສະໜາປະຕິເສດວ່າ ວິນຍານເຊັ່ນນັ້ນຄວນຈະເອີ້ນວ່າ ນັ້ນຄືການປ່ຽນແປງຢ່າງຕໍ່ເນື່ອງຂອງພະລັງງານຄື້ນຈິດທີ່ໄປເກີດໃໝ່. ມີຄວາມແຕກຕ່າງກັນຫຼາຍຢ່າງ ລະຫວ່າງສອງສາສະໜາກ່ຽວກັບຄຳສອນກຳ(ກັມມະ) ແລະການເກີດໃໝ່. ແຕ່ເຖິງຢ່າງໃດກໍຕາມ, ເຖິງແມ່ນວ່າ ຄຳສອນທາງພຣະພຸດທະສາສະໜາ ແລະຮິນດູ ຈະມີຄວາມຄ້າຍຄືກັນ

ຫຼາຍ. ແຕ່ມັນກໍບໍ່ຈຳເປັນທີ່ ພຣະພຸດທະສາສະໜາຈະຮຽນແບບຄຳສອນຈາກສາສະໜາຮິນດູໂດຍບໍ່ຄຶດຖີ່ຖ້ວນ. ບາງຄັ້ງກໍເຄີຍມີທີ່ວ່າທັງສອງຄົນ, ເຊິ່ງແຕ່ລະຄົນ ຂ້ອນຂ້າງເປັນເຈົ້າຕົນເອງ, ມີການຄົ້ນພົບທີ່ຄ້າຍຄືກັນ. ການຄົ້ນພົບທີ່ຈະເປັນຕົວຢ່າງທີ່ດີ ກໍເຫັນຈະໄດ້ແກ່ການວິວັດທະນາການ. ໃນປີ ໑໘໕໘, ພຽງແຕ່ກ່ອນທີ່ເຂົາຈະພິມປື້ມທີ່ມີຊື່ສຽງເຫຼັ້ມໜຶ່ງຊື່ວ່າ:“ ຕົ້ນກຳເນີດຂອງສິ່ງທີ່ມີຊີວິດ” ຊາຣ໌ ດາວິນ Charles Darwin ກໍໄດ້ພົບຜູ້ຊາຍຄົນໜຶ່ງ, ອາວລ໌ເຟຣດ ຣູດເຊລ ວາລ໌ແລສ Alfred Russell Wallace ໄດ້ພົບເຫັນຄວາມຄຶດກ່ຽວກັບການວິວັດທະນາການ ໃນຂະນະນັ້ນ ເຂົາກໍໄດ້ຄົ້ນພົບເຊັ່ນກັນ. ດາວິນ ແລະວາແລສ ບໍ່ໄດ້ມີການຮຽນແບບກັນ ແລະກັນ, ແຕ່ພວກເຂົາເຈົ້າ ໄດ້ສຶກສາກ່ຽວກັບປາກົດການຄ້າຍໆກັນ ແລະພວກເຂົາມີຄຳຕອບອັນດຽວກັນ. ດັ່ງນັ້ນ, ຖ້າຫາກວ່າ ຄຳສອນຂອງສາສະໜາພຸດ ແລະສາສະໜາຮິນດູກ່ຽວກັບກຳ(ກັມມະ) ແລະການເກີດ ມີບົດສະຫຼຸບຄ້າຍຄືກັນຫຼາຍພຽງໃດກໍຕາມ, ແຕ່ທັງສອງສາສະໜາບໍ່ໄດ້ຄືກັນ, ນີ້ບໍ່ແມ່ນເຫດຜົນຈຳເປັນທີ່ວ່າຈະພິສູດ ແລະຮຽນແບບກັນ. ຄວາມຈິງແມ່ນໄດ້ຈາກປັນຍາທີ່ພວກເຂົາພັດທະນາໃນການຝຶກສະມາທິຈາກຜູ້ວິເສດຮິນດູ ທີ່ມີຄວາມເຫັນບໍ່ແນ່ນອນກ່ຽວກັບກຳ(ກັມມະ) ແລະການເກີດ ເຊິ່ງຕໍ່ມາພຣະພຸດທະອົງໄດ້ອະທິບາຍ ຢ່າງລະອຽດ ແລະຊັດເຈນຕື່ມອີກ.

## ໔.ຄຳສອນພື້ນຖານຂອງພຣະພຸດທະສາສະໜາ

**ຄຳຕອບ:** ທັງໝົດຂອງຄຳສອນພຣະພຸດທະເຈົ້າລວມລົງໃນອະລິຍະສັດສີ່(ອະຣິຍະສັຈຈະ) ເໝືອນກັບຂອບ ແລະດົ້ວຂອງກົງລໍ້ທີ່ມີສູນລວມຢູ່ເພົາ. ສາເຫດທີ່ເອີ້ນວ່າ"ສີ່" ກໍຍ້ອນວ່າທັງໝົດມີສີ່ຂໍ້. ເຫດທີ່ເອີ້ນວ່າ "ອະຣິຍະ" ກໍຍ້ອນວ່າມັນເຮັດໃຫ້ບຸກຄົນຜູ້ເຂົ້າໃຈໃນທຳ(ທັມມະ)ເປັນອະຣິຍະບຸກຄົນ ແລະເຫດທີ່ເອີ້ນວ່າ "ສັຈຈະ" ຍ້ອນວ່າມັນກົງກັບຄວາມເປັນຈິງ, ມັນເປັນສັດຈະທຳ(ສັຈຈະທັມມະ).

**ຄຳຖາມ: ອະລິຍະສັດ(ອະຣິຍະສັຈຈະ)ຂໍ້ທີໜຶ່ງແມ່ນຫຍັງ?**

**ຄຳຕອບ:** ອະລິຍະສັດຂໍ້ທີໜຶ່ງແມ່ນ ທຸກຊີວິດຕ້ອງປະເຊີນໜ້າກັບຄວາມທຸກ. ການດຳລົງຊີວິດຄືການປະເຊີນກັບຄວາມທຸກ. ມັນເປັນໄປບໍ່ໄດ້ທີ່ຈະດຳລົງຊີວິດຢູ່ໂດຍປາສະຈາກການປະເຊີນກັບຄວາມທຸກ ແລະຄວາມເສຍໃຈ. ພວກເຮົາຈະຕ້ອງອົດທົນຕໍ່ຄວາມທຸກທາງກາຍເຊັ່ນ ຄວາມເຈັບໄຂ້, ບາດເຈັບ, ຄວາມອິດເມື່ອຍ, ຄວາມເຖົ້າແກ່ຊະລາ ແລະໃນທີ່ສຸດກໍຕາຍ. ນອກນີ້ ເຮົາຍັງຈະຕ້ອງອົດທົນຕໍ່ຄວາມທຸກທາງດ້ານຈິດໃຈເຊັ່ນ ຄວາມໂດດດ່ຽວ, ຄວາມທໍ້ຖອຍໃຈ, ຄວາມຢ້ານ, ຄວາມອັບອາຍຂາຍໜ້າ, ຄວາມສິ້ນຫວັງ, ຄວາມໂມໂຫໂທໂສ ແລະອື່ນໆອີກ.

**ຄຳຖາມ: ນີ້ບໍ່ແມ່ນຄວາມຄຶດໃນທາງແງ່ລົບບໍ?**

**ຄຳຕອບ:** ພົດຈະນານຸກົມໃຫ້ນິຍາມຄວາມຄຶດໃນແງ່ລົບ pessimism ເອົາໄວ້ວ່າ "ຄວາມຊິນເຄີຍທີ່ມັກຄຶດວ່າສິ່ງໃດກໍຕາມຈະເກີດຂຶ້ນແມ່ນຈະເປັນເລື່ອງບໍ່ດີ",ຫຼື "ຄວາມເຊື່ອວ່າຄວາມບໍ່ດີມີອຳນາດເໜືອກວ່າຄວາມດີ". ພຣະພຸດທະສາສະໜາບໍ່ໄດ້ສອນທັງສອງຄວາມຄຶດນີ້. ທັງບໍ່ໄດ້ປະຕິເສດການມີຢູ່ຂອງຄວາມສຸກ(ສຸຂະ). ພຽງແຕ່ກ່າວໂດຍງ່າຍໆວ່າ ການມີຊີວິດຢູ່ຄືການຈະຕ້ອງປະສົບກັບຄວາມທຸກທາງກາຍ ແລະຈິດໃຈ ເຊິ່ງເປັນຄຳເວົ້າທີ່ເປັນຈິງແທ້ ເປັນທີ່ຊັດເຈນວ່າ ມັນບໍ່ອາດປະຕິເສດໄດ້. ພຣະພຸດທະສາສະໜາເລີ່ມສອນຈາກປະສົບການ, ຄວາມຈິງທີ່ບໍ່ອາດປະຕິເສດໄດ້, ເປັນສິ່ງທີ່ທຸກຄົນກໍຮັບຮູ້, ນັ້ນຄືສິ່ງທີ່ໄດ້ປະສົບກັນມາແລ້ວ ແລະທຸກຄົນກຳລັງພະຍາຍາມ

ຫຼືກາລຽງ. ດັ່ງນັ້ນ, ພຣະພຸດທະສາສະໜາ ຈິ່ງເລີ່ມຈາກການສອນໂດຍກົງ ຕໍ່ບັນຫາຫຼັກທີ່ມະນຸດທຸກຄົນກຳລັງປະເຊີນຢູ່ນັ້ນຄື ຄວາມທຸກ ແລະວິທີທາງດັບທຸກ.

**ຄຳຖາມ: ອະລິຍະສັດ(ອະຣິຍະສັຈຈະ)ຂໍ້ທີສອງແມ່ນຫຍັງ?**

**ຄຳຕອບ:** ອະລິຍະສັດຂໍ້ທີສອງແມ່ນ ຕັນຫາເປັນສາຍເຫດຂອງຄວາມທຸກທັງປວງ. ເມື່ອພວກເຮົາສັງເກດເບິ່ງຄວາມທຸກທາງດ້ານຈິດໃຈ, ມັນງ່າຍທີ່ຈະຮູ້ວ່າ ມັນເກີດມາຈາກຕັນຫາ. ເມື່ອພວກເຮົາຕ້ອງການບາງສິ່ງບາງຢ່າງ ແຕ່ບໍ່ສາມາດໄດ້ສິ່ງນັ້ນມາ ພວກເຮົາກໍຮູ້ສຶກຜິດຫວັງ ແລະທົດທູ່ໃຈ. ເມື່ອເຮົາຄາດຫວັງຢາກໃຫ້ບາງຄົນຢູ່ນຳເຮົາ ແຕ່ເຂົາບໍ່ເຮັດຕາມ, ເຮົາກໍຮູ້ສຶກຂາຍໜ້າ ແລະຢາກຮ້າຍ. ເມື່ອພວກເຮົາຕ້ອງການຢາກໃຫ້ຄົນອື່ນມາມັກເຮົາ ແຕ່ເຂົາບໍ່ມັກເຮົາກໍຮູ້ສຶກເຈັບໃຈ. ຫຼື ແມ່ນແຕ່ເຮົາຕ້ອງການສິ່ງໃດ ແລະໄດ້ສິ່ງນັ້ນມາ, ນີ້ກໍບໍ່ໝາຍຄວາມວ່າ ຈະນຳມາເຊິ່ງຄວາມສຸກສະເໝີ ຍ້ອນວ່າ ອີກບໍ່ດົນເຮົາກໍຈະຮູ້ສຶກເບື່ອກັບສິ່ງນັ້ນ, ສູນເສຍຄວາມສົນໃຈໃນສິ່ງນັ້ນ ແລ້ວເລີ່ມຕ້ອງການສິ່ງອື່ນອີກ. ຖ້າເວົ້າແບບງ່າຍໆ, ອະລິຍະສັດຂໍ້ທີສອງມີໃຈຄວາມວ່າ ການໄດ້ມາເຊິ່ງສິ່ງທີ່ທ່ານຕ້ອງການ ກໍບໍ່ອາດຮັບປະກັນຄວາມສຸກໄດ້. ນອກຈາກຈະພະຍາຍາມດີ້ນຮົນເພື່ອຈະໄດ້ມາໃນສິ່ງທີ່ທ່ານຕ້ອງການ, ແຕ່ກໍຍັງພະຍາຍາມເພີ່ມຄວາມຢາກຂອງທ່ານອີກ. ຄວາມຕ້ອງການ ເຮັດໃຫ້ເຮົາຫ່າງໄກຈາກຄວາມພໍໃຈໃນສິ່ງທີ່ເຮົາມີ ແລະຫ່າງໄກຈາກຄວາມສຸກທີ່ແທ້ຈິງ.

**ຄຳຖາມ: ຄວາມຕ້ອງການແລະຕັນຫານຳໄປສູ່ຄວາມທຸກທາງກາຍໄດ້ຢ່າງໃດ?**

**ຄຳຕອບ:** ໃນໄລຍະຊີວິດແຫ່ງຄວາມຕ້ອງການ ແລະຕັນຫາ ຄືຄວາມຢາກໃນສິ່ງນັ້ນ, ສິ່ງນີ້ ໂດຍສະເພາະຢ່າງຍິ່ງ ຄວາມຢາກທີ່ຈະສືບຕໍ່ດຳລົງຊີວິດຢູ່ ເພື່ອສ້າງພະລັງອຳນາດ ອັນເປັນສາເຫດເຮັດໃຫ້ຕົນເອງໄດ້ເກີດໃໝ່ອີກ. ເມື່ອພວກເຮົາເກີດອີກ, ພວກເຮົາມີຮ່າງກາຍ ແລະເໝືອນທີ່ໄດ້ກ່າວມາກ່ອນແລ້ວ, ຮ່າງກາຍນີ້ມັນອ່ອນໄຫວຕໍ່ກັບຄວາມເຈັບປວດ ແລະເປັນພະຍາດໂລຄາ(ໂຣຄະ); ມັນອາດຈະໝົດເຫື່ອແຮງ ຍ້ອນການເຮັດວຽກ; ເຖິງຄາວເຖົ້າແກ່ຊະລາ ແລະໃນທີ່ສຸດກໍສິ້ນລົມຫາຍໃຈ. ດ້ວຍເຫດນີ້ເອງ, ຕັນຫາຈິ່ງນຳໄປສູ່ຄວາມທຸກທາງກາຍ ເນື່ອງຈາກວ່າ ມັນເປັນເຫດໃຫ້ພວກເຮົາເກີດໃໝ່ອີກ.

**ຄຳຖາມ: ທັງໝົດທີ່ກ່າວມານັ້ນເຫັນສົມຄວນດີແລ້ວ. ແຕ່ຖ້າພວກເຮົາຢຸດຄວາມຕ້ອງການນຳກັນ, ພວກເຮົາອາດຈະບໍ່ໄດ້ສິ່ງໃດ ແລະຈະບໍ່ປະສົບຜົນສຳເລັດໃດໆເລີຍ.**

**ຄຳຕອບ:** ຖືກຕ້ອງແລ້ວ. ແຕ່ພຣະພຸດທະເຈົ້າກ່າວວ່າ ເມື່ອຄວາມຕ້ອງການຂອງເຮົາ, ຄວາມຢາກໄດ້ດີຂອງເຮົາ, ຄວາມບໍ່ພໍໃຈໃນສິ່ງທີ່ເຮົາມີຢູ່ ແລະຄວາມຢາກຂອງເຮົາ ຢ່າງບໍ່ມີເນື່ອງພໍ ເປັນເຫດໃຫ້ເຮົາມີຄວາມທຸກ. ດັ່ງນັ້ນ, ເຮົາຈິ່ງຄວນຢຸດເຊົາສະ. ພຣະພຸດທະອົງຢາກໃຫ້ພວກເຮົາຮູ້ຈຳແນກຄວາມແຕກຕ່າງ ລະຫວ່າງສິ່ງທີ່ເຮົາມີຄວາມຈຳເປັນ, ສິ່ງທີ່ເຮົາຕ້ອງການ ໃຫ້ມີຄວາມພາກພຽນສຳລັບສິ່ງທີ່ເຮົາເຫັນວ່າຈຳເປັນ ແລະຂະຫຍາຍສິ່ງທີ່ເຮົາຕ້ອງການ. ພຣະພຸດທະອົງໄດ້ສອນພວກເຮົາວ່າ ຄວາມຈຳເປັນສາມາດເຮັດໃຫ້ປະສົບຜົນສຳເລັດໄດ້ ແຕ່ວ່າ ຄວາມຕ້ອງການຂອງເຮົານັ້ນບໍ່ມີສິ້ນສຸດ ເໝືອນກັບຂຸມທີ່ມີຄວາມເລິກ ບໍ່ມີທີ່ສິ້ນສຸດສັນນັ້ນ. ມີຄວາມຈຳເປັນທີ່ສຳຄັນ, ສຳຄັນອັນດັບທຳອິດທີ່ຄວນໄດ້ມາກ່ອນ ແລະເຮົາຄວນຈະບຸກບືນເພື່ອສິ່ງນັ້ນ. ຄວາມຕ້ອງການທີ່ນອກເໜືອກວ່ານີ້ ຄວນຈະໄດ້ຮັບການຫຼຸດຜ່ອນເບົາບາງລົງ. ຫຼັງຈາກນັ້ນແລ້ວ, ແມ່ນຫຍັງຄືເປົ້າໝາຍຂອງຊີວິດ? ທີ່ຄວນຈະໄດ້ມາ ຫຼືພໍໃຈ ແລະມີຄວາມສຸກ.

**ຄຳຖາມ: ພວກເຮົາໄດ້ເວົ້າກ່ຽວກັບການເກີດໃໝ່, ແຕ່ວ່າ ມີສິ່ງໃດແນ່ທີ່ພໍຈະພິສູດໄດ້ວ່າ ສິ່ງນີ້ເກີດຂຶ້ນ?**

**ຄຳຕອບ:** ມີຫຼັກຖານພຽງພໍທີ່ຈະພິສູດວ່າ ສິ່ງນີ້ເກີດຂຶ້ນຈິງ ແຕ່ພວກເຮົາຈະມີລາຍລະອຽດຕື່ມໃນຕອນຕໍ່ໄປ.

**ຄຳຖາມ: ອະລິຍະສັດ(ອະຣິຍະສັຈຈະ)ຂໍ້ທີສາມແມ່ນຫຍັງ?**

**ຄຳຕອບ:** ອະລິຍະສັດຂໍ້ທີສາມແມ່ນຄວາມທຸກສາມາດເອົາຊະນະໄດ້ ແລະຄວາມສຸກສາມາດບັນລຸໄດ້. ບາງທີ ນີ້ອາດຈະແມ່ນເປັນຂໍ້ທີ່ສຳຄັນທີ່ສຸດໃນອະລິຍະສັດສີ່ ເນື່ອງຈາກວ່າ ພຣະພຸດທະອົງໄດ້ຮັບປະກັນພວກເຮົາວ່າ ຄວາມສຸກທີ່ແທ້ຈິງ ແລະຄວາມສັນໂດດພໍໃຈແມ່ນເປັນໄປໄດ້. ເມື່ອພວກເຮົາຮູ້ຈັກປ່ອຍວາງຄວາມຕ້ອງການ ທີ່ບໍ່ຈຳເປັນ ແລະຮຽນຮູ້ການມີຊີວິດຢູ່ໃນແຕ່ລະວັນໃຫ້ຢູ່ໃນປັດຈຸບັນຂະນະ, ມີຄວາມມ່ວນຊື່ນຍິນດີໂດຍປາສະຈາກຄວາມຢາກໄດ້ ທີ່ບໍ່ມີຂອບເຂດໃນປະສົບການທີ່ຊີວິດມອບໃຫ້ເຮົາ, ປະເຊີນໜ້າຢ່າງອົດທົນຕໍ່ບັນຫາຕ່າງໆ ທີ່ຊີວິດເຂົ້າໄປພົວພັນໂດຍປາສະຈາກຄວາມຢ້ານກົວ, ຄວາມຊັງ ແລະຄວາມໂມໂຫ, ພຽງເທົ່ານີ້ ພວກເຮົາກໍມີຄວາມສຸກ ແລະເປັນອິດ

ສະຫຼະໄດ້. ເມື່ອນັ້ນ ພວກເຮົາກໍດຳລົງຊີວິດຢູ່ຢ່າງມີສຸກເຕັມປ່ຽມ. ຍ້ອນວ່າ ພວກເຮົາບໍ່ຖືກຄອບງຳຈາກຄວາມພໍໃຈໃນຄວາມຢາກທີ່ເຫັນແກ່ຕົວ, ພວກເຮົາຈະພົບວ່າ ເຮົາມີເວລາ ພໍທີ່ຈະຊ່ວຍເຫຼືອຄົນອື່ນ ເພື່ອໃຫ້ເຂົາເຈົ້າບັນລຸໃນສິ່ງທີ່ເຂົາມີຄວາມຕອ້ງການໄດ້. ສິ່ງທີ່ກ່າວມານີ້ເອີ້ນວ່າ *ນິບພານ* (ນິພພານະ).

**ຄຳຖາມ: *ນິບພານ* (ນິພພານະ) ແມ່ນຫຍັງ ແລະຢູ່ໃສ?**

**ຄຳຕອບ:** ມັນເປັນມິຕິທີ່ເໜືອການເວລາ ແລະສະຖານທີ່ ດ້ວຍເຫດນີ້ເອງຈິ່ງເປັນການຍາກທີ່ຈະເວົ້າ ຫຼືແມ່ນແຕ່ຄຶດກ່ຽວກັບສິ່ງນີ້, ຄຳເວົ້າ ແລະຄວາມຄຶດພຽງແຕ່ເໝາະສົມທີ່ຈະອະທິບາຍ ກ່ຽວກັບມິຕິຂອງເວລາ ແລະສະຖານທີ່ເທົ່ານັ້ນ. ແຕ່ດ້ວຍເຫດວ່າ *ນິບພານ* ເປັນສິ່ງທີ່ເໜືອການເວລາ, ບໍ່ມີການເຄື່ອນໄຫວ, ບໍ່ມີອົງປະກອບໃດໆ. ດັ່ງນັ້ນ, ຈິ່ງບໍ່ມີການເກີດ ແລະການຕາຍ. ດ້ວຍເຫດນີ້ເອງ *ນິບພານ* ຈິ່ງເປັນນິລັນດອນ (ນິຣັນຕະຣະ). ຍ້ອນວ່າມັນເໜືອສະຖານທີ່, ບໍ່ມີປັດໄຈປຸງແຕ່ງ[1], ບໍ່ມີຂອບເຂດ, ປາສະຈາກຄວາມມີຕົວຕົນ ແລະບໍ່ມີຕົວຕົນ ດ້ວຍເຫດນີ້ເອງ *ນິບພານ* ຈິ່ງບໍ່ມີ ຂອບເຂດ. ພຣະພຸດທະເຈົ້າ ຍັງໄດ້ຕັດຢ້ຳເຕືອນພວກເຮົາວ່າ *ນິບພານ* ຄື ການປະສົບກັບຄວາມສຸກຢ່າງຍິ່ງ. ພຣະພຸດທະອົງຕັດວ່າ:

*"ນິບພານ ເປັນສຸກຢ່າງຍິ່ງ"*

*Dhp.204*

**ຄຳຖາມ: ແຕ່ວ່າມີການພິສູດໃດທີ່ວ່າມິຕິນັ້ນມີຢູ່ຈິງ?**

**ຄຳຕອບ:** ບໍ່ ບໍ່ມີຂໍ້ພິສູດໃດໆ. ແຕ່ການມີຢູ່ຈິງສາມາດອ້າງອີງໄດ້. ຖ້າຫາກວ່າມີ ມິຕິທີ່ເວລາ ແລະສະຖານທີ່ສາມາດກວມເອົາໄດ້ ມັນກໍຈະມີມິຕິນັ້ນ ນັ້ນຄືໂລກທີ່ເຮົາສຳຜັດຢູ່ເຮົາກໍສາມາດອ້າງອີງວ່າ ມີມິຕິທີ່ເວລາ ແລະສະຖານທີ່ບໍ່ອາດເຂົ້າເຖິງໄດ້ນັ້ນຄື *ນິບພານ*.

---

[1] ຄວາມໝາຍຂອງຄຳວ່າ ***ບໍ່ມີປັດໄຈປຸງແຕ່ງ*** ຫຼື ***ອະສັງຂະຕະທັມ*** ໝາຍເຖິງການດັບສິ້ນແຫ່ງມູນເຫດຂອງຕັນຫາ(ຄວາມຢາກ) ແລະອະວິດຊາ(ອະວິຊຊາ)(ຄວາມບໍ່ຮູ້ທົນທາງແຫ່ງອະລິຍະມັກຄ໌ ມີອົງແປດ ແລະອະລິຍະສັດສີ່) ອັນເປັນເຊື້ອທີ່ຈະນຳໄປສູ່ການກັບມາວົນວາຍຕາຍເກີດ ຫຼາຍພົບຫຼາຍຊາດອີກຕໍ່ໄປ.

ນອກຈາກນີ້, ເຖິງແມ່ນວ່າພວກເຮົາບໍ່ສາມາດພິສູດວ່າ *ນິບພານ* ມີຢູ່, ພວກເຮົາກໍມີພຸດທະພົດທີ່ຢືນຢັນເອົາໄວ້. ພຣະພຸດທະອົງຕັດວ່າ:

*ບໍ່ມີການເກີດ, ບໍ່ມີພົບ(ຄວາມເປັນ), ບໍ່ມີການສ້າງ, ບໍ່ມີການປຸງແຕ່ງ. ຖ້າຫາກວ່າ ບໍ່ມີການເກີດ, ບໍ່ມີພົບ, ບໍ່ມີການສ້າງ, ບໍ່ມີການປຸງແຕ່ງ, ກໍຈະບໍ່ມີ ການຫຼົບຫຼີກຈາກສິ່ງທີ່ເກີດ, ພົບ, ສ້າງ, ແລະປຸງແຕ່ງ. ຍ້ອນວ່າບໍ່ມີການເກີດ, ບໍ່ມີພົບ, ບໍ່ມີການສ້າງ ແລະບໍ່ມີການປຸງແຕ່ງ, ຈຶ່ງມີທົນທາງຫຼີກລຽງຈາກການເກີດ, ພົບ, ສ້າງແລະການປຸງແຕ່ງອີກ.*

*Ud, 80*

ພວກເຮົາຈະຮູ້ເອງເມື່ອໄດ້ບັນລຸຂັ້ນນັ້ນ. ກ່ອນຈະເຖິງເວລານັ້ນ, ພວກເຮົາກໍຍັງສາມາດນໍາໃຊ້ຄໍາສອນຂອງພຣະພຸດທະເຈົ້າ ທີ່ພວກເຮົາເຊື່ອຖືໄດ້.

**ຄໍາຖາມ: ອະລິຍະສັດ(ອະຣິຍະສັຈຈະ)ຂໍ້ທີສີ່ແມ່ນຫຍັງ?**

**ຄໍາຕອບ:** ອະລິຍະສັດຂໍ້ທີສີ່ ແມ່ນທົນທາງສູ່ຄວາມດັບທຸກ ເຊິ່ງປະກອບມີ: ສັມມາທິດຖິ, ສັມມາສັງກັບປະ, ສັມມາວາຈາ, ສັມມາກັມມັນຕາ, ສັມມາອາຊີວະ, ສັມມາວາຍະມະ, ສັມມາສະຕິ ແລະສັມມາສະມາທິ. ວິຖີຊີວິດຂອງຊາວພຸດ ປະກອບດ້ວຍການປະຕິບັດແປດຢ່າງນີ້ ຈົນກວ່າພວກເຂົາເຈົ້າຈະເຖິງຄວາມສົມບູນແບບ. ທ່ານສາມາດສັງເກດເຫັນໄດ້ວ່າ ທຸກບາດກ້າວຂອງອະລິຍະມັກ(ອະຣິຍະມັຄຄະ)ມີອົງແປດ ກວມລວມເອົາທຸກແງ່ມູມຂອງຊີວິດ: ຄວາມສະຫຼາດ, ຄວາມມີສິລະທໍາ(ສີລະທັມມະ), ທາງສັງຄົມ, ເສດຖະກິດ ແລະຈິດໃຈ. ສະນັ້ນ, ມັນຈຶ່ງກວມເອົາໝົດທຸກຢ່າງທີ່ຄົນເຮົາຕ້ອງການເພື່ອດໍາເນີນຊີວິດທີ່ດີງາມ ແລະເພື່ອພັດທະນາທາງດ້ານຈິດໃຈ.



# ៦. ພຣະພຸດທະສາສະໜາ ແລະຄວາມເຊື່ອກ່ຽວກັບພຣະເຈົ້າ

**ຄຳຖາມ: ພວກທ່ານທີ່ເປັນຊາວພຸດເຊື່ອໃນພຣະເຈົ້າບໍ?**
**ຄຳຕອບ:** ບໍ່ ພວກເຮົາບໍ່ເຊື່ອ. ມີເຫດຜົນຫຼາຍຢ່າງຕໍ່ກັບບັນຫານີ້. ເໝືອນກັບນັກສັງຄົມວິທະຍາ ແລະນັກຈິດຕະວິທະຍາສະໄໝໃໝ່, ພຣະພຸດທະເຈົ້າເຫັນຫຼາຍທັດສະນະກ່ຽວກັບສາສະໜາ ໂດຍສະເພາະແມ່ນຄວາມຄິດກ່ຽວກັບພຣະເຈົ້າ, ມີເຄົ້າກຳເນີດມາຈາກຄວາມກັງວົນໃຈ ແລະຄວາມຢ້ານກົວ. ພຣະພຸດທະອົງຕັດວ່າ:

*ມະນຸດທັງຫຼາຍເປັນສ່ວນໃຫຍ່ແລ(ເມື່ອ)ຖືກໄພຂົ່ມຂູ່ແລ້ວ ຍ່ອມຂໍເຖິງ (ຍ່ອມ ຍຶດຖືເອົາ) ພູທັງຫຼາຍກໍມີ ປ່າທັງຫຼາຍກໍມີ ອາຮາມກໍມີ ຕົ້ນໄມ້ກໍມີເຈດີກໍມີວ່າ ເປັນສະລະນະ (ສະຣະນະ)ທີ່ເພິ່ງ.*

*Dhp.188*

ມະນຸດປະຖົມບູຮານເຫັນວ່າ ຕົນເອງຢູ່ໃນໂລກທີ່ອັນຕະລາຍ ແລະໜ້າຢ້ານ, ຄວາມຢ້ານສັດຮ້າຍ, ຢ້ານບໍ່ມີຄວາມສາມາດຫາອາຫານໃຫ້ພຽງພໍ, ຢ້ານໄດ້ຮັບບາດເຈັບ ຫຼືເປັນພະຍາດໂລຄາ(ໂຣຄະ), ຢ້ານປາກົດການທຳມະຊາດເຊັ່ນ ຟ້າຮ້ອງ, ຟ້າເຫຼື້ອມ, ພູເຂົາໄຟລະເບີດ ຄວາມຢ້ານເຫຼົ່ານີ້ມີປະຈຳພວກເຂົາສະເໝີ. ເມື່ອບໍ່ມີທີ່ເພິ່ງທີ່ປອດໄພ, ພວກເຂົາກໍໄດ້ສ້າງຄວາມເຊື່ອກ່ຽວກັບພຣະເຈົ້າຂຶ້ນມາ ເພື່ອເຮັດໃຫ້ພວກເຂົາເຈົ້າຢູ່ສະບາຍ, ມີຄວາມສຸກ, ເພື່ອເປັນກຳລັງໃຈໃນເວລາມີໄພອັນຕະລາຍ ອອຍໃຈເມື່ອມີບັນຫາລຳບາກໃຈ. ຈົນມາຮອດດຽວນີ້, ທ່ານຈະເຫັນໄດ້ວ່າ ຄົນເຮົາຮູ້ຈັກເຂົ້າວັດເຂົ້າວາ ໃນເມື່ອປະເຊີນໜ້າກັບວິກິດ. ທ່ານຈະໄດ້ຍິນພວກເຂົາເວົ້າວ່າ ຄວາມເຊື່ອໃນພຣະເຈົ້າ ບັນດານເຂົາເຈົ້າໃຫ້ມີຄວາມເຂັ້ມແຂງ ເພື່ອວ່າພວກເຂົາຈະໄດ້ແກ້ໄຂບັນຫາໃນຊີວິດໄດ້. ມັກໄດ້ຍິນເລື້ອຍໆທີ່ພວກເຂົາເຈົ້າອະທິບາຍວ່າ ພວກເຂົາເຊື່ອໃນພຣະເຈົ້າອົງໃດ ໜຶ່ງຢ່າງແນ່ນອນ ຍ້ອນວ່າພວກເຂົາໄຫວ້ວອນໃນເວລາມີຄວາມຈຳເປັນ ແລະການວິງວອນຂອງພວກເຂົາກໍໄດ້ຮັບຄຳຕອບ. ສິ່ງທັງໝົດນີ້ເບິ່ງຄືກັນກັບວ່າ ມາສະໜັບສະໜູນ ຄຳຖາມຂອງພຣະພຸດທະເຈົ້າທີ່ວ່າ ຄວາມຄິດກ່ຽວກັບພຣະເຈົ້າ ແມ່ນການຕອບຄຳຖາມ

ຂອງຄວາມຢ້ານ ແລະຄວາມທຸກທໍລະມານໃຈ. ພຣະພຸດທະເຈົ້າສອນພວກເຮົາ ໃຫ້ພະຍາຍາມເຂົ້າໃຈຄວາມຢ້ານຂອງຕົນ, ເພື່ອໃຫ້ຄວາມທະເຍີທະຍານເບົາບາງລົງ, ເພື່ອຍອມຮັບສິ່ງທີ່ເຮົາບໍ່ສາມາດປ່ຽນແປງໄດ້ຢ່າງສະຫງົບ ແລະຢ່າງມີກຳລັງໃຈ. ພຣະພຸດທະອົງທົດແທນຄວາມຢ້ານດ້ວຍຄວາມເຂົ້າໃຈຢ່າງມີເຫດຜົນ ບໍ່ແມ່ນດ້ວຍຄວາມເຊື່ອແບບບໍ່ມີເຫດຜົນ.

ເຫດຜົນທີສອງ ທີ່ພຣະພຸດທະເຈົ້າບໍ່ເຊື່ອໃນພຣະເຈົ້າ ກໍຍ້ອນວ່າບໍ່ມີຫຼັກຖານພຽງພໍ ເພື່ອສະໜັບສະໜຸນຄວາມເຊື່ອນີ້. ຍັງມີຫຼາຍສາສະໜານັບບໍ່ຖ້ວນ, ທັງໝົດປະກາດວ່າ ພວກເຂົາເທົ່ານັ້ນ ທີ່ຮັກສາຄຳສອນຂອງພຣະເຈົ້າໄວ້ໃນຄຳພີຂອງພວກເຂົາ, ວ່າພວກເຂົາເທົ່ານັ້ນ ເຂົ້າໃຈໃນທຳມະຊາດຂອງພຣະເຈົ້າ, ວ່າພຣະເຈົ້າຂອງພວກເຂົາມີຢູ່ຈິງ ແລະພຣະເຈົ້າຂອງສາສະໜາອື່ນແມ່ນບໍ່ມີຈິງ. ບາງສາສະໜາປະກາດວ່າ ພຣະເຈົ້າເປັນເພດຊາຍ, ບາງສາສະໜາວ່າ ພຣະເຈົ້າເປັນເພດຍິງ ແລະບາງສາສະໜາວ່າ ພຣະເຈົ້າບໍ່ມີເພດ. ພວກເຂົາລ້ວນແຕ່ພໍໃຈ ວ່າມີຫຼັກຖານພຽງພໍທີ່ຈະພິສູດການມີຢູ່ຈິງຂອງພຣະເຈົ້າທີ່ພວກເຂົາເຄົາລົບບູຊາ ແຕ່ພວກເຂົາຊ້ຳພັດເຍີ້ຍຫຍັນຕໍ່ຫຼັກຖານຂອງສາສະໜາອື່ນ ທີ່ໃຊ້ພິສູດຄວາມມີຢູ່ຂອງພຣະຜູ້ເປັນເຈົ້າອົງອື່ນອີກ. ມັນເປັນສິ່ງທີ່ປະຫຼາດໃຈ ເຖິງແມ່ນວ່າ ຈະມີຫຼາຍສາສະໜາໃຊ້ຫຼັກຖານ ທີ່ບໍ່ເປັນຈິງຕະຫຼອດຫຼາຍສະຕະວັດຜ່ານມາແລ້ວເພື່ອພິສູດຄວາມມີຢູ່ຈິງຂອງພຣະເຈົ້າທີ່ຍັງບໍ່ມີຈິງ, ໃຫ້ເປັນຮູບປະທຳ, ຍືນຍົງ, ຫຼືເປັນຫຼັກຖານທີ່ປະຕິເສດບໍ່ໄດ້ສຳລັບສິ່ງນັ້ນ. ພວກເຂົາຍັງບໍ່ລົງລອຍກັນວ່າ ພຣະເຈົ້າທີ່ພວກເຂົາ ເຊື່ອນັ້ນເປັນແນວໃດກັນແທ້. ພຸດທະສາສະນິກະຊົນຍັງບໍ່ທັນຕັດສິນກ່ຽວກັບເລື່ອງນີ້ຈົນກວ່າຈະມີຫຼັກຖານຕື່ມອີກ.

ເຫດຜົນທີສາມທີ່ພຣະພຸດທະເຈົ້າບໍ່ເຊື່ອໃນພຣະເຈົ້າກໍຍ້ອນວ່າ ພຣະພຸດທະອົງຮູ້ສຶກວ່າຄວາມເຊື່ອບໍ່ເປັນສິ່ງຈຳເປັນ. ບາງຄົນເຊື່ອວ່າ ການເຊື່ອໃນພຣະເຈົ້າເປັນສິ່ງຈຳເປັນເພື່ອຈະອະທິບາຍຄວາມເປັນມາຂອງຈັກກະວານ. ແຕ່ວິທະຍາສາດໄດ້ອະທິບາຍຢ່າງໜ້າເຊື່ອຖືໄດ້ກ່ຽວກັບການກຳເນີດຂຶ້ນຂອງຈັກກະວານ ໂດຍປາສະຈາກການນຳໃຊ້ຄວາມຄິດກ່ຽວກັບພຣະເຈົ້າ. ບາງຄົນປະກາດວ່າ ການມີສັດທາໃນພຣະເຈົ້າເປັນສິ່ງຈຳເປັນເພື່ອການດຳລົງຊີວິດຢູ່ຢ່າງມີຄວາມສຸກ. ແຕ່ທີ່ຈິງແລ້ວ ພວກເຮົາເຫັນໄດ້ວ່າ ມັນບໍ່ເປັນເຊັ່ນນັ້ນ. ຍັງມີຫຼາຍຄົນທີ່ບໍ່ເຊື່ອໃນເລື່ອງພຣະເຈົ້າ ແລະນັກຄິດອິດສະຫຼະມາກ

ມາຍ, ໂດຍບໍ່ຈຳເປັນຈະກ່າວເຖິງຊາວພຸດອີກຈຳນວນຫຼວງຫຼາຍ, ຜູ້ທີ່ດຳລົງຊີວິດຢູ່ຢ່າງເປັນປະໂຫຍດ, ມີຄວາມສຸກ ມີຄວາມໝາຍໃນຊີວິດ ໂດຍປາສະຈາກການເຊື່ອໃນພຣະເຈົ້າ. ບາງຄົນປະກາດວ່າ ການເຊື່ອໃນອຳນາດຂອງພຣະເຈົ້າເປັນສິ່ງຈຳເປັນ ເນື່ອງຈາກວ່າ ມະນຸດອ່ອນແອ, ບໍ່ມີພະລັງທີ່ຈະຊ່ວຍເຫຼືອຕົນເອງ. ນອກຈາກນີ້, ຫຼັກຖານໄດ້ສະແດງເຖິງຄວາມກົງກັນຂ້າມກັນ. ຄົນເຮົາມັກໄດ້ຍິນເລື້ອຍໆ ກ່ຽວກັບຄົນທີ່ເອົາຊະນະຄວາມພິການທີ່ສຸດ, ຮ່າງກາຍຜິດປົກກະຕິ, ແລະຄວາມລຳບາກນານາປະການ ດ້ວຍກຳລັງໃຈພາຍໃນ, ດ້ວຍຄວາມພະຍາຍາມຂອງຕົນເອງ ໂດຍປາສະຈາກຄວາມເຊື່ອໃນພຣະເຈົ້າ. ບາງຄົນປະກາດວ່າ ຄວາມເຊື່ອໃນພຣະເຈົ້າເປັນສິ່ງຈຳເປັນເພື່ອການໄຖ່ບາບ. ແຕ່ໂຕ້ແຍ້ງກ່ຽວກັບເລື່ອງນີ້ດີ ສະເພາະທ່ານທີ່ເຊື່ອໃນຫຼັກສາສະໜາກ່ຽວກັບການໄຖ່ບາບເທົ່ານັ້ນ ແລະຊາວພຸດບໍ່ໄດ້ຍອມຮັບໃນຄວາມເຊື່ອເຊັ່ນນີ້. ຈາກການສຳຜັດດ້ວຍຕົນເອງ ພຣະພຸດທະອົງເຫັນວ່າ ມະນຸດທຸກຄົນມີຄວາມສາມາດ ທີ່ຈະເຮັດໃຫ້ຈິດໃຈຕົນເອງບໍລິສຸດໄດ້, ພັດທະນາຄວາມເມດຕາ, ຄວາມກະລຸນາ ແລະຄວາມເຂົ້າໃຈຢ່າງສົມບູນແບບ(ຄວາມເຂົ້າໃຈຖືກຕອ້ງ). ພຣະພຸດທະອົງຫັນເຫຄວາມສົນໃຈຈາກສະຫວັນສູ່ໃຈຂອງເຮົາເອງ ແລະສະໜັບສະໜຸນໃຫ້ເຮົາແກ້ໄຂບັນຫາດ້ວຍຕົນເອງ ດ້ວຍຄວາມເຂົ້າໃຈຕົນເອງ.

**ຄຳຖາມ: ຖ້າຫາກວ່າບໍ່ມີພຣະເຈົ້າ ຈັກກະວານຈະມີໄດ້ຢ່າງໃດ?**

**ຄຳຕອບ:** ທຸກສາສະໜາມີເທບນິຍາຍ ແລະນິທານເຊິ່ງພະຍາຍາມທີ່ຈະຕອບຄຳຖາມນີ້. ໃນສະໄໝບູຮານ, ເທບນິຍາຍເຊັ່ນນັ້ນພໍທີ່ຈະເຊື່ອຖືໄດ້ ແຕ່ເມື່ອມາເຖິງສະຕະວັດທີ ໒໑, ໃນຍຸກຂອງຟີສິກ, ດາລາສາດ(ດາຣາສາສຕຣະ) ແລະທໍລະນີວິທະຍາ, ເທບນິຍາຍເຫຼົ່ານັ້ນກໍຖືກລົບລ້າງ ດ້ວຍຄວາມຈິງທາງວິທະຍາສາດ. ວິທະຍາສາດໄດ້ອະທິບາຍກ່ຽວກັບຕົ້ນກຳເນີດຂອງຈັກກະວານ ໂດຍປາສະຈາກການສະໜັບສະໜຸນຈາກຄວາມເຊື່ອໃນພຣະເຈົ້າ.

**ຄຳຖາມ: ພຣະພຸດທະເຈົ້າກ່າວໄວ້ແນວໃດກ່ຽວກັບການກຳເນີດຂອງຈັກກະວານ?**

**ຄຳຕອບ :** ມັນເປັນສິ່ງທີ່ໜ້າສົນໃຈຫຼາຍທີ່ຄຳອະທິບາຍຂອງພຣະພຸດທະເຈົ້າ ກ່ຽວກັບຕົ້ນກຳເນີດຂອງຈັກກະວານ ສອດຄ້ອງກັບທັດສະນະທາງວິທະຍາສາດຢ່າງໃກ້ຄຽງກັນຫຼາຍ. ໃນ *ອະຄັນຍະສູດ* (ອະຄັນຍະສູຕຣະ), ພຣະພຸດທະເຈົ້າໄດ້ພັນລະນາໄວ້ເຖິງ

ຈັກກະວານວ່າ ເຄີຍຖືກທຳລາຍ ແລະມີການວິວັດທະນາການຄືນສູ່ສະພາບປັດຈຸບັນ ເປັນເວລາຫຼາຍອະສົງໄຂ. ສິ່ງທີ່ມີຊີວິດທຳອິດປະກົດຂຶ້ນເທິງໜ້ານ້ຳ. ນອກຈາກນີ້ ໃນໄລຍະຫຼາຍສົງໄຂລ້ານປີ, ໄດ້ມີການວິວັດທະນາການຈາກໂຄງສ້າງທຳມະດາສູ່ສິ່ງທີ່ມີຊີວິດທີ່ມີອົງປະກອບອະໄວຍະວະທີ່ສັບສົນ. ພຣະພຸດທະອົງຕັດໄວ້ວ່າ, ຂະບວນການດັ່ງກ່າວນີ້ ບໍ່ມີຈຸດເລີ່ມຕົ້ນ,ສິ້ນສຸດ, ແລະມີການເຄື່ອນໄຫວຕາມເງື່ອນໄຂຂອງທຳມະຊາດ.

**ຄຳຖາມ: ທ່ານເວົ້າວ່າບໍ່ມີຫຼັກຖານກ່ຽວກັບການມີຢູ່ຂອງພຣະເຈົ້າ ແຕ່ວ່າກ່ຽວກັບອະພິນິຫານເດ ເປັນແນວໃດ?**

**ຄຳຕອບ:** ມີຫຼາຍຄົນໃຫ້ຄຳຢືນຢັນວ່າ ອະພິນິຫານເປັນສິ່ງພິສູດກ່ຽວກັບການມີຢູ່ຈິງຂອງພຣະເຈົ້າ. ເຮົາໄດ້ຍິນການປະກາດທີ່ບໍ່ຊັດເຈນວ່າ ການປິ່ນປົວຮັກສາເກີດຂຶ້ນ ແຕ່ພວກເຮົາບໍ່ເຄີຍເຫັນຫຼັກຖານດ້ວຍຕົນເອງ ກ່ຽວກັບສຳນັກງານປິ່ນປົວ ຫຼືທ່ານໝໍ. ພວກເຮົາໄດ້ຍິນຈາກການເລົ່າຕໍ່ກັນມາວ່າ ມີຄົນໄດ້ຖືກຮັກສາຊີວິດໄວ້ຢ່າງອະພິນິຫານ ຈາກໄພພິບັດ ແຕ່ເບິ່ງຄືວ່າເຮົາບໍ່ເຄີຍໄດ້ເຫັນ ດ້ວຍຕາຕົນເອງໃນສິ່ງທີ່ໄດ້ເກີດຂຶ້ນນັ້ນ. ພວກເຮົາມັກໄດ້ຍິນຂ່າວລືວ່າ ການວິ່ງວອນສາມາດປິ່ນປົວພະຍາດທາງກາຍໃຫ້ສ່ວງເຊົາ ແລະຮັກສາຄົນພິການແຂນຂາໄດ້, ແຕ່ພວກເຮົາບໍ່ເຄີຍເຫັນຜົນຂອງການສອ່ງລັງສີ ຫຼືໄດ້ຮັບຄຳເຫັນຈາກທ່ານໝໍ ຫຼືນາງພະຍາບານເພື່ອພິສູດກ່ຽວກັບຂ່າວລືນີ້. ການປະກາດທີ່ຂາດຫຼັກຖານ, ການລາຍງານທີ່ໄດ້ຍິນຕໍ່ກັນມາ, ຂ່າວລືຕ່າງໆ ແມ່ນບໍ່ສາມາດໃຊ້ເປັນຫຼັກຖານທີ່ແໜ້ນໜາໄດ້ ແລະຫຼັກຖານທີ່ໜ້າເຊື່ອຖືໄດ້ກ່ຽວກັບການສະແດງປາຕິຫານກໍຫາຍາກ. ແຕ່ເຖິງຢ່າງໃດກໍຕາມ, ສິ່ງທີ່ແປກປະຫຼາດ ແລະສິ່ງທີ່ບໍ່ສາມາດອະທິບາຍໄດ້ກໍອາດເກີດຂຶ້ນໄດ້. ແຕ່ຍ້ອນການບໍ່ມີຄວາມສາມາດພຽງພໍທີ່ຈະອະທິບາຍກ່ຽວກັບສິ່ງນີ້ ບໍ່ໄດ້ພິສູດການມີຢູ່ຂອງພຣະເຈົ້າ. ພຽງແຕ່ວ່າ ຄວາມຮູ້ຂອງພວກເຮົາຍັງບໍ່ທັນສົມບູນແບບ. ກ່ອນການພັດທະນາຂອງການຢາສະໄໝໃໝ່, ເມື່ອຄົນບໍ່ຮູ້ຈັກວ່າ ແມ່ນຫຍັງເປັນມູນເຫດຂອງຄວາມເຈັບປ່ວຍ, ພວກເຂົາເຈົ້າເຊື່ອວ່າພຣະເຈົ້າ ຫຼືເຫຼົ່າເທບພະເຈົ້າບັນດານໃຫ້ເກີດພະຍາດລົງມາ ເພື່ອເປັນການລົງໂທດ. ປັດຈຸບັນນີ້, ພວກເຮົາຮູ້ແລ້ວວ່າ ແມ່ນຫຍັງເປັນມູນເຫດຂອງສິ່ງນັ້ນ ແລະເມື່ອເວລາເຮົາເປັນໄຂ້, ພວກເຮົາກໍກິນຢາ. ໃນຍຸກສະໄໝທີ່ຄວາມຮູ້ຂອງພວກເຮົາກ່ຽວກັບໂລກສົມບູນຂຶ້ນ, ພວກເຮົາ

ອາດຄົ້ນພົບສາເຫດຂອງປາກົດການທີ່ຍັງບໍ່ທັນໄດ້ຖືກອະທິບາຍກໍເປັນໄດ້, ເໝືອນດັ່ງທີ່ພວກເຮົາຮູ້ສາເຫດຂອງພະຍາດໃນຂະນະນີ້.

**ຄຳຖາມ: ແຕ່ມີຫຼາຍຄົນເຊື່ອໃນບາງຮູບແບບຂອງພຣະເຈົ້າ, ວ່າມັນຕ້ອງເປັນຈິງ.**

**ຄຳຕອບ:** ບໍ່ເປັນເຊັ່ນນັ້ນ. ຄັ້ງໜຶ່ງຍັງເຄີຍມີຄົນເຊື່ອກັນວ່າ ໂລກເປັນແຜ່ນພຽງ, ແຕ່ພວກເຂົາເຈົ້າເຫຼົ່ານັ້ນກໍຜິດໝົດ. ຈຳນວນຄົນທີ່ເຊື່ອໃນຄວາມຄິດໃດໜຶ່ງ ບໍ່ສາມາດວັດແທກໄດ້ວ່າ ສິ່ງນັ້ນຖືກຕ້ອງ ຫຼືຄວາມຄິດນັ້ນບໍ່ເປັນຈິງ. ວິທີທາງດຽວທີ່ພວກເຮົາສາມາດບອກໄດ້ວ່າ ຄວາມຄິດນີ້ຖືກຕ້ອງ ຫຼືບໍ່ນັ້ນ ແມ່ນໂດຍການສັງເກດເບິ່ງຄວາມຈິງ ແລະການສຳຫຼວດພະຍານຫຼັກຖານ.

**ຄຳຖາມ: ບາງຄົນເວົ້າວ່າພະຍານຫຼັກຖານມີຢູ່ທົ່ວໄປ. ພວກເຂົາກ່າວວ່າ ຄວາມງາມຂອງທຳມະຊາດ ແລະຮູບຮ່າງຂອງຮ່າງກາຍມະນຸດ ລວ້ນແຕ່ເປັນຫຼັກຖານຂອງຜູ້ສ້າງທີ່ສະຫຼາດສູງສົ່ງ ແລະໜ້າຮັກ.**

**ຄຳຕອບ:** ໜ້າເສຍດາຍແທ້ໆ ແນວຄວາມຄິດແບບນີ້ຍັງໃຊ້ການບໍ່ໄດ້ ເມື່ອເຮົາເບິ່ງອີກມູມໜຶ່ງຂອງທຳມະຊາດ-ເຊັ່ນໂລກຂີ້ເຮື້ອນ, ໂລກມະເຮັງ, ໂລກແມ່ທອ້ງ, ແມງໄມ້ດູດເລືອດ ແລະໜູນຳເຊື້ອໂລກ. ດ້ວຍເຫດໃດ ການອອກແບບສິ່ງທີ່ໃຊ້ປັນຍາຢ່າງສູງສົ່ງຈິ່ງເປັນເຫດຂອງຄວາມຫຍຸ້ງຍາກ ແລະຄວາມທຸກເຊັ່ນນັ້ນ. ແລ້ວຢຸດເພື່ອພິຈາລະນາວ່າ ມີຄົນຕາຍ ຫຼືໄດ້ຮັບບາດເຈັບຈັກຄົນຈາກແຜ່ນດິນໄຫວ, ໄພແຫ້ງແລ້ງ, ນ້ຳຖວ້ມ ແລະຊືນາມິ. ຖ້າຫາກວ່າ ມີພຣະຜູ້ສ້າງທີ່ທີເມດຕາແທ້ ເປັນຫຍັງພຣະອົງ ຈິ່ງສ້າງສິ່ງນັ້ນມາ ຫຼືປ່ອຍໃຫ້ມັນເກີດຂຶ້ນໄດ້?

**ຄຳຖາມ: ຖ້າເປັນເຊັ່ນນັ້ນ, ຫາກຊາວພຸດທະສາສະນິກຊົນບໍ່ເຊື່ອໃນພຣະເຈົ້າ, ພວກເຂົາເຈົ້າເຊື່ອໃນຫຍັງ?**

**ຄຳຕອບ:** ພວກເຮົາບໍ່ເຊື່ອໃນພຣະເຈົ້າ ເພາະວ່າພວກເຮົາເຊື່ອໃນຄວາມເປັນມະນຸດ. ພວກເຮົາເຊື່ອວ່າ ມະນຸດທຸກຄົນມີຄ່າ ແລະສຳຄັນ, ເຊື່ອວ່າທຸກຄົນມີຄວາມສາມາດພັດທະນາຕົນເອງ ໃຫ້ກາຍເປັນພຣະພຸດທະເຈົ້າ ເປັນມະນຸດທີ່ສົມບູນໄດ້. ພວກເຮົາເຊື່ອວ່າ ມະນຸດສາມາດພັດທະນາປັນຍາໃຫ້ເໜືອກວ່າອະວິດຊາ(ອະວິຊຊາ) ແລະຫຼັກການທີ່ບໍ່ສົມເຫດສົມຜົນໄດ້ ແລະເຫັນທຸກສິ່ງຕາມຄວາມເປັນຈິງ. ພວກເຮົາເຊື່ອວ່າ ຄວາມ

ໂມໂຫ, ຄວາມຄຽດຊັງ ແລະຄວາມອິດສາ ສາມາດແທນທີ່ດ້ວຍຄວາມຮັກ, ຄວາມອົດທົນ, ຄວາມມີໃຈກວ້າງ ແລະຄວາມກະລຸນາ. ພວກເຮົາເຊື່ອວ່າ ທັງໝົດນີ້ ແມ່ນທຸກຄົນສາມາດເຮັດໄດ້, ຖ້າຫາກພວກເຂົາພາກພຽນ, ນຳພາ ແລະສົ່ງເສີມດ້ວຍເພື່ອນພຸດທະສາສະນິກະຊົນດ້ວຍກັນ ແລະຖືກບັນດານດ້ວຍຈະລິຍະວັດ(ຈະຣິຍາວັຕຣະ)ຂອງພຣະພຸດທະເຈົ້າ. ເໝືອນທີ່ພຣະພຸດທະອົງຕັດໄວ້ວ່າ:

*"ບາບທີ່ເຂົາເຮັດດ້ວຍຕົນເອງ ເຂົາກໍຈັກເສົ້າໝອງສຳລັບຕົນເອງ, ບາບທີ່ເຂົາບໍ່ ໄດ້ເຮັດດ້ວຍຕົນເອງ ເຂົາກໍຈັກບໍລິສຸດສຳລັບຕົນເອງ,ຄວາມບໍລິສຸດ ຫຼືບໍ່ບໍລິສຸດ ເປັນຂອງຈຳເພາະຕົນ ຜູ້ອື່ນຈະເຮັດໃຫ້ຜູ້ອື່ນບໍ່ບໍລິສຸດບໍ່ທ່ອນໄດ້."*

*Dhp.165*



# ໔. ສິນທຳ

**ຄຳຖາມ: ສາສະໜາອື່ນໄດ້ນຳເອົາຄວາມເຫັນໃນສິ່ງທີ່ວ່າ ອັນໃດຖືກຕ້ອງ ແລະຜິດມາຈາກບົດບັນຍັດຂອງພຣະເຈົ້າຂອງພວກເຂົາ. ພວກທ່ານທີ່ເປັນຊາວພຸດ ບໍ່ເຊື່ອໃນພຣະເຈົ້າ, ທ່ານຈະຮູ້ໄດ້ແນວໃດວ່າ ອັນໃດຖືກອັນໃດຜິດ?**

**ຄຳຕອບ:** ຄວາມຄິດໃດໆ, ຄຳເວົ້າໃດ ຫຼືການກະທຳໃດທີ່ມີຮາກເຫງົ້າມາຈາກຄວາມໂລບ, ຄວາມໂກດ, ແລະຄວາມຫຼົງ ນຳພວກເຮົາໃຫ້ຫ່າງອອກຈາກພຣະນິບພານ ແມ່ນເປັນສິ່ງບໍ່ດີ ແລະຄວາມຄິດໃດ, ວາຈາໃດ ຫຼືການກະທຳໃດ ທີ່ມີຮາກເຫງົ້າມາຈາກການເສຍສະຫຼະ, ຄວາມຮັກ, ແລະປັນຍານັ້ນ ຊ່ວຍໃຫ້ເຮົາປູທົ່ນທາງສູ່ພຣະນິບພານ ແມ່ນເປັນສິ່ງທີ່ດີ. ເພື່ອຢາກຮູ້ວ່າ ສິ່ງໃດຖືກຕ້ອງ ແລະບໍ່ຖືກຕ້ອງຕາມຫຼັກສາສະໜາທີ່ເຊື່ອໃນພຣະເຈົ້າ, ທັງໝົດນັ້ນແມ່ນຈຳເປັນຕ້ອງປະຕິບັດຕາມຄຳສັ່ງ. ໃນພຣະພຸດທະສາສະໜາທີ່ມີມະນຸດເປັນສູນກາງສຳຄັນ, ເພື່ອຢາກຮູ້ວ່າ ສິ່ງໃດຖືກຕ້ອງ ຫຼືບໍ່ຖືກຕ້ອງ, ທ່ານຕ້ອງພັດທະນາສະຕິ ແລະຄວາມເຂົ້າໃຈໃນຕົນເອງຢ່າງເລິກເຊິ່ງ. ສິລະທຳ(ສິລະທັມ) ທີ່ອີງໃສ່ຄວາມເຂົ້າໃຈ ມັກຈະໜັກແໜ້ນກວ່າສິ່ງທີ່ເຮັດຕາມຄຳສັ່ງສະເໝີ. ດັ່ງນັ້ນ, ເພື່ອຢາກຮູ້ວ່າອັນໃດຖືກຕ້ອງ ແລະອັນໃດຜິດ, ພຸດທະສາສະນິກະຊົນ ຄວນຈະສັງເກດເບິ່ງສາມຢ່າງເປັນຫຼັກສຳຄັນຄື: ເຈຕະນາທີ່ຢູ່ເບື້ອງຫຼັງການກະທຳ, ຜົນຂອງການກະທຳທີ່ເປັນຜົນກະທົບຕໍ່ຕົນເອງ ແລະຄົນອື່ນ. ຖ້າຫາກວ່າ ມີເຈຕະນາດີ(ມີຮາກເຫງົ້າມາຈາກຄວາມເອື້ອເຟື້ອເພື່ອແຜ່, ຄວາມຮັກ, ຄວາມສະຫຼາດ) ແລະຊ່ວຍເຫຼືອຄົນອື່ນ(ຊ່ວຍເຫຼືອຄົນອື່ນໃຫ້ມີນ້ຳໃຈເສຍສະຫຼະຍິ່ງຂຶ້ນ, ມີຄວາມເມດຕາ ແລະມີປັນຍາສະຫຼາດຍິ່ງຂຶ້ນ), ຫຼັງຈາກນັ້ນການປະພຶດ ແລະການກະທຳຂອງຂ້າພະເຈົ້າ ກໍເປັນກຸສົນ, ດີ ແລະມີສິນທຳ(ສິລທັມ). ແນ່ນອນວ່າ ມີຫຼາຍຢ່າງແຕກຕ່າງກ່ຽວກັບເລື່ອງນີ້. ບາງຄັ້ງ, ຂ້າພະເຈົ້າກໍກະທຳດ້ວຍເຈຕະນາທີ່ດີທີ່ສຸດ ແຕ່ມັນອາດຈະບໍ່ເປັນປະໂຫຍດແກ່ຕົນເອງ ແລະຄົນອື່ນ. ບາງຄັ້ງ, ເຈຕະນາຂອງຂ້າພະເຈົ້າໄກຕໍ່ຄວາມດີ, ແຕ່ວ່າຄວາມເປັນຈິງ, ການກະທຳຂອງຂ້າພະເຈົ້າຊ້ຳພັດເປັນປະໂຫຍດແກ່ຄົນອື່ນ. ບາງຄັ້ງ, ການກະທຳຂອງຂ້າພະເຈົ້າປະກອບດ້ວຍເຈຕະນາທີ່ບໍ່ດີ ແລະການກະທຳນັ້ນເປັນປະໂຫຍດແກ່ຂ້າພະເຈົ້າ ແຕ່ບາງຄັ້ງອາດເປັນເຫດໃຫ້ຄົນອື່ນເສຍໃຈ. ໃນກໍລະນີເຊັ່ນນີ້, ການກະທຳຂອງຂ້າພະ

ເຈົ້າ ປະກອບມີທັງດີ ແລະບໍ່ດີ. ເມື່ອເຈຕະນາບໍ່ດີ ແລະການກະທຳບໍ່ເປັນປະໂຫຍດທັງແກ່ຕົວຂ້າພະເຈົ້າເອງ ແລະຄົນອື່ນ, ການກະທຳເຊັ່ນນັ້ນແມ່ນບໍ່ດີ. ເມື່ອເຈຕະນາຂອງຂ້າພະເຈົ້າດີ ແລະການກະທຳຂອງຂ້າພະເຈົ້າເປັນປະໂຫຍດທັງ ແກ່ຕົນເອງ ແລະຜູ້ອື່ນ, ການກະທຳນັ້ນຖືວ່າດີຫຼາຍ.

**ຄຳຖາມ: ຖ້າເຊັ່ນນັ້ນ ພຣະພຸດທະສາສະໜາມີຂໍ້ປະຕິບັດທາງສີລະທຳ (ສີລະທັມມະ)ບໍ?**
**ຄຳຕອບ:** ມີແທ້. ສິນຫ້າເປັນຫຼັກບັນຍັດພື້ນຖານທາງສີລະທຳຂອງຊາວພຸດ. ສິນຂໍ້ທີໜຶ່ງແມ່ນການຫຼີກເວັ້ນຈາກການຂ້າ ຫຼືທຳລາຍສິ່ງທີ່ມີຊີວິດ, ສິນຂໍ້ທີສອງແມ່ນຫຼີກເວັ້ນຈາກການຂີ້ລັກ, ສິນຂໍ້ທີສາມ ແມ່ນຫຼີກເວັ້ນຈາກການປະພຶດຜິດໃນກາມ, ສິນຂໍ້ທີສີ່ແມ່ນຫຼີກເວັ້ນຈາກການເວົ້າຕົວະ, ສິນຂໍ້ທີຫ້າ ຫຼີກເວັ້ນຈາກການດື່ມນ້ຳເມົາ ແລະສິ່ງເສບຕິດຕ່າງໆ.

**ຄຳຖາມ: ແຕ່ແນ່ນອນວ່າມັນເປັນການດີທີ່ຈະຕ້ອງຂ້າບາງຄັ້ງ, ຂ້າແມງໄມ້ທີ່ແຜ່ເຊື້ອໂລກ ຫຼື ຂ້າຄົນທີ່ກຳລັງຈະຂ້າທ່ານ?**
**ຄຳຕອບ:** ມັນອາດຈະດີສຳລັບທ່ານ, ແຕ່ກ່ຽວກັບແມງໄມ້ ແລະຄົນທີ່ຖືກທ່ານຂ້າເດ ຈະເປັນແນວໃດ? ພວກເຂົາກໍປາຖະໜາຈະມີຊີວິດຢູ່ເໝືອນກັນກັບທ່ານນັ້ນລະ. ເມື່ອທ່ານຕັດສິນໃຈທີ່ຈະຂ້າແມງໄມ້ທີ່ແຜ່ເຊື້ອໂລກ, ເຈຕະນາຂອງທ່ານອາດປະກອບດ້ວຍຄວາມຫວ່ງໄຍຕົນເອງ(ດີ) ແລະຄວາມຮູ້ສຶກລັງກຽດ (ບໍ່ດີ). ການກະທຳເຊັ່ນນັ້ນ ຈະເປັນຜົນປະໂຫຍດແກ່ຕົວທ່ານເອງ(ດີ) ແຕ່ຢ່າງທີ່ເຫັນໄດ້ຊັດເຈນ ມັນຈະບໍ່ເປັນປະໂຫຍດແກ່ສັດນັ້ນ(ບໍ່ດີ). ດັ່ງນັ້ນ, ບາງຄັ້ງມັນ ອາດຈຳເປັນຈະຕ້ອງຂ້າ ແຕ່ມັນບໍ່ແມ່ນການກະທຳທີ່ເປັນກຸສົນທຳ(ກຸສະລະທັມມະ).

**ຄຳຖາມ: ພວກທ່ານທີ່ເປັນຊາວພຸດ ມີຄວາມໃສ່ໃຈກ່ຽວກັບມົດ ແລະແມງໄມ້ຢູ່ບໍ?.**
**ຄຳຕອບ:** ພຸດທະສາສະນິກະຊົນພະຍາຍາມບຳເພັນຄວາມກະລຸນາທີ່ປາສະຈາກຄວາມແບ່ງແຍກ ແລະຄວາມເມດຕາທີ່ບໍ່ມີຂອບເຂດ. ພວກເຮົາເຫັນໂລກເປັນເໝືອນອັນໜຶ່ງອັນດຽວກັນທີ່ແຕ່ລະສິ່ງ ແລະສັບພະສັດມີທີ່ຢູ່ອາໄສ ແລະດຳລົງຢູ່. ພວກເຮົາເຊື່ອວ່າກ່ອນທີ່ພວກເຮົາຈະທຳລາຍ ຫຼືເຮັດໃຫ້ຄວາມສົມດູນທີ່ລະອຽດອ່ອນຂອງທຳມະຊາດຫຼຸດນ້ອຍຖອຍລົງ, ພວກເຮົາຄວນລະວັງເປັນພິເສດ. ບ່ອນທີ່ທຳມະຊາດ ຖືກຮຸກຮານ

ທຳລາຍຢ່າງເຕັມທີ, ບີບບີ້ເອົາທຸກຢາດສຸດທ້າຍຂອງມັນ ໂດຍບໍ່ມີການນຳມາທົດແທນຄືນ, ການເອົາຊະນະ ແລະບັງຄັບ, ທຳມະຊາດຈຶ່ງໄດ້ມີການປ່ຽນແປງ. ອາກາດກາຍເປັນພິດ, ແມ່ນ້ຳຖືກມົນລະພິດປົນເປື້ອນ ແລະຕາຍ, ມີສັດປ່າ ແລະພືກສາຊາດນານາພັນ ກຳລັງຈະສູນພັນ, ໜ້າຜາຂອງພູເຂົາແຫ້ງກະແດ້ງ ແລະເຈື່ອນພັງທະລາຍ. ແມ່ນແຕ່ສະພາບດິນຟ້າອາກາດກໍປ່ຽນແປງ. ຖ້າຫາກວ່າມະນຸດ ມີຄວາມດື້ດຶງທີ່ຈະທັບມ້າງ, ທຳລາຍ ແລະເຂັ່ນຂ້າກັນໜ້ອຍລົງ, ສະຖານະການທີ່ໜ້າຫົດຫູ່ໃຈແບບນີ້ ກໍບໍ່ອາດເກີດຂຶ້ນໄດ້. ພວກເຮົາຄວນພະຍາຍາມສ້າງຕົນເອງ ໃຫ້ມີຄວາມເຄົາລົບຕໍ່ທຸກຊີວິດຕື່ມອີກ. ແລະນີ້ຄືຄວາມໝາຍຂອງສິນຂໍ້ທີໜຶ່ງ.

**ຄຳຖາມ: ພຣະພຸດທະສາສະໜາມີຄວາມເຫັນແນວໃດກ່ຽວກັບການແທ້ງລູກ?**
**ຄຳຕອບ:** ອີງຕາມພຣະພຸດທະເຈົ້າ, ຊີວິດເລີ່ມຕົ້ນເມື່ອມີການປະຕິສົນທິເກີດຂຶ້ນ ຫຼື ໃນໄລຍະເວລາທີ່ບໍ່ນານທໍ່ໃດຫຼັງຈາກນັ້ນ ດ້ວຍເຫດນີ້ເອງການເອົາລູກອອກ ຈຶ່ງເປັນການພາກຊີວິດ.

**ຄຳຖາມ: ແຕ່ ຖ້າຫາກວ່າຜູ້ຍິງຄົນໜຶ່ງຖືກຂົ່ມຂືນ ຫຼືນາງຮູ້ວ່າເດັກນ້ອຍ ທີ່ຈະເກີດມາຈະຕ້ອງເປັນຄົນເສຍໂສມພິກົນພິການ, ມັນບໍ່ເປັນການດີບໍ ທີ່ຄວນຈະຢຸດການຖືພາມານ?**
**ຄຳຕອບ:** ເດັກນ້ອຍທີ່ເຫັນວ່າເປັນເດັກທີ່ມີຜົນມາຈາກການຖືກຂົ່ມຂືນ ກໍຄວນມີຖານະທີ່ຈະດຳລົງຊີວິດຢູ່ ແລະໄດ້ຮັບຄວາມຮັກເໝືອນກັບເດັກນ້ອຍທົ່ວໄປ. ເດັກນ້ອຍຜູ້ຍິງ ຫຼືຜູ້ຊາຍຄົນນັ້ນ ບໍ່ຄວນຈະຖືກຂ້າແບບງ່າຍໆພຽງເພາະວ່າ ພໍ່ຜູ້ໃຫ້ກຳເນີດຂອງພວກເຂົາກໍ່ອາດຍາກຳ(ອາດຍາກັມມະ). ການໃຫ້ກຳເນີດເດັກນ້ອຍຜູ້ມີຮ່າງກາຍບໍ່ປົກກະຕິ ຫຼືເດັກນ້ອຍຜູ້ວິກົນຈິດ ອາດເປັນເລື່ອງເສົ້າສະຫຼົດໃຈສຳລັບພໍ່ແມ່ຂອງພວກເຂົາ ແຕ່ມັນກໍເຮັດໄດ້ຖ້າຈະທຳແທ້ງພວກນີ້ ແຕ່ເປັນຫຍັງບໍ່ຂ້າເດັກນ້ອຍ ຫຼືຜູ້ໃຫຍ່ທີ່ມີຮ່າງກາຍຜິດປົກກະຕິແລະພິການ? ມັນອາດຈະມີບາງກໍລະນີທີ່ການເອົາລູກອອກ ອາດເປັນທາງເລືອກ ໂດຍສ່ວນໃຫຍ່ຂອງມະນຸດ, ຕົວຢ່າງເຊັ່ນ, ເພື່ອຮັກສາຊີວິດຂອງແມ່ເດັກນ້ອຍເອົາໄວ້. ແຕ່ຄວນຈະຈິງໃຈຊື່ສັດ, ການທຳແທ້ງສ່ວນໃຫຍ່ມີຂຶ້ນງ່າຍດາຍກໍຍ້ອນວ່າ ການຖືພາຍັງ ບໍ່ທັນສະດວກ(ບໍ່ພ້ອມ), ຄວາມອັບອາຍຂາຍໜ້າ, ຫຼືພໍ່ແມ່ຍັງບໍ່ທັນຢາກໄດ້ລູກ. ສຳລັບຊາວພຸດແລ້ວ, ເຫດຜົນເຫຼົ່ານີ້ນັບວ່າໃຊ້ການບໍ່ໄດ້ທີ່ຈະທຳລາຍຊີວິດໃດໜຶ່ງ.

**ຄຳຖາມ: ຖ້າຫາກວ່າມີຄົນຂ້າຕົວຕາຍ ພວກເຂົາຈະບໍ່ລະເມີດສິນຂໍ້ທີໜຶ່ງບໍ?**

**ຄຳຕອບ:** ເມື່ອຄົນຜູ້ໜຶ່ງຂ້າຄົນອື່ນ ພວກເຂົາຈະຕ້ອງກະທຳອັນມີເຫດຈາກຄວາມຢ້ານ, ຄວາມຢາກຮ້າຍ, ຄວາມທາລຸນ, ຕັນຫາ ຫຼືເກີດຈາກບາງຄົນທີ່ມີອາລົມເປັນທາງລົບ. ເມື່ອຄົນເຮົາຂ້າຕົນເອງ ພວກເຂົາອາດຈະກະທຳດ້ວຍເຫດຜົນທີ່ຄ້າຍກັນ ຫຼືເປັນຍ້ອນວ່າຄວາມຮູ້ສຶກຝ່າຍບໍ່ດີອື່ນອີກ ເຊັ່ນຄວາມຜິດຫວັງ ຫຼືຄວາມຫົດຫູ່ໃຈ. ດັ່ງນັ້ນ, ດ້ວຍເຫດທີ່ການຂ້າຕະກຳ ເປັນຜົນເນື່ອງມາຈາກອາລົມຝ່າຍລົບ ແລ້ວນຳໄປສູ່ການກະທຳອື່ນຕື່ມອີກ, ການຂ້າຕົວຕາຍ ເປັນອາລົມຄວາມຮູ້ສຶກຝ່າຍລົບອັນເກີດຈາກຕົນເອງ ແລະຜູ້ອື່ນ ດ້ວຍເຫດນີ້ເອງ ຈຶ່ງເວົ້າໄດ້ວ່າ ເປັນການລະເມີດສິນ. ແຕ່ເຖິງຢ່າງໃດກໍຕາມ, ບາງຄົນກໍຈະຕ້ອງການຈະຂ້າຕົວຕາຍ, ຫຼືພະຍາຍາມທີ່ຈະຂ້າຕົວຕາຍ ແມ່ນບໍ່ຈຳເປັນຈະຕ້ອງຖືກບອກ ວ່າສິ່ງທີ່ເຂົາເຮັດນັ້ນແມ່ນຖືກຕ້ອງ. ພວກເຂົາຕ້ອງການຊ່ວຍເຫຼືອ ແລະຄວາມເຂົ້າອົກເຂົ້າໃຈ. ພວກເຮົາຈຳຕ້ອງຊ່ວຍເຫຼືອພວກເຂົາໃຫ້ເຂົ້າໃຈວ່າ ການຂ້າຕົນເອງເປັນບັນຫາ ທີ່ມີຢູ່ຕະຫຼອດການຂອງພວກເຂົາ[2], ທີ່ຍັງບໍ່ທັນໄດ້ຖືກແກ້ໄຂ.

**ຄຳຖາມ: ກະລຸນາບອກຂ້ານ້ອຍແນ່ກ່ຽວກັບສິນຂໍ້ທີສອງ.**

**ຄຳຕອບ:** ເມື່ອພວກເຮົາສະມາທານເອົາສິນຂໍ້ນີ້. ພວກເຮົາສະມາທານເພື່ອຈະບໍ່ເອົາຫຍັງທີ່ບໍ່ແມ່ນສົມບັດຂອງພວກເຮົາ. ສິນຂໍ້ທີສອງນີ້ ແມ່ນກ່ຽວກັບການງົດເວັ້ນຈາກຄວາມໂລບຂອງພວກເຮົາ ແລະຄວາມເຄົາລົບຕໍ່ຊັບສົມບັດຂອງຄົນອື່ນ.

**ຄຳຖາມ: ສິນຂໍ້ທີສາມເວົ້າວ່າພວກເຮົາຄວນຫຼີກເວັ້ນການປະພຶດຜິດໃນກາມ. ການປະພຶດຜິດໃນກາມແມ່ນຫຍັງ?**

**ຄຳຕອບ:** ຖ້າເຮົາໃຊ້ອາລົມທີ່ມີເລ້ຫຼ່ຽມ, ຫັກຫຼັງ ຫຼືບັງຄັບຂົ່ມເຫງຜູ້ໃດຜູ້ໜຶ່ງ ເພື່ອເສບສົມກັບເຮົາ, ນີ້ອາດເວົ້າໄດ້ວ່າ ເປັນການປະພຶດຜິດໃນກາມ. ການນອກໃຈຜົວເມຍກໍຖືວ່າ ເປັນການປະພຶດຜິດໃນກາມເຊັ່ນກັນ ເນື່ອງຈາກວ່າ ເມື່ອພວກເຮົາແຕ່ງງານ ພວກ

---

[2] ການຂ້າຕົວຕາຍ ເປັນບາບຢ່າງມະຫັນ, ບໍ່ແມ່ນຫົນທາງພົ້ນທຸກ. ເປັນຄວາມເຂົ້າໃຈຜິດຂອງຄົນ ຜູ້ຄິດວ່າ ການຕາຍຄືການດັບສູນວ່າງເປົ່າ. ໃນທາງພຣະພຸດທະສາສະໜາເຊື່ອວ່າ ການຂ້າຕົວຕາຍຈະຕ້ອງໄດ້ຮັບວິບາກກຳ(ວິບາກກັມມະ)ອີກ ດ້ວຍການເກີດມາຊາດໃໝ່ ແລ້ວມີເລື່ອງໃຫ້ທຸກໃຈ ຈົນເຖິງກັບຂ້າຕົວຕາຍຢູ່ຢ່າງນັ້ນເປັນເວລາ ໕໐໐ ຊາດ ຈຶ່ງຈະພົ້ນບາບກຳ(ປາປະກັມມະ).

ເຮົາໄດ້ໃຫ້ສັນຍາຕໍ່ຄູ່ສົມລົດຂອງເຮົາວ່າ ພວກເຮົາຈະຊື່ສັດຕໍ່ກັນ. ເມື່ອພວກເຮົານອກໃຈ ກໍຖືວ່າ ເປັນການຜິດສັນຍາ ແລະທໍລະຍົດຕໍ່ກັນ. ການເສບສົມຄວນຈະເປັນການສະແດງອອກຂອງຄວາມຮັກ ແລະຄວາມໃກ້ຊິດສະໜິດສະໜົມກັນລະຫວ່າງຄົນສອງຄົນ ເມື່ອມີຂຶ້ນກໍເປັນການແບ່ງປັນຄວາມສຸກທາງອາລົມ ແລະຈິດໃຈກັນ ແລະກັນ.

**ຄໍາຖາມ: ການເສບສົມກັນກ່ອນການແຕ່ງງານ ກໍຖືວ່າປະພຶດຜິດໃນກາມບໍ?**[3]

**ຄໍາຕອບ:** ບໍ່ ຖ້າຫາກວ່າມີຄວາມຮັກ ແລະການຕົກລົງປົງໃຈກັນລະຫວ່າງຄົນສອງຄົນ. ແຕ່ເຖິງຢ່າງໃດກໍຕາມ, ບໍ່ຄວນລືມໄປວ່າ ການເສບສົມກັນຄືຂະບວນການຈະເລີນພັນ ແລະຖ້າຫາກຜູ້ຍິງບໍ່ໄດ້ແຕ່ງງານເກີດຖືພາມານຂຶ້ນມາ, ມັນອາດກໍ່ໃຫ້ເກີດບັນຫາຕາມມາຫຼາຍຢ່າງ. ມີຜູ້ໃຫຍ່ ແລະຜູ້ທີ່ຮູ້ຈັກຄຶດຫຼາຍຄົນຄຶດວ່າ ຈະເປັນການດີຍິ່ງທີ່ຄວນຈະມີການສົມສູ່ກັນຫຼັງຈາກແຕ່ງງານແລ້ວ.

**ຄໍາຖາມ: ພຣະພຸດທະສາສະໜາມີຄວາມເຫັນແນວໃດກ່ຽວກັບການຄຸມກໍາເນີດ?**

**ຄໍາຕອບ:** ບາງສາສະໜາສອນວ່າ ການເສບສົມກັນຈະດ້ວຍເຫດຜົນໃດໆກໍຕາມ ທີ່ນອກເໜືອຈາກການໃຫ້ກໍາເນີດຄົນແມ່ນຜິດສິລະທໍາ(ສິລະທັມ). ດ້ວຍເຫດນີ້, ພວກເຂົາຈິ່ງຖືວ່າ ທຸກຮູບແບບຂອງການຄຸມກໍາເນີດລ້ວນແຕ່ຜິດ. ພຣະພຸດທະສາສະໜາຮັບຮູ້ວ່າ ການເສບສົມກັນມີຈຸດປະສົງຫຼາຍຢ່າງເຊັ່ນ: ການໃຫ້ກໍາເນີດຄົນ, ການສ້າງຄືນໃໝ່, ເປັນເໝືອນການສະແດງອອກຂອງຄວາມຮັກ ແລະຄວາມອົບອຸ່ນລະຫວ່າງຄົນສອງຄົນ ແລະອື່ນໆ. ນີ້ເປັນກໍລະນີ ທີ່ທຸກຮູບແບບຂອງການຄຸມກໍາເນີດ ແມ່ນບໍ່ເປັນຫຍັງ ຍົກເວັ້ນການເອົາລູກອອກ. ທີ່ຈິງແລ້ວ, ພຣະພຸດທະສາສະໜາຄວນຈະກ່າວວ່າ ໃນໂລກທີ່ປະຊາກອນກໍາລັງເພີ່ມຂຶ້ນ ແລະເຊິ່ງກາຍເປັນບັນຫາທີ່ສໍາຄັນນີ້, ການຄຸມກໍາເນີດ ຄວນເປັນສິ່ງທີ່ດີແທ້.

**ຄໍາຖາມ: ກ່ຽວກັບສິນຂໍ້ທີສີ່ເດ ມັນເປັນໄປໄດ້ບໍທີ່ຈະມີຊີວິດຢູ່ ໂດຍປາສະຈາກການເວົ້າຕົວະ?**

---

[3] ກ່ຽວກັບການເສບສົມກັນກ່ອນການແຕ່ງງານນີ້ວ່າຈະຜິດສິນຫຼືບໍ່ນັ້ນ ໃຫ້ໄປເບິ່ງລາຍລະອຽດກ່ຽວກັບສາເຫດຂອງການລ່ວງລະເມີດສິນຂໍ້ນີ້ ຢູ່ພາກຜະໜວກ ໜ້າທີ 98

**ຄຳຕອບ:** ຖ້າຫາກວ່າມັນເປັນສິ່ງທີ່ຫຼີກລຽງບໍ່ໄດ້ແທ້ໆ ທີ່ຈະເຂົ້າໄປກ່ຽວຂ້ອງຢູ່ໃນສັງຄົມ ຫຼືເຮັດທຸລະກິດໂດຍປາສະຈາກການເວົ້າຕົວະ, ໃນສະຖານະການທີ່ແປກ ແລະສະຖານະການສໍ້ໂກງເຊັ່ນນັ້ນ ຄົງມີການປ່ຽນແປງໄປ. ຊາວພຸດຄືຜູ້ໜຶ່ງ ທີ່ຮູ້ຈັກປະຕິວັດຕົນເອງ ເພື່ອເຮັດສິ່ງໃດສິ່ງໜຶ່ງໂດຍທາງປະຕິບັດ ກ່ຽວກັບບັນຫາໃດໜຶ່ງໂດຍການພະຍາຍາມທີ່ຈະສັດຊື່ ແລະຈິງໃຈກວ່າ.

**ຄຳຖາມ: ຖ້າຫາກວ່າທ່ານກຳລັງນັ່ງຢູ່ໃນສວນສາທະລະນະ ແລະມີຄົນທີ່ໜ້າລ່ຳຕາຕາຍແລ່ນຜ່ານມາ ແລະສອງສາມນາທີຜ່ານມາ ມີຜູ້ຊາຍອີກຄົນໜຶ່ງຖືມີດແລ່ນຜ່ານມາຫາທ່ານແລ້ວຖາມວ່າ ທ່ານຮູ້ວ່າຜູ້ຊາຍທີ່ແລ່ນມາເມື່ອກີ້ນີ້ໄປທາງໃດ, ທ່ານຄວນຈະເວົ້າຄວາມຈິງ ຫຼືຈະຕົວະລາວ?**

**ຄຳຕອບ:** ຖ້າຫາກຂ້າພະເຈົ້າມີເຫດຜົນດີພໍທີ່ສົງໄສວ່າ ຜູ້ຊາຍຄົນທີສອງກຳລັງຈະທຳຮ້າຍຜູ້ຊາຍຄົນທີໜຶ່ງຢ່າງສາຫັດ ຂ້າພະເຈົ້າກໍຈະເວົ້າຕົວະ, ໂດຍເປັນຊາວພຸດທີ່ມີຄວາມຫວ່ງໄຍຢ່າງສະຫຼາດ, ຈະບໍ່ລັງເລໃນການຕົວະ. ພວກເຮົາໄດ້ເວົ້າມາກ່ອນແລ້ວກ່ຽວກັບອົງປະກອບຂອງການກະທຳວ່າຈະດີ ຫຼືຊົ່ວຢູ່ທີ່ເຈຕະນາ. ເຈຕະນາທີ່ຈະຮັກສາຊີວິດ ຍິ່ງເປັນທາງບວກຫຼາຍກວ່າການກ່າວຂີ້ຕົວະ ທີ່ເປັນຜົນລົບໃນສະຖານະການແບບນີ້. ຖ້າຫາກວ່າຂີ້ຕົວະ, ດື່ມເຫຼົ້າ ຫຼືແມ່ນແຕ່ຂີ້ລັກ ມີຄວາມໝາຍເພື່ອຮັກສາຊີວິດຂ້າພະເຈົ້າກໍສົມຄວນເຮັດ. ຂ້າພະເຈົ້າສາມາດແກ້ໄຂ ຫຼືສະມາທານສິນນີ້ຄືນໄດ້ ແຕ່ຂ້າພະເຈົ້າບໍ່ສາມາດນຳເອົາຊີວິດຄົນທີ່ຕາຍໄປແລ້ວໃຫ້ຄືນມາໄດ້. ແຕ່ເຖິງຢ່າງໃດກໍຕາມ, ດັ່ງທີ່ໄດ້ກ່າວມາແລ້ວ, ບໍ່ຄວນຈະຖືເອົາສິ່ງນີ້ ເພື່ອເປັນຂໍ້ອ້າງໃນການລ່ວງລະເມີດສິນເມື່ອໃດທີ່ບໍ່ຈຳເປັນ. ສິນຄວນຈະໄດ້ຮັບການປະພຶດປະຕິບັດຢ່າງເອົາໃຈໃສ່ ແລະຄວນຈະລ່ວງລະເມີດໃນກໍລະນີທີ່ເຫັນສົມຄວນຈຳເປັນທີ່ສຸດເທົ່ານັ້ນ.

**ຄຳຖາມ: ສິນຂໍ້ທີຫ້າວ່າ ພວກເຮົາບໍ່ຄວນດື່ມນ້ຳເມົາ ຫຼືເສບຢາຕ່າງໆດ້ວຍເຫດໃດ?**

**ຄຳຕອບ:** ຄົນເຮົາສ່ວນໃຫຍ່ບໍ່ໄດ້ດື່ມເພື່ອລົດຊາດ. ເມື່ອພວກເຂົາດື່ມຄົນດຽວ ແມ່ນເພື່ອສະແຫວງຫາການຜ່ອນຄາຍອາລົມຄວາມເຄັ່ງຕຶງ ແລະເມື່ອດື່ມກັບສັງຄົມປົກກະຕິແມ່ນເພື່ອໃຫ້ເຂົ້າກັບສັງຄົມ. ແມ່ນແຕ່ສ່ວນນ້ອຍໆຂອງເຄື່ອງມຶນເມົາອາດຈະເຮັດໃຫ້ສັນຍາ(ຄວາມຈື່ຈຳ)ປ່ຽນແປງ, ແລະພາໃຫ້ຂາດສະຕິ. ຖ້າດື່ມຫຼາຍຂຶ້ນ ຍິ່ງມີຜົນເສຍ

ຫາຍຫຼາຍ. ຊາວພຸດກ່າວວ່າ ເມື່ອທ່ານຜິດສິນຂໍ້ທີຫ້າ ທ່ານອາດຈະລ່ວງລະເມີດສິນຂໍ້ອື່ນທັງໝົດໄດ້.

**ຄຳຖາມ: ແຕ່ຖ້າດື່ມພຽງແຕ່ໜ້ອຍດຽວອາດຈະບໍ່ເປັນການຜິດສິນແມ່ນບໍ? ມັນພຽງແຕ່ໜ້ອຍດຽວເທົ່ານັ້ນ.**

**ຄຳຕອບ:** ແມ່ນແລ້ວ, ມັນເປັນພຽງການດື່ມໜ້ອຍດຽວ ແລະຖ້າທ່ານບໍ່ສາມາດປະຕິບັດໄດ້ແມ່ນແຕ່ສິ່ງເລັກໆນ້ອຍໆເຊັ່ນນີ້, ການຕັ້ງປະນິທານ ແລະຄວາມມຸ້ງໝັ້ນຂອງທ່ານກໍຈະບໍ່ເຂັ້ມງວດ, ແມ່ນບໍ?

**ຄຳຖາມ: ສິນຫ້າເປັນສິ່ງທີ່ເປັນດ້ານລົບ. ມັນໄດ້ບອກທ່ານກ່ຽວກັບສິ່ງທີ່ບໍ່ຄວນເຮັດ ແຕ່ບໍ່ໄດ້ບອກໃນສິ່ງທີ່ຄວນເຮັດ.**

**ຄຳຕອບ:** ສິນຫ້າເປັນພື້ນຖານຂອງຫຼັກສີລະທຳ(ສີລະທັມ)ຂອງຊາວພຸດ. ບໍ່ແມ່ນລວມເອົາສີລະທຳທັງໝົດ. ພວກເຮົາເລີ່ມຈາກການຮູ້ຈັກພຶດຕິກຳທີ່ເປັນຝ່າຍບໍ່ດີຂອງເຮົາແລ້ວກໍພະຍາຍາມຢຸດກະທຳ. ນັ້ນຄືຈຸດປະສົງຂອງສິນຫ້າ. ຫຼັງຈາກພວກເຮົາຢຸດກະທຳຄວາມຊົ່ວ, ແລ້ວພວກເຮົາກໍເລີ່ມຕົ້ນໃນການທຳຄວາມດີ. ຕົວຢ່າງເຊັ່ນສິນຂໍ້ທີສີ່. ພຣະພຸດທະເຈົ້າຕັດໄວ້ວ່າ ພວກເຮົາຄວນເລີ່ມຈາກການຫຼີກເວັ້ນຈາກການເວົ້າຕົວະ. ຫຼັງຈາກນັ້ນ, ເຮົາກໍມາເລີ່ມເວົ້າຄວາມຈິງ, ເວົ້າຢ່າງອ່ອນໂຍນ, ຢ່າງສຸພາບ ແລະເວົ້າໃນເວລາທີ່ເໝາະສົມ.

*"ງົດເວັ້ນຈາກການເວົ້າບໍ່ຈິງ ເຂົາກາຍເປັນຄົນເວົ້າຄວາມຈິງ, ເຊື່ອຖືໄດ້, ໝັ້ນໃຈໄດ້, ເພິ່ງພາໄດ້, ເຂົາບໍ່ຫຼອກລວງໂລກ. ງົດເວັ້ນຈາກການເວົ້າ ເພື່ອມຸ້ງທຳຮ້າຍຄົນອື່ນ, ເຂົາບໍ່ນຳມາເວົ້າໃນທີ່ນັ້ນ ໃນສິ່ງທີ່ເຂົາໄດ້ຍິນມາໃນທີ່ນີ້ ຫຼື ບໍ່ເວົ້າໃນສິ່ງທີ່ໄດ້ຍິນໃນທີ່ນີ້ ເພື່ອກໍ່ໃຫ້ເກີດຄວາມແຕກແຍກລະຫວ່າງຄົນສອງຄົນ. ເຂົາປັບຄວາມເຂົ້າໃຈໃຫ້ຄົນທີ່ແຕກແຍກ ແລະນຳມາໃຫ້ໃກ້ຊິດກັນຕື່ມອີກສຳລັບຄົນທີ່ເປັນເພື່ອນກັນຢູ່ແລ້ວ. ຄວາມສາມັກຄີຄືສິ່ງທີ່ເຂົາຍິນດີ, ສາມັກຄີຄືສິ່ງທີ່ເຂົາປີ້ມໃຈ, ສາມັກຄີຄືສິ່ງທີ່ເຂົາຮັກ; ມັນເປັນແຮງບັນດານໃຈໃນຄຳເວົ້າຂອງເຂົາ. ການບໍ່ເວົ້າຄຳຫຍາບຊ້າ, ຄຳເວົ້າຂອງເຂົາບໍ່ມີທີ່ ຕິ, ມ່ວນນຫູເມື່ອໄດ້ຮັບຟັງ, ເປັນທີ່ເຫັນພ້ອມ, ຖືກໃຈ, ກັ່ນກອງດີແລ້ວ, ດີຍິ່ງແລ້ວ. ການບໍ່ເວົ້າເລື່ອງທີ່ໄຮ້ສາລະ, ເຂົາເວົ້າໃນເວລາທີ່ສົມຄວນເວົ້າ, ເວົ້າໃນສິ່ງທີ່ຖືກຕ້ອງ,*

*ເວົ້າເຂົ້າເລື່ອງໂລດ, ກ່ຽວກັບທຳ(ທັມມະ) ແລະວິໄນ. ເຂົາເວົ້າໃນສິ່ງທີ່ສົມຄວນສະສົມໄວ້, ຖືກກາລະ, ມີເຫດຜົນ, ກັ່ນກອງດີແລ້ວ ແລະເວົ້າຖືກຈຸດໝາຍ".*

*M.I, 179*



# ໕. ການເກີດໃໝ່

**ຄຳຖາມ: ມະນຸດພວກເຮົາມາຈາກໃສ ແລະພວກເຮົາກຳລັງຈະໄປໃສ?**

**ຄຳຕອບ:** ມີສາມຄຳຕອບທີ່ອາດເປັນໄປໄດ້ຕໍ່ຄຳຖາມນີ້. ສຳລັບຄົນທີ່ເຊື່ອຖືໃນພຣະເຈົ້າ ມັກປະກາດວ່າ ກ່ອນໜ້ານີ້ ມະນຸດເຮົາໄດ້ຖືກສ້າງມາ, ແຕ່ກ່ອນແມ່ນບໍ່ມີມະນຸດ, ຕໍ່ມາ ຈຶ່ງ ເກີດມີມະນຸດໂດຍພຣະປະສົງຂອງພຣະຜູ້ເປັນເຈົ້າ. ພວກເຂົາດຳລົງຊີວິດຢູ່ ແລະໃນ ຕອນນັ້ນ ອີງຕາມສິ່ງທີ່ພວກເຂົາເຊື່ອ ຫຼືໃນຕອນທີ່ເຂົາມີຊີວິດຢູ່, ພວກເຂົາກໍຈະໄປສູ່ ທັງສະຫວັນ ແລະນາຮົກຕະຫຼອດນິລັນດອນ. ຍັງມີຄົນອີກກຸ່ມໜຶ່ງ, ເຊິ່ງເປັນນັກມະນຸດ ນິຍົມ ແລະນັກວິທະຍາສາດ, ຜູ້ທີ່ປະກາດວ່າມະນຸດເກີດມາໄດ້ ຍ້ອນການປະຕິສົນທິ ເນື່ອງມາຈາກສາເຫດທາງທຳມະຊາດ, ດຳລົງຊີວິດຢູ່ ແລະກໍຕາຍໄປ, ບໍ່ມີຢູ່ອີກ. ພຣະ ພຸດທະສາສະໜາ ບໍ່ໄດ້ຍອມຮັບທັງສອງຄຳອະທິບາຍນີ້. ຄຳອະທິບາຍທຳອິດ ກໍ່ໃຫ້ ເກີດບັນຫາທາງສິລະທຳຫຼາຍຢ່າງ. ຖ້າຫາກວ່າພຣະເຈົ້າດີ ໄດ້ສ້າງພວກເຮົາມາແທ້ຈິງ, ມັນເປັນການຍາກທີ່ຈະອະທິບາຍວ່າ ດ້ວຍເຫດໃດຫຼາຍຄົນຈຶ່ງເກີດມາດ້ວຍຮ່າງກາຍ ທີ່ ພິການພິການແທ້ໆ ຫຼືດ້ວຍເຫດໃດ ເດັກນ້ອຍຫຼາຍຄົນ ຈຶ່ງເກີດມາດ້ວຍຮ່າງກາຍຜິດປົກ ກະຕິຫຼັງຈາກເກີດ ຫຼືຕອນທີ່ເກີດ. ບັນຫາໜຶ່ງກ່ຽວກັບຄຳອະທິບາຍຂອງສາສະໜາ ທີ່ ເປັນເທວະນິຍົມນັ້ນກໍຄືວ່າ ບໍ່ຄ່ອຍຍຸດຕິທຳປານໃດທີ່ເວົ້າວ່າ ບຸກຄົນບາບຈະຕ້ອງທົນ ທຸກທໍລະມານຕະຫຼອດນິລັນດອນໃນນາຮົກ ຍ້ອນການກະທຳບາບໃນຊ່ວງເວລາ ໖໐-໗໐ ປີ ເມື່ອຕອນເປັນມະນຸດ ໖໐ ປີ ຫຼື ໗໐ ປີ ຂອງການບໍ່ເຊື່ອໃນພຣະເຈົ້າ ຫຼືການດຳລົງ ຊີວິດຢູ່ຢ່າງຜິດສິລະທຳ ເບິ່ງຄືວ່າບໍ່ສົມຄວນທີ່ຈະໄດ້ຮັບໂທດທໍລະມານຕະຫຼອດນິລັນ ດອນເຊັ່ນນັ້ນ. ເຊັ່ນດຽວກັນ, ໖໐ ຫຼື ໗໐ ປີ ຂອງການດຳລົງຊີວິດຢູ່ຢ່າງມີສິລະທຳ ກໍ ເບິ່ງຄືວ່າ ເປັນຜົນສ່ວນນ້ອຍທີ່ຈະໄດ້ມີຄວາມສຸກນິລັນດອນໃນສວງສະຫວັນ. ຄຳອະທິ ບາຍທີສອງດີກວ່າອັນທີໜຶ່ງ ແລະມີຫຼັກຖານທາງວິທະຍາສາດກວ່າ ເພື່ອສະໜັບສະ ໜູນແຕ່ກໍຍັງບໍ່ທັນຕອບຄຳຖາມທີ່ສຳຄັນທັງໝົດ. ດ້ວຍເຫດໃດ ປະກົດການໜຶ່ງ ຈຶ່ງມີ ໂຄງສ້າງທີ່ສັບສົນມະຫັດສະຈັນ ເລີ່ມຈາກວິນຍານ(ຄວາມຮັບຮູ້) ຂອງມະນຸດເລີ່ມຈາກ ການພັດທະນາຈາກການປະສົມກັນລະຫວ່າງນ້ຳເຊື້ອ ແລະໄຂ່ຂອງມານດາໃນເວລາ ພຽງເກົ້າເດືອນເທົ່ານັ້ນ?

ພຣະພຸດທະສາສະໜາມີຄໍາອະທິບາຍ ທີ່ໜ້າເພິ່ງພໍໃຈທີ່ສຸດກ່ຽວກັບວ່າ ມະນຸດມາຈາກໃສ ແລະພວກເຂົາກໍາລັງຈະໄປໃສ. ເມື່ອພວກເຮົາຕາຍ, ຈິດທີ່ປະກອບດ້ວຍຜົນກໍາທີ່ສ້າງສົມໄວ້, ຄວາມມັກຄວາມຊັງ, ຄວາມສາມາດ, ແລະພຶດຕິກໍາການປະພຶດຕ່າງໆທີ່ໄດ້ພໍ່າເພັງ ແລະສ້າງມາໃນຊາດນີ້, ກໍຈະສ້າງຕົວມັນເອງຄືນໃໝ່ໃນໄຂ່ຂອງມານດາ. ເມື່ອຈະເລີນເຕີບໂຕຂຶ້ນ, ຈິ່ງເກີດໃໝ່ ແລະພັດທະນາບຸກຄະລິກນິໄສໃຈຄໍທັງທາງກາຍ ແລະທາງຈິດໃຈທີ່ໄດ້ສ້າງສົມມາ ແຕ່ອະດີດຊາດໃນສະພາບແວດລ້ອມໃໝ່. ນິໄສໃຈຄໍຈະມີການປ່ຽນແປງໄປ ແລະຖືກຂະຫຍາຍໄປດ້ວຍຄວາມຮັບຮູ້ຕ່າງໆ. ອີງປະກອບທີ່ເປັນເງື່ອນໄຂຕ່າງໆເຊັ່ນ ການສຶກສາ, ການໄດ້ຮັບອິດທິພົນຈາກພໍ່ແມ່ ແລະສັງຄົມອອ້ມຂ້າງ, ເມື່ອເຖິງຄາວຕາຍ ກໍມີການເກີດໃໝ່ອີກ ລວມຕົວກັນປະຕິສົນທິໃນໄຂ່ຂອງມານດາອີກຄັ້ງໜຶ່ງ. ຂະບວນການຂອງການຕາຍ ແລະການເກີດໃໝ່ນີ້ ຈະສືບຕໍ່ໄປເລື້ອຍໆ ຈົນກວ່າເງື່ອນໄຂທີ່ເປັນປັດໄຈຂອງມັນຄື ຕັນຫາ ແລະອະວິດຊາຈະດັບ. ເມື່ອຕັນຫາ ແລະອະວິດຊາດັບ, ແທນທີ່ຈະມີການເກີດອີກ, ຈິດໃຈກໍໄດ້ບັນລຸສະພາວະທໍາ ທີ່ເອີ້ນວ່າ *ນິບພານ* ນີ້ຄືເປົ້າໝາຍສູງສຸດຂອງພຣະພຸດທະສາສະໜາ ແລະເປັນເປົ້າໝາຍຂອງຊີວິດອີກດ້ວຍ.

**ຄໍາຖາມ: ຈິດເດີນທາງຈາກຮ່າງກາຍໜຶ່ງ ໄປສູ່ອີກຮ່າງກາຍອື່ນໄດ້ຢ່າງໃດ?**

**ຄໍາຕອບ:** ລອງຄິດເບິ່ງຄື້ນຂອງວິທະຍຸ. ຄື້ນວິທະຍຸທີ່ບໍ່ໄດ້ສ້າງຂຶ້ນດ້ວຍຄໍາເວົ້າ ແລະດົນຕີ ແຕ່ຄື້ນຄວາມຖີ່ທີ່ແຕກຕ່າງກັນ, ຖືກສົ່ງຜ່ານ, ເຄື່ອນທີ່ຜ່ານຊັ້ນບັນຍາກາດ, ຖືກດຶງດູດ ແລະຮັບສຽງຈາກເຄື່ອງຮັບສັນຍານຈາກສະຖານີທີ່ຖ່າຍທອດເປັນຄໍາເວົ້າ ແລະສຽງດົນຕີ. ຄ້າຍຄືກັນກັບຈິດ, ໃນຕອນຕາຍ, ພະລັງງານຂອງຈິດເຄື່ອນທີ່ຜ່ານບັນຍາກາດ, ມັນຖືກດຶງດູດ ແລະຈັບດ້ວຍໄຂ່ທີ່ສຸກ(ຂອງມານດາ). ເມື່ອທາລົກໃນຄັນຈະເລີນເຕີບໂຕ ມັນກໍມີສູນລວມຢູ່ທີ່ສະໝອງ ຫຼັງຈາກນັ້ນ ກໍຖ່າຍທອດອອກມາເປັນນິໄສໃຈຄໍອັນໃໝ່[4].

**ຄໍາຖາມ: ຄົນເຮົາຈະເກີດໃໝ່ເປັນມະນຸດສະເໝີບໍ?**

---

[4] ເຖິງແມ່ນວ່າຈະມີນິໄສໃຈຄໍອັນໃໝ່ ແຕ່ຜົນບຸນ ຜົນກັມກໍຍັງຕິດຕາມມາຈາກພົບຊາດກ່ອນ(ຜູ້ແປພະຍາຍາມອະທິບາຍເສີມໃສ່).

**ຄຳຕອບ:** ບໍ່. ມີຫຼາຍພົບພູມທີ່ບຸກຄົນສາມາດໄປເກີດໄດ້. ບາງຄົນກໍເກີດໃນສະຫວັນ, ບາງຄົນກໍເກີດໃໝ່ໃນນາຮົກ, ບາງຄົນກໍເກີດເປັນເຜດ(ຜີເຜດ)ແລະອື່ນໆ. ສະຫວັນຍັງບໍ່ແມ່ນສະຖານທີ່ອັນເປັນທີ່ຢູ່ຂອງຜູ້ທີ່ມີຮ່າງກາຍຈົບງາມ ແລະເປັນບ່ອນທີ່ຈິດໃຈເສບສົມແຕ່ຄວາມຈິງເປັນສ່ວນໃຫຍ່. ເໝືອນກັບພົບພູມອື່ນໆ, ສະຫວັນກໍເປັນອະນິດຈັງ ແລະເມື່ອມີການສິ້ນອາຍຸໄຂ, ກໍສາມາດໄປເກີດເປັນມະນຸດໃໝ່ອີກຄັ້ງໜຶ່ງ. ນາຮົກກໍ ເຊັ່ນດຽວກັນ ຍັງເປັນສະຖານທີ່ໆເປັນອະນິດຈັງ ແຕ່ເປັນສະຖານທີ່ໆຈິດໃຈໄດ້ຮັບຄວາມລຳບາກ ແລະທຸກຂະເວທະນາເປັນສ່ວນໃຫຍ່. ນອກຈາກນີ້, ຖ້າເກີດເປັນເຜດ, ເປັນພົບພູມທີ່ຮ່າງກາຍບໍ່ຈົບງາມ ແລະຈິດໃຈໄດ້ຮັບທຸກຂະເວທະນາຢ່າງຕໍ່ເນື່ອງ ດ້ວຍຄວາມຢາກໄດ້ຢ່າງແຮງກ້າ ແລະມີຄວາມທຸກ. ດັ່ງນັ້ນ, ເທວະດາຢູ່ສວງສະຫວັນ ຈຶ່ງສະເຫວີຍຄວາມສຸກເປັນສ່ວນໃຫຍ່, ສ່ວນສັດນາຮົກ ແລະພວກເຜດກໍໄດ້ຮັບທຸກຂະເວທະນາ ສ່ວນມະນຸດ ມີທັງສຸກ ແລະທຸກປະປົນກັນໄປ. ຄວາມແຕກຕ່າງອັນສຳຄັນລະຫວ່າງພົບພູມຂອງມະນຸດ ແລະພົບພູມອື່ນ ແມ່ນຂະໜາດຂອງຮ່າງກາຍ ແລະໄລຍະເວລາຂອງການສະເຫວີຍຄວາມສຸກ ແລະຄວາມທຸກ.

**ຄຳຖາມ: ແມ່ນຫຍັງເປັນສິ່ງຕັດສິນວ່າ ຄົນເຮົາຈະໄປເກີດຢູ່ໃສ?**

**ຄຳຖາມ:** ມີອົງປະກອບທີ່ສຳຄັນ, ແຕ່ບໍ່ແມ່ນສິ່ງດຽວ, ທີ່ສົ່ງຜົນໃຫ້ເຮົາໄປເກີດໃນສະຖານທີ່ໃດ ແລະຈະມີຊີວິດຢູ່ແບບໃດ, ນັ້ນຄື *ກຳ* (ກັມມະ). ຄຳວ່າ *ກຳ* ໝາຍເຖິງການກະທຳ ແລະໝາຍເຖິງເຈຕະນາຂອງເຮົາ, ເຊິ່ງມີກາຍະກຳ (ການກະທຳທາງກາຍ) ແລະມະໂນກຳ(ການກະທຳທາງໃຈ). ເວົ້າອີກຢ່າງໜຶ່ງວ່າ, ສິ່ງໃດທີ່ເຮົາເປັນຢູ່ໃນປັດຈຸບັນແມ່ນເນື່ອງຈາກສິ່ງທີ່ເຮົາຄິດ ແລະກະທຳໄວ້ໃນອະດີດ. ໃນທຳນອງດຽວກັນ, ສິ່ງທີ່ ເຮົາຄິດ ແລະກະທຳຢູ່ໃນຂະນະນີ້ ຈະເປັນຜົນກະທົບຕໍ່ເຮົາວ່າ ເຮົາຈະເປັນໄປຢ່າງໃດໃນອະນາຄົດ. ບຸກຄົນທີ່ມີຄວາມສຸພາບອ່ອນໂຍນ, ມີເມດຕາ ມີໂອກາດຈະໄດ້ໄປເກີດໃນສວງສະຫວັນ ຫຼືເກີດເປັນມະນຸດຜູ້ທີ່ປະກອບດ້ວຍຄວາມສຸກເປັນສ່ວນໃຫຍ່. ບຸກຄົນປະເພດທີ່ມີຄວາມກະວົນກະວາຍໃຈ, ກັງວົນໃຈ ຫຼືຜູ້ທີ່ໂຫດຮ້າຍປ່າເຖື່ອນຢ່າງຮຸນແຮງມີແນວໂນ້ມຈະໄປເກີດໃນນາຮົກ ຫຼືບໍ່ກໍໄປເກີດເປັນມະນຸດ ຜູ້ທີ່ມີຊີວິດຢູ່ຢ່າງທຸກຍາກລຳບາກ. ບຸກຄົນໃດທີ່ເພີ່ມພູນຕັນຫາຄອບງຳ, ມີຄວາມໂລບມາກຢ່າງຮຸນແຮງ ແລະມີຄວາມທະເຍີທະຍານຮ້ອນແຮງເໝືອນໄຟເຜົາ ບໍ່ຮູ້ຈັກພໍ ມີໂອກາດຈະໄປເກີດເປັນເຜດ

ຫຼືເກີດເປັນມະນຸດ ທີ່ບໍ່ມີເມືອງພໍໃນສິ່ງທີ່ຕົນປາຖະໜາ ແລະມີຄວາມຕ້ອງການສະເໝີ. ເມື່ອໃດທີ່ອຸປະນິໄສໄດ້ຖືກສ້າງສົມຢ່າງແຮງກ້າໃນຊາດນີ້, ກໍຈະເປັນຜົນສືບເນື່ອງໄປໃນຊາດໜ້າ. ແຕ່ເຖິງຢ່າງໃດກໍຕາມ, ສ່ວນໃຫຍ່ກໍໄດ້ເກີດມາເປັນມະນຸດ.

**ຄ**ໍ**າຖາມ: ທ່ານໄດ້ກ່າວເຖິງສັດນາຮົກ(ສັດນະຮົກ). ຢ່າບອກນະວ່າ ທີ່ຈິງແລ້ວ ພວກທ່ານທີ່ເປັນຊາວ ພຸດກໍເຊື່ອໃນເລື່ອງນະຮົກ?**

**ຄໍາຕອບ:** ຖ້າຫາກວ່ານະຮົກ ທ່ານໝາຍເຖິງສະຖານທີ່ໆເທບພະເຈົ້າຜູ້ໂຫດຮ້າຍ ໄດ້ໂຍນເອົາບຸກຄົນທີ່ບໍ່ເຊື່ອໃນອົງພຣະຜູ້ເປັນເຈົ້າ. ດັ່ງນັ້ນ, ພຣະອົງຈິ່ງລົງໂທດພວກເຂົາຕລອດນິລັນດອນ, ຖ້າເປັນເຊັ່ນນັ້ນກໍບໍ່ແມ່ນ. ຊາວພຸດເຊື່ອວ່າ ຄວາມຄິດເຊັ່ນນັ້ນ ອາດເກີດມາຈາກຈິດທີ່ບໍ່ປົກກະຕິ ແລະໂຫດຮ້າຍ. *ນິຣາຍະ* ຫຼື *ອະປາຍະ*, ຄໍາສັບທາງພຣະພຸດທະສາສະໜາ ຕາມປົກກະຕິແປວ່າ *ນະຮົກ*, ຕາມປົກກະຕິແປວ່າ “ເສື່ອມ” ແລະ “ສູນເສຍ”. ໂດຍສະເພາະແມ່ນສໍາລັບບຸກຄົນຜູ້ທີ່ທາລຸນ ແລະເຫັນແກ່ຕົວ ຜູ້ທີ່ມີຈິດໃຈເຫັນແກ່ຕົວ ດ້ວຍເຫດນີ້ເອງ ຈິ່ງປະສົບກັບສິ່ງທີ່ເປັນອະກຸສົນ(ດ້ານລົບ). ພຣະພຸດທະອົງຕັດເອົາໄວ້ວ່າ, “ຄົນພານກ່າວວ່ານະຮົກຢູ່ພື້ນທະເລ, ແຕ່ເຮົາກ່າວວ່າ ນະຮົກເປັນຊື່ຂອງທຸກຂະເວທະນາ” ອາຕະມາຂໍຍົກຕົວຢ່າງເຊັ່ນ, ຄົນທີ່ມີຄວາມຢ້ານ ມັກເຫັນອັນຕະລາຍ, ມີຄວາມຫວາດລະແວງ ແລະມີການທໍລະຍົດທຸກຫົນທຸກແຫ່ງ, ເຖິງແມ່ນວ່າສິ່ງນັ້ນບໍ່ມີກໍຕາມ. ນັ້ນກໍເປັນຍ້ອນຄວາມຄິດຂອງເຂົາເອງທີ່ເຮັດໃຫ້ຫວາດລະແວງສົງໄສຢູ່ສະເໝີ, ນັ້ນຄືຄວາມຢ້ານ ແລະຄວາມກະວົນກະວາຍ. ບໍ່ມີໃຜຕັດສິນ ແລະຕິຕຽນເຂົາວ່າ ເປັນຜູ້ທີ່ເປັນຢູ່ດ້ວຍການເບິ່ງໂລກໃນແງ່ລົບ, ເຂົາເປັນຄົນທໍາລາຍຕົນເອງ. ຍິ່ງກວ່ານັ້ນ, ບຸກຄົນເຊັ່ນນັ້ນກໍມີຄວາມເປັນໄປໄດ້ ທີ່ຈະຍົກຕົນເອງອອກຈາກຈິດໃຈທີ່ເປັນຝ່າຍລົບເຊັ່ນນັ້ນ. ດ້ວຍເຫດນີ້, ອີງຕາມພຣະພຸດທະສາສະໜາ, ນະຮົກບໍ່ໄດ້ເປັນທີ່ຢູ່ນິລັນດອນ. ພວກເຮົາມີໂອກາດໃໝ່ຢູ່ສະເໝີ.

**ຄໍາຖາມ: ຖ້າເປັນເຊັ່ນນັ້ນ ພວກເຮົາກໍບໍ່ໄດ້ຖືກກໍານົດດ້ວຍກໍາ(ກັມມະ)ຂອງເຮົາ, ເຮົາສາມາດປ່ຽນແປງມັນໄດ້.**

**ຄໍາຕອບ:** ແນ່ນອນພວກເຮົາສາມາດປ່ຽນໄດ້. ນັ້ນຄືເປົ້າໝາຍທັງໝົດຂອງພຣະພຸດທະສາສະໜາ! ດ້ວຍເຫດນີ້ເອງ ໜຶ່ງໃນບາດກ້າວທໍາອິດຂອງອະລິຍະມັກມີອົງແປດ ແມ່ນ *ສັມມາວາຍະມະ* (ມີຄວາມພຽນຖືກຕ້ອງ). ມັນຂຶ້ນຢູ່ກັບວ່າ ເຮົາມີຄວາມຈິງໃຈພຽງໃດ,

ມີຄວາມພາກພຽນພຽງໃດ ແລະຄວາມຊິນເຄີຍຂອງເຮົາເຂັ້ມງວດພຽງໃດ. ແຕ່ວ່າ ມັນເປັນຈິງທີ່ບາງຄົນກໍດຳລົງຊີວິດຢູ່ພາຍໃຕ້ອິດທິພົນຂອງຄວາມຊິນເຄີຍໃນອະດີດ, ໂດຍປາສະຈາກຄວາມພາກພຽນ ທີ່ຈະປ່ຽນແປງສິ່ງນັ້ນ ແລະຍອມຕົກເປັນຜູ້ຮັບເຄາະຕໍ່ວິບາກອະກຸສົນກຳ(ອະກຸສົລກັມມະ)ນັ້ນ. ບຸກຄົນເຊັ່ນນັ້ນ ຈະສືບຕໍ່ທຸກທໍລະມານ ອີກຕໍ່ໄປ ຈົນກວ່າພວກເຂົາຈະສາມາດປ່ຽນແປງພຶດຕິກຳທີ່ບໍ່ດີຂອງຕົນ. ຍິ່ງຄວາມຊິນເຄີຍທີ່ເປັນຝ່າຍບໍ່ດີຖືກສະສົມໄວ້ນານ, ຍິ່ງຍາກຕໍ່ການປ່ຽນແປງ. ຊາວພຸດເຂົ້າໃຈ ດີໃນຈຸດນີ້ແລ້ວພະຍາຍາມທີ່ຈະຊອກໂອກາດທຸກຂະນະ ເພື່ອທຳລາຍຄວາມຊິນ ເຄີຍຂອງຈິດໃຈທີ່ອາດກໍ່ໃຫ້ເກີດຄວາມທຸກ ແລ້ວພັດທະນາຈິດ ທີ່ຈະນຳມາເຊິ່ງຄວາມສຸກ. ການຝຶກສະມາທິ ເປັນໜຶ່ງໃນວິທີທີ່ຈະປ່ຽນແປງຮູບແບບຂອງຈິດໃຈ ເນື່ອງຈາກວ່າ ມັນເປັນການ ສັງວອນລະວັງທາງວາຈາ, ການກະທຳໃນວິທີທີ່ເໝາະສົມ. ຕະຫຼອດຊີວິດຂອງຊາວພຸດຄື ການຝຶກຝົນເພື່ອຊຳລະຈິດໃຈຂອງຕົນໃຫ້ບໍລິສຸດ ແລະຫຼຸດພົ້ນ. ຕົວຢ່າງ: ຖ້າຫາກມີຄວາມພາກພຽນ ແລະຄວາມເມດຕາ ເປັນພາກສ່ວນດີເດັ່ນໃນອະດີດຊາດຂອງທ່ານ, ອຸປະນິໄສອັນນັ້ນ ກໍຈະຕິດຕົວມາ ຢູ່ໃນຊາດປັດຈຸບັນຂອງທ່ານ. ຖ້າຫາກວ່າມັນໄດ້ຖືກສົ່ງ ເສີມພັດທະນາໃນຊາດປັດຈຸບັນມັນກໍຈະມາລວມຕົວກັນຍິ່ງແຮງກ້າ ແລະໂດດເດັ່ນໃນຊາດອະນາຄົດ. ນີ້ແມ່ນຂຶ້ນຢູ່ກັບຄວາມຈິງທີ່ງ່າຍ ແລະສັງເກດເຫັນໄດ້ນັ້ນຄື ອຸປະນິໄສຂອງຄົນທີ່ສ້າງສົມມາເປັນເວລານານ ແລະຍາກຕໍ່ການໄຖ່ຖອນໄດ້.

ປັດຈຸບັນ, ຖ້າຫາກວ່າທ່ານມີຄວາມຂັນຕິທຳ(ຂັນຕິທັມມະ) ແລະໃຈເມດຕາ, ທ່ານກໍຈະບໍ່ຖືກລົບກວນໂດຍຜູ້ອື່ນຢ່າງງ່າຍດາຍ, ທ່ານກໍຈະບໍ່ເກັບຄວາມໂມໂຫເອົາໄວ້, ມີຄົນນິຍົມຊົມຊອບທ່ານ, ທ່ານກໍຈະປະສົບກັບຄວາມສຸກຍິ່ງຂຶ້ນ. ລອງເບິ່ງຕົວຢ່າງຕື່ມອີກ, ເຮົາລອງມາເວົ້າວ່າ ທ່ານໄດ້ເກີດມາດ້ວຍອຸປະນິໄສທີ່ເປັນຄົນມີຄວາມພາກພຽນ, ມີໃຈເມດຕາ ກໍເນື່ອງມາຈາກຈິດໃຈທີ່ສ້າງສົມໄວ້ໃນຊາດອະດີດ. ແຕ່ໃນຊາດປັດຈຸບັນ, ຖ້າຫາກວ່າທ່ານປ່ອຍປະລະເລີຍ ບໍ່ເພີ່ມພູນ ແລະພັດທະນາອຸປະນິໄສນັ້ນອີກ ມັນກໍຈະຄ່ອຍໆເບົາບາງລົງ ແລະສູນສິ້ນໄປເທື່ອລະເລັກລະນ້ອຍ ແລະບາງທີກໍບໍ່ມີເລີຍໃນອະນາຄົດ. ຖ້າຫາກວ່າ ຄວາມພາກພຽນ ແລະຄວາມມີເມດຕາອ່ອນແອລົງ ໃນກໍລະນີນີ້, ອາດເປັນໄປໄດ້ວ່າ ແມ່ນແຕ່ໃນຊາດນີ້ ແລະຊາດໜ້າ, ຄວາມໂມໂຫ, ຄວາມໂກດ, ຄວາມໂຫດ

ຫຼັງມອາດເພີ່ມທະວີຂຶ້ນ, ພັດທະນາໄປເລື້ອຍໆ ແລ້ວນຳມາເຊິ່ງການປະສົບກັບຄວາມທຸກອີກ.

ພວກເຮົາລອງມາເບິ່ງຕົວຢ່າງສຸດທ້າຍ. ອີງຕາມຄວາມຊິນເຄີຍຂອງຈິດໃນຊາດອະດີດ, ແລ້ວມາເກີດໃນຊາດປັດຈຸບັນ ທີ່ປະກອບດ້ວຍອຸປະນິໄສທີ່ມີຈິດໃຈຮ້ອນຮົນງ່າຍ, ໃຈຢາກຮ້າຍ ແລະທ່ານກໍຮູ້ດີວ່າ ພຶດຕິກຳແບບນັ້ນກໍ່ໃຫ້ເກີດຄວາມທຸກເທົ່ານັ້ນ. ຖ້າຫາກວ່າ ທ່ານສາມາດຫຼຸດຜ່ອນອຸປະນິໄສແບບນັ້ນໄດ້, ມັນຈະເປັນຜົນຕໍ່ອະນາຄົດປະກອບດ້ວຍຄວາມພາກພຽນຕື່ມອີກ ກໍຈະເຮັດໃຫ້ອຸປະນິໄສທີ່ເປັນຝ່າຍອະກຸສົນນັ້ນ ຖືກໄຖ່ຖອນອອກຢ່າງສິ້ນເຊີງແລະທ່ານກໍຈະເປັນອິດສະຫຼະຈາກຜົນກະທົບ ທີ່ເປັນທຸກນັ້ນໄດ້.

**ຄຳຖາມ: ມັນເປັນໄປໄດ້ບໍ ທີ່ຄົນສອງຄົນຈະມີໂອກາດໄດ້ພົບພໍ້ກັນອີກໃນອະນາຄົດກັບບຸກຄົນທີ່ທ່ານຮູ້ຈັກໃນຊາດນີ້?**

**ຄຳຕອບ:** ເປັນໄປໄດ້ແທ້. ຄັ້ງໜຶ່ງມີສຸພາບບຸລຸດຜູ້ເຖົ້າຄົນໜຶ່ງພ້ອມດ້ວຍພັນລະຍາຂອງລາວ ໄດ້ແຕ່ງງານກັນເປັນເວລາຫຼາຍປີ ເປັນຜູ້ທີ່ຮັກກັນແລະກັນຢ່າງສຸດຊຶ້ງ, ໄດ້ບອກກັບພຣະພຸດທະເຈົ້າວ່າ ເໝືອນດັ່ງທີ່ພວກເຂົາໄດ້ເປັນຂອງກັນ ແລະກັນໃນຊາດນີ້ ພວກເຂົາປາຖະໜາຢາກຢູ່ຮ່ວມກັນອີກໃນຊາດໜ້າ. ພຣະພຸດທະອົງຕັດວ່າ ຖ້າຫາກຄວາມຜູກພັນຂອງພວກເຂົາແຮງກ້າ ແລະຖ້າຫາກວ່າເຂົາມີສັດທາສະເໝີກັນ, ມີສິນສະເໝີກັນ, ມີການໃຫ້ທານສະເໝີກັນ, ຄວາມເຂົ້າໃຈເຊິ່ງກັນສະເໝີກັນ, ກໍອາດເປັນໄປໄດ້. ເມື່ອຄົນສອງຄົນມາພົບພໍ້ກັນ ກໍຈະເກີດມີຄວາມສະໜັກຮັກໄຄ່ກັນທັນທີທັນໃດ ແລ້ວກາຍເປັນຄວາມຮັກທີ່ໝັ້ນຄົງ, ມີມິດຕະພາບທີ່ສະໜິດແໜ້ນ ຫຼືມີຄວາມຮັກ, ຊາວພຸດອາດເວົ້າວ່າ ນີ້ອາດເປັນໄປໄດ້ວ່າ ພວກເຂົາອາດມີບຸບເພສັນນິວາດກັນມາແຕ່ຊາດປາງກ່ອນ. ນີ້ກໍເປັນອີກທັດສະນະທີ່ດີ ກ່ຽວກັບການກັບຊາດມາເກີດທີ່ຜູກພັນລະຫວ່າງຄົນສອງຄົນອັນຄວາມຕາຍບໍ່ອາດກັ້ນໄດ້.

**ຄຳຖາມ: ທ່ານໄດ້ເວົ້າມາຫຼາຍແລ້ວກ່ຽວກັບການເກີດໃໝ່ ແຕ່ວ່າ ມີຫຼັກຖານໃດມາພິສູດວ່າ ພວກເຮົາຈະເກີດໃໝ່ອີກເມື່ອພວກເຮົາຕາຍແລ້ວ?**

**ຄຳຕອບ:** ບໍ່ພຽງແຕ່ມີຫຼັກຖານທາງວິທະຍາສາດເທົ່ານັ້ນ ເພື່ອສະໜັບສະໜູນຄວາມເຊື່ອຂອງຊາວພຸດ ກ່ຽວກັບການເກີດໃໝ່ນີ້, ມັນເປັນພຽງທິດສະດີຫຼັງຄວາມຕາຍທີ່

ມີຫຼັກຖານມາສະໜັບສະໜຸນ. ຍັງມີຫຼັກຖານບໍ່ໜ້ອຍເພື່ອພິສູດວ່າ ສະຫວັນມີຢູ່ຈິງ ແລະແນ່ນອນ ຫຼັກຖານກ່ຽວກັບການຕາຍແລ້ວສູນນັ້ນແມ່ນຫາຍາກ. ແຕ່ວ່າໃນໄລຍະ ໓໐ ປີຜ່ານມາ, ມີນັກຈິດຕະວິທະຍາທີ່ຄົ້ນຄວ້າກ່ຽວກັບເລື່ອງຄວາມສາມາດພິເສດຂອງຈິດ (parapsychology)[5] ເຊັ່ນການລະລຶກຊາດໄດ້ ການສົ່ງກະແສຈິດເປັນຕົ້ນ, ໄດ້ສຶກສາວິໄຈວ່າ ມີບາງຄົນມີຄວາມຈຳທີ່ດີກ່ຽວກັບຊາດອະດີດຂອງພວກເຂົາ. ຕົວຢ່າງ, ໃນປະເທດອັງກິດ, ເດັກນ້ອຍຜູ້ຍິງໄວອາຍຸ ໕ ປີບອກວ່າ ນາງສາມາດຈື່ຈຳພໍ່ ແລະແມ່ໃນຊາດອະດີດຂອງຕົນ ແລະນາງສາມາດເວົ້າຢ່າງແຈ່ມແຈ້ງ ກ່ຽວກັບເຫດການໃນຊີວິດຂອງຄົນອີກຜູ້ໜຶ່ງ. ບັນດານັກປະຣະຈິດຕະວິທະຍາ(Parapsychologists) ກໍໄດ້ຮຽກຕົວມາຖາມຮ້ອຍກວ່າຄຳຖາມ ເຊິ່ງຜູ້ຍິງຄົນ ນັ້ນກໍສາມາດຕອບໄດ້. ນາງໄດ້ເວົ້າກ່ຽວກັບການດຳລົງຊີວິດຢູ່ໃນບ້ານແຫ່ງໜຶ່ງ ເໝືອນວ່າຈະແມ່ນປະເທດສະເປນ, ນາງໄດ້ບອກຊື່ບ້ານນັ້ນ, ຊື່ຖະໜົນບ່ອນທີ່ນາງອາໄສຢູ່, ຊື່ເພື່ອນບ້ານ ແລະລາຍລະອຽດກ່ຽວກັບກິດຈະກຳປະຈຳວັນທີ່ນາງໄດ້ຢູ່ທີ່ນັ້ນ. ນາງຍັງໄດ້ເລົ່າເລື່ອງຢ່າງໂສກເສົ້ານ້ຳຕາໄຫຼ ຕໍ່ເຫດການທີ່ນາງໄດ້ຕິດຢູ່ໃນລົດ ແລະເສຍຊີວິດຍ້ອນໄດ້ຮັບບາດເຈັບໃນສອງວັນຕໍ່ມາ. ເມື່ອລາຍລະອຽດດັ່ງກ່າວຖືກກວດສອບ ກໍປະກົດວ່າຖືກຕ້ອງຊັດເຈນທຸກປະການ. ມີບ້ານແຫ່ງໜຶ່ງໃນປະເທດສະເປນ ມີຊື່ຕາມທີ່ເດັກນ້ອຍຍິງຄົນນັ້ນໄດ້ບອກໄວ້, ມີເຮືອນຫຼັງໜຶ່ງ ເປັນປະເພດເຮືອນຕາມທີ່ນາງໄດ້ໃຫ້ລາຍລະອຽດໄວ້ ຕັ້ງຢູ່ຖະໜົນທີ່ໄດ້ບອກຊື່ເອົາໄວ້. ຍິ່ງກວ່ານັ້ນ, ຍັງໄດ້ພົບວ່າມີຜູ້ຍິງຄົນໜຶ່ງ ອາຍຸ ໔໓ ປີ ທີ່ເຄີຍອາໄສຢູ່ໃນເຮືອນຫຼັງນັ້ນ ໄດ້ເສຍຊີວິດຍ້ອນລົດເກີດອຸບັດຕິເຫດເມື່ອ ໕ ປີກ່ອນ. ຕໍ່ເຫດການນີ້, ມັນເປັນໄປໄດ້ຢ່າງໃດ ທີ່ເດັກນ້ອຍຍິງມີອາຍຸພຽງ ໕ ປີ ຢູ່ປະເທດອັງກິດ ແລະຜູ້ບໍ່ເຄີຍໄປປະເທດສະເປນຈັກເທື່ອ ຈຶ່ງຮູ້ລາຍລະອຽດກ່ຽວກັບເລື່ອງນີ້? ແນ່ນອນ, ນີ້ບໍ່ມີພຽງຕົວຢ່າງດຽວເທົ່ານັ້ນກ່ຽວກັບກໍລະນີແບບນີ້. ສາດສະດາຈານ ອຽນ ສະຕີບເວັນສັນ Professor Ian Stevenson ອາຈານສອນມະຫາວິທະຍາໄລເວີຈິເນຍ ພະແນກຈິດຕະວິທະຍາ

---

[5] Parapsychology *ປະຣະຈິດຕະວິທະຍາ* ຫຼື *ຍານະວິທະຍາ* ເປັນຈິຕຕະວິທະຍາ ກ່ຽວກັບຄວາມລຶກ ລັບຂອງຈິດຄວາມສາມາດພິເສດຂອງຈິດ ທີ່ສາມາດຢັ່ງຮູ້ເຫດການລວ່ງໜ້າ, ລະລຶກຊາດອະດີດໄດ້ ແລະອື່ນໆອີກ. ໃນທາງພຸດທະສາສະໜາ ຖ້າກ່ຽວກັບຄວາມສາມາດພິເສດແບບນີ້ ສວ່ນໃຫຍ່ເກີດ ຈາກການຈະເຣີນວິປັດສະນາກັມມະຖານແຕ່ການລະນຶກຊາດໄດ້ແບບພິເສດນັ້ນ ແມ່ນເກີດຈາກຜົນ ບຸນໃນຊາດອະດີດ ຫຼືບໍ່ກໍເກີດມີຄວາມປະທັບໃຈພິເສດໃດໜຶ່ງກ່ອນຕາຍ.

(University of Virginia's Department of Psychology)ໄດ້ອະທິບາຍລາຍລະອຽດຫຼາຍກໍລະນີກ່ຽວກັບເລື່ອງນີ້ໄວ້ໃນປຶ້ມຂອງລາວ. ທ່ານເປັນນັກວິທະຍາສາດ ທີ່ໜ້າເຊື່ອຖືໄດ້ຜູ້ໜຶ່ງ ທີ່ໄດ້ໃຊ້ເວລາ ໔໕ ປີ ໃນການສຶກສາຄົ້ນຄວ້າກ່ຽວກັບບຸກຄົນ ຜູ້ທີ່ລະນຶກຊາດໄດ້, ນີ້ເປັນຫຼັກຖານທີ່ໜັກແໜ້ນສຳລັບຄຳສອນໃນທາງພຣະພຸດທະສາສະໜາກ່ຽວກັບການເກີດໃໝ່*.

**ຄຳຖາມ: ບາງຄົນອາດເວົ້າວ່າ ຄວາມສາມາດໃນການລະນຶກຊາດໄດ້ ແມ່ນເປັນຜົນງານຂອງປີສາດ.**

**ຄຳຕອບ:** ທ່ານບໍ່ສາມາດປະຕິເສດທຸກຢ່າງໄດ້ແບບງ່າຍດາຍໃນສິ່ງທີ່ບໍ່ເຂົ້າກັບຄວາມເຊື່ອຂອງທ່ານວ່າ ເປັນຜົນງານຂອງປີສາດ. ເມື່ອຄວາມຈິງທີ່ຫາໄດ້ຍາກ ຖືກສ້າງຂຶ້ນມາເພື່ອສະໜັບສະໜຸນຄວາມຄິດນັ້ນ, ທ່ານກໍຄວນຈະໃຊ້ການໂຕ້ຕອບຢ່າງມີເຫດຜົນ ແລະມີຕັກກະ ຖ້າທ່ານປາຖະໜາຈະໂຕ້ຕອບປາໄສ ບໍ່ແມ່ນເວົ້າແບບໄຮ້ເຫດຜົນ ແລ້ວເຊື່ອຖືງົມງວາຍກ່ຽວກັບປີສາດແບບນັ້ນ.

**ຄຳຖາມ: ທ່ານອາດເວົ້າໄດ້ວ່າ ການເວົ້າກ່ຽວກັບການເກີດໃໝ່ຊ້ອນຊ້າງ ຈະເປັນການເຊື່ອຖືແບບງົມງວາຍເຊັ່ນກັນ.**

**ຄຳຕອບ:** ພົດຈະນານຸກົມ ໄດ້ໃຫ້ນິຍາມຂອງຄຳວ່າ *ເຊື່ອຖືແບບງົມງວາຍ* superstition ວ່າເປັນຄວາມເຊື່ອຖື ທີ່ບໍ່ອີງອາໄສເຫດຜົນ ຫຼືຫຼັກຄວາມຈິງ ພຽງແຕ່ປະກອບດ້ວຍຄວາມ ເຫັນ, ເຊັ່ນເລື່ອງເວດມົນ "a belief which is not based on reason or fact but on association of ideas, as in magic." ຖ້າທ່ານສາມາດສະແດງການສຶກສາຢ່າງລະອຽດ ກ່ຽວກັບຄວາມມີຢູ່ຂອງປີສາດ ທີ່ຖືກຂຽນບັນທຶກໄວ້ໂດຍນັກວິທະຍາສາດ ຂ້າພະເຈົ້າ ກໍຈະຍອມຮັບຄວາມຈິງວ່າ ຄວາມເຊື່ອກ່ຽວກັບປີສາດບໍ່ແມ່ນເລື່ອງງົມງວາຍ. ແຕ່ຂ້າພະເຈົ້າບໍ່ເຄີຍໄດ້ຍິນການວິໄຈໃດໆກ່ຽວກັບປີສາດ; ນັກວິທະຍາສາດຄົງຈະບໍ່ຫຍຸ້ງຍາກໃນ ການຄົ້ນຄວ້າກ່ຽວກັບສິ່ງນີ້. ດັ່ງນັ້ນ, ຂ້າພະເຈົ້າວ່າ ບໍ່ມີຫຼັກຖານກ່ຽວກັບການມີຢູ່ຂອງປີສາດ. ແຕ່ວ່າ, ດັ່ງທີ່ພວກເຮົາເຫັນນຳກັນແລ້ວ, ຫຼັກຖານທີ່ແນະນຳ

---

* See Twenty Cases Suggestive of Reincarnation and Cases of Reincarnation Type, University Press of Virginia, Charlotteville, 1975. ແນະນຳໃຫ້ໄປເບິ່ງ 20 ກໍລະນີຂອງການກັບຊາດມາເກີດແລະປະເພດຂອງການກັບຊາດມາເກີດ, ສຳນັກພິມມະຫາວິທະຍາໄລເວີຈີເນຍ,ຊາລອດທ໌ວີລ, 1975.

ກ່ຽວກັບການເກີດ ໃໝ່ນັ້ນແມ່ນມີ. ຖ້າຫາກວ່າ ຄວາມເຊື່ອກ່ຽວກັບການເກີດໃໝ່ ຢ່າງນ້ອຍກໍອ້າງອີງເຖິງຂໍ້ມູນຄວາມຈິງແນ່, ມັນກໍບໍ່ແມ່ນການເຊື່ອ ຖືແບບງົມງວາຍອີກແລ້ວ.

**ຄຳຖາມ: ມີນັກວິທະຍາສາດຄົນໃດແນ່ທີ່ເຊື່ອກ່ຽວກັບການກັບຊາດມາເກີດ?**

**ຄຳຕອບ:** ມີແທ້. ໂທມັສ ຮູກສ໌ເວຍ໌ Thomas Huxley ຜູ້ທີ່ມີຄວາມຮັບຜິດຊອບນຳສະເໜີເອົາວິທະຍາສາດເຂົ້າໃນລະບົບໂຮງຮຽນຂອງອັງກິດໃນສະຕະວັດທີ ໑໙ ທັງເປັນນັກວິທະຍາສາດຄົນທຳອິດ ທີ່ຮັບປະກັນທິດສະດີຂອງດາຣ໌ວິນ Darwin's theories, ເຊື່ອວ່າ ການກັບຊາດມາເກີດເປັນຄວາມຄິດທີ່ເປັນໄປໄດ້. ໃນປຶ້ມທີ່ໄດ້ຮັບຄວາມນິຍົມຂອງລາວເຫຼັ້ມໜຶ່ງຊື່ວ່າ *ການວິວັດທະນາການ ແລະຫຼັກສີລະທຳ(ສີລະທັມມະ)* Evolution and Ethics ແລະບົດຄວາມອື່ນໆອີກ, ທ່ານກ່າວວ່າ:

*"ກ່ຽວກັບທິດສະດີຂອງການເກີດໃໝ່, ບໍ່ວ່າຕົ້ນກຳເນີດມັນມາແຕ່ໃສ, ໃນຫຼັກປັດຊະຍາ (ປຣັຊຍາ)ຂອງສາສະໜາພາມ ແລະພຸດປາກົດວ່າມີຢູ່, ພ້ອມທີ່ຈະພິສູດໄດ້, ຂະບວນການຂອງການສ້າງການພິສູດທີ່ເປັນໄປໄດ້ໃນຫຼາຍວິທີທາງຂອງຈັກກະວານສູ່ມະນຸດ...ແຕ່ຂໍ້ຕັດສິນອັນນີ້ ກໍມີທາງເປັນໄປໄດ້ບໍ່ນ້ອຍໄປກວ່າສິ່ງອື່ນໃດ; ຫຼືບໍ່ມີຂໍ້ພິສູດໃດດີກວ່ານີ້ ແຕ່ນັກຄິດຜູ້ຮີບຮ້ອນກໍຟ້າວປະຕິເສດ ບົນພື້ນຖານຂອງຄວາມໄຮ້ເຫດຜົນ. ເຊັ່ນດຽວກັບທິດສະດີຂອງການວິວັດທະນາການເອງ, ທີ່ວ່າການຖ່າຍທອດມີຕົ້ນກຳເນີດມາໃນໂລກແຫ່ງຄວາມເປັນຈິງ; ມັນອາດຢືນຢັນໄດ້ວ່າ ຂໍ້ສະໜັບສະໜູນນັ້ນ ເປັນຫຼັກເຫດຜົນສຳຄັນຈາກການປຽບທຽບກັນກໍສາມາດໃຊ້ການໄດ້."*

ສາດສະດາຈານ ກຸສຕາຟ ສະຕຣອມເບີກ Professor Gustaf Stromberg, ນັກດາລາສາດ(ດາຣາສາສຕຣະ)ຊື່ດັ່ງຊາວສະວີດ, ທັງເປັນນັກຟີຊິກ ແລະເປັນເພື່ອນຂອງໄອສໄຕນ໌ Einstein ກໍເຫັນວ່າ ທິດສະດີກ່ຽວກັບການກັບຊາດມາເກີດເປັນທີ່ໜ້າສົນໃຈ.

"*ມີຫຼາຍຄວາມຄິດເຫັນທີ່ວ່າ ວິນຍານຂອງມະນຸດ ສາມາດກັບຊາດມາເກີດໄດ້ຫຼືບໍ່. ໃນປີ ໑໙໓໖ ມີກໍລະນີທີ່ໜ້າສົນໃຈໜຶ່ງ ເຊິ່ງໄດ້ຮັບການກວດກາຢ່າງລະອຽດ ແລະລາຍງານໂດຍອຳນາດການປົກຄອງຂອງລັດຖະບານໃນປະເທດອິນເດຍ. ຜູ້ຍິງຄົນໜຶ່ງ (ສັນຕິເທວີຈາກເມືອງເດລີ) ສາມາດອະທິບາຍກ່ຽວກັບຊາດກ່ອນຂອງນາງໄດ້ຢ່າງຖືກຕ້ອງ*

*(ທີ່ເມືອງມຸດຕຣະ,ຫ້າຮ້ອຍໄມລ໌ຈາກເມືອງເດລີ)ເຊິ່ງໄດ້ ຕາຍປະມານໜຶ່ງປີກ່ອນ "ການເກີດຄັ້ງທີສອງຂອງນາງ". ນາງໄດ້ບອກຊື່ຂອງສາມີ ແລະລູກ, ໄດ້ອະທິບາຍກ່ຽວກັບບ້ານ ແລະປະຫວັດຊີວິດຂອງຕົນ. ພາລະກິດການສືບສວນໄດ້ນຳພາໃຫ້ນາງໄດ້ພົບກັບຍາດພີ່ນ້ອງໃນຊາດອະດີດ, ຜູ້ທີ່ຢືນຢັນທຸກຄຳເວົ້າຂອງນາງ. ໃນບັນດາຄົນອິນເດຍ, ການກັບຊາດມາເກີດ ເປັນເລື່ອງທີ່ເກີດຂຶ້ນເລື້ອຍ ແລະມີຢູ່ທົ່ວໄປ; ສິ່ງທີ່ເປັນເລື່ອງແປກສຳລັບພວກເຂົາ ໃນກໍລະນີນີ້ຄືການທີ່ນາງ ສາມາດຈົດຈຳຂໍ້ມູນໄດ້ຫຼາຍຢ່າງ. ນີ້ກໍເປັນກໍລະນີໜຶ່ງ ແລະເປັນກໍລະນີຄ້າຍກັບອາດຖືໄດ້ວ່າ ເປັນຫຼັກຖານເພີ່ມເຕີມສຳລັບທິດສະດີຂອງຄວາມຈຳທີ່ບໍ່ອາດຖືກທຳລາຍໄດ້ the theory of indestructibility of memory."*

ສາດສະດາຈານ ຈູລຽນ ຮຸກສ໌ເລຍ໌ Professor Julian Huxley, ນັກວິທະຍາສາດ ທີ່ມີຊື່ສຽງຂອງອັງກິດ, ຜູ້ອຳນວຍການໃຫຍ່ຂອງອົງການຢູເນສະໂກ ເຊື່ອວ່າ ການກັບຊາດມາເກີດຂ້ອນຂ້າງຈະເຂົ້າກັນກັບຄວາມຄິດທາງວິທະຍາສາດ.

" *ບໍ່ມີສິ່ງໃດຂັດແຍ້ງຕໍ່ການຢູ່ລອດ ຂອງວິນຍານປັດເຈກບຸກຄົນໃນກໍລະນີໃດໜຶ່ງທີ່ອອກມາໃນເວລາຕາຍ,ເໝືອນກັບຂໍ້ຄວາມທີ່ໄຮ້ສາຍທີ່ຖືກສົ່ງອອກດ້ວຍເຄື່ອງອຸປະກອນ ການສົ່ງເດີນໄປຕາມທິດທາງໃດໜຶ່ງ. ແຕ່ຄວນຈົດຈຳເອົາໄວ້ວ່າ ຂໍ້ມູນທີ່ໃຊ້ລະບົບໄຮ້ສາຍຈະກາຍເປັນຂໍ້ຄວາມອີກຄັ້ງໜຶ່ງ ກໍຕໍ່ເມື່ອມັນສຳຜັດກັບສິ່ງໃໝ່, ໂຄງສ້າງຂອງອຸປະກອນໃດໜຶ່ງ, ນັ້ນຄືເຄື່ອງຮັບ. ມັນອາດຈະບໍ່ເຄີຍຄິດ ຫຼືຮູ້ສຶກ ເວັ້ນເສຍແຕ່ມັນຈະສະແດງອອກມາໃນວິທີໃດໜຶ່ງ. ນິໄສ ຫຼືບຸກຄະລິກຂອງເຮົາ ຂຶ້ນຢູ່ກັບຮ່າງກາຍເຊິ່ງບໍ່ອາດເປັນໄປໄດ້ ທີ່ຈະຄິດກ່ຽວກັບການຢູ່ລອດ ອາດມີໃນແຕ່ລະຄວາມໝາຍທີ່ແທ້ຈິງຂອງສວ່ນບຸກຄົນ ໂດຍປາສະຈາກຮ່າງກາຍນັ້ນ...ຂ້າພະເຈົ້າຄິດກ່ຽວກັບສິ່ງທີ່ສົ່ງອອກມາ ທີ່ອາດຮອງຮັບການພົວພັນລະຫວ່າງຜູ້ຊາຍ ແລະຜູ້ຍິງເປັນເໝືອນຂໍ້ຄວາມໄຮ້ສາຍສູ່ອຸປະກອນສົ່ງຜ່ານ; ແຕ່ໃນກໍລະນີເຊັ່ນນັ້ນ "ຄົນຕາຍ" ອາດເຮັດໄດ້, ຜ່ານມາດັ່ງທີ່ພວກເຮົາເຫັນ, ກໍບໍ່ມີຫຍັງເລີຍນອກເໜືອຈາກການລົບກວນຂອງການລ່ອງລອຍທີ່ໄຮ້ຈຸດໝາຍຂອງປະເພດວິນຍານທີ່ໄຮ້ຈຸດໝາຍຜ່ານຈັກກະວານນີ້ຈົນກວ່າ ພວກເຂົາ...ກັບມາສູ່ຄວາມເປັນຈິງຂອງວິນຍານໂດຍການສຳຜັດກັບ ບາງຢ່າງທີ່ພົວພັນໄດ້ເປັນອຸປະກອນເຄື່ອງຮັບສຳລັບຈິດ"*

ມີຫຼາຍຄົນຜູ້ທີ່ເອົາຈິງເອົາຈັງ ເປັນຄົນລຽບງ່າຍເຊັ່ນນັກອຸດສາຫະກຳຄົນອາເມຣິກັນ ເຮນດຣີ ຟອດ Henry Ford ເຫັນວ່າຄວາມຄິດ ຫຼືການກັບຊາດມາເກີດ ເປັນທີ່ຍອມຮັບໄດ້. ຟອດ ສົນໃຈໃນຄວາມເຊື່ອນີ້ ກໍຍ້ອນວ່າມັນໄດ້ໃຫ້ທຸກຄົນມີໂອກາດຄັ້ງທີສອງທີ່ຈະພັດທະນາຕົນເອງ. ເຮນດຣີ ຟອດ ກ່າວວ່າ:

*" ຂ້າພະເຈົ້າຍອມຮັບທິດສະດີຂອງການກັບຊາດມາເກີດ ເມື່ອຂ້າພະເຈົ້າອາຍຸ ໒໖ ປີ...ສາສະໜາບໍ່ໄດ້ໃຫ້ຫຍັງກ່ຽວກັບຈຸດນີ້...ແມ່ນແຕ່ການງານກໍບໍ່ໄດ້ເຮັດໃຫ້ຂ້າພະເຈົ້າມີຄວາມພໍໃຈຢ່າງສົມບູນແບບ. ການທຳງານກໍບໍ່ເກີດປະໂຫຍດຫຍັງຫຼາຍ ຖ້າຫາກວ່າເຮົາບໍ່ຮູ້ນຳໃຊ້ປະສົບການ ທີ່ສ້າງສົມໄວ້ໃນຊີວິດໃນໂອກາດໜ້າ. ເມື່ອຂ້າພະເຈົ້າຄົ້ນພົບທິດສະດີກ່ຽວກັບການກັບຊາດມາເກີດ ເໝືອນກັບວ່າ ຂ້າພະເຈົ້າໄດ້ພົບແຜນການຂອງຈັກກະວານ. ຂ້າພະເຈົ້າຮູ້ວ່າ ຈະມີໂອກາດນຳໃຊ້ຄວາມຄິດຂອງຕົນໃຫ້ເກີດເປັນຮູບປະທຳ. ການເວລາຈະບໍ່ມີຂອບເຂດຈຳກັດອີກຕໍ່ໄປ. ຂ້າພະເຈົ້າ ຈະບໍ່ຕົກເປັນທາດຂອງເຂັມໂມງອີກຕໍ່ໄປ...ຄວາມອັດສະລິຍະຄືປະສົບການ. ບາງຄົນຄິດວ່າມັນເປັນຂອງຂວັນ ແລະເປັນຄວາມສາມາດພິເສດ, ແຕ່ທີ່ຈິງແລ້ວ ມັນຄືໝາກຜົນປະສົບການ ທີ່ໄດ້ສັ່ງສົມມານານໃນຫຼາຍຊາດ. ບາງຄົນກໍອາວຸໂສກວ່າຄົນອື່ນ, ດ້ວຍເຫດນີ້ພວກເຂົາຈຶ່ງຮູ້ກວ່າຄົນອື່ນ...ການຄົ້ນພົບກ່ຽວກັບການກັບຊາດມາເກີດເຮັດໃຫ້ຂ້າພະເຈົ້າຮູ້ສຶກຜ່ອນຄາຍ...ຖ້າຫາກທ່ານສາມາດຮັກສາການບັນທຶກກ່ຽວກັບການສົນທະນານີ້, ຂຽນບັນທຶກເອົາໄວ້ ແລ້ວບັນທຶກໄວ້ ໃນຈິດໃຈຂອງມະນຸດຢ່າງສະບາຍ. ຂ້າພະເຈົ້າຢາກຈະສື່ສານກັບຄົນອື່ນດ້ວຍຄວາມສະຫງົບ ດ້ວຍຄວາມຄິດເຫັນທີ່ມີມານານຂອງຊີວິດທີ່ມອບໃຫ້ພວກເຮົາ".*

ດ້ວຍເຫດນີ້, ຄຳສອນທາງພຣະພຸດທະສາສະໜາກ່ຽວກັບການກັບຊາດມາເກີດ ຈຶ່ງມີພື້ນຖານທາງວິທະຍາສາດ, ມັນມີເຫດຜົນທີ່ໜ້າເຊື່ອຖືໄດ້ ແລະພ້ອມທີ່ຈະຕອບຄຳຖາມທີ່ສຳຄັນກ່ຽວກັບຈຸດໝາຍປາຍທາງຂອງມະນຸດ. ແຕ່ກໍເປັນ ເລື່ອງທີ່ງ່າຍດາຍເຊັ່ນກັນ. ອີງຕາມພຣະພຸດທະເຈົ້າ, ຖ້າຫາກທ່ານພາດໂອກາດ ທີ່ຈະບັນລຸນິບພານໃນຊາດນີ້, ທ່ານກໍມີໂອກາດທີ່ຈະພະຍາຍາມອີກໃນຊາດໜ້າ. ຖ້າຫາກວ່າທ່ານກະທຳຜິດພາດໃນຊາດນີ້, ທ່ານກໍມີໂອກາດປັບປຸງຕົນເອງໃນຊາດໜ້າ. ທ່ານຈະສາມາດຮຽນຮູ້ຈາກຄວາມ

ຜິດພາດຂອງທ່ານ. ສິ່ງໃດທີ່ທ່ານບໍ່ສາມາດເຮັດໄດ້ ແລະບໍ່ປະສົບຜົນສໍາເລັດ ໃນຊາດນີ້ ອາດຈະເປັນໄປໄດ້ໃນຊາດໜ້າ. ມັນຊ່າງເປັນຄໍາສອນທີ່ປະເສີດແທ້!

**ຄໍາຖາມ: ສິ່ງທັງຫຼາຍທີ່ທ່ານໄດ້ກ່າວມານັ້ນ ເປັນຕາໜ້າພໍໃຈຢ່າງຊານສະຫຼາດຫຼາຍ ແຕ່ ຂ້ານ້ອຍຍອມຮັບວ່າ ຂ້ານ້ອຍຍັງມີຄວາມສົງໄສກ່ຽວກັບການເກີດໃໝ່ຢູ່.**

**ຄໍາຕອບ:** ກໍບໍ່ເປັນຫຍັງ. ພຣະພຸດທະສາສະໜາ ບໍ່ແມ່ນສາສະໜາປະເພດທີ່ວ່າ ທ່ານຈະຕ້ອງລົງທະບຽນ ແລະອຸທິດຕົນເຊື່ອທຸກຢ່າງທີ່ສອນ. ມັນຈະເປັນແນວໃດ ຖ້າຫາກວ່າທ່ານບັງຄັບຕົນເອງ ເພື່ອເຊື່ອໃນສິ່ງທີ່ທ່ານບໍ່ສາມາດເຊື່ອໄດ້. ທ່ານຍັງມີເວລາທົດລອງປະຕິບັດສິ່ງນັ້ນ ທີ່ເຫັນວ່າເປັນປະໂຫຍດ, ແລ້ວຈິ່ງຍອມຮັບໃນຄວາມເຊື່ອນັ້ນ ເມື່ອທ່ານເຂົ້າໃຈ ແລະໄດ້ຮັບປະໂຫຍດຈາກການປະຕິບັດ ໂດຍບໍ່ຕ້ອງເຊື່ອໃນເລື່ອງການກັບຊາດມາເກີດ. ໃຜຊິຮູ້ໄດ້! ອາດມີເວລາໃດໜຶ່ງ ທີ່ທ່ານອາດເຂົ້າໃຈໃນສັດຈະທໍາ (ສັຈຈະທັມມະ)ຂອງການກັບຊາດມາເກີດກໍເປັນໄດ້.



# ຜ. ການຝຶກສະມາທິ



ທີ່ວັດພູສຳລີ ເມືອງໂພນທອງ ແຂວງຈຳປາສັກ *ຖ່າຍພາບໂດຍ ຄູບາ ຈອນນີ ຈັນທະວົງສີ*

**ຄຳຖາມ: ສະມາທິແມ່ນຫຍັງ?**

**ຄຳຕອບ:** ການຝຶກສະມາທິແມ່ນຄວາມພຽນທາງຈິດ(ຈິຕຕະ)ເພື່ອປ່ຽນແປງຂະບວນການທຳງານຂອງຈິດ. ຄຳສັບພາສາບາລີສຳລັບ *ການຝຶກສະມາທິ* ແມ່ນ *ພາວະນາ* ເຊິ່ງໝາຍຄວາມວ່າ "ການເຮັດໃຫ້ຈະເລີນ" ຫຼື "ພັດທະນາ".

**ຄຳຖາມ: ການຝຶກສະມາທິ ມີຄວາມສຳຄັນບໍ?**

**ຄຳຖາມ:** ສຳຄັນແທ້. ບໍ່ວ່າພວກເຮົາຈະປາຖະໜາຢາກເປັນຄົນດີຫຼາຍປານໃດກໍຕາມ, ຖ້າຫາກວ່າ ພວກເຮົາບໍ່ສາມາດປ່ຽນແປງຕັນຫາ ທີ່ເຮັດໃຫ້ເຮົາສະແດງທາດແທ້ພຶດຕິກຳອອກມາ, ການປ່ຽນແປງນັ້ນກໍຍາກ. ຕົວຢ່າງ, ບຸກຄົນໃດໜຶ່ງ ອາດຮູ້ວ່າລາວເປັນຄົນໃນໂຫງ່າຍຕໍ່ເມຍຂອງລາວ ແລະລາວອາດໃຫ້ສັນຍາຕົນເອງວ່າ: "ແຕ່ນີ້ຕໍ່ໄປຂ້ອຍຈະບໍ່ເປັນຄົນໃນໂທອີກ". ແຕ່ໜຶ່ງຊົ່ວໂມງຕໍ່ມາ ລາວອາດຮ້ອງໃສ່ເມຍຂອງລາວຄືເກົ່າອີກຍ້ອນວ່າ ລາວບໍ່ມີສະຕິຄວບຄຸມຕົນເອງ, ຄວາມໃນໂທ ກໍເກີດຂຶ້ນອີກໂດຍທີ່ລາວບໍ່ຮູ້ຕົວ. ການຝຶກສະມາທິ ສາມາດຊ່ວຍໃຫ້ພັດທະນາສະຕິ ແລະພະລັງງານທີ່ຕ້ອງການເພື່ອປ່ຽນແປງອະນຸໄສທີ່ຝັງດອງໃນສັນດານ.

**ຄໍາຖາມ: ຂ້ານ້ອຍເຄີຍໄດ້ຍິນວ່າ ການຝຶກສະມາທິອາດເປັນອັນຕະລາຍໄດ້. ແມ່ນຄວາມຈິງບໍ?**

**ຄໍາຕອບ:** ເພື່ອດໍາລົງຊີວິດຢູ່ ພວກເຮົາຕ້ອງການເກືອ. ແຕ່ຖ້າຫາກວ່າ ຖ້າທ່ານຈະຕ້ອງກິນເກືອໃນປະລິມານໜຶ່ງກິໂລ ມັນອາດຈະຂ້າທ່ານກໍໄດ້. ເພື່ອດໍາເນີນຊີວິດຢູ່ໃນໂລກສະໄໝໃໝ່ນີ້ ທ່ານຕ້ອງການມີລົດຂີ່ ແຕ່ຖ້າທ່ານບໍ່ເຄົາລົບໃນກົດຈະລາຈອນ ຫຼື ຖ້າທ່ານຂັບລົດໃນຕອນເມົາເຫຼົ້າ, ລົດກໍອາດເປັນເຄື່ອງຍົນທີ່ອັນຕະລາຍສໍາລັບທ່ານ. ການຝຶກສະມາທິກໍເຊັ່ນດຽວກັນ, ມັນສໍາຄັນ ແລະຈໍາເປັນຕໍ່ສຸຂະພາບຈິດໃຈ ແລະຄວາມເປັນຢູ່ທີ່ດີ ແຕ່ຖ້າທ່ານຝຶກໃນທາງທີ່ບໍ່ຖືກຕ້ອງ, ມັນກໍອາດຈະເກີດບັນຫາໄດ້. ບາງຄົນມີບັນຫາເຊັ່ນ ໂລກຊຶມເສົ້າ, ໂລກຄວາມຢ້ານທີ່ບໍ່ມີເຫດຜົນ schizophrenia, ພວກເຂົາຄິດວ່າ ການຝຶກສະມາທິ ແມ່ນການຮັກສາຢ່າງທັນໃຈຕໍ່ບັນຫາຂອງພວກເຂົາ, ພວກເຂົາກໍເລີ່ມຝຶກສະມາທິ ແລະບາງຄັ້ງກໍຍິ່ງເຮັດໃຫ້ບັນຫາຂອງພວກເຂົາຍິ່ງຮຸນຮ້າຍກວ່າເກົ່າ. ຖ້າທ່ານເປັນເຊັ່ນນັ້ນ ທ່ານກໍຄວນສະແຫວງຫາຄວາມຊ່ວຍເຫຼືອຈາກມືອາຊີບ ແລະຫຼັງຈາກທີ່ທ່ານດີຂຶ້ນ ແລ້ວຈຶ່ງຄ່ອຍຝຶກສະມາທິ. ມີບາງຄົນຢາກຝຶກໄດ້ໄວໂພດ, ເມື່ອຝຶກສະມາທິ ແທນທີ່ຈະຝຶກເທື່ອລະນ້ອຍຕາມຂັ້ນຕອນ, ພວກເຂົາກໍຝຶກດ້ວຍການໃຊ້ພະລັງງານຫຼາຍໂພດ ຫຼືຝຶກເປັນເວລານານ ແລະບໍ່ນານກໍຈະເຮັດໃຫ້ເມື່ອຍລ້າ. ແຕ່ບາງທີ ບັນຫາສ່ວນໃຫຍ່ທີ່ເກີດຈາກການຝຶກສະມາທິ ແມ່ນເນື່ອງມາຈາກ “ການຝຶກສະມາທິແບບໜູຖົງ kangaroo meditation”. ບາງຄົນໄປຮຽນນໍາອາຈານຜູ້ໜຶ່ງ ແລ້ວຝຶກສະມາທິນໍາເພິ່ນໃນໄລຍະໜຶ່ງ ແລ້ວກໍອ່ານປຶ້ມ ແລະພະຍາຍາມລອງຝຶກສະມາທິແບບວິທີນັ້ນດ້ວຍຕົນເອງ. ໜຶ່ງອາທິດຕໍ່ມາ ມີອາຈານສອນວິປັດສະນາ(ວິປັສສະນາ)ທີ່ມີຊື່ສຽງຄົນໜຶ່ງໄດ້ມາຢ້ຽມຢາມເມືອງຂອງພວກເຂົາ. ດັ່ງນັ້ນ, ພວກເຂົາຈຶ່ງໄດ້ປະສົມປະສານກັນລະຫວ່າງຄໍາສອນຂອງອາຈານຜູ້ນັ້ນ ກັບການປະຕິບັດຂອງພວກເຂົາ, ຕໍ່ມາບໍ່ດົນພວກເຂົາກໍສັບສົນຢ່າງໜ້າສົງສານ. ເມື່ອເຕັ້ນໄປເຕັ້ນມາຄືກັນກັບໜູຖົງແນວນັ້ນ ຈາກອາຈານຜູ້ໜຶ່ງໄປສູ່ອາຈານອີກຜູ້ໜຶ່ງ ຫຼືຈາກວິທີປະຕິບັດອີກແບບໜຶ່ງ ໄປສູ່ແບບອື່ນອີກ ແມ່ນເປັນສິ່ງຜິດພາດ. ແຕ່ຖ້າຫາກວ່າ ທ່ານບໍ່ມີບັນຫາທາງດ້ານຈິດໃຈຢ່າງຮຸນແຮງ ແລະຝຶກສະມາທິຢ່າງເອົາໃຈໃສ່ ມັນກໍເປັນໜຶ່ງໃນສິ່ງທີ່ດີທີ່ສຸດ ທີ່ທ່ານຄວນປະຕິບັດເພື່ອຕົວທ່ານເອງ.

**ຄຳຖາມ: ການຝຶກສະມາທິ ມີຈັກປະເພດ?**

**ຄຳຕອບ:** ພຣະພຸດທະເຈົ້າໄດ້ສອນວິທີການຝຶກສະມາທິໄວ້ຫຼາຍປະເພດ, ແຕ່ລະປະເພດແມ່ນເພື່ອມີໄວ້ແກ້ໄຂບັນຫາ ຫຼືເພື່ອພັດທະນາສະພາວະຈິດໃຈ. ແຕ່ສອງປະເພດທີ່ນິຍົມໃຊ້ ແລະເຫັນວ່າເປັນປະໂຫຍດນັ້ນຄື *ການຈະເລີນອານາປານະສະຕິ Mindfulness of Breathing* ແລະ*ເມດຕາພາວະນາ Loving Kindness Meditation.*

**ຄຳຖາມ: ຖ້າຂ້ານ້ອຍຕ້ອງການຢາກປະຕິບັດແບບ *ອານາປານະສະຕິ* ຂ້ານ້ອຍຄວນຈະເຮັດແນວໃດ?**

**ຄຳຕອບ:** ທ່ານຄວນຈະປະຕິບັດຕາມຫຼັກການ ໔ Ps: place ສະຖານທີ່, posture ອິລິຍາບົດ(ອິຣິຍາບົດ)(ຢືນ, ຍ່າງ, ນັ່ງ, ນອນ), practice ການປະຕິບັດ ແລະ problems ການສຶກສາບັນຫາ. ຂັ້ນທຳອິດ ຄວນຊອກຫາສະຖານທີ່ໆເໝາະສົມ, ບາງທີກໍຊອກຫາຫ້ອງທີ່ບໍ່ມີສຽງເນືອງນັນເກີນໄປ ແລະເປັນບ່ອນທີ່ທ່ານຈະບໍ່ຖືກລົບກວນງ່າຍ. ປະການທີສອງ, ໃຫ້ນັ່ງໃນທ່າທີ່ສະດວກສະບາຍ, ທ່ານັ່ງທີ່ດີ ຄືໃຫ້ນັ່ງຂັດສະມາທິ, ອາດມີອາສະນະຮອງນັ່ງ, ນັ່ງເຮັດຫຼັງຊື່ໆ, ມືວາງຢູ່ເທິງຕັກ ແລະຫຼັບຕາ. ນອກຈາກນີ້ ຍັງມີທາງເລືອກອື່ນອີກເຊັ່ນ ທ່ານສາມາດນັ່ງຕັ່ງກໍໄດ້ ຂໍພຽງແຕ່ໃຫ້ນັ່ງເຮັດຕົວກົງ. ແລະຂັ້ນຕອນຕໍ່ໄປການປະຕິບັດຕົວຈິງກໍຈະເກີດຂຶ້ນເອງ. ໃນຂະນະທີ່ທ່ານນັ່ງຫຼັບຕາຢ່າງສະຫງົບຢູ່ນັ້ນ, ໃຫ້ເອົາສະຕິຈົດຈໍ່ຢູ່ທີ່ອາການເຄື່ອນໄຫວຂອງລົມຫາຍໃຈເຂົ້າອອກ. ນີ້ສາມາດເຮັດໄດ້ດ້ວຍການນັບລົມຫາຍໃຈ ຫຼືສັງເກດເບິ່ງອາການຍຸບ ແລະພອງຂອງທ້ອງ. ເມື່ອສະມາທິດຳເນີນໄປ, ບັນຫາ ແລະອຸປະສັກອື່ນໆຈະເກີດຕາມມາ. ທ່ານອາດຈະປະສົບກັບອາການຄັນຄາຍໃນຮ່າງກາຍ ຫຼືປວດຫົວເຂົ່າ. ຖ້າຫາກສິ່ງນີ້ເກີດຂຶ້ນ, ຄວນພະຍາຍາມເຮັດໃຫ້ຮ່າງກາຍຜ່ອນຄາຍ ໂດຍບໍ່ຕ້ອງເຄື່ອນໄຫວ ແລະເຝົ້າສັງເກດເບິ່ງລົມຫາຍໃຈຕໍ່ໄປ. ທ່ານອາດຈະມີຫຼາຍຄວາມຄິດເຂົ້າມາແຊກໃນຈິດໃຈ ແລະລົບກວນສະຕິຈາກການສັງເກດເບິ່ງລົມຫາຍໃຈ. ວິທີທາງດຽວທີ່ທ່ານສາມາດແກ້ໄຂບັນຫານີ້ໄດ້ຄື ພະຍາຍາມເອົາສະຕິກັບໄປກຳນົດຮູ້ລົມຫາຍໃຈຢ່າງອົດທົນ. ຖ້າຫາກທ່ານດຳເນີນການປະຕິບັດແບບນີ້ຕໍ່ໄປເລື້ອຍໆ, ໃນທີ່ສຸດຄວາມຄິດ ກໍຈະອ່ອນກຳລັງລົງ, ສະມາທິ ກໍຈະເຂັ້ມແຂງຂຶ້ນ ທ່ານກໍຈະໄດ້ສຳຜັດກັບຂະນະທີ່ຈິດສະຫງົບລະອຽດ ໃນທີ່ສຸດກໍພົບຄວາມສະຫງົບສຸກພາຍໃນ.

**ຄໍາຖາມ: ຂ້ານ້ອຍຄວນຈະນັ່ງສະມາທິນານປານໃດ?**

**ຄໍາຕອບ:** ສິ່ງທີ່ດີຄວນນັ່ງສະມາທິປະມານ ໑໕ ນາທີທຸກໆມື້ໃນໜຶ່ງອາທິດ ແລະຄ່ອຍໆ ເພີ່ມເວລາຂຶ້ນອີກ ໕ ນາທີ ທຸກອາທິດຈົນກວ່າສາມາດນັ່ງຮອດ ໔໕ ນາທີ. ຫຼັງຈາກ ສອງສາມອາທິດຂອງການນັ່ງສະມາທິແບບປົກກະຕິ ທ່ານກໍຈະເລີ່ມສັງເກດເຫັນວ່າ ສະມາທິຂອງທ່ານດີຂຶ້ນ.

**ຄໍາຖາມ: ກ່ຽວກັບເມດຕາພາວະນາເດ? ຈະມີການປະຕິບັດແບບໃດ?**

**ຄໍາຕອບ:** ເມື່ອທ່ານຄຸ້ນເຄີຍກັບການປະຕິບັດແບບອານາປານະສະຕິ ຢ່າງປົກກະຕິແລ້ວ ທ່ານກໍສາມາດຈະເລີນແບບເມດຕາພາວະນາໄດ້. ຄວນຈະມີການປະຕິບັດສອງ ຫຼືສາມ ຄັ້ງຕໍ່ອາທິດ ຫຼັງຈາກທ່ານປະຕິບັດແບບອານາປານະສະຕິ. ທໍາອິດ, ໃຫ້ຫັນຄວາມສົນ ໃຈມາໃສ່ຕົນເອງ ແລະກ່າວກັບຕົນເອງດ້ວຍຄໍາເວົ້າວ່າ: "ຂໍໃຫ້ຂ້າພະເຈົ້າຢູ່ດີ ແລະມີ ຄວາມສຸກ. ຂໍໃຫ້ຂ້າພະເຈົ້າມີສັນຕິສຸກ ແລະສະຫງົບ. ຂໍໃຫ້ຂ້າພະເຈົ້າປາສະຈາກອັນ ຕະລາຍທັງປວງ. ຂໍໃຫ້ຈິດໃຈຂອງຂ້າພະເຈົ້າປາສະຈາກຄວາມໂກດ. ຂໍໃຫ້ໃຈຂອງຂ້າ ພະເຈົ້າ ເຕັມປ່ຽມດ້ວຍຄວາມເມດຕາ. ຂໍໃຫ້ຂ້າພະເຈົ້າມີຄວາມສຸກເທີ້ນ." ຫຼັງຈາກນັ້ນ, ທ່ານກໍນ້ອມຈິດແຜ່ເມດຕາ ໄປລະນຶກເຖິງເທື່ອລະຄົນໆເຊັ່ນ: ຄົນທີ່ທ່ານຮັກ, ຄົນປະ ເພດປານກາງຄື ຄົນທີ່ທ່ານບໍ່ຮັກບໍ່ຊັງ, ແລະສຸດທ້າຍ ເຖິງບຸກຄົນທີ່ທ່ານຊັງ, ປາຖະ ໜາໃຫ້ພວກເຂົາເຈົ້າ ມີຄວາມສຸກເໝືອນດັ່ງທີ່ທ່ານປາຖະໜາ.

**ຄໍາຖາມ: ແມ່ນຫຍັງຄືອານິສົງຂອງການຝຶກສະມາທິແບບນີ້?**

**ຄໍາຕອບ:** ຖ້າຫາກວ່າທ່ານຈະເລີນເມດຕາພາວະນາເປັນປະຈໍາ ແລະດ້ວຍສໍາມາທິດຖິ (ສັມມາທິດຖິ) ທ່ານກໍຈະສັງເກດເຫັນການປ່ຽນແປງໄປໃນທາງທີ່ດີ ຫຼາຍຢ່າງເກີດຂຶ້ນ ພາຍໃນຕົວຂອງທ່ານ. ທ່ານຈະເຫັນວ່າ ທ່ານສາມາດຍອມຮັບ ແລະໃຫ້ອະໄພຕົນເອງ ຫຼາຍຂຶ້ນ. ທ່ານຈະພົບວ່າ ຄວາມຮູ້ສຶກທີ່ທ່ານມີໃຫ້ຄົນທີ່ທ່ານຮັກເພີ່ມພູນຂຶ້ນ. ທ່ານຈະ ເຫັນວ່າ ທ່ານໄດ້ກາຍເປັນເພື່ອນກັບບຸກຄົນທີ່ທ່ານເຄີຍບໍ່ສົນໃຈໄຍດີນໍາ ແລະບໍ່ຫວ່ງ ໄຍ, ແລ້ວທ່ານຈະຮູ້ວ່າ ຄວາມອິດສາ ຫຼືຄວາມພະຍາບາດຕໍ່ບາງຄົນຄ່ອຍໆຫຼຸດນ້ອຍ ລົງ ແລະໃນທີ່ສຸດກໍສູນສິ້ນໄປ. ບາງຄັ້ງ ຖ້າຫາກທ່ານຮູ້ວ່າ ມີໃຜຜູ້ໜຶ່ງບໍ່ສະບາຍ, ມີ ຄວາມທຸກ ຫຼືກໍາລັງປະເຊີນໜ້າກັບອຸປະສັກ, ທ່ານກໍສາມາດລວມເອົາບຸກຄົນນັ້ນເຂົ້າ ໃນການຈະເລີນສະມາທິ ເຮັດເລື້ອຍໆທ່ານກໍຈະພົບວ່າ ສະພາບຂອງພວກເຂົາດີຂຶ້ນ.

**ຄຳຖາມ: ມັນເປັນໄປໄດ້ແນວໃດ?**

**ຄຳຕອບ:** ຈິດ, ເມື່ອມີການພັດທະນາຢ່າງເໝາະສົມ, ມັນກໍຈະເປັນເຄື່ອງມືທີ່ມີອານຸພາບຍິ່ງ. ຖ້າຫາກວ່າເຮົາສາມາດເພັ່ງພະລັງຈິດ ແລ້ວສົ່ງອອກໄປສູ່ຄົນອື່ນ, ມັນກໍສາມາດສົ່ງຜົນສູ່ພວກເຂົາ. ທ່ານອາດເຄີຍມີປະສົບການແບບນີ້ມາແລ້ວ. ບາງທີ ທ່ານອາດຢູ່ໃນຫ້ອງທີ່ແອອັດ ແລະທ່ານຮູ້ສຶກວ່າມີຄົນກຳລັງແນມເບິ່ງທ່ານຢູ່. ເມື່ອທ່ານຫັນຫຼັງກັບ ແລະແນ່ນອນ, ມີຄົນກຳລັງແນມເບິ່ງທ່ານຢູ່ແທ້. ສິ່ງທີ່ເກີດຂຶ້ນກໍຄືວ່າ ທ່ານໄດ້ສຳຜັດພະລັງຈິດຂອງຄົນອື່ນ. ເມດຕາພາວະນາກໍເຊັ່ນກັນ. ພວກເຮົາສົ່ງກະແສຈິດ ທີ່ເປັນຝ່າຍກຸສົນອອກໄປສູ່ຄົນອື່ນ ແລະມັນກໍຄ່ອຍໆສົ່ງໄປສູ່ພວກເຂົາ.

**ຄຳຖາມ: ຍັງມີການຈະເລີນສະມາທິແບບອື່ນອີກບໍ?**

**ຄຳຕອບ:** ຍັງມີຢູ່. ເປັນການປະຕິບັດແບບສຸດທ້າຍ ຫຼືບາງທີອາດຈະເປັນແບບທີ່ສຳຄັນທີ່ສຸດກໍວ່າໄດ້ ເອີ້ນວ່າ ວິປັສສນາ(ວິປັດສະນາ).ຄຳສັບນີ້ໝາຍຄວາມວ່າ "ການເຫັນພາຍໃນ" ຫຼື"ການເຫັນຢ່າງເລິກເຊິ່ງ" ແລະຕາມປົກກະຕິຈະແປວ່າ *ວິປັດສະນາກຳມະຖານ* (ວິປັສສະນາກັມມະຖານ) insight meditation.

**ຄຳຖາມ: ຈົ່ງອະທິບາຍຄຳວ່າ "ວິປັດສະນາກຳມະຖານ".**

**ຄຳຕອບ:** ໃນລະຫວ່າງການຝຶກວິປັດສະນາກຳມະຖານຢູ່ນັ້ນ, ຜູ້ປະຕິບັດພະຍາຍາມມີສະຕິຢູ່ກັບສິ່ງໃດກໍຕາມ ທີ່ເກີດຂຶ້ນກັບພວກເຂົາ ໂດຍບໍ່ຕ້ອງຄິດ ຫຼືມີປະຕິກິລິຍາໃດໆຕໍ່ສິ່ງທີ່ເກີດຂຶ້ນນັ້ນ.

**ຄຳຖາມ: ແມ່ນຫຍັງຄືຈຸດປະສົງຂອງການປະຕິບັດເຊັ່ນນັ້ນ?**

**ຄຳຕອບ:** ຕາມປົກກະຕິ ເຮົາມັກມີປະຕິກິລິຍາຕໍ່ສິ່ງທີ່ມາກະທົບໂດຍຄວາມມັກ ຫຼືບໍ່ມັກ ຫຼື ດ້ວຍການປ່ອຍໃຫ້ມັນຈຸດສະນອນຄວາມຄິດ, ການຝັນກາງເວັນ ຫຼືຄວາມຈື່ຈຳສິ່ງຕ່າງໆ. ປະຕິກິລິຍາຕ່າງໆເຫຼົ່ານີ້ອາດຫັກເຫ ຫຼືບົດບັງໃນສິ່ງທີ່ເຮົາສຳຜັດ ດັ່ງນັ້ນ ເຮົາຈຶ່ງບໍ່ອາດເຂົ້າໃຈມັນຢ່າງຖືກຕ້ອງ. ດ້ວຍການພັດທະນາສະຕິຢ່າງບໍ່ມີປະຕິກິລິຍາໂຕ້ຕອບໃດໆ, ເຮົາກໍເລີ່ມເຫັນວ່າ ເປັນຫຍັງເຮົາຈຶ່ງຄິດ, ເວົ້າ ແລະສະແດງອາການຕ່າງໆອອກມາ. ແລະແນ່ນອນ, ຍິ່ງມີຄວາມຮູ້ຄວາມເຂົ້າໃຈຕົນເອງເທົ່າໃດ ກໍຍິ່ງມີຜົນດີຕໍ່ການດຳເນີນຊີວິດຂອງພວກເຮົາ. ຜົນປະໂຫຍດຂອງການຝຶກວິປັດສະນາກຳມະຖານ

ນັ້ນກໍຄື ຫຼັງຈາກການຝຶກໄລຍະໜຶ່ງ ທ່ານຈະຮູ້ສຶກວ່າ ມັນມີຊ່ອງຫວ່າງລະຫວ່າງປະສົບການຂອງເຮົາ ແລະຄົນອື່ນ. ເມື່ອນັ້ນ, ແທນທີ່ຈະມີປະຕິກິລິຍາໂຕ້ຕອບກັບທຸກອາລົມທີ່ຍົ້ວຍວນ ຫຼືການຍຸຍົງໃຫ້ຫຼົງໄຫຼຢ່າງເປັນອັດຕະໂນມັດ ຫຼືເປັນໄປຕາມຈິດໃຕ້ສຳນຶກພາເປັນ, ພວກເຮົາຮູ້ວ່າ ເຮົາສາມາດຍ້ອນກັບໄປໄຕ່ຕອງໄດ້ໜ້ອຍໜຶ່ງ ເພື່ອຕັດສິນໃຈວ່າ ອາລົມໃດຄວນສະແດງອອກມາຫຼືບໍ່ ແລະຄວນຈະເຮັດແນວໃດ. ດ້ວຍເຫດນີ້, ເຮົາຈຶ່ງຄວນຄວບຄຸມຊີວິດຂອງເຮົາຕື່ມ, ບໍ່ແມ່ນຍ້ອນວ່າ ເຮົາພັດທະນາຈິດທີ່ເຂັ້ມແຂງເໜືອນເຫຼັກ, ພຽງແຕ່ເຮົາສາມາດເຫັນແຈ້ງຂຶ້ນ.

**ຄຳຖາມ: ຖ້າເປັນເຊັ່ນນັ້ນຂ້ານ້ອຍກໍເວົ້າຖືກວ່າ *ວິປັດສະນາກຳມະຖານ* ແມ່ນຊ່ວຍໃຫ້ເຮົາດີຂຶ້ນ, ມີຄວາມສຸກຍິ່ງຂຶ້ນ?**

**ຄຳຕອບ:** ດີແລ້ວ, ນັ້ນເປັນການເລີ່ມຕົ້ນ, ເປັນການເລີ່ມຕົ້ນທີ່ສຳຄັນຫຼາຍ. ແຕ່ການຝຶກສະມາທິ ມີເປົ້າໝາຍສູງສົ່ງກວ່ານັ້ນ. ເມື່ອການປະຕິບັດຂອງເຮົາແກ່ກ້າຂຶ້ນ ແລະສະຕິຂອງເຮົາໝັ້ນຄົງຍິ່ງຂຶ້ນ ພວກເຮົາຈະສັງເກດເຫັນວ່າ ສິ່ງທີ່ເຮົາປະສົບນັ້ນ ເລີ່ມຈະບໍ່ມີຄວາມເປັນຕົວຕົນ, ນັ້ນຄືສິ່ງທີ່ເກີດຂຶ້ນຢ່າງແທ້ຈິງ ໂດຍປາສະຈາກ "ຕົວກູ"[6], ເຮັດໃຫ້ມັນມີຂຶ້ນ ແລະແລ້ວກໍຈະບໍ່ມີຄວາມຮູ້ສຶກວ່າ ແມ່ນແຕ່ໃນຄວາມມີ "ຕົວກູ". ໃນຂັ້ນເລີ່ມຕົ້ນ, ນັກປະຕິບັດອາດພໍສັງເກດເຫັນສິ່ງນີ້ພຽງບາງຄັ້ງ ແຕ່ເມື່ອປະຕິບັດດົນໄປພໍສົມຄວນກໍຍິ່ງຈະແຈ່ມແຈ້ງຍິ່ງຂຶ້ນ.

**ຄຳຖາມ: ນັ້ນເບິ່ງຄືວ່າ ຂ້ອນຂ້າງເປັນຕາຢ້ານ.**

**ຄຳຕອບ:** ແມ່ນແລ້ວ, ມັນເປັນຕາໜ້າຢ້ານແທ້. ທີ່ຈິງແລ້ວ, ໃນເບື້ອງຕົ້ນ ເມື່ອບາງຄົນບໍ່ມີປະສົບການກ່ຽວກັບສິ່ງນີ້ ພວກເຂົາກໍຮູ້ສຶກຢ້ານໆແນ່ເລັກນ້ອຍ. ແຕ່ພໍດົນນານຂຶ້ນຄວາມຢ້ານກໍຄ່ອຍໆຖືກຄວາມຮູ້ແຈ້ງຢ່າງເລິກເຊິ່ງເຂົ້າມາແທນທີ່ ນັ້ນຄືຄວາມຮູ້ແຈ້ງທີ່ວ່າພວກເຂົາບໍ່ແມ່ນສິ່ງທີ່ພວກເຂົາຄຶດວ່າ ຕົນເອງເປັນ. ຄວາມມີອັດຕາ(ຕົວຕົນ) ກໍເລີ່ມຫຼຸດລົງ ຕໍ່ມາກໍຄ່ອຍໆຈາງຫາຍໄປເຊັ່ນຄຳວ່າ " ກູ ", " ຕົວກູ" ແລະ" ຂອງກູ ".

[6] "me" "ຂ້ອຍ" ໃນທີ່ນີ້, ຖ້າໃນທັດສະນະຂອງພຣະອາຈານພຸດທະທາດຈະແປວ່າ "ຕົວກູ", ໝາຍເຖິງຄວາມເປັນອັດຕາ ຫຼືຕົວຕົນ. ໃນບົດນີ້, ເມື່ອຜູ້ປະຕິບັດໄດ້ຜ່ານການປະຕິບັດຍິ່ງໆຂຶ້ນໄປ ກໍຈະ ເຫັນແຈ້ງໃນທຳ(ທັມມະ), ເຫັນຄວາມບໍ່ທ່ຽງ, ເປັນທຸກ, ແລະຄວາມບໍ່ມີຕົວຕົນ(ບໍ່ມີຕົວກູ, ຂອງກູ).

ໃນລັກສະນະນີ້ເອງ, ຄືວິຖີຊີວິດຂອງຊາວພຸດ. ແນ່ນອນ ຕໍ່ມາທັດສະນະທັງໝົດຂອງພວກເຂົາ ກໍເລີ່ມປ່ຽນແປງຢ່າງແທ້ຈິງ. ພຽງພິຈາລະນາວ່າ ມີຫຼາຍຄວາມຂັດແຍ່ງສ່ວນຕົວ, ຄວາມຂັດແຍ່ງທາງດ້ານສັງຄົມ ແລະແມ່ນແຕ່ຄວາມຂັດແຍ່ງກັນຂັ້ນສາກົນ ກໍລ້ວນແຕ່ມີເຄົ້າກຳເນີດມາຈາກຄວາມມີອັດຕາຕົວຕົນ, ຄວາມຖືຕົວທາງດ້ານເຊື້ອຊາດ ແລະເຜົ່າພັນ, ໃນທາງທີ່ຜິດໆ, ດ້ວຍຄວາມດູມິ່ນຢຽບຫຍາມກັນ ດ້ວຍສຽງຮ້ອງທີ່ຍິ່ງຜະຫຍອງວ່າ "ນີ້ແມ່ນຂອງກູ" "ນັ້ນແມ່ນຂອງພວກກູ". ອີງຕາມພຣະພຸດທະສາສະໜາແລ້ວ, ຄວາມສະຫງົບ ແລະຄວາມສຸກທີ່ແທ້ຈິງ ສາມາດພົບໄດ້ເມື່ອພວກເຮົາຮູ້ຕົວຕົນທີ່ແທ້ຈິງຂອງເຮົາເອງ. ນີ້ຄືສິ່ງທີ່ເອີ້ນວ່າ *ການຕັດສະຮູ້.*

**ຄຳຖາມ: ນັ້ນເປັນຄວາມຄິດທີ່ໜ້າສົນໃຈ ແຕ່ໃນເວລາດຽວກັນ ມັນຂ້ອນຂ້າງຈະເປັນສິ່ງທີ່ເປັນຕາຢ້ານເຊັ່ນກັນ. ຜູ້ທີ່ຕັດສະຮູ້ຢູ່ດ້ວຍຄວາມໝາຍແຫ່ງຄວາມບໍ່ມີຕົວຕົນ ຫຼືຄວາມບໍ່ມີເຈົ້າຂອງໄດ້ຢ່າງໃດ?**

**ຄຳຖາມ:** ເອີາລະ, ຜູ້ທີ່ຮູ້ແຈ້ງກໍອາດຖາມເຮົາເຊັ່ນກັນວ່າ, "ທ່ານສາມາດຢູ່ໄດ້ ດ້ວຍຄວາມໝາຍແຫ່ງຄວາມມີຕົວຕົນໄດ້ຢ່າງໃດ?" ທ່ານສາມາດອົດທົນຕໍ່ຄວາມທຸກອັນເກີດຈາກຄວາມຢ້ານກົວ, ຄວາມອິດສາ, ຄວາມໂສກເສົ້າ ແລະຄວາມຖືໂຕ, ທີ່ມີໃນຕົນເອງ ແລະຄົນອື່ນໄດ້ຢ່າງໃດ? ທ່ານບໍ່ຮູ້ຈັກເບື່ອໜ່າຍໃນການສະແຫວງຫາ ຢ່າງບໍ່ຢູ່ບໍ່ເຊົາເພື່ອສະສົມຄວາມຢາກໄດ້ຢ່າງບໍ່ມີເມືອງພໍ ເພື່ອຢາກດີ ຫຼືກ້າວໜ້າກວ່າຄົນອື່ນ, ຄວາມຮູ້ສຶກກະວົນກະວາຍໃຈ ທີ່ທ່ານຈະສູນເສຍມັນໄປທັງໝົດບໍ? ມັນເບິ່ງຄືວ່າ ຜູ້ທີ່ເພິ່ນຮູ້ແຈ້ງໃນຊີວິດຂ້ອນຂ້າງຈະດຳລົງຊີວິດຢູ່ຢ່າງສະບາຍ. ມີພຽງແຕ່ປຸຖຸຊົນ, ຢ່າງໝູ່ເຮົາເຈົ້າຂ້ອຍເທົ່ານັ້ນ, ຜູ້ທີ່ມັກມີບັນຫາ ແລະສ້າງບັນຫາຢູ່ຕະຫຼອດເວລາ.

**ຄຳຖາມ: ຂ້ານ້ອຍເຂົ້າໃຈແລ້ວ. ແຕ່ທ່ານຈະໃຊ້ເວລາດົນປານໃດ ກ່ອນຈະໄດ້ຮູ້ແຈ້ງທຳ(ທັມມະ)?**

**ຄຳຕອບ:** ມັນເປັນໄປບໍ່ໄດ້ທີ່ຈະກ່າວ ຫຼືບາງທີກໍບໍ່ຈຳເປັນຈະເວົ້າເຖິງ. ເປັນຫຍັງທ່ານຈິ່ງບໍ່ລອງເລີ່ມນັ່ງສະມາທິ ແລະສັງເກດເບິ່ງວ່າທ່ານຈະເຮັດໄດ້ພຽງໃດ? ຖ້າຫາກທ່ານປະຕິບັດດ້ວຍຄວາມຈິງໃຈ ແລະດ້ວຍຄວາມສະຫຼາດ, ທ່ານອາດຈະຮູ້ວ່າ ຄຸນນະພາບຊີວິດຂອງທ່ານດີຂຶ້ນຢ່າງຕໍ່ເນື່ອງ. ໃນເວລາທີ່ເໝາະສົມ ທ່ານອາດຢາກຄົ້ນຄວ້າເລື່ອງ

ສະມາທິ ແລະທຳມະ(ທັມມະ)ຢ່າງເລິກເຊິ່ງຕື່ມອີກ. ຕໍ່ມາ, ທຳມະ ແລະການປະຕິບັດນັ້ນ ອາດຈະເປັນສິ່ງທີ່ສຳຄັນທີ່ສຸດໃນຊີວິດຂອງທ່ານ. ບໍ່ຄວນຈະເລີ່ມຄຶດສົງໄສ ຫຼືກັງວົນກ່ຽວກັບຂັ້ນຕອນທີ່ສູງກວ່າ ບົນຫົນທາງທີ່ກຳລັງກ້າວເດີນຢູ່ນັ້ນ ກ່ອນທີ່ທ່ານຍັງບໍ່ທັນໄດ້ອອກເດີນທາງ. ຈົ່ງກ້າວເດີນໄປເທື່ອລະກ້າວໃນເວລາດຽວ.

**ຄຳຖາມ: ຂ້ານ້ອຍຄວນຈະມີອາຈານສອນສະມາທິບໍ?**
**ຄຳຕອບ:** ອາຈານສອນ ຍັງບໍ່ທັນແມ່ນສິ່ງທີ່ມີຄວາມຈຳເປັນຢ່າງເດັດຂາດ ແຕ່ການໄດ້ຮັບຄຳແນະນຳຈາກບຸກຄົນທີ່ມີປະສົບການກ່ຽວກັບສະມາທິ ແມ່ນຈຳເປັນຢ່າງແນ່ນອນ. ແຕ່ໜ້າເສຍດາຍ, ພຣະສົງບາງອົງ ແລະພໍ່ອອກບາງຄົນຕັ້ງຕົນເອງເປັນອາຈານສອນສະມາທິ ທັງໆທີ່ວ່າ ພວກເຂົາບໍ່ຮູ້ວ່າພວກເຂົາກຳລັງເຮັດຫຍັງຢູ່. ຄວນພະຍາຍາມຊອກຫາອາຈານຜູ້ທີ່ມີຊື່ສຽງດີ, ເປັນຜູ້ມີຈິດໃຈທຸ່ນທ່ຽງ ແລະເປັນຜູ້ທີ່ເຂົ້າເຖິງທຳມະຂອງພຣະພຸດທະເຈົ້າ.

**ຄຳຖາມ: ຂ້ານ້ອຍໄດ້ຍິນວ່າ ສະມາທິ ນິຍົມນຳໃຊ້ຫຼາຍໃນປັດຈຸບັນ ໂດຍນັກຈິດຕະວິທະຍາ ກ່ຽວກັບການປິ່ນປົວໂລກຈິດ (psychiatrists) ແລະນັກຈິດຕະວິທະຍາ ຜູ້ສຶກສາກ່ຽວກັບພຶດຕິກັມຂອງຄົນ(psychologists). ມັນແມ່ນແທ້ບໍ?**
**ຄຳຖາມ:** ແມ່ນແລ້ວ, ແມ່ນແທ້. ປັດຈຸບັນ ການຝຶກສະມາທິແມ່ນໄດ້ຮັບການຍອມຮັບເນື່ອງຈາກວ່າມີຜົນດີສູງຕໍ່ການບຳບັດຈິດ ແລະໄດ້ຖືກນຳໃຊ້ໂດຍພະນັກງານວິຊາຊີບ ທີ່ປິ່ນປົວສຸຂະພາບຈິດຢ່າງຫຼວງຫຼາຍ ເພື່ອຊ່ວຍໃຫ້ມີການຜ່ອນຄາຍ, ເອົາຊະນະຄວາມຢ້ານ ແລະກໍ່ໃຫ້ເກີດສະຕິຮູ້ສຶກຕົວ. ຄຳສອນຂອງພຣະພຸດທະເຈົ້າ ກ່ຽວກັບຈິດໃຈຂອງມະນຸດ ສາມາດຊ່ວຍເຫຼືອຄົນໃນປັດຈຸບັນຢ່າງຫຼວງຫຼາຍ ເໝືອນດັ່ງທີ່ເຄີຍເປັນມາໃນສະໄໝບູຮານ.



## ກ. ປັນຍາ ແລະຄວາມກະລຸນາ(ກະຣຸນາ)

**ຄຳຖາມ: ຂ້ານ້ອຍມັກໄດ້ຍິນເລື້ອຍໆເລື່ອງທຳມະ(ທັມມະ)ກ່ຽວກັບ *ປັນຍາ* ແລະ*ຄວາມກະລຸນາ*. ສອງຄຳນີ້ ມີຄວາມໝາຍແນວໃດ?**

**ຄຳຕອບ:** ບາງສາສະໜາເຊື່ອວ່າ ຄວາມກະລຸນາ ຫຼືຄວາມຮັກ (ສອງຄຳສັບນີ້ ຄ້າຍຄືກັນຫຼາຍ) ວ່າເປັນຄຸນນະທຳທີ່ສຳຄັນທາງສາສະໜາ ແຕ່ພວກເຂົາບໍ່ໄດ້ໃຫ້ຄວາມສົນໃຈກ່ຽວກັບ *ປັນຍາ* ເທົ່າທີ່ຄວນ. ຜົນທີ່ຕາມມາກໍຄື ພວກເຂົາລົງເອີຍດ້ວຍການເປັນຄົນໃຈດີທີ່ໂງ່, ເປັນຄົນທີ່ມີຄວາມເມດຕາ ທີ່ມີຄວາມເຂົ້າໃຈໃນທຳມະພຽງເລັກນ້ອຍ ຫຼືບໍ່ເຂົ້າໃຈເລີຍ. ຍັງມີລະບົບຄວາມຄິດແບບອື່ນອີກເຊັ່ນ ວິທະຍາສາດ, ເຊື່ອກັນວ່າ *ປັນຍາ* ສາມາດພັດທະນາໄດ້ດີທີ່ສຸດ ເມື່ອອາລົມຕ່າງໆລວມທັງຄວາມກະລຸນາຖືກລະເລີຍ. ຜົນທີ່ຕາມມາກໍຄື ວິທະຍາສາດ ມີເຈຕະນາທີ່ຈະໃຫ້ຄວາມສົນໃຈໃນຜົນທີ່ອອກມາ ແລະລືມໄປວ່າ ວິທະຍາສາດແມ່ນສິ່ງທີ່ຮັບໃຊ້ມະນຸດ, ບໍ່ແມ່ນເພື່ອຄວບຄຸມ ຫຼືຢູ່ເໜືອມະນຸດ. ຖ້າບໍ່ດັ່ງນັ້ນ, ນັກວິທະຍາສາດ ໄດ້ນຳໃຊ້ທັກສະຄວາມສາມາດຂອງພວກເຂົາເຈົ້າ ເຂົ້າໃນການພັດທະນາລະເບີດນິວເຄຼຍ, ເຊື້ອໂລກສົງຄາມ ແລະອື່ນໆອີກໄດ້ຢ່າງໃດ? ພຣະພຸດທະສາສະໜາສອນວ່າ ເພື່ອຢາກເປັນຄົນທີ່ສົມດູນແທ້ຈິງ ແລະສົມບູນແບບ, ທ່ານຈະຕ້ອງພັດທະນາທັງສອງຢ່າງຄື *ປັນຍາ* ແລະ*ຄວາມກະລຸນາ*.

**ຄຳຖາມ: ຖ້າເປັນເຊັ່ນນັ້ນ, ອີງຕາມພຣະພຸດທະສາສະໜາ, *ປັນຍາ* ແມ່ນຫຍັງ?**

**ຄຳຕອບ:** ປັນຍາທີ່ສູງສຸດຄືການຮູ້ແຈ້ງໃນຄວາມຈິງທຸກຢ່າງວ່າ ທຸກສະພາວະທຳ(ທຸກສິ່ງທຸກຢ່າງ) ແມ່ນບໍ່ສົມບູນແບບ, ເປັນອະນິດຈັງ, ແລະບໍ່ມີຕົວຕົນ. ຄວາມເຂົ້າໃຈເຊັ່ນນີ້ ເປັນຄວາມຫຼຸດພົ້ນຢ່າງສິ້ນເຊີງ, ນຳໄປສູ່ຄວາມປອດໄພ ແລະຄວາມສຸກຢ່າງຍິ່ງ ເຊິ່ງເອີ້ນວ່າ *ນິບພານ*. ແຕ່ເຖິງຢ່າງໃດກໍຕາມ, ພຣະພຸດທະອົງ ບໍ່ໄດ້ກ່າວໄວ້ຫຼາຍຢ່າງກ່ຽວກັບປັນຍາລະດັບນີ້. ມັນຍັງບໍ່ທັນແມ່ນ *ປັນຍາ* ແທ້ ຖ້າຫາກວ່າເຮົາເຊື່ອແບບງ່າຍໆໃນສິ່ງທີ່ເຮົາຖືກເລົ່າສູ່ຟັງ. *ປັນຍາ* ທີ່ແທ້ຈິງ ຄືການເຫັນໂດຍກົງ ແລະເຂົ້າໃຈດ້ວຍຕົນເອງ. ຖ້າຢູ່ໃນລະດັບນີ້ແລ້ວ, *ປັນຍາ* ຄືການເປີດໃຈກວ້າງ ຫຼາຍກວ່າການປິດໃຈ ບໍ່ຍອມຮັບຟັງ, ການຟັງຄວາມຄິດເຫັນຂອງຄົນອື່ນຫຼາຍກວ່າການເປັນຄົນຈິດໃຈຄັບແຄບ;

ສຳຫຼວດກວດກາຂໍ້ມູນຄວາມຈິງ ທີ່ຂັດແຍ້ງກັບຄວາມເຊື່ອຂອງຕົນ, ຫຼາຍກວ່າການເອົາຫົວໝັ້ນຂີ້ຊາຍ(ປຸຖຸຊົນໝົ້ນປ່າ); ບໍ່ຕົກເປັນທາດຂອງຄວາມຮູ້ສຶກສ່ວນຕົວ ແທນທີ່ຈະມີຄວາມລຳອຽງ; ໃຊ້ເວລາກ່ຽວກັບຄວາມຄິດເຫັນ ແລະຄວາມເຊື່ອ ແທນທີ່ຈະຮັບເອົາອາລົມທີ່ມັນເກີດຂຶ້ນມາທັນທີໂລດ. ກຽມພ້ອມສະເໜີທີ່ຈະປ່ຽນແປງຄວາມເຊື່ອຂອງພວກເຮົາ ເມື່ອຄວາມຈິງທີ່ເຫັນວ່າຂັດແຍ້ງນັ້ນ ຖືກນຳສະເໜີ, ນັ້ນຄື *ປັນຍາ*. ບຸກຄົນທີ່ເຮັດແນວນີ້ໄດ້ ແນ່ນອນ ວ່າເປັນຄົນສະຫຼາດ ແລະໃນທີ່ສຸດກໍຈະນຳມາເຖິງຄວາມເຂົ້າໃຈຢ່າງແທ້ຈິງ. ຫົນທາງທີ່ເຊື່ອພຽງແຕ່ທ່ານໄດ້ຍິນມາມັນງ່າຍ. ສຳລັບຫົນທາງຂອງພຣະພຸດທະສາສະໜາ ແມ່ນຕ້ອງການກຳລັງໃຈ, ຄວາມອົດທົນ, ຄວາມຜ່ອນສັ້ນ ຜ່ອນຍາວ ແລະຄວາມສະຫຼຽວສະຫຼາດ.

**ຄຳຖາມ: ຂ້ານ້ອຍຄິດວ່າ ມີພຽງຄົນສ່ວນນ້ອຍທີ່ສາມາດເຮັດແນວນີ້ໄດ້. ຈຸດປະສົງຂອງພຣະພຸດທະສາສະໜາຢູ່ໃສ ຖ້າຫາກວ່າມີພຽງຄົນສ່ວນນ້ອຍປະຕິບັດ?**

**ຄຳຕອບ:** ມັນເປັນຄວາມຈິງ ທີ່ຍັງບໍ່ແມ່ນທຸກຄົນຈະຕຽມພ້ອມຕໍ່ສັດຈະທຳ (ສັຈຈະທັມມະ)ທາງພຣະພຸດທະສາສະໜາ. ແຕ່ຖ້າຫາກວ່າ ບາງຄົນຍັງບໍ່ທັນເຂົ້າໃຈໃນຄຳສອນຂອງພຣະພຸດທະເຈົ້າໃນປັດຈຸບັນ ພວກເຂົາອາດມີວຸດທິພາວະພຽງພໍໃນຊາດໜ້າ ທີ່ຈະເຂົ້າໃຈຕື່ມອີກ[7]. ແຕ່ເຖິງຢ່າງໃດກໍຕາມ, ຍັງມີຫຼາຍຄົນພຽງແຕ່ຟັງຄຳສອນທີ່ຖືກຕ້ອງ ແລະການໃຫ້ກຳລັງໃຈ, ກໍສາມາດມີຄວາມເຂົ້າໃຈເພີ່ມຂຶ້ນ. ອາດຈະເປັນຍ້ອນເຫດຜົນນີ້ເອງ ຊາວພຸດຈິ່ງມີຄວາມພະຍາຍາມຢ່າງອ່ອນໂຍນ ແລະງຽບສະຫງົບ ເພື່ອແບ່ງປັນຄວາມຮູ້ໃນພຣະພຸດທະສາສະໜາກັບຄົນອື່ນ. ພຣະພຸດທະເຈົ້າສອນພວກເຮົາ ດ້ວຍຄວາມມີພຣະມະຫາກະລຸນາທິຄຸນ ແລະເຮົາກໍຄວນຈະສອນຄົນອື່ນດ້ວຍຄວາມກະລຸນາເຊັ່ນດຽວກັນ.

**ຄຳຖາມ: ອີງຕາມພຣະພຸດທະສາສະໜາ, ແມ່ນຫຍັງຄື *ຄວາມກະລຸນາ* ?**

---

[7] ຄວາມໝາຍວ່າ ຈະມີວຸດທິພາວະພຽງພໍ ທີ່ຈະເຂົ້າໃຈພຸດທະສາສະໜາຕື່ມອີກໃນຊາດໜ້ານັ້ນ ຍ້ອນເຊື່ອວ່າ ຄົນເຮົາເກີດມາເພື່ອສ້າງປາຣະມີ ຖ້າຍັງບໍ່ທັນເຕັມປ່ຽມໃນຊາດນີ້ ກໍຈະມີໂອກາດພໍາເພັງ ໄປອີກໃນຊາດໜ້າ ຈົນກວ່າຈະສົມບູນ.

**ຄຳຕອບ:** ພຽງແຕ່ຄືກັນກັບປັນຍາ ທີ່ກວມເອົາເຖິງຄວາມສະຫຼາດ ແລະຄວາມເຂົ້າໃຈໃນທຳມະຊາດ, *ຄວາມກະລຸນາ* ລວມເອົາທັງພາກສ່ວນຂອງອາລົມ ແລະຄວາມຮູ້ສຶກ. ເໝືອນກັບປັນຍາ, ຄວາມກະລຸນາ ມັນກໍແມ່ນຄຸນສົມບັດພິເສດຂອງມະນຸດ. *ຄວາມກະລຸນາ* compassion ມາຈາກສອງຄຳ co ມີຄວາມໝາຍວ່າ "ດ້ວຍກັນ together" ແລະ passion ມີຄວາມໝາຍວ່າ "ຄວາມຮູ້ສຶກຢ່າງແຮງກ້າ a strong feeling". ນີ້ຄືຄວາມໝາຍຂອງ*ຄວາມກະລຸນາ*. ເມື່ອພວກເຮົາເຫັນຄົນອື່ນຕົກທຸກໄດ້ຍາກ ເຮົາຮູ້ສຶກໄດ້ໃນຄວາມທຸກນັ້ນ ຄືກັນກັບວ່າມັນແມ່ນຄວາມທຸກເຮົາ, ແລະພະຍາຍາມທີ່ຈະກຳຈັດ ຫຼືແບ່ງເບົາຄວາມທຸກຂອງພວກເຂົາ, ເມື່ອນັ້ນແຫຼະຄື *ຄວາມກະລຸນາ*. ດ້ວຍຄວາມປາຖະໜາດີຂອງມວນມະນຸດ, ແລະດ້ວຍຄຸນນະສົມບັດຂອງພຣະພຸດທະອົງທຸກປະການເຊັ່ນການແບ່ງປັນ, ຄວາມພ້ອມທີ່ຈະໃຫ້ຄວາມສະບາຍ, ຄວາມເຫັນອົກເຫັນໃຈ, ຄວາມຫວ່ງໄຍ ແລະໃສ່ໃຈ ສິ່ງທັງຫຼາຍເຫຼົ່ານີ້ ຄືການສະແດງອອກເຊິ່ງ *ຄວາມກະລຸນາ*. ທ່ານຈະສັງເກດເຫັນໄດ້ເຊັ່ນກັນ ໃນຄົນທີ່ມີ *ຄວາມກະລຸນາ*, ຄວາມຫວ່ງໄຍ ແລະຄວາມຮັກຕໍ່ຄົນອື່ນ ມີເຄົ້າກຳເນີດມາຈາກຄວາມຫວ່ງໄຍ ແລະຄວາມຮັກສຳລັບຕົນເອງ. ພວກເຮົາສາມາດເຂົ້າໃຈຄົນອື່ນໄດ້ຢ່າງດີທີ່ສຸດ ເມື່ອໃດທີ່ເຮົາເຂົ້າໃຈຕົນເອງຢ່າງຖ່ອງແທ້. ພວກເຮົາຈະຮູ້ວ່າສິ່ງໃດດີທີ່ສຸດສຳລັບຄົນອື່ນ ເມື່ອພວກເຮົາຮູ້ວ່າ ສິ່ງໃດດີທີ່ສຸດສຳລັບພວກເຮົາເອງ. ພວກເຮົາສາມາດຮູ້ສຶກໄດ້ສຳລັບຄົນອື່ນ ເມື່ອພວກເຮົາຮູ້ສຶກສຳລັບຕົນເອງ. ດັ່ງນັ້ນ, ໃນທາງພຣະພຸດທະສາສະໜາ ການພັດທະນາຈິດໃຈຂອງຕົນ ຈິ່ງເບັ່ງບານຢ່າງເປັນທຳມະຊາດ ສູ່ຄວາມຫວ່ງໄຍໃນຄວາມສະຫວັດດີການຂອງຄົນອື່ນ. ຊີວິດຂອງພຣະພຸດທະອົງ ເປັນແບບຢ່າງທີ່ດີຕໍ່ກັບການປະຕິບັດແບບນີ້. ພຣະພຸດທະອົງ ໃຊ້ເວລາຫົກປີໃນການສະແຫວງຫາຄວາມເປັນຢູ່ທີ່ດີຂອງຕົນ. ຫຼັງຈາກນັ້ນ, ພຣະພຸດທະອົງ ຈິ່ງໄດ້ນຳປະໂຫຍດສູ່ມວນມະນຸດຊາດ.

**ຄຳຖາມ: ທ່ານກຳລັງເວົ້າວ່າພວກເຮົາສາມາດຊ່ວຍເຫຼືອຄົນອື່ນໄດ້ຢ່າງດີ ຫຼັງຈາກທີ່ພວກເຮົາສາມາດເປັນທີ່ເພິ່ງຂອງຕົນໄດ້ແລ້ວ. ນັ້ນມັນບໍ່ເປັນການເຫັນແກ່ຕົວບໍ?**

**ຄຳຕອບ:** ຕາມປົກກະຕິ ພວກເຮົາເຫັນຄວາມເສຍສະຫຼະຕົນເອງ, ແລ້ວຫວ່ງໄຍຄົນອື່ນທີຫຼັງ, ນີ້ມັນກົງກັນຂ້າມກັບຄວາມເຫັນແກ່ຕົວ, ຄື ຫວ່ງໄຍຕົນເອງກ່ອນຈະຫວ່ງໄຍຄົນອື່ນ. ພຣະພຸດທະສາສະໜາບໍ່ເຫັນອັນໃດອັນໜຶ່ງ ຫຼືອັນອື່ນໃນນັ້ນ ແຕ່ແທນທີ່ຈະນ້ອມ

ໄປຕາມທັງສອງຢ່າງນັ້ນ. ຄວາມໃສ່ໃຈໃນຕົນເອງຢ່າງອັດສະລິຍະ ກໍຈະຄ່ອຍໆພັດທະນາໄປສູ່ການຫວ່ງໄຍ ໃສ່ໃຈຄົນອື່ນດ້ວຍຄວາມເຂົ້າໃຈວ່າ ຄົນອື່ນກໍເຊັ່ນດຽວກັນກັບຕົນເອງ. ນີ້ເອີ້ນວ່າ *ຄວາມກະລຸນາ* ຢ່າງສະຫຼາດ. *ຄວາມກະລຸນາ* ເປັນອັນຍະມະນີທີ່ງົດງາມໃນຈອມມົງກຸດແຫ່ງຄຳສອນຂອງພຣະພຸດທະເຈົ້າ.

**ຄຳຖາມ: ເມື່ອກ່ອນທ່ານເວົ້າວ່າ *ຄວາມກະລຸນາ* ແລະ*ຄວາມຮັກ* ຄ້າຍຄືກັນ. ມັນມີຄວາມແຕກຕ່າງກັນແນວໃດ?**

**ຄຳຕອບ:** ບາງທີ ອາດຈະເປັນການດີທີ່ຈະເວົ້າວ່າ ທັງສອງຄຳເປັນໄວພົດຕໍ່ກັນ. ໃນພາສາອັງກິດ, ຄຳວ່າ "love ຮັກ" ສາມາດໃຊ້ອະທິບາຍຫຼາຍຄວາມຮູ້ສຶກ. ພວກເຮົາສາມາດຮັກຄູ່ສົມລົດຂອງເຮົາ, ຮັກພໍ່ແລະແມ່, ຮັກລູກ, ຮັກເພື່ອນສະໜິດ ແລະເພື່ອນບ້ານ. ເປັນທີ່ເຫັນໄດ້ຢ່າງແຈ່ມແຈ້ງ, ທັງໝົດຂອງຄວາມຮູ້ສຶກເຫຼົ່ານີ້ ແມ່ນມີຄວາມແຕກຕ່າງກັນຢ່າງແນ່ນອນ ແຕ່ມັນກໍມີອົງປະກອບພຽງພໍທີ່ຄ້າຍຄືກັນ ເພື່ອໃຫ້ເຮົາໃຊ້ຄຳດຽວຄືຄຳວ່າ "love ຮັກ" ສຳລັບຄວາມຮູ້ສຶກທັງໝົດ. ອົງປະກອບທີ່ຄ້າຍຄືກັນນັ້ນແມ່ນຫຍັງ? ເມື່ອພວກເຮົາຮັກໃຜຜູ້ໜຶ່ງ, ເຮົາສະແຫວງຫາຄວາມໃກ້ຊິດຈາກພວກເຂົາ, ພວກເຮົາເຫັນພວກເຂົາ ເປັນຕາໜ້າສົນໃຈ, ພວກເຮົາຫວ່ງໄຍໃນຄວາມສຸກ ແລະທຸກຂອງພວກເຂົາ, ນິໄສ ຫຼືສັນດານໃດໆທີ່ພວກເຂົາອາດມີ ທີ່ຄົນອື່ນເຫັນແລ້ວລຳຄານໃຈກໍບໍ່ເປັນຫຍັງສຳລັບເຮົາ, ພວກເຮົາບໍ່ຈຳເປັນຕ້ອງພະຍາຍາມເຫັນອົກເຫັນໃຈພວກເຂົາ, ແຕ່ມັນຈະເປັນເອງໂດຍທຳມະຊາດ. *ຄວາມຮັກ* ເປັນຄຳເວົ້າສຳລັບຄວາມຜູກພັນ, *ຄວາມກະລຸນາ*, ຫວ່ງໄຍ ແລະເຫັນອົກເຫັນໃຈຕໍ່ຄົນອື່ນ. ຕາມປົກກະຕິ ພວກເຮົາຈະຮູ້ສຶກແນວນີ້ ຕໍ່ບຸກຄົນທີ່ພົວພັນກັບເຮົາໂດຍກົງ. ພຣະພຸດທະອົງຕັດວ່າ ພວກເຮົາຄວນຈະພະຍາຍາມຮູ້ສຶກແນວນີ້ຕໍ່ທຸກໆຄົນ. ພຣະພຸດທະອົງຕັດວ່າ:

*" ພຽງເໝືອນກັບມານດາ ຜູ້ປົກປ້ອງລູກພຽງຄົນດຽວ ແມ່ນແຕ່ຈະແລກດ້ວຍ ຊີວິດຂອງນາງ, ເຊັ່ນດຽວກັນ, ເຮົາຄວນມີຄວາມຮັກທີ່ຄະນານັບບໍ່ໄດ້ຕໍ່ສັບພະ ສິ່ງໃນໂລກນີ້."*
*Sn.149*

ໃນພຣະພຸດທະສາສະໜາ "immeasurable love ຄວາມຮັກທີ່ຄະນານັບບໍ່ໄດ້" ຫຼືຄວາມຮັກທີ່ເປັນອັບປະມັນຍາ ເອີ້ນວ່າ *ເມດຕາ* (ເມຕຕາ). ເມື່ອພວກເຮົາເຫັນຄົນອື່ນຕົກທຸກ

ຫຼືກະວົນກະວາຍໃຈ, ອົງປະກອບຂອງຄວາມຫວ່ງໄຍຂອງຄວາມຮັກກໍເດັ່ນຂຶ້ນ ແລະ ສະແດງອອກມາເປັນ *ຄວາມກະລຸນາ*. ດ້ວຍເຫດນີ້, *ຄວາມກະລຸນາ* ຄືທົບທາງແຫ່ງຄວາມຮັກທີ່ພົວພັນ ຕໍ່ບຸກຄົນທີ່ກຳລັງມີຄວາມທຸກ.

**ຄຳຖາມ: ຂ້ານ້ອຍຄຶດວ່າ ເມື່ອທ່ານມີຄວາມເມດຕາ ແລະເປັນຄົນທີ່ສຸພາບ ອ່ອນໂຍນ ກໍຈະມີຄົນເອົາປຽບເອົາລັດທ່ານແມ່ນບໍ?**

**ຄຳຕອບ:** ກໍອາດເປັນໄປໄດ້. ແຕ່ເລື່ອງນີ້ກໍສາມາດເກີດຂຶ້ນໄດ້ເຊັ່ນກັນ ແມ່ນແຕ່ທ່ານເປັນຄົນເຫັນແກ່ຕົວ ແລະເປັນຄົນຫົວດື້, ຍ້ອນວ່າຍັງຈະມີຄົນທີ່ຮຸນຮ້າຍກວ່າທ່ານອີກ ບໍ່ມີສິ່ງໃດຮັບປະກັນໄດ້ເລີຍ. ແຕ່ເຖິງຢ່າງໃດກໍຕາມ, ຖ້າເປັນຄວາມຈິງວ່າ ໃນຂະນະທີ່ມີຄົນພະຍາຍາມເອົາປຽບໃນຄວາມດີຂອງທ່ານນັ້ນ, ຍັງມີອີກຫຼາຍຄົນທີ່ຈະຊື່ນຊົມ ແລະ ປະຕິບັດຕໍ່ທ່ານດ້ວຍຄວາມເຄົາລົບ. ທ່ານຈະມີເພື່ອນທີ່ດີສະເໝີ ແລະມີຜູ້ຊ່ວຍເຫຼືອຫຼາຍກວ່າຜູ້ກົດຂີ່ຂົ່ມເຫັງ. ເຊັ່ນດຽວກັນ, ດ້ວຍເຫດໃດ ທ່ານຈິ່ງຄວນພະຍາຍາມພັດທະນາໃຫ້ມີໃນຕົວທ່ານເອງ ໃນສິ່ງທີ່ທ່ານກໍບໍ່ມັກໃນຕົວຄົນອື່ນ?



# ໗. ມັງສະວິລັດ(ມັງສະວິຣັຕ), ການບໍ່ຮັບປະທານຊີ້ນ

**ຄຳຖາມ: ຊາວພຸດຄວນຈະເປັນນັກມັງສະວິລັດ, ແມ່ນບໍ?**
**ຄຳຕອບ:** ບໍ່ຈຳເປັນ. ພຣະພຸດທະເຈົ້າບໍ່ແມ່ນນັກມັງສະວິລັດ, ພຣະພຸດທະອົງບໍ່ໄດ້ສອນສາວົກໃຫ້ເປັນນັກມັງສະວິລັດ, ແລະແມ່ນແຕ່ໃນປັດຈຸບັນນີ້, ຍັງມີຊາວພຸດທີ່ດີຈຳນວນຫຼວງຫຼາຍ ທີ່ບໍ່ແມ່ນນັກມັງສະວິລັດ. ໃນຄຳພີທາງພຣະພຸດທະສາສະໜາກ່າວວ່າ:

*" ເປັນຄົນບໍ່ສຸພາບ, ໄຮ້ຄວາມປານີ, ທັກຫຼັງເພື່ອນ, ທຳຮ້າຍເພື່ອນຕົນເອງ, ບໍ່ມີຫົວໃຈ, ຍະໂສໂອ້ອວດ ແລະໂລບມາກໂລພາ ນີ້ຄືສິ່ງທີ່ເຮັດໃຫ້ຄົນບໍ່ບໍລິສຸດ, ບໍ່ແມ່ນຍ້ອນຮັບປະທານຊີ້ນ.*

*ເປັນຄົນທຸສິນ(ທຸສີລະ), ອະກະຕັນຍູບຸນຄຸນຄົນສໍ້ໂກງໃນທຸລະກິດ, ສ້າງຄວາມແຕກແຍກໃຫ້ແກ່ຄົນອື່ນ ສິ່ງນີ້ເອງເຮັດໃຫ້ຄົນບໍ່ບໍລິສຸດ, ບໍ່ແມ່ນຍ້ອນຮັບປະ ທານຊີ້ນ."*
*Sn.246-7*

**ຄຳຖາມ: ແຕ່ຖ້າທ່ານຮັບປະທານຊີ້ນ ທ່ານກໍມີຄວາມຮັບຜິດຊອບຕໍ່ສັດທີ່ຖືກຂ້າ. ມັນບໍ່ເປັນການລວ່ງລະເມີດສິນຂໍ້ທີຫ້າບໍ?**
**ຄຳຕອບ:** ກໍເປັນຄວາມຈິງແທ້ ເມື່ອທ່ານຮັບປະທານຊີ້ນສັດ ທ່ານກໍມີສ່ວນຮັບຜິດຊອບໂດຍທາງອ້ອມ ຫຼືບາງສ່ວນສຳລັບການຂ້າສັດ ແຕ່ເຊັ່ນດຽວກັນ ມັນກໍເປັນຈິງຖ້າທ່ານຮັບປະທານຜັກ. ຊາວສວນຈະຕ້ອງສີດຢາໃສ່ພືດຂອງເຂົາ ດ້ວຍຢາຂ້າແມງໄມ້ ແລະຢາພິດ ກ່ອນທີ່ຜັກຈະມາປະກົດໃນຄາບເຂົ້າຕອນແລງຂອງທ່ານ ໂດຍທີ່ບໍ່ມີຮູຈ່ອງປ່ອງແຈ່ງແປ່ງໃນໃບຜັກນັ້ນ. ຍັງບໍ່ພໍເທົ່ານັ້ນ, ສັດກໍຖືກຂ້າ ເພື່ອນຳເອົາຂົນມາຜະລິດເປັນສາຍແອວ, ຖົງຫິ້ວຂອງທ່ານ, ນ້ຳມັນເພື່ອຜະລິດສະບູທີ່ທ່ານໃຊ້ ແລະຍັງມີຜະລິດຕະພັນອື່ນອີກພັນກວ່າຊະນິດອີກດ້ວຍ. ໃນບາງກໍລະນີ, ມັນເປັນໄປບໍ່ໄດ້ທີ່ຈະດຳລົງຊີວິດຢູ່ໂດຍປາສະຈາກການພາກຊີວິດຂອງສັດອື່ນໂດຍທາງອ້ອມ. ນອກຈາກນີ້, ຍັງມີຕົວຢ່າງອື່ນອີກກ່ຽວກັບອະລິຍະສັດ(ອະຣິຍະສັຈຈະ)ສີ່, ທຳມະດາການດຳລົງຊີວິດຢູ່ກໍເປັນທຸກ

ແລະເປັນສິ່ງທີ່ບໍ່ເພິ່ງພໍໃຈຢູ່ແລ້ວ. ເມື່ອທ່ານສະມາທານເອົາສິນຂໍ້ທີ ໑, ທ່ານກໍພະຍາຍາມຫຼີກເວັ້ນຈາກການຮັບຜິດຊອບຕໍ່ການຂ້າສັດໂດຍທາງອ້ອມ.

**ຄຳຖາມ: ຊາວພຸດມະຫາຍານ ບໍ່ຮັບປະທານຊີ້ນ.**
**ຄຳຕອບ:** ນັ້ນກໍຍັງບໍ່ຖືກຕ້ອງອີກ. ພຣະພຸດທະສາສະໜາມະຫາຍານໃນປະເທດຈີນ ໄດ້ວາງຂໍ້ກຳນົດຢ່າງເຂັ້ມງວດກ່ຽວກັບມັງສະວິລັດ ແຕ່ຍັງມີທັງພຣະສົງ, ຄະລາວາດຂອງນິກາຍມະຫາຍານໃນຍີ່ປຸ່ນ, ມົງໂກເລຍ ແລະທິເບດ ປົກກະຕິແມ່ນຮັບປະທານຊີ້ນ.

**ຄຳຖາມ: ແຕ່ຂ້ານ້ອຍກໍຍັງຄຶດວ່າ ຊາວພຸດຄວນຈະເປັນນັກມັງສະວິລັດ.**
**ຄຳຕອບ:** ຖ້າຫາກວ່າມີບຸກຄົນໃດໜຶ່ງ ຜູ້ທີ່ເປັນນັກມັງສະວິລັດຢ່າງເຄັ່ງຄັດ ແຕ່ວ່າເປັນຄົນເຫັນແກ່ຕົວ, ບໍ່ຊື່ສັດ ແລະໃຈຄັບແຄບ, ແລະອີກຄົນໜຶ່ງບໍ່ແມ່ນນັກມັງສະວິລັດ ແຕ່ເປັນບຸກຄົນຄຶດເຫັນອົກເຫັນໃຈຕໍ່ຄົນອື່ນ, ຊື່ສັດ, ໃຈກວ້າງ ແລະມີຄວາມກະລຸນາ, ໜຶ່ງໃນສອງຄົນນີ້ ໃຜຈະເປັນຊາວພຸດທີ່ດີ?

**ຄຳຖາມ: ບຸກຄົນຜູ້ທີ່ມີຄວາມຊື່ສັດ ແລະຄວາມກະລຸນາ.**
**ຄຳຕອບ: ດ້ວຍເຫດໃດ?**

**ຄຳຖາມ: ເພາະວ່າບຸກຄົນເຊັ່ນນັ້ນ ເປັນຄົນທີ່ມີຈິດໃຈດີ ຢ່າງເຫັນໄດ້ຊັດເຈນ.**
**ຄຳຕອບ:** ແນ່ນອນຢູ່ແລ້ວ. ບຸກຄົນຜູ້ທີ່ຮັບປະທານຊີ້ນ ອາດຈະມີຈິດໃຈທີ່ບໍລິສຸດເຊັ່ນດຽວກັນກັບບຸກຄົນຜູ້ບໍ່ຮັບປະທານຊີ້ນ ກໍສາມາດມີຈິດໃຈທີ່ມີມົນທິນເຊັ່ນກັນ. ໃນຄຳສອນຂອງພຣະພຸດທະເຈົ້າ, ສິ່ງທີ່ສຳຄັນຄືຄຸນສົມບັດຂອງຈິດໃຈຂອງທ່ານ, ບໍ່ແມ່ນຢູ່ທີ່ອາຫານ. ມີຫຼາຍຄົນເອົາໃຈໃສ່ແທ້ໆ ກ່ຽວກັບການບໍ່ຮັບປະທານຊີ້ນ, ແຕ່ພວກເຂົາອາດຈະບໍ່ເອົາໃຈໃສ່ ກ່ຽວກັບການເຫັນແກ່ຕົວ, ຄວາມບໍ່ຊື່ສັດ, ໂຫດຮ້າຍທາລຸນ ຫຼືອິດສາ. ພວກເຂົາປ່ຽນການຮັບປະທານອາຫານທີ່ເປັນສິ່ງເຮັດໄດ້ງ່າຍ ໃນຂະນະທີ່ບໍ່ໃສ່ໃຈໃນການປ່ຽນແປງຈິດໃຈຂອງຕົນທີ່ເປັນສິ່ງທີ່ຍາກ. ດັ່ງນັ້ນ, ເຖິງແມ່ນວ່າທ່ານຈະເປັນນັກມັງສະວິລັດ ຫຼືບໍ່ກໍຕາມ, ຈົ່ງຈຳເອົາໄວ້ວ່າ ຄວາມບໍລິສຸດແຫ່ງຈິດໃຈ ເປັນສິ່ງສຳຄັນທີ່ສຸດໃນພຣະພຸດທະສາສະໜາ.

**ຄຳຖາມ: ແຕ່ວ່າ ຈາກທັດສະນະຂອງພຣະພຸດທະສາສະໜາ, ບຸກຄົນຜູ້ໃຈດີ ແລະເປັນນັກມັງສະວິລັດ ອາດດີກວ່າບຸກຄົນຜູ້ມີຈິດໃຈດີ ແລະເປັນຜູ້ຮັບປະທານຊີ້ນບໍ?**

**ຄຳຕອບ:** ຖ້າຫາກວ່ານັກມັງສະວິລັດທີ່ໃຈດີ ເປັນແຮງບັນດານໃຈໃນການຫຼີກລ່ຽງຈາກການຮັບປະທານຊີ້ນ ແມ່ນການຫວ່ງໄຍຕໍ່ສັດ ແລະບໍ່ຕ້ອງການກ່ຽວຂ້ອງໃນຄວາມໂຫດຮ້າຍປ່າເຖື່ອນຂອງອຸດສະຫະກຳການລ້ຽງສັດໃນຍຸກໃໝ່, ແລະແນ່ນອນວ່າ ເຂົາອາດຈະພັດທະນາຄວາມກະລຸນາ ແລະຄວາມຫວ່ງໄຍຕໍ່ຄົນອື່ນ ສູ່ລະດັບສູງກວ່າບຸກຄົນທີ່ຮັບປະທານຊີ້ນກໍ່ມີ. ມີຫຼາຍຄົນເຫັນວ່າ ເມື່ອພວກເຂົາພັດທະນາທາງດ້ານທຳມະ ພວກເຂົາຈະມີແນວໂນ້ມໂດຍທຳມະຊາດ ທີ່ຈະກາຍເປັນນັກມັງສະວິລັດນິຍົມ.

**ຄຳຖາມ: ບາງຄົນບອກຂ້ານ້ອຍວ່າ ພຣະພຸດທະເຈົ້ານິບພານ(ຕາຍ) ຍ້ອນສັນຊີ້ນບູດ. ແມ່ນຄວາມຈິງບໍ?**

**ຄຳຕອບ:** ບໍ່ ບໍ່ແມ່ນດອກ. ຄຳພີພຣະໄຕປິດົກກ່າວໄວ້ວ່າ ອາຫານຄາບສຸດທ້າຍຂອງພຣະພຸດທະເຈົ້າປະກອບມີອາຫານຊື່ວ່າ *ສຸກາຣະມັທທະວະ.* ຄຳສັບນີ້ບໍ່ ຄ່ອຍເປັນທີ່ເຂົ້າໃຈປານໃດ ແຕ່ຄຳວ່າ *ສຸກາຣະ* ໝາຍຄວາມວ່າໝູ. ດັ່ງນັ້ນ, ມັນອາດຈະໝາຍເຖິງການກະກຽມຊີ້ນໝູເປັນອາຫານກໍເປັນໄດ້ ແລະມັນອາດໝາຍເຖິງຜັກບາງປະເພດ, ເປັນປະເພດເຂົ້າໜົມ ຫຼືຢ່າງອື່ນ. ບໍ່ວ່າມັນຈະເປັນຫຍັງ, ການກ່າວເຖິງອາຫານປະເພດນີ້ເຮັດໃຫ້ບາງຄົນຄຶດວ່າ ການສັນຊີ້ນໝູ ເປັນເຫດໃຫ້ພຣະພຸດທະເຈົ້າປະລິນິບພານ(ປະຣິນິພພານ). ພຣະພຸດທະອົງມີອາຍຸ ໘໐ ພັນສາແລ້ວ ແລະກ່ອນທີ່ຈະປະລິນິບພານ, ພຣະອົງຊົງອາພາດ(ບໍ່ສະບາຍ)ບາງຄັ້ງ. ຄວາມເປັນຈິງແລ້ວ ພຣະພຸດທະອົງປະລິນິບພານດ້ວຍໂລກຊະລາ(ໂຣຄຊະຣາ).

## ຌ. ຄວາມໂຊກດີ ແລະໂຊກຊະຕາກໍາ

**ຄໍາຖາມ: ພຣະພຸດທະເຈົ້າໄດ້ສອນແນວໃດກ່ຽວກັບເວດມົນ ແລະການດູມໍ?**

**ຄໍາຕອບ:** ພຣະພຸດທະອົງເຫັນວ່າ ການປະຕິບັດເຊັ່ນ ການດູມໍ, ການໃສ່ເຄື່ອງລາງຂອງຂັງເພື່ອປ້ອງກັນຕົວ, ການເລືອກສະຖານທີ່ໂຊກດີເພື່ອສ້າງອາຄານ ແລະການເລືອກມື້ເລືອກວັນ ເປັນຄວາມເຊື່ອຖືທີ່ບໍ່ຈໍາເປັນ ແລະພຣະພຸດທະອົງກໍຊົງຫ້າມສາວົກ ບໍ່ໃຫ້ປະຕິບັດສິ່ງນັ້ນ. ພຣະພຸດທະອົງຮຽກສິ່ງທັງຫຼາຍເຫຼົ່ານີ້ວ່າ ວິຊາຊັ້ນຕໍ່າ "*ຕິຣັຈສານະວິຊຊາ* "[8]. ພຣະພຸດທະອົງຕັດວ່າ:

"*ດ້ວຍເຫດວ່ານັກສາສະໜາບາງຄົນ, ໃນຂະນະທີ່ໄດ້ຮັບອາຫານຖວາຍໂດຍບຸກຄົນຜູ້ມີສັດທາ, ດໍາລົງຊີວິດຂອງພວກເຂົາຢູ່ດ້ວຍເດຍລັດສານວິຊາເຊັ່ນນັ້ນ ການດໍາລົງຊີວິດແບບມິດສາຊີບເຊັ່ນນັ້ນຄື ເປັນໝໍດູລາຍມື, ດູຂີ້ແມງວັນໄຝປານ, ທໍານາຍຄວາມຝັນ ...ເປັນຜູ້ນໍາໂຊກດີ ແລະໂຊກຮ້າຍ...ຊອກຫາສະຖານທີ່ທີ່ເປັນມຸງຄຸນ ເພື່ອສ້າງອາຄານບ້ານເຮືອນ, ພຣະສະມະນະໂຄດົມ ເວັ້ນຈາກຕິຣັຈສານະວິຊຊານັ້ນແລ້ວ, ນັ້ນຄືການດໍາລົງຊີວິດທີ່ເປັນມິດສາຊີບ.*"

*D.I, 9-12*

**ຄໍາຖາມ: ຄັນຊັ້ນ ເປັນຫຍັງບາງຄົນຈິ່ງຍັງປະຕິບັດ ແລະເຊື່ອໃນສິ່ງນັ້ນຢູ່?**

**ຄໍາຕອບ:** ເນື່ອງມາຈາກຄວາມໂລບ, ຄວາມຢ້ານ ແລະອະວິດຊາ (ຄວາມບໍ່ຮູ້ຈິງ). ເມື່ອໃດທີ່ຄົນເຮົາເຂົ້າໃຈໃນຄໍາສອນຂອງພຣະພຸດທະເຈົ້າ ພວກເຂົາຈະຮູ້ວ່າ ຫົວໃຈທີ່ບໍລິສຸດນັ້ນ ສາມາດປົກປັກຮັກສາເຂົາໄດ້ດີກວ່າ ສິ້ນສ່ວນນ້ອຍໆຂອງເຈ້ຍ, ໝາກຫຼອດຄາຖາ ແລະເຂົາກໍຈະບໍ່ເພິ່ງພາສິ່ງນັ້ນອີກ. ໃນຄໍາສອນຂອງພຣະພຸດທະເຈົ້າ, ມີຄວາມຊື່ສັດ, ຄວາມກະລຸນາ, ຄວາມເຂົ້າໃຈ, ຄວາມອົດທົນ, ການໃຫ້ອະໄພ, ຄວາມເອື້ອເຟື້ອ

---

[8] *ຕິຣັຈສານະວິຊຊາ* ອ່ານວ່າ ຕິລັດສານະວິດຊາ ເປັນວິຊາຂອງພວກເດຍລະຖີ ຫຼືພວກນອກສາສະໜາ ມີເວດມົນກົນຄາຖາເປັນຕົ້ນ.

ເພື່ອແຜ່, ຄວາມຈິງຮັກພັກດີ ແລະການມີສີລະທຳ(ສີລະທັມມະ)ອື່ນໆທີ່ດີ ທີ່ສາມາດຄຸ້ມຄອງ ແລະເຮັດໃຫ້ທ່ານພົບກັບຄວາມຈະເລີນຢ່າງແທ້ຈິງ.

**ຄຳຖາມ: ແຕ່ເຄື່ອງລາງຂອງຂັງບາງອັນກໍດີແທ້ ບໍ່ແມ່ນບໍ?**

**ຄຳຕອບ:** ອາຕະມາຮູ້ຈັກກັບຄົນຜູ້ທີ່ດຳລົງຊີວິດຢູ່ດ້ວຍການຂາຍເຄື່ອງລາງຂອງຂັງ. ລາວປະກາດວ່າຂອງຂັງຂອງລາວສາມາດໃຫ້ຄວາມໂຊກດີ, ໃຫ້ຄວາມຈະເລີນຮຸ່ງເຮືອງ ແລະລາວຮັບປະກັນວ່າ ທ່ານສາມາດຖືກຫວຍຮາງວັນທີໜຶ່ງໄດ້. ແຕ່ຖ້າລາວເວົ້າຈິງແລ້ວ ເປັນຫຍັງລາວຈິ່ງບໍ່ເປັນເສດຖີເອງ. ຖ້າຫາກວ່າຂອງຂັງລາວສັກສິດແທ້, ເປັນຫຍັງລາວຈິ່ງບໍ່ຖືກຫວຍອາທິດຕໍ່ອາທິດ? ຄວາມໂຊກດີຢ່າງດຽວທີ່ລາວມີນັ້ນຄື ຍັງມີຄົນທີ່ໂງ່ພໍ ທີ່ຈະໄປຊື້ເຄື່ອງລາງຂອງຂັງນຳລາວ.

**ຄຳຖາມ: ແລ້ວ ຍັງມີສິ່ງນັ້ນເປັນຂອງໃຫ້ຄວາມໂຊກດີຢູ່ບໍ?**

**ຄຳຕອບ:** ພົດຈະນານຸກົມ ໄດ້ໃຫ້ຄວາມໝາຍຂອງ luck ຄວາມໂຊກດີ "ຄວາມເຊື່ອໃນສິ່ງໃດກໍຕາມທີ່ເກີດຂຶ້ນ, ດີ ຫຼືບໍ່ດີ, ຕໍ່ບຸກຄົນໃດໜຶ່ງໃນເຫດການ ແລ້ວແຕ່ໂອກາດ, ໂຊກຊະຕາກຳ ຫຼືຄວາມໂຊກດີ". ພຣະພຸດທະເຈົ້າຊົງປະຕິເສດຄວາມເຊື່ອຖືນີ້ຢ່າງສິ້ນເຊີງ. ທຸກສິ່ງທຸກຢ່າງເກີດຂຶ້ນຈາກເຫດແນ່ນອນໃດໜຶ່ງ ຫຼືເຫດຫຼາຍຢ່າງ ແລະອາດມີສວ່ນພົວພັນກັນບາງຢ່າງລະຫວ່າງເຫດ ແລະຜົນນັ້ນ. ຕົວຢ່າງ, ການເປັນໄຂ້ ກໍມີເຫດສະເພາະໃດໜຶ່ງ. ຄົນເຮົາອາດຈະຕິດເຊື້ອພະຍາດ ແລະຮ່າງກາຍຄົນນັ້ນອາດຈະອ່ອນແອພໍ ທີ່ຈະເຮັດໃຫ້ເຊື້ອພະຍາດນັ້ນກໍ່ຕົວໄດ້. ມີສວ່ນພົວພັນທີ່ແນ່ນອນລະຫວ່າງເຫດ(ເຊື້ອພະຍາດ ແລະຮ່າງກາຍທີ່ອ່ອນແອ) ແລະຜົນ(ອາການໄຂ້)ເພາະເຮົາກໍຮູ້ວ່າ ເຊື້ອພະຍາດທຳລາຍອະໄວຍະວະໃນຮ່າງກາຍ ແລະກໍໃຫ້ເກີດອາການໄຂ້. ແຕ່ວ່າ ບໍ່ມີສວ່ນພົວພັນໃດ ທີ່ສາມາດພົບໄດ້ຈາກການສວມໃສ່ເສດເຈ້ຍທີ່ຂຽນຄຳເວົ້າລົງໄປ ທີ່ຈະເຮັດໃຫ້ຮັ່ງມີ ຫຼືສອບເສັງໄດ້. ພຣະພຸດທະສາສະໜາສອນວ່າ ທຸກສິ່ງທຸກຢ່າງເກີດຂຶ້ນຍ້ອນມາຈາກເຫດໃດໜຶ່ງ ບໍ່ແມ່ນຍ້ອນມາຈາກຄວາມໂຊກດີ, ໂອກາດ ຫຼືໂຊກຊະຕາກັນໃດໆ. ບຸກຄົນໃດ ທີ່ສົນໃຈໃນເລື່ອງຂອງຄວາມໂຊກດີ ມັກຈະພະຍາຍາມເພື່ອຈະໄດ້ມາບາງຢ່າງ ຕາມປົກກະຕິແມ່ນເລື່ອງເງິນ ແລະຄວາມຮັ່ງມີ.ພຣະພຸດທະເຈົ້າຊົງສອນເອົາໄວ້ວ່າ ມີສິ່ງທີ່ສຳຄັນກວ່ານັ້ນຄື ການພັດທະນາຈິດໃຈຂອງເຮົາ. ພຣະພຸດທະອົງຕັດວ່າ:

“ *ການເປັນພະຫູສູດ ແລະມີທັກສະຄວາມຊຳນານດີ, ເປັນຜູ້ຝຶກມາດີແລ້ວ ແລະເປັນ ຜູ້ກ່າວວາຈາສຸພາສິດ; ນີ້ຄືເປັນຄວາມໂຊກດີອັນສູງສຸດ. ການອຸປະຖຳບິດາມານດາ, ການທະນຸບຳລຸງສາມີພັນລະຍາ ແລະບຸດ ແລະການລ້ຽງຊີວິດໂດຍຊອບທຳ; ນີ້ເປັນມຸງຄຸນອັນອຸດົມ. ການເປັນຄົນໃຈກວ້າງ, ຍຸດຕິທຳ(ຍຸຕຕິທັມມະ), ຊວ່ຍເຫຼືອຍາດຕິພີ່ນ້ອງເປັນຜູ້ກະທຳໃນສິ່ງທີ່ຖືກຕ້ອງບໍ່ມີທີ່ຕິ; ນີ້ຄື ສິ່ງທີ່ເປັນຄວາມໂຊກດີສູງສຸດ. ການລະເວັ້ນຈາກການທຳຊົ່ວ ແລະຈາກການດື່ມຂອງມຶນເມົາ ແລະຕັ້ງໝັ້ນຢູ່ໃນສິນຢູ່ສະເໝີ; ນີ້ແມ່ນສິ່ງໂຊກດີອັນສູງສຸດ. ການໃຫ້ຄວາມເຄົາລົບ, ຄວາມອອ່ນນ້ອມຖ່ອມຕົນ, ຄວາມພໍໃຈສັນໂດດ, ຄວາມກະຕັນຍູ ແລະການຟັງທຳທີ່ສົມຄວນ; ນີ້ຄືສິ່ງທີ່ເປັນຄວາມໂຊກດີ.*”

*Sn.261-6*



# ໑໐. ພຣະສົງ ແລະພິກຂຸນີ(ລວມທັງແມ່ຂາວ)

**ຄຳຖາມ: ວັດ ເປັນສະຖາບັນສິ່ງສຳຄັນໃນພຣະພຸດທະສາສະໜາ. ແມ່ນຫຍັງຄືຈຸດປະສົງເປົ້າໝາຍຂອງພຣະສົງ ແລະແມ່ຂາວ[9] ແລະພວກເຂົາຄວນຈະເຮັດແນວໃດ?**

**ຄອບຕອບ:** ຕາມພຸດທະປະສົງໃນການສ້າງຕັ້ງຄະນະສົງ ແລະແມ່ຂາວຂຶ້ນມາ ແມ່ນເພື່ອການສ້າງສະພາບແວດລ້ອມ ທີ່ການພັດທະນາທາງດ້ານສາສະໜາງ່າຍຂຶ້ນ. ຝ່າຍຄາລະວາດກຳຈັດຫາປັດໄຈສີ່ແດ່ພຣະສົງ ແລະແມ່ຂາວມີອາຫານ, ເຄື່ອງນຸ່ງຫົ່ມ, ທີ່ຢູ່ອາໄສ ແລະຢາປົວພະຍາດ. ຄວາມເປັນລະບຽບ ແລະວິຖີຊີວິດແບບລຽບງ່າຍຂອງພຣະສົງ ແມ່ນເປັນໄປເພື່ອຄວາມສະຫງົບພາຍໃນ ແລະການຝຶກສະມາທິ. ເພື່ອຕອບສະໜອງອອກຕົນຍາດໂຍມ, ຝ່າຍພຣະສົງ ແລະແມ່ຂາວ ກໍຫວັງຈະແບ່ງປັນສິ່ງທີ່ພວກເຂົາຮຽນຮູ້ກັບສັງຄົມ ແລະປະຕິບັດຕົນໃຫ້ເປັນແບບຢ່າງເຊັ່ນ ຊາວພຸດທີ່ດີຄວນດຳລົງຊີວິດຢູ່ຢ່າງໃດ. ໃນທາງປະຕິບັດຕົວຈິງ, ພາລະກິດພື້ນຖານອັນນີ້ ບາງຄັ້ງກໍຂະຫຍາຍອອກໄປໄກເກີນກວ່າເຈຕະນາເດີມຂອງພຣະພຸດທະອົງ. ໃນປັດຈຸບັນ ພຣະສົງ ແລະແມ່ຂາວ ບາງທີກໍມີໜ້າທີ່ເປັນຄູສອນໂຮງຮຽນ, ເຮັດວຽກຊ່ວຍເຫຼືອສັງຄົມ, ເປັນນັກສິລະປິນ, ທ່ານໝໍ ແລະແມ່ນແຕ່ເປັນນັກການເມືອງ. ບາງຄົນກໍໃຫ້ເຫດຜົນວ່າ ການມີບົດບາດເຊັ່ນນັ້ນ ກໍບໍ່ເປັນຫຍັງຖ້າຫາກວ່າ ເປັນການຊ່ວຍເຫຼືອເພື່ອສົ່ງເສີມພຣະພຸດທະສາສະໜາ. ແຕ່ພວກອື່ນມີຄວາມເຫັນວ່າ ການເຮັດ ເຊັ່ນນັ້ນ ເປັນການງ່າຍທີ່ ພຣະສົງ ແລະແມ່ຂາວ ຈະໄປຕິດຂ້ອງຢູ່ໃນບັນຫາຂອງໂລກີວິໄສ ແລະອາດຈະເປັນການລືມຈຸດປະສົງມຸ້ງໝາຍເດີມຂອງຕົນເອງ ໃນການເຂົ້າມາຢູ່ໃນວັດເບື້ອງຕົ້ນນັ້ນ.

**ຄຳຖາມ: ທ່ານຄວນຈະເປັນພຣະສົງ ຫຼືແມ່(ຮູ້ແຈ້ງທຳ)?**

---

[9] ທີ່ຈິງແລ້ວ nun ເຊິ່ງສວ່ນໃຫຍ່ແປວ່າ ແມ່ຂາວ, ແຕ່ໃນປຶ້ມນີ້ ເມື່ອອ່ານເບິ່ງລະອຽດ ແລ້ວຜູ້ຂຽນຢາກເນັ້ນໜັກເຖິງພິກຂຸນີ(ຄູບາຜູ້ຍິງ)ຫຼາຍກວ່າ ແຕ່ພຣະພຸດທະສາສະໜາ ຝ່າຍເຖລະວາດໃນລາວເຮົາບໍ່ມີພິກຂຸນີແລ້ວ. ດັ່ງນັ້ນ, ຈິ່ງສົມຄວນແປວ່າ ແມ່ຂາວແທນ.

**ຄຳຕອບ:** ແນ່ນອນຍັງບໍ່ແມ່ນ. ສາວົກບາງຄົນຂອງພຣະພຸດທະເຈົ້າທີ່ປະສົບຜົນສຳເລັດ ຄື ທັງເປັນອຸບາສົກ ແລະອຸບາສິກາ. ບາງຄົນມີຄວາມກ້າວໜ້າທາງທຳ(ທັມມະ)ພຽງພໍ ທີ່ຈະສອນພຣະສົງໄດ້. ໃນທາງພຣະພຸດທະສາສະໜາ, ລະດັບຄວາມເຂົ້າໃຈໃນທຳເປັນສິ່ງທີ່ສຳຄັນທີ່ສຸດ ແລະບໍ່ຈຳເປັນວ່າຈະເປັນຜູ້ທີ່ນຸ່ງຈີວອນສີເຫຼືອງ ຫຼືນຸ່ງສົ້ງຢືນສີຟ້າ, ຫຼືບໍ່ວ່າຈະເປັນຜູ້ອາໄສຢູ່ໃນວັດ ຫຼືຢູ່ບ້ານ. ບາງຄົນອາດເຫັນວ່າ ວັດເປັນສະຖານທີ່ມີທັງຈຸດດີ ແລະຈຸດອອ່ນ ທີ່ມີສະພາບແວດລ້ອມທີ່ດີທີ່ສຸດ ເພື່ອການພັດທະນາທາງດ້ານຈິດໃຈ. ບາງຄົນອາດເຫັນວ່າ ບ້ານທີ່ປະກອບດ້ວຍຄວາມສຸກ ແລະຄວາມເສົ້າ, ເປັນບ່ອນທີ່ດີທີ່ສຸດ. ທຸກຄົນລ້ວນແຕ່ມີຄວາມຄິດແຕກຕ່າງກັນ.

**ຄຳຖາມ: ເປັນຫຍັງຄູບາ ແລະແມ່ຂາວໃນພຣະພຸດທະສາສະໜາຈິ່ງຫົ່ມຈີວອນສີເຫຼືອງ?**

**ຄຳຕອບ:** ເມື່ອຊາວອິນເດຍບູຮານແຫງນເບິ່ງປ່າ ພວກເຂົາສາມາດບອກໄດ້ວ່າ ໃບໄມ້ໃບໃດ ກຳລັງຈະຫຼົ່ນອອກຈາກຕົ້ນ, ຍ້ອນວ່າໃບໄມ້ເປັນສີເຫຼືອງ, ສີສົ້ມ ຫຼືສີນ້ຳຕານ. ຍ້ອນເຫດນີ້ເອງ, ໃນປະເທດອິນເດຍ, ສີເຫຼືອງຈິ່ງເປັນສີຂອງເນກຂຳມະ(ເນກຂັມມະ) (ສັນຍະລັກຂອງການອອກບວດ). ຜ້າຄຸມຂອງພຣະສົງ ແລະພິກຂຸນີ(ຖ້າແມ່ຂາວກໍຫົ່ມສີຂາວ) ຈິ່ງເປັນສີເຫຼືອງ ເພື່ອວ່າພວກເຂົາສາມາດປະພຶດຕົນເປັນສິ່ງເຕືອນໃຈຢູ່ເລື້ອຍໆ ກ່ຽວກັບຄວາມສຳຄັນຂອງການບໍ່ຍຶດໝັ້ນຖືໝັ້ນ, ການປ່ອຍວາງ ແລະການເສຍສະຫຼະ.

**ຄຳຖາມ: ແມ່ນຫຍັງຄືຈຸດປະສົງການແຖຜົມຂອງພຣະສົງ ແລະແມ່ຂາວ?**

**ຄຳຕອບ:** ຕາມປົກກະຕິແລ້ວ ພວກເຮົາມັກໃສ່ໃຈກ່ຽວກັບຮູບຮ່າງໜ້າຕາຂອງເຮົາ, ໂດຍສະເພາະແມ່ນເລື່ອງຜົມ. ຜູ້ຍິງເຫັນວ່າຜົມດີເປັນເລື່ອງສຳຄັນ ແລະຜູ້ຊາຍຂ້ອນຂ້າງຈະເປັນຫວ່ງຢ້ານເປັນຄົນຫົວລ້ານ. ການຮັກສາຜົມໃຫ້ຈົບງາມ ກໍຕ້ອງໄດ້ໃຊ້ເວລາດົນພໍສົມຄວນ. ໃນການແຖຜົມຂອງພວກເຂົາ, ພຣະສົງ ແລະແມ່ຂາວໃຊ້ເວລາພໍສົມຄວນສຳລັບສິ່ງທີ່ເຫັນວ່າສຳຄັນນີ້. ເຊັ່ນດຽວກັນ, ຫົວໂຫຼ້ນ, ເປັນສັນຍະລັກຂອງການເອົາໃຈໃສ່ຕໍ່ການປຸ່ງແປງພາຍໃນ ຫຼາຍກວ່າຮູບຮ່າງໜ້າຕາພາຍນອກ.

**ຄຳຖາມ: ການເປັນພຣະສົງເປັນເລື່ອງທີ່ດີ ແຕ່ວ່າມັນຈະເປັນແນວໃດຖ້າຫາກທຸກຄົນເປັນພຣະສົງ(ທຸກຄົນບວດໝົດ)?**

**ຄຳຕອບ:** ອາດມີຄົນຖາມໃນສິ່ງດຽວກັນກ່ຽວກັບອາຊີບ. "ການເປັນໝໍປົວແຂ້ວ ແມ່ນເປັນການດີຫຼາຍ ແຕ່ຈະເປັນແນວໃດ ຖ້າຫາກທຸກຄົນເປັນໝໍປົວແຂ້ວໝົດ?" ຄຳຕອບກໍຄື ມັນອາດຈະບໍ່ມີນາຍຄູ, ບໍ່ມີຄົນເຮັດອາຫານ, ບໍ່ມີຄົນຂັບລົດແທກຊີ" ແລະຖ້າຖາມອີກວ່າ "ການເປັນນາຍຄູເປັນເລື່ອງທີ່ດີຫຼາຍ ແຕ່ຈະເປັນແນວໃດ ຖ້າທຸກຄົນເປັນນາຍຄູ?" ມັນຄົງຈະບໍ່ມີໝໍປົວແຂ້ວ, ແລະອື່ນໆ" ພຣະພຸດທະເຈົ້າບໍ່ໄດ້ແນະນຳວ່າ ທຸກຄົນຄວນຈະເປັນຄູບາ ຫຼືແມ່ຂາວ ແລະແນ່ນອນ ເລື່ອງແບບນີ້ຈະບໍ່ມີວັນເກີດຂຶ້ນ. ແຕ່ເຖິງຢ່າງໃດກໍຕາມ, ຍ່ອມຈະມີບຸກຄົນຜູ້ທີ່ສົນໃຈໃນຊີວິດທີ່ລຽບງ່າຍ ແລະການເສຍສະຫຼະເພື່ອອອກບວດສະເໝີ ແລະເປັນບຸກຄົນທີ່ຍິນດີໃນຄຳສອນຂອງພຣະພຸດທະເຈົ້າກວ່າສິ່ງອື່ນໃດ ແລະເຊັ່ນດຽວກັນກັບໝໍປົວແຂ້ວ ແລະນາຍຄູ,ພວກເຂົາກໍມີທັກສະ ແລະຄວາມຮູ້ພິເສດທີ່ເປັນປະໂຫຍດຕໍ່ຊຸມຊົນທີ່ພວກເຂົາອາໄສຢູ່ນັ້ນ.

**ຄຳຖາມ: ມັນອາດຈະເປັນເຊັ່ນນັ້ນສຳລັບບຸກຄົນຜູ້ທີ່ສອນ, ຂຽນປຶ້ມ ຫຼືເຮັດວຽກເພື່ອສັງຄົມ. ແຕ່ສຳລັບພຣະສົງ ແລະແມ່ຂາວ ຜູ້ທີ່ບໍ່ໄດ້ເຮັດຫຍັງ ມີແຕ່ນັ່ງສະມາທິ. ພວກເພິ່ນເຮັດປະໂຫຍດແນວໃດແນ່ຕໍ່ສັງຄົມ?**

**ຄຳຕອບ:** ທ່ານອາດຈະປຽບທຽບພຣະສົງ ຜູ້ນັ່ງສະມາທິກັບນັກວິໄຈທາງວິທະຍາສາດ. ສັງຄົມສະໜັບສະໜູນນັກວິໄຈທາງວິທະຍາສາດ ເມື່ອເຂົານັ່ງຢູ່ໃນຫ້ອງວິໄຈເພື່ອທຳການທົດລອງເພາະວ່າມີຄວາມຫວັງວ່າ ໃນທີ່ສຸດເຂົາຈະຄົ້ນພົບ ຫຼືຜະລິດສິ່ງໃດສິ່ງໜຶ່ງອອກມາ ເພື່ອວ່າຈະເປັນຜົນດີຕໍ່ຄົນທົ່ວໄປ. ເຊັ່ນດຽວກັນ, ສັງຄົມຊາວພຸດກໍສະໜັບສະໜູນພຣະກຳມະຖານ(ພຣະສົງຜູ້ຝຶກສະມາທິ)(ແລະຄວາມຕ້ອງການຂອງເພິ່ນກໍບໍ່ມີຫຍັງຫຼາຍດອກ) ຍ້ອນມີຄວາມຫວັງວ່າ ເພິ່ນຈະໄດ້ບັນລຸປັນຍາ ແລະວິປັດສະນາຍານ (ວິປັສສະນາຍານ) ທີ່ອາດເປັນຜົນດີຕໍ່ຄົນທົ່ວໄປ. ແຕ່ເຖິງແມ່ນວ່າ ເຫດການນີ້ຈະເກີດຂຶ້ນ ຫຼືບໍ່ເກີດຂຶ້ນກໍຕາມ, ພຣະກຳມະຖານ ກໍຍັງນຳຜົນປະໂຫຍດແກ່ຄົນອື່ນຢູ່ດີ. ໃນບາງສັງຄົມທີ່ທັນສະໄໝ, "ແບບວິຖີຊີວິດຂອງຄົນລວຍ ແລະຄົນດັງ" ຜູ້ດຳລົງຊີວິດຢູ່ຢ່າງຟຸມເຟືອຍ, ເປັນການບໍລິໂພກຊົມໃຊ້ທີ່ເຫັນໄດ້ທົ່ວໄປ ແລະຄວາມຖະຫຼຳຕົວຂອງພວກເຂົາ ເຊິ່ງມັນໄດ້ເຮັດໃຫ້ເປັນເໝືອນອຸດົມຄະຕິຊວນເຮັດຕາມ, ຫຼືຢ່າງນ້ອຍກໍໜ້າ

ອິດສາລິດສະຫຍາ. ຕົວຢ່າງຂອງພຣະກຳມະຖານ ເປັນສິ່ງເຕືອນໃຈໃຫ້ພວກເຮົາຮູ້ວ່າ ຄົນເຮົາບໍ່ຈຳເປັນຈະຕ້ອງຮັ່ງມີຈິ່ງຈະພໍໃຈ. ມັນໄດ້ສະແດງໃຫ້ເຮົາເຫັນວ່າ ແບບວິຖີຊີວິດທີ່ສຸພາບ ແລະງ່າຍດາຍສັນໂດດ ກໍມີຜົນດີເຊັ່ນກັນ.

**ຄຳຖາມ: ຂ້ານ້ອຍໄດ້ຍິນມາວ່າ ພິກຂຸນີ(ຄູບາຜູ້ຍິງ)ບໍ່ມີແລ້ວ. ແມ່ນແທ້ບໍ?**

**ຄຳຕອບ:** ພຣະພຸດທະເຈົ້າສ້າງຄະນະສົງພິກຂຸນີຂຶ້ນມາໃນສະໄໝ ທີ່ພຣະພຸດທະອົງຍັງຊົງພຣະຊົນຢູ່ ແລະຕໍ່ມາປະມານຫ້າຮ້ອຍ ຫຼືຫົກຮ້ອຍປີ, ພິກຂຸນີໄດ້ມີບົດບາດສຳຄັນ ໃນການເຜີຍແຜ່ ແລະພັດທະນາພຣະພຸດທະສາສະໜາ. ແຕ່ຍ້ອນເຫດຜົນທີ່ບໍ່ຄ່ອຍຈະແຈ້ງປານໃດ ທີ່ພິກຂຸນີບໍ່ໄດ້ຮັບການເຄົາລົບ ຫຼືອຸປະຖຳເໝືອນເຊັ່ນເຄີຍເໝືອນກັບພຣະສົງໃນອິນເດຍ ແລະໃນເອເຊຍຕາເວັນອອກສ່ຽງໃຕ້ ຈິ່ງເຮັດໃຫ້ພິກຂຸນີສົງເສື່ອມໄປ. ແຕ່ເຖິງຢ່າງໃດກໍຕາມ, ໃນປະເທດໄຕ້ຫວັນ, ເກົາຫຼີ ແລະຍີ່ປຸ່ນ ຄະນະສົງຂອງພິກຂຸນີ ຍັງສືບຕໍ່ຈະເລີນງອກງາມຢູ່. ປັດຈຸບັນນີ້, ໃນປະເທດສີລັງກາ ຂັ້ນຕອນໃນການນຳເອົາຄະນະພິກຂຸນີສົງເຂົ້າມາໃໝ່ກໍກຳລັງດຳເນີນຢູ່ ເຖິງແມ່ນວ່າຍັງມີຜູ້ມີຫົວຄຶດປະເພນີນິຍົມບາງຄົນ ບໍ່ຄ່ອຍກະຕືລືລົ້ນສະໜັບສະໜູນປານໃດ ກ່ຽວກັບບັນຫານີ້ກໍຕາມ. ແນວໃດກໍຕາມ, ເພື່ອຮັກສາໄວ້ເຊິ່ງປະຖົມເຈຕະນາຂອງພຣະພຸດທະເຈົ້າ, ທັງຊາຍ ແລະຍິງ ມີສິດທີ່ຈະມີໂອກາດຢູ່ໃນເພດພົມມະຈັນ ແລະໄດ້ຮັບຜົນປະໂຫຍດເຊັ່ນກັນ.



# ໑໑. ຄຳພີທາງພຣະພຸດທະສາສະໜາ

**ຄຳຖາມ: ເກືອບວ່າທຸກສາສະໜາມີປະເພດບົດຂຽນທີ່ສັກສິດ ຫຼືຄຳພີ. ຄຳພີທາງພຣະພຸດທະສາສະໜາແມ່ນຫຍັງ?**

**ຄຳຕອບ:** ປຶ້ມຄຳພີຂອງພຣະພຸດທະສາສະໜາເອີ້ນວ່າ *ພຣະໄຕປິດົກ.* ມັນໄດ້ຖືກຈາລຶກເປັນພາສາອິນເດຍບູຮານ ເອີ້ນວ່າ ພາສາປາລີ ເຊິ່ງເປັນພາສາທີ່ໃກ້ຄຽງກັບພາສາທີ່ ພະພຸດທະອົງໃຊ້ເວົ້າດ້ວຍພຣະອົງເອງ. ຄຳພີພຣະໄຕປິດົກ ເປັນປື້ມເຫຼັ້ມໃຫຍ່ ເຊິ່ງມີສະບັບແປເປັນພາສາອັງກິດເກືອບ ໔໐ ເຫຼັ້ມ.

**ຄຳຖາມ: *ພຣະໄຕປິດົກ* ໝາຍຄວາມວ່າແນວໃດ?**

**ຄຳຕອບ:** ມັນໄດ້ຖືກສ້າງຂຶ້ນດ້ວຍຄຳສັບໃນພາສາບາລີສອງຄຳ, *ຕິ* ແປວ່າ "ສາມ" ແລະປິຕະກະ ແປວ່າ "ກະຕ່າ". ພາກທຳອິດຂອງຄຳສັບໝາຍເຖິງ ໃນຄຳພີທາງພຣະພຸດທະສາສະໜາປະກອບມີສາມພາກສ່ວນ. ພາກສ່ວນທີໜຶ່ງ, ເອີ້ນວ່າ *ພຣະສຸຕຕັນຕະປິດົກ* (ພຣະສູຕຣ໌) ເຊິ່ງປະກອບມີພຣະສູດ(ພຣະສູຕຣະ) ຂອງພຣະພຸດທະເຈົ້າ ແລະພຸດທະສາວົກທີ່ເປັນພຣະອໍຣະຫັນບາງອົງ. ປະເພດເນື້ອຄວາມໃນພຣະສູດມີຫຼາຍຢ່າງ ເຊິ່ງເຮັດໃຫ້ເຂົ້າເຖິງທຳ ທີ່ພຣະພຸດທະເຈົ້າໄດ້ສອນຄົນຫຼາຍປະເພດແຕກຕ່າງກັນ. ບົດພຣະສູດຂອງພຣະພຸດທະເຈົ້າ ສ່ວນໃຫຍ່ແມ່ນຢູ່ໃນຮູບແບບບົດເທສະໜາ ໃນຂະນະທີ່ພາກສ່ວນອື່ນ ແມ່ນເປັນຮູບແບບຂອງບົດສົນທະນາ. ພາກສ່ວນອື່ນເຊັ່ນ *ຄາຖາທຳມະບົດ* (ຄາຖາທັມມະປະທະ) ນຳສະເໜີຄຳສອນຂອງພຣະພຸດທະເຈົ້າ ຜ່ານຮູບແບບຂອງບົດກະວີ. *ນິທານຊາດົກ,* ເປັນອີກຕົວຢ່າງ, ທີ່ປະກອບມີນິທານທີ່ໜ້າປິຕິຍິນດີ ເຊິ່ງໃນນັ້ນ ຕົວລະຄອນຫຼັກສ່ວນໃຫຍ່ແມ່ນສັດ. ພາກສ່ວນທີສອງຂອງພຣະໄຕປິດົກ ແມ່ນ *ພຣະວິໄນປິດົກ.* ພາກສ່ວນນີ້ປະກອບມີກົດລະບຽບ ແລະລະບຽບການຕ່າງໆສຳລັບພຣະສົງ ແລະພິກຂຸນີ, ຄຳແນະນຳກ່ຽວກັບການບໍລິຫານໃນວັດ ຕະຫຼອດຮອດຂໍ້ປະຕິບັດ ແລະ ປະຫວັດສາດຂອງຄະນະສົງໃນຍຸກຕົ້ນພຸດທະການ. ພາກສ່ວນສຸດທ້າຍ ເອີ້ນວ່າ *ພຣະອະພິທຳປິດົກ.* ນີ້ແມ່ນພາກສ່ວນທີ່ສັບສົນ ແລະເລິກເຊິ່ງທີ່ຈະພະຍາຍາມວິເຄາະ ແລະ ວິພາກທຸກອົງທີ່ປະກອບມີໃນຕົວບຸກຄົນ. ເຖິງແມ່ນວ່າ *ພຣະອະພິທຳ(ພຣະອະ*

*ພີທັມມະ)* ຂ້ອນຂ້າງໄດ້ເພີ່ມເຂົ້າມາຊ້າກວ່າ ສອງພາກສ່ວນກ່ອນຂອງ *ພຣະໄຕປິດົກ* ແຕ່ມັນກໍບໍ່ໄດ້ປະກອບມີສິ່ງໃດທີ່ຂັດແຍ້ງກັນ. ບັດນີ້, ສຳລັບຄຳສັບ "ປິຕະກະ" ໃນອິນເດຍສະໄໝບູຮານ, ກຳມະກອນກໍ່ສ້າງໄດ້ໃຊ້ ເພື່ອເຄື່ອນຍ້າຍອຸປະກອນການກໍ່ສ້າງຈາກສະຖານທີ່ໜຶ່ງໄປສູ່ສະຖານທີ່ອື່ນ ດ້ວຍວິທີຜັດປ່ຽນກັນຫິ້ວກະຕ່າ. ພວກເຂົາຈະວາງກະຕ່າໃສ່ຫົວ, ຍ່າງໄປໃນໄລຍະທາງພໍສົມຄວນຫາກຳມະກອນຄົນຕໍ່ໄປ, ແລ້ວສົ່ງໃຫ້ຄົນອື່ນຕໍ່ໆໄປ, ແລະກໍສົ່ງຫຼໍ່າກັນໄປມາ. ການຂຽນບັນທຶກ ເປັນທີ່ຮັບຮູ້ກັນໃນສະໄໝພຸດທະການ, ແຕ່ໃນສີການບັນທຶກມັນໄດ້ຮັບຄວາມເຊື່ອຖືນ້ອຍກວ່າ ຄວາມຈື່ຈຳຂອງມະນຸດ. ປື້ມອາດຈະຖືກທຳລາຍເສຍຫາຍໃນລົມມໍລະສຸມປຽກຊຸ່ມ ແລະຖືກປວກກັດກິນແຕ່ຄວາມຈຳຂອງມະນຸດສາມາດຄົງຢູ່ໄດ້ ຕາບໃດທີ່ພວກເຂົາຍັງມີຊີວິດຢູ່. ດ້ວຍເຫດນີ້ເອງ, ພຣະສົງ ແລະພິກຂຸນີ ຈຶ່ງພາກັນສູດທ່ອງເອົາຄຳສອນຂອງພຣະພຸດທະເຈົ້າ ໄວ້ໃນຄວາມຈຳແລ້ວຖ່າຍທອດສູ່ຄົນອື່ນ ເໝືອນກັນກັບກຳມະກອນກໍ່ສ້າງທີ່ສົ່ງດິນ ແລະກ້ອນດິນຈີ່ໃຫ້ກັນ ແລະກັນໃນກະຕ່າ. ນີ້ຄືເຫດຜົນ ທີ່ສາມພາກສ່ວນຂອງຄຳພີທາງພຣະພຸດທະສາສະໜາຈຶ່ງເອີ້ນວ່າກະຕ່າ. ຫຼັງຈາກໄດ້ຮັກສາຄຳສອນໄວ້ ໃນລັກສະນະແບບນີ້ເປັນເວລາຫຼາຍຮ້ອຍປີ. ໃນທີ່ສຸດ, *ພຣະໄຕປິດົກ* ກໍໄດ້ຖືກຂຽນຈາລຶກໄວ້ປະມານ ໑໐໐ ປີກ່ອນ ຄ.ສ. ໃນປະເທດສີລັງກາ.

**ຄຳຖາມ: ຖ້າຫາກວ່າຄຳພີ ຖືກຮັກສາໄວ້ດ້ວຍຄວາມຈື່ຈຳເປັນເວລານານ ມັນອາດຈະບໍ່ເປັນທີ່ໜ້າເຊື່ອຖືໄດ້ແທ້. ຄຳສອນຂອງພຣະພຸດທະເຈົ້າສ່ວນຫຼາຍ ອາດຖືກສູນເສຍແລະປ່ຽນແປງໄປ.**

**ຄຳຕອບ:** ການປົກປັກຮັກສາຄຳພີ ແມ່ນການພະຍາຍາມຮ່ວມກັນໂດຍຄະນະຂອງພຣະສົງ ແລະພິກຂຸນີ. ພວກເຂົາອາດມາລວມກັນໃນໄລຍະເວລາໃດໜຶ່ງ ເພື່ອສູດບາງພາກສ່ວນ ຫຼືທັງໝົດພຣະໄຕປິດົກ. ວິທີການນີ້ເຮັດໃຫ້ເຫັນໄດ້ວ່າ ເປັນໄປບໍ່ໄດ້ແນ່ນອນ ທີ່ຈະມີສິ່ງໃດຖືກຕື່ມເຂົ້າ ຫຼືປ່ຽນແປງ. ໃຫ້ຄິດແບບນີ້, ຖ້າຫາກໃນຄົນກຸ່ມໜຶ່ງ ມີຮ້ອຍກວ່າຄົນ ຮູ້ເພງໜຶ່ງດ້ວຍການທ່ອງຂຶ້ນໃຈ ແລະໃນຂະນະທີ່ທຸກຄົນຮ້ອງເພງ ມີຜູ້ໜຶ່ງຮ້ອງຜິດ ຫຼືພະຍາຍາມທີ່ຈະຕື່ມສຳນວນໃໝ່ໃສ່, ແມ່ນຫຍັງຈະເກີດຂຶ້ນ? ຈຳນວນຂອງຜູ້ທີ່ຈື່ເພງໄດ້ຢ່າງຖືກຕ້ອງ ຈະພະຍາຍາມປ້ອງກັນຄົນທີ່ແປກນັ້ນຈາກການປ່ຽນແປງໃດໆ. ໃນສະໄໝນັ້ນ ມັນເປັນສິ່ງສຳຄັນທີ່ຈະຈື່ຈຳໄດ້ດີ ເນື່ອງຈາກວ່າ ຍັງບໍ່ທັນມີໂທ ລ

ພາບ, ໜັງສືພິມ ຫຼືການໂຄສະນາໃດໆທີ່ຈະລົບກວນ ແລະເຮັດໃຫ້ຈິດໃຈຟຸ້ງສ້ານເຊິ່ງພ້ອມກັນນີ້ ໃນຄວາມເປັນຈິງພຣະສົງ ແລະພິກຂຸນີ ກໍຝຶກສະມາທິອີກດ້ວຍ, ໝາຍຄວາມວ່າ ພວກ ເພິ່ນມີຄວາມຈື່ຈຳດີຢ່າງມ. ແມ່ນແຕ່ໃນປັດຈຸບັນ, ເຖິງແມ່ນວ່າ ປື້ມຈະຖືກນຳເຂົ້າມາໃຊ້ແລ້ວ, ແຕ່ກໍຍັງມີພຣະຫຼາຍອົງສາມາດທ່ອງຈຳທັງໝົດພຣະໄຕປິດົກໄດ້. ພຣະເມັນກອງ ຊາຍາດໍ (Mengong Sayadaw) ຂອງປະເທດພະມ້າ ສາມາດເຮັດສິ່ງນີ້ໄດ້ ແລະເພິ່ນກໍໄດ້ຖືກບັນທຶກໄວ້ໃນປື້ມບັນທຶກຄວາມອັດສະລິຍະ(the Guiness Book of Records) ວ່າເປັນບຸກຄົນຜູ້ມີຄວາມຈຳດີທີ່ສຸດໃນໂລກ.

**ຄຳຖາມ: ຄຳພີມີຄວາມສຳຄັນແນວໃດຕໍ່ຊາວພຸດ?**

**ຄຳຕອບ:** ຊາວພຸດບໍ່ໄດ້ຖືວ່າ *ພຣະໄຕປິດົກ* ເປັນຄຳສອນທີ່ສັກສິດອັນຖືກຖ່າຍທອດຈາກພຣະເຈົ້າ, ທຸກຖ້ອຍຄຳວ່າຈຳເປັນຕ້ອງເຊື່ອໝົດ. ແທນທີ່ຈະເປັນແນວນັ້ນ, ມັນແມ່ນການບັນທຶກຄຳສອນຂອງມະຫາບຸລຸດ ທີ່ມີທັງຄຳອະທິບາຍ, ຄຳແນະນຳ, ຄຳແນະແນວທາງ ແລະຄຳໃຫ້ກຳລັງໃຈ ແລະເປັນສິ່ງທີ່ຈະຕ້ອງອ່ານຢ່າງທີ່ຖວ້ນ ຢ່າງເຄົາລົບອີກດ້ວຍ. ຈຸດປະສົງຂອງພວກເຮົາ ແມ່ນເພື່ອເຂົ້າໃຈໃນສິ່ງທີ່ພຣະໄຕປິດົກສອນ, ບໍ່ແມ່ນພຽງເຊື່ອຖືໂລດ ແລະດ້ວຍເຫດນີ້ເອງ ພຣະພຸດທະເຈົ້າຈິ່ງກ່າວວ່າ ເຮົາຄວນສຳຫຼວດກວດກາ ຈາກປະສົບການຕົວຈິງຂອງເຮົາສະເໝີ. ທ່ານອາດເວົ້າວ່າ ທັດສະນະຂອງການລາຍງານຂອງຊາວພຸດ ຕໍ່ຄຳພີຄ້າຍຄືກັນກັບທັດສະນະຂອງນັກວິທະຍາສາດຕໍ່ບົດວິໄຈ ໃນວາລະສານທາງວິທະຍາສາດ. ນັກວິທະຍາສາດໄດ້ທຳການທົດລອງ ແລະຫຼັງຈາກນັ້ນຈິ່ງພິມເຜີຍແຜ່ ສິ່ງທີ່ເຂົາຄົ້ນພົບ ແລະມີຂໍ້ສະຫຼຸບໃນບົດວາລະສານ. ນັກວິທະຍາສາດ ຄົນອື່ນກໍຈະອ່ານບົດລາຍງານນັ້ນ ແລະປະຕິບັດຕໍ່ດ້ວຍຄວາມເຄົາລົບ ແຕ່ພວກເຂົາຈະບໍ່ຖືວ່າ ມັນມີຜົນສັກສິດ ຫຼືໜ້າເຊື່ອຖືໄດ້ໂລດ ຈົນກວ່າພວກເຂົາຈະມີການທົດລອງແບບດຽວກັນ ແລະໄດ້ຜົນອັນດຽວກັນ.

**ຄຳຖາມ: ກ່ອນໜ້ານີ້ ທ່ານກ່າວເຖິງທຳມະບົດ(ທັມມະບົດ). ມັນແມ່ນຫຍັງກັນແທ້?**

**ຄຳຕອບ:** *ທຳມະບົດ* ແມ່ນໜຶ່ງໃນບົດຜົນງານຊິ້ນນ້ອຍສຸດ ໃນພາກທຳອິດຂອງ *ພຣະໄຕປິດົກ*. ຊື່ວ່າ *ທຳມະບົດ* ສາມາດແປໄດ້ "ຫົນທາງທຳ" ຫຼື"ກະວີທຳມະ". ປະກອບດ້ວຍ ໔໒໓ ບົດກະວີ, ບາງບົດກະທັດຮັດ, ບາງບົດມີຄວາມໝາຍເລິກເຊິ່ງ, ບາງບົດປະກອບ

ດ້ວຍຄຳອຸປະມາອຸປະໄມທີ່ກິນໃຈ, ແລະບົດອື່ນໆອີກ ທີ່ມີຄວາມງົດງາມ, ທັງໝົດແມ່ນກ່າວ ໂດຍພຣະພຸດທະເຈົ້າ. ດ້ວຍເຫດນີ້ເອງ, ທຳມະບົດຈຶ່ງເປັນຜົນງານທີ່ໄດ້ຮັບຄວາມນິຍົມທີ່ສຸດຂອງວັນນະຄະດີພຸດທະສາສະໜາ. ມັນໄດ້ຖືກແປອອກເປັນຫຼາຍພາສາທີ່ສຳຄັນ ແລະເປັນທີ່ຍອມຮັບກັນວ່າ ເປັນໜຶ່ງໃນບັນດາຜົນງານຊັ້ນຍອດຂອງວັນນະຄະດີສາສະໜາແຫ່ງໂລກ.

**ຄຳຖາມ: ບາງຄົນບອກຂ້ານ້ອຍວ່າ ທ່ານບໍ່ຄວນຈະວາງປຶ້ມຄຳພີໄວ້ພື້ນເຮືອນ ຫຼືວາງໄວ້ກ້ອງແຂນ, ແຕ່ຄວນຈະຖືກວາງໄວ້ທີ່ສູງ. ແມ່ນແທ້ບໍ?**

**ຄຳຕອບ:** ຈົນກະທັ້ງເຖິງປັດຈຸບັນ, ໃນບັນດາປະເທດທີ່ນັບຖືພຣະພຸດທະສາສະໜາເໝືອນກັນກັບໃນຢູໂຣບຍຸກກາງ, ປຶ້ມຕ່າງໆເປັນສິ່ງທີ່ຫາຍາກ ແລະເປັນວັດຖຸທີ່ມີຄ່າ. ສະນັ້ນ, ປຶ້ມຄຳພີ ຈຶ່ງໄດ້ຮັບການປະຕິບັດດ້ວຍຄວາມເຄົາລົບຢ່າງຍິ່ງ ແລະຮີດຄອງທີ່ທ່ານຫາກໍ່ໄດ້ກ່າວເຖິງເມື່ອກີ້ນີ້ ກໍເປັນຕົວຢ່າງກ່ຽວກັບສິ່ງນີ້. ແນວໃດກໍດີ, ໃນຂະນະທີ່ຮີດຄອງ ແລະປະເພນີປະຕິບັດກໍດີຢູ່ແລ້ວ, ຄົນສ່ວນໃຫຍ່ໃນປັດຈຸບັນ ອາດເຫັນດີວ່າວິທີປະຕິບັດທີ່ດີທີ່ສຸດ ຕໍ່ຄຳພີທາງພຣະພຸດທະສາສະໜາ ຄວນຈະເປັນການປະຕິບັດຕາມຄຳສອນທີ່ບັນຈຸໄວ້ໃນຄຳພີນັ້ນ.

**ຄຳຖາມ: ຂ້ານ້ອຍພົບຄວາມຫຍຸ້ງຍາກໃນການອ່ານຄຳພີທາງພຣະພຸດທະສາສະໜາ. ມັນຂ້ອນຂ້າງຍືດຍາວ, ເປັນຄຳເວົ້າຊ້ຳໄປຊ້ຳມາ ແລະໜ້າເບື່ອ.**

**ຄຳຕອບ:** ເມື່ອພວກເຮົາອ່ານຄຳພີທາງສາສະໜາ ພວກເຮົາຄາດຫວັງຈະໄດ້ອ່ານຄຳຍ້ອງຍໍ, ຄວາມສະໜຸກສະໜານ ຫຼືຄຳສັນລະເສີນທີ່ຍົກສູງຈິດໃຈ ຫຼືເປັນແຮງບັນດານໃຈໃຫ້ພວກເຮົາ. ດ້ວຍເຫດນີ້ເອງ, ບາງຄົນເມື່ອມາອ່ານຄຳພີທາງພຣະພຸດທະສາສະໜາ ຈຶ່ງຂ້ອນຂ້າງຈະຜິດຫວັງແດ່ຈັກໜ່ອຍ. ແຕ່ຍັງມີບາງພຣະສູດຂອງພຣະພຸດທະເຈົ້າຍັງມີສະເນ່ ແລະຄວາມງາມ, ສ່ວນໃຫຍ່ລວມເອົາເນື້ອໃນທາງປັດຊະຍາ ທີ່ປະກອບມີນິຍາມຂອງຄຳສັບ, ການສົນທະນາທີ່ໃຫ້ຫຼັກເຫດຜົນຢ່າງລະອຽດ, ການໃຫ້ຄຳແນະນຳຢ່າງລະອຽດກ່ຽວກັບຂໍ້ວັດປະຕິບັດ, ການຝຶກສະມາທິ ແລະເປັນບົດທຳມະທີ່ແຈ່ມແຈ້ງ. ມີຄວາມໝາຍຂອງຄຳສອນ ເພື່ອດຶງດູດໃຫ້ເກີດປັນຍາ ຫຼາຍກວ່າພຽງຄວາມຮູ້ສຶກມ່ວນອອນຊອນ. ເມື່ອພວກເຮົາຍຸດປຽບທຽບຄຳພີທາງພຣະພຸດທະສາສະໜາກັບສາສະໜາ

ອື່ນໆ ພວກເຮົາຈະເຫັນວ່າ ມັນມີຄວາມງາມໃນຕົວມັນເອງຄື ຄວາມງາມແຫ່ງຄວາມແຈ່ມແຈ້ງ, ຄວາມເລິກເຊິ່ງຄຳພີລະພາບ ແລະພູມປັນຍາ.

**ຄຳຖາມ: ຂ້ານ້ອຍໄດ້ອ່ານເຫັນວ່າ ຄຳພີທາງພຣະພຸດທະສາສະໜາ ທຳອິດແມ່ນໄດ້ຖືກຂຽນບັນທຶກໄວ້ໃນໜັງສືໃບລານ. ເປັນຫຍັງຈຶ່ງເຮັດແນວນັ້ນ?**

**ຄຳຕອບ:** ໃນສະໄໝນັ້ນ, ຄຳພີທີ່ຖືກຂຽນລົງໃນເຈ້ຍຍັງບໍ່ທັນໄດ້ຜະລິດຂຶ້ນໃນປະເທດອິນເດຍ ຫຼືສີລັງກາ. ເອກະສານທຳມະດາຕ່າງໆເຊັ່ນ ຈົດໝາຍ, ໃບສັນຍາ, ບັນຊີ ແລະໃບສະໂນດ ແມ່ນຖືກບັນທຶກລົງໃນໜັງສັດ, ໃນແຜ່ນໂລຫະບາງ ຫຼືລົງໃນໃບລານ. ຊາວພຸດບໍ່ນິຍົມໃຊ້ໜັງສັດ ແລະການຂຽນຄຳພີລົງໃນແຜ່ນໂລຫະອາດຈະທັງລາຄາແພງ ແລະຖືໄປມາຍາກ. ດັ່ງນັ້ນ, ໃບລານຈຶ່ງໄດ້ຖືກນຳໃຊ້. ຫຼັງຈາກໃບລານໄດ້ຖືກກະກຽມຢ່າງເປັນພິເສດແລ້ວ ມັນກໍໄດ້ຖືກມັດແນບເຂົ້າກັນດ້ວຍເຊືອກ ແລ້ວວາງໄວ້ຢູ່ລະຫວ່າງໄມ້ສອງແຜ່ນເປັນຫຼັງປົກ ເພື່ອໃຫ້ເປີດອ່ານງ່າຍ ນອກຈາກນີ້ຍັງທົນທານ, ເໝືອນກັນກັບປື້ມໃນສະໄໝໃໝ່ນີ້. ເມື່ອພຣະພຸດທະສາສະໜາເຂົ້າມາຮອດປະເທດຈີນ ຄຳພີໄດ້ຖືກຈາລຶກລົງໃນຜ້າໄໝ ຫຼືເຈ້ຍ. ປະມານ ໕໐໐ ປີຕໍ່ມາ, ຄວາມຕ້ອງການທີ່ຈະຜະລິດຄຳພີຫຼາຍເຫຼັ້ມ ນຳໄປສູ່ການຜະລິດສິ່ງພິມຂຶ້ນມາ. ໜັງສືທີ່ໄດ້ຖືກພິມເກົ່າແກ່ທີ່ສຸດຂອງໂລກ ແມ່ນສຳນວນແປພາສາຈີນຂອງໜຶ່ງໃນພຣະສູດຂອງພຣະພຸດທະເຈົ້າ ໄດ້ຖືກພິມເຜີຍແຜ່ໃນປີ ຄ.ສ. ໘໒໘.



# ໑໔. ປະຫວັດສາດ ແລະການພັດທະນາ




ຮູບສິມເກົ່າ ໃນແຂວງຊຽງຂວາງ

**ຄຳຖາມ: ປັດຈຸບັນນີ້ ພຣະພຸດທະສາສະໜາມີຜູ້ນັບຖື ເປັນຈຳນວນຫຼວງຫຼາຍ ໃນຫຼາຍປະເທດ. ມັນເປັນໄປໄດ້ຢ່າງໃດ?**

**ຄຳຕອບ:** ພາຍໃນ ໑໕໐ ປີ ຫຼັງຈາກທີ່ພຣະພຸດທະເຈົ້າປະລິນິບພານໄດ້ແລ້ວ, ຄຳສອນຂອງພຣະພຸດທະອົງ ກໍໄດ້ແຜ່ຂະຫຍາຍໄປຢ່າງກວ້າງຂວາງທົ່ວທາງພາກເໜືອຂອງປະເທດອິນເດຍແລ້ວ. ແລະເມື່ອປະມານປີ ໔໒໔ ກ່ອນ ຄ.ສ, ພຣະເຈົ້າຈັກກະພັດຂອງອິນເດຍ, ອະໂສກ ໂມຣິຍາ Asoka Mauriya, ກໍໄດ້ຫັນມາ ນັບຖືພຣະພຸດທະສາສະໜາ ແລະໄດ້ເຜີຍແຜ່ທຳມະທົ່ວອານາຈັກຂອງພຣະອົງ. ມີຄົນຈຳນວນຫຼາຍສົນໃຈໃນມາດຕະຖານສີລະທຳທີ່ສູງສົ່ງຂອງພຣະພຸດທະສາສະໜາ ໂດຍສະເພາະແມ່ນຄວາມກົງກັນຂ້າມກັນກັບລະບົບຊົນຊັ້ນຂອງສາສະໜາຮິນດູ. ນອກຈາກນີ້, ພຣະເຈົ້າອະໂສກຍັງໄດ້ຈັດສັງຄາຍະນາຂຶ້ນ[10] ແລະສົ່ງຄະນະພຣະທຳມະທູດໄປບັນດາປະເທດເພື່ອນບ້ານ

---

10 ***ການສັງຄາຍະນາ*** ໝາຍເຖິງການຈັດກອງປະຊຸມສົງຂຶ້ນ ເພື່ອໃຫ້ພຣະສົງຜູ້ມີຄວາມຈື່ຈຳ ຊຳນານໃນຄຳສອນຂອງພຣະພຸດທະເຈົ້າ ເຂົ້າຮ່ວມສາທະຍາຍຄຳສອນນັ້ນເພື່ອການກວດແກ້ໃຫ້ມີ ຄວາມເປັນເອກະພາບກັນແລ້ວບັນທຶກໄວ້ເປັນຄຳພີ *ພຣະໄຕປິດົກ*. ***ການສັງຄາຍະນາ*** ທັງໝົດນັບແຕ່ ພຣະພຸດທະເຈົ້າປະລິນິບພານໄປແລ້ວ ມີທັງໝົດ ໖ ຄັ້ງ.

ແລະ ນອກນີ້ ຍັງໄດ້ສົ່ງໄປໄກທາງພາກທະວີບຢູໂຣບອີກດ້ວຍ. ຄະນະທຳມະທູດທີ່ເຫັນວ່າປະສົບຜົນສຳເລັດທີ່ສຸດແມ່ນຄະນະທີ່ສົ່ງໄປປະເທດສີລັງກາ. ເປັນປະເທດເກາະດອນທີ່ນັບຖືພຸດທະສາສະໜາ ແລະຍັງຄົງຢູ່ນັບແຕ່ບັດນັ້ນເປັນຕົ້ນມາ. ຄະນະທຳມະທູດອື່ນໄດ້ນຳພຣະພຸດທະສາສະໜາໄປສູ່ທາງພາກໃຕ້ ແລະພາກຕາເວັນຕົກຂອງປະເທດອິນເດຍ, ປະເທດກາສເມຍ ແລະບ່ອນທີ່ເອີ້ນວ່າ ທາງພາກໃຕ້ຂອງປະເທດພະມ້າ ໃນປັດຈຸບັນ ແລະຄາບສະໝຸດຂອງປະເທດໄທ. ປະມານໜຶ່ງສະຕະວັດ ຫຼືຫຼັງຈາກນັ້ນຕໍ່ມາ, ປະເທດອັບຟະການິດສະຖານ ແລະພາກສ່ວນທີ່ເປັນເຂດພູທາງພາກເໜືອຂອງອິນເດຍໄດ້ກາຍມາເປັນຊາວພຸດ ແລະພຣະສົງພ້ອມດ້ວຍພໍ່ຄ້າຈາກທີ່ນັ້ນ ກໍຄ່ອຍໆນຳເອົາພຣະພຸດທະສາສະໜາ ໄປສູ່ພາກກາງຂອງທະວີບເອເຊຍ. ໃນທີ່ສຸດກໍໄປເຖິງປະເທດຈີນຈາກທີ່ນັ້ນ ຕໍ່ມາກໍເຂົ້າໄປເຖິງປະເທດເກົາຫຼີ ແລະຍີ່ປຸ່ນ. ມັນເປັນຕາໜ້າສົນໃຈທີ່ຄວນສັງເກດວ່າ ມີແຕ່ພຣະພຸດທະສາສະໜາ ແມ່ນເປັນພຽງລະບົບຄວາມຄິດດຽວເທົ່ານັ້ນ ທີ່ເຄີຍຝັງຮາກລົງໃນປະເທດຈີນຢ່າງໝັ້ນຄົງ. ປະມານສະຕະວັດທີ ໑໘ ພຣະພຸດທະສາສະໜາ ໄດ້ກາຍເປັນທີ່ໂດດເດັ່ນໃນປະເທດພະມ້າ, ໄທ, ລາວ ແລະກຳປູເຈຍ ຍ້ອນວ່າສ່ວນໃຫຍ່ມາຈາກຄວາມພະຍາຍາມຂອງພຣະສົງຈາກປະເທດສີລັງກາ.

**ຄຳຖາມ: ດ້ວຍວິທີໃດ ແລະເມື່ອໃດທີ່ຕິເບດໄດ້ເລີ່ມນັບຖືພຣະພຸດທະສາສະໜາ?**

**ຄຳຕອບ:** ໃນປະມານສະຕະວັດທີ ໗ ພຣະລາຊາຂອງຕິເບດໄດ້ສົ່ງເອກອັກຄະລາຊະທູດໄປປະເທດອິນເດຍເພື່ອນຳເອົາພຣະສົງ ແລະຄຳພີພຣະໄຕປິດົກ ມາສູ່ປະເທດຂອງພຣະອົງ. ພຣະພຸດທະສາສະໜາ ກໍໄດ້ຮັບຄວາມນິຍົມແຕ່ນັ້ນມາ ແຕ່ກໍຍັງບໍ່ທັນເປັນສາສະໜາຫຼັກ ຍ້ອນວ່າ ການຄັດຄ້ານບາງສ່ວນຈາກພຣະສົງຂອງສາສະໜາບອນດັ້ງເດີມ (the indigenous Bon religion). ໃນທີ່ສຸດ, ໃນສະຕະວັດທີ ໑໑, ມີພຣະສົງ ແລະນາຍຄູຊາວອິນເດຍຈຳນວນຫຼາຍ ໄດ້ເດີນທາງເຂົ້າມາໃນປະເທດຕິເບດ ສາສະໜາພຸດ ກໍເລີ່ມຕັ້ງຫຼັກປັກຖານຢ່າງໝັ້ນຄົງຢູ່ທີ່ນັ້ນ. ນັບແຕ່ບັດນັ້ນເປັນຕົ້ນມາ ປະເທດຕິເບດ ແມ່ນໜຶ່ງຂອງບັນດາປະເທດ ທີ່ນັບຖືພຣະພຸດທະສາສະໜາຢ່າງເຄັ່ງຄັດທີ່ສຸດ.

**ຄຳຖາມ: ຄັນຊັ້ນ ພຣະພຸດທະສາສະໜາກໍໄດ້ແຜ່ໄປຢ່າງກວ້າງຂວາງ.**

**ຄຳຕອບ:** ບໍ່ພຽງແຕ່ເທົ່ານັ້ນ, ເກືອບບໍ່ມີຕົວຢ່າງໃຫ້ເຫັນເລີຍວ່າ ພຣະພຸດທະສາສະໜາ ບຽດບຽນສາສະໜາອື່ນ ໃນສະຖານທີ່ທີ່ໄດ້ເຜີຍແຜ່ໄປເຖິງ ຫຼືບໍ່ມີການເຜີຍແຜ່ດ້ວຍການເອົາຊະນະທາງທະຫານ. ພຣະພຸດທະສາສະໜາເປັນສາສະໜາ ທີ່ມີວິຖີຊີວິດທີ່ອ່ອນໂຍນ ແລະຄວາມຄິດຂອງການບັງຄັບ ຫຼືບີບຄັ້ນໃຫ້ນັບຖືສາສະໜາ ແມ່ນເປັນສິ່ງທີ່ຊາວພຸດບໍ່ມັກເລີຍ.

**ຄຳຖາມ: ພຣະພຸດທະສາສະໜາມີອິດທິພົນແນວໃດຕໍ່ປະເທດທີ່ໄດ້ ເຜີຍແຜ່ໄປເຖິງ?**

**ຄຳຕອບ:** ເມື່ອພຣະທຳມະທູດໄປສູ່ປະເທດຕ່າງໆ, ພວກເພິ່ນບໍ່ພຽງແຕ່ນຳເອົາຄຳສອນຂອງພຣະພຸດທະເຈົ້າໄປນຳເທົ່ານັ້ນ, ແຕ່ພວກເພິ່ນຍັງໄດ້ນຳເອົາບາງທັດສະນະທີ່ດີທີ່ສຸດຂອງອະລິຍະທຳອິນເດຍໄປພ້ອມ. ພຣະສົງບາງທີກໍມີຄວາມຊຳນານທາງດ້ານການຢາ ແລະໄດ້ນຳເອົາຄວາມຄິດທາງດ້ານການຢາໃໝ່ໆເຂົ້າໄປໃນສະຖານທີ່ໆພວກເຂົາບໍ່ເຄີຍມີມາກ່ອນ. ບໍ່ສະເພາະແຕ່ປະເທດສີລັງກາ, ຕີເບດ ຫຼືພາກສ່ວນຕ່າງໆຂອງເອເຊຍກາງ ທີ່ຍັງບໍ່ທັນມີລະບົບການຂຽນ ຈົນກວ່າພຣະສົງໄດ້ນຳເອົາໄປ ແລະແນ່ນອນພ້ອມດຽວກັບການຂີດຂຽນ ກໍຈະມີຄວາມຮູ້ ແລະຄວາມຄິດໃໝ່ໆ. ກ່ອນການເຂົ້າມາຂອງພຣະພຸດທະສາສະໜາ, ຊາວຕີເບດ ແລະມົງໂກເລຍເປັນຄົນທີ່ປ່າເຖື່ອນ ພຣະພຸດທະສາສະໜາ ກໍໄດ້ເຮັດໃຫ້ພວກເຂົາກາຍເປັນຄົນສຸພາບ ແລະມີອະລິຍະທຳ. ແມ່ນແຕ່ພາຍໃນປະເທດອິນເດຍ, ການຂ້າສັດບູຊາຍັນກໍໄດ້ຖືກຍົກເລີກໄປ ຍ້ອນພຣະພຸດທະສາສະໜາ ແລະລະບົບຊົນຊັ້ນວັນນະ ກໍໄດ້ຫຼຸດຜ່ອນຄວາມຮຸນແຮງລົງ, ຢ່າງນ້ອຍໃນໄລຍະໜຶ່ງ. ແມ່ນແຕ່ໃນປັດຈຸບັນນີ້, ພຣະພຸດທະສາສະໜາ ໄດ້ແຜ່ໄປໃນທະວີບຢູໂຣບ ແລະອາເມຣິກາ, ຈິດຕະວິທະຍາຕາເວັນຕົກ ເລີ່ມໄດ້ຮັບອິດທິພົນຈາກຄວາມຮູ້ບາງສ່ວນທາງວິປັດສະນາເຂົ້າໃນຈິດໃຈຂອງມະນຸດ.

**ຄຳຖາມ: ເປັນຫຍັງພຣະພຸດທະສາສະໜາຈິ່ງເສື່ອມຈາກປະເທດອິນເດຍ?**

**ຄຳຕອບ:** ຍັງບໍ່ທັນມີໃຜເຄີຍໃຫ້ຄຳອະທິບາຍ ເປັນທີ່ພໍໃຈໄດ້ສຳລັບເຫດການໂຊກຮ້າຍນີ້. ນັກປະຫວັດສາດບາງຄົນກ່າວວ່າ ພຣະພຸດທະສາສະໜາໄດ້ມີການປະຕິບັດຜິດພ້ຽນຈຶ່ງເຮັດໃຫ້ປະຊາຊົນຄັດຄ້ານ, ບາງຄົນກ່າວວ່າ ມັນໄດ້ຮັບເອົາຄວາມເຊື່ອຫຼາຍຢ່າງຈາກສາສະໜາຮິນດູ ແລ້ວກໍຄ່ອຍໆກາຍເປັນສິ່ງທີ່ແຍກບໍ່ອອກຈາກສາສະໜາຮິນດູ.

ບາງທິດສະດີວ່າ ພຣະສົງໄດ້ມີການລວມຕົວກັນ ໃນວັດໃຫຍ່ໆເຊິ່ງໄດ້ຮັບຄວາມອຸປະຖໍາຈາກພຣະລາຊາ ແລະນີ້ເປັນເຫດໃຫ້ຫ່າງເຫີນຈາກປະຊາຊົນທໍາມະດາ. ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ, ກ່ອນສະຕະວັດທີ ໗ ຫຼື ໘, ພຣະພຸດທະສາສະໜາໃນອິນເດຍກໍຢູ່ໃນສະພາບເສື່ອມໂຊມຮຸນແຮງແລ້ວ. ມັນໄດ້ສູນຫາຍໄປຢ່າງຮາບຄາບ ທ່າມກາງຄວາມວຸ້ນວາຍສັບສົນ ແລະຄວາມຮຸນແຮງຈາກການຮຸກຮານຂອງອິດສະລາມຂອງອິນເດຍໃນສະຕະວັດທີ ໑໓.

**ຄໍາຖາມ: ແຕ່ວ່າຍັງມີຊາວພຸດຢູ່ໃນປະເທດອິນເດຍ ບໍ່ແມ່ນບໍ?**

**ຄໍາຕອບ:** ແນ່ນອນມີແທ້ ແຕ່ກາງສະຕະວັດທີ ໒໐ ເປັນຕົ້ນມາ, ພຣະພຸດທະສາສະໜາເລີ່ມຈະເລີນເຕີບໂຕໃນປະເທດອິນເດຍອີກເທື່ອໜຶ່ງ. ໃນປີ ໑໙໕໖, ຜູ້ນໍາຂອງຊົນຊັ້ນຈັນດານ(ຊົນຊັ້ນຕໍ່າ)ໃນອິນເດຍ ໄດ້ຫັນມານັບຖືພຣະພຸດທະສາສະໜາ ເພາະວ່າລາວ ແລະຄົນຂອງລາວໄດ້ຮັບຄວາມທຸກທໍລະມານຢ່າງໜັກ ພາຍໃຕ້ລະບົບຊົນຊັ້ນວັນນະຂອງສາສະໜາຮິນດູ. ນັບແຕ່ນັ້ນເປັນຕົ້ນມາ, ປະມານ ໗ ລ້ານຄົນໄດ້ນັບຖືພຣະພຸດທະສາສະໜາ ແລະຍັງມີຈໍານວນຫຼາຍທີ່ກໍາລັງສືບຕໍ່ເພີ່ມຂຶ້ນເລື້ອຍໆ.

**ຄໍາຖາມ: ພຣະພຸດທະສາສະໜາສາຍທໍາອິດ ເຂົ້າໄປໃນແຖບຕາເວັນຕົກເມື່ອໃດ?**

**ຄໍາຕອບ:** ຊາວຕາເວັນຕົກກຸ່ມທໍາອິດ ທີ່ຫັນມານັບຖືພຣະພຸດທະສາສະໜາ ອາດຈະແມ່ນຊາວກຣີກ(Greeks) ຜູ້ທີ່ໄດ້ເຂົ້າມາໃນປະເທດອິນເດຍຫຼັງຈາກການຮຸກຮານຂອງອາເລັກຊານເດີມະຫາລາດ Alexander the Great ໃນສະຕະວັດທີ ໓ ກ່ອນ ຄ.ສ. ໜຶ່ງໃນປຶ້ມຄໍາພີພຣະພຸດທະສາສະໜາທີ່ເກົ່າແກ່ແມ່ນ *ມິລິນທະປັນຫາ* ເຊິ່ງປະກອບມີບົດສົນທະນາລະຫວ່າງພຣະນາຄະເສນ, ພຣະສົງຊາວອິນເດຍ ແລະພຣະຍາມິລິນ ເຊິ່ງເປັນຊາວກຣີກ. ແຕ່ໃນເວລາຜ່ານມາ, ພຣະພຸດທະສາສະໜາ ໄດ້ເລີ່ມດຶງດູດຄວາມຊື່ນຊົມ ແລະຄວາມເຄົາລົບຈາກຕາເວັນຕົກ ຈົນຮອດທ້າຍຂອງສະຕະວັດທີ ໑໙ ເມື່ອມີນັກປາດເລີ່ມແປຄໍາພີທາງພຣະພຸດທະສາສະໜາ ແລະຂຽນກ່ຽວກັບພຣະພຸດທະສາສະໜາ. ກ່ອນຊຸມ ຕົ້ນປີ ໑໙໐໐, ມີຊາວຕາເວັນຕົກຈໍານວນສອງສາມຄົນ ເອີ້ນພວກເຂົາເອງວ່າເປັນຊາວພຸດ ແລະໜຶ່ງ ຫຼືສອງຄົນໄດ້ບວດເປັນພຣະ. ນັບແຕ່ຊຸມປີ ໑໙໖໐ ຈໍານວນຜູ້ນັບຖືພຣະພຸດທະສາສະໜາຊາວຕາເວັນຕົກ ໄດ້ເພີ່ມຂຶ້ນຢ່າງສະໝໍ່າສະເໝີ ແລະ

ໃນປັດຈຸບັນນີ້ ພວກເຂົາເຈົ້າໄດ້ຈັດຕັ້ງເປັນກຸ່ມນ້ອຍໆ ແຕ່ເປັນກຸ່ມນ້ອຍທີ່ ສຳຄັນໃນບັນດາປະເທດແຖບຕາເວັນຕົກ.

**ຄຳຖາມ: ທ່ານສາມາດບອກປະເພດຕ່າງໆກ່ຽວກັບພຣະພຸດທະສາສະໜາໄດ້ບໍ?**
**ຄຳຕອບ:** ຈາກຈຸດທີ່ສູງ ພຣະພຸດທະສາສະໜາແຜ່ຈາກປະເທດມົງໂກເລຍ (Mongolia) ສູ່ປະເທດມໍດີບ (Maldives), ຈາກເມືອງບາລກາຫ໌ (Balkh) ສູ່ເກາະບາຫຼີ(Bali) ແລະດັ່ງນັ້ນ, ມັນຈຶ່ງເປັນທີ່ຈູງໃຈຜູ້ຄົນຈາກຫຼາຍວັດທະນະທຳທີ່ແຕກຕ່າງກັນ. ຍິ່ງກວ່ານັ້ນ, ຍັງທົນທານເປັນເວລາຫຼາຍສະຕະວັດ ແລະຈຳຕ້ອງດັດແປງ ແລະປັບຕົວເມື່ອວິຖີຊີວິດສັງຄົມ ແລະພູມປັນຍາຂອງຄົນໄດ້ມີການພັດທະນາຂຶ້ນ. ດັ່ງນັ້ນ, ເຖິງແມ່ນວ່າ ແກ່ນແທ້ຂອງທຳມະຍັງຄົງເໝືອນເດີມ ຮູບແບບພາຍນອກຂອງມັນ ກໍມີການປ່ຽນແປງຫຼາຍຢ່າງ. ປັດຈຸບັນນີ້, ພຣະພຸດທະສາສະໜາມີສາມນິກາຍໃຫຍ່ຄື *ເຖລະວາດ(ເຖຣະວາທ)*, *ມະຫາຍານ*, ແລະ*ວັດຊະລະຍານ(ວະຊິຣະຍານະ)*.

**ຄຳຖາມ: *ເຖລະວາດ* ແມ່ນຫຍັງ?**
**ຄຳຕອບ:** ຄຳວ່າ *ເຖລະວາດ* ໝາຍເຖິງຄຳສອນຂອງພຣະເຖລະ ແລະເປັນຄຳສອນທີ່ສ່ວນໃຫຍ່ແມ່ນອີງໃສ່ພຣະໄຕປິດົກສະບັບພາສາບາລີ, ເປັນຄຳພີທີ່ເກົ່າແກ່ທີ່ສຸດ ແລະເປັນສິ່ງບັນທຶກຄຳສອນຂອງພຣະພຸດທະເຈົ້າຢ່າງສົມບູນທີ່ສຸດ. ພຣະພຸດທະສາສະໜາເຖລະວາດ ເປັນພຣະພຸດທະສາສະໜາຮູບແບບທີ່ມີລັກສະນະອະນຸລັກ ແລະມີສູນກາງຢູ່ທີ່ພຣະສົງຍິ່ງກວ່າ, ເນັ້ນໜັກພື້ນຖານທາງທຳມະ ແລະຂ້ອນຂ້າງເປັນວິທີປະຕິບັດທີ່ລຽບງ່າຍ ແລະບໍ່ສັບສົນ. ປັດຈຸບັນນີ້, ພຣະພຸດທະສາສະໜາເຖລະວາດໄດ້ມີການປະຕິບັດສ່ວນໃຫຍ່ ແມ່ນຢູ່ປະເທດສີລັງກາ, ພະມ້າ, ໄທ, ລາວ, ກຳປູເຈຍ ແລະພາກສ່ວນຕ່າງໆຂອງເອເຊຍຕາເວັນອອກສ່ຽງໃຕ້.

**ຄຳຖາມ: ພຣະພຸດທະສາສະໜາມະຫາຍານແມ່ນຫຍັງ?**
**ຄຳຕອບ:** ປະມານກ່ອນສະຕະວັດທີ ໑ ກ່ອນ ຄ.ສ. ບາງສ່ວນທີ່ພົວພັນຂອງຄຳສອນຂອງພຣະພຸດທະເຈົ້າໄດ້ຖືກຄົ້ນຄວ້າຢ່າງເລິກເຊິ່ງ. ເຊັ່ນດຽວກັນກັບສັງຄົມກຳລັງມີການພັດທະນາ ເຫດນີ້ເອງ ຈຶ່ງຕ້ອງການໃຫ້ມີການແປຄືນຄວາມໝາຍຂອງຄຳສອນໃໝ່. ມີ

ຫຼາຍນິກາຍທີ່ເຕີບໃຫຍ່ ນອກຈາກການພັດທະນາ ແລະການແປຄວາມເຫຼົ່ານີ້ໄດ້ຖືກເອີ້ນລວມວ່າ *ມະຫາຍານ*, ໝາຍເຖິງຫົນທາງສາຍໃຫຍ່, ຍ້ອນພວກເຂົາປະກາດວ່າ ສາມາດເຂົ້າເຖິງທຸກໆຄົນ ບໍ່ສະເພາະແຕ່ພຣະສົງ, ພິກຂຸນີ ຫຼືແມ່ຂາວຜູ້ທີ່ສະຫຼະທາງໂລກເທົ່ານັ້ນ. ໃນທີ່ສຸດ ພຸດທະສາສະໜາມະຫາຍານ ກໍເປັນຮູບແບບທີ່ເດັ່ນໃນປະເທດອິນເດຍ ແລະໃນປັດຈຸບັນ ໄດ້ມີການປະຕິບັດໃນປະເທດຈີນ, ເກົາຫຼີ, ໄຕ້ຫວັນ, ຫວຽດນາມ ແລະຍີ່ປຸ່ນ. ຊາວພຸດເຖລະວາດບາງຄົນເວົ້າວ່າ ພຸດທະສາສະໜາມະຫາຍານ ໄດ້ບິດເບືອນຄຳສອນຂອງພຣະພຸດທະເຈົ້າ. ແຕ່ເຖິງຢ່າງໃດກໍຕາມ, ຊາວພຸດມະຫາຍານກໍໄດ້ຊີ້ແຈງວ່າ ພຣະພຸດທະເຈົ້າຍອມຮັບການປ່ຽນແປງ ເໝືອນດັ່ງໜຶ່ງໃນຫຼັກຄຳສອນຂອງທຳມະທຸກປະການ ແລະການແປຄວາມຂອງພຣະພຸດທະສາສະໜາຂອງພວກເຂົາກໍບໍ່ແມ່ນການບິດເບືອນຂອງທຳມະໄປກວ່າການອຸປະມາຕົ້ນໂອກທີ່ມີການປ່ຽນແປງເປັນໝາກຂອງຕົ້ນໂອກສັນນັ້ນ.

**ຄຳຖາມ: ຂ້ານ້ອຍມັກພົບເຫັນຄຳວ່າ *ຫີນະຍານ*. ຄຳສັບນີ້ ໝາຍຄວາມ ວ່າແນວໃດ?**
**ຄຳຕອບ:** ເມື່ອພຸດທະສາສະໜາມະຫາຍານ ກຳລັງພັດທະນາຢູ່ນັ້ນ, ເຂົາຕ້ອງການຢາກຈຳແນກຕົນເອງ ຈາກພຸດທະສາສະໜານິກາຍເດີມ. ດັ່ງນັ້ນ, ຈິ່ງເອີ້ນຕົນເອງວ່າ *ມະຫາຍານ*, ທາງໃຫຍ່(ຍານໃຫຍ່), ແລະໃສ່ຊື່ນິກາຍດັ້ງເດີມວ່າ *ຫີນະຍານ*, ໝາຍຄວາມວ່າທາງນ້ອຍ(ຍານນ້ອຍ). ສະນັ້ນ, *ຫີນະຍານ* ບາງຄັ້ງແມ່ນຊື່ ຂອງນິກາຍທີ່ຜູ້ນັບຖືພຸດທະສາສະໜາມະຫາຍານ ໄດ້ໃສ່ຊື່ໃຫ້ຜູ້ນັບຖືພຸດທະສາສະໜາ *ເຖລະວາດ*.

**ຄຳຖາມ: *ວັດຊະລະຍານ* (ວະຊິຣະຍານະ) ແມ່ນຫຍັງ?**
**ຄຳຕອບ:** ພຣະພຸດທະສາສະໜາປະເພດນີ້ ເລີ່ມກໍ່ຕົວຂຶ້ນໃນປະເທດອິນເດຍ ໃນສະຕະວັດທີ ໖ ແລະ ໗ ຂອງຄຣິດຕະສັກກະລາດ ໃນຂະນະທີ່ສາສະໜາຮິນດູ ກຳລັງມີການຟື້ນຟູຄັ້ງໃຫຍ່ໃນປະເທດອິນເດຍ. ຕໍ່ກັບສິ່ງນີ້, ຊາວພຸດບາງຄົນ ກໍໄດ້ຮັບອິດທິພົນຈາກບາງທັດສະນະຄຳສອນຂອງສາສະໜາຮິນດູ ໂດຍສະເພາະຢ່າງຍິ່ງແມ່ນກ່ຽວກັບການບູຊາເທບພະເຈົ້າຕ່າງໆ ແລະການປະຕິບັດພິທີກຳບາງຢ່າງ. ໃນສະຕະວັດທີ ໑໑, ພຸດທະສາສະໜານິກາຍ *ວັດຊະລະຍານ* ໄດ້ຕັ້ງໝັ້ນຢູ່ໃນປະເທດຕິເບດ ບ່ອນທີ່ມັນໄດ້ມີການພັດທະນາເພີ່ມຕື່ມອີກ. ຄຳວ່າ *ວັດຊະລະຍານ* ໝາຍເຖິງຫົນທາງສາຍເພັດ ແລະ

ອ້າງອີງເຖິງຫຼັກເຫດຜົນ ທີ່ເຊື່ອວ່າບໍ່ອາດແຕກສະຫຼາຍໄດ້ ທີ່ຊາວວັດຊະລະຍານໃຊ້ເພື່ອຕັດສິນ ແລະປ້ອງກັນຄວາມເຊື່ອຂອງພວກເຂົາ. ພຸດທະສາສະໜານິກາຍ *ວັດຊະລະຍານ* ອີງໃສ່ປະເພດວັນນະຄະດີທີ່ເອີ້ນວ່າ *ຕັນຕຣະ* (Tantras) ຫຼາຍກວ່າຄຳພີພຣະພຸດທະສາສະໜາດັ້ງເດີມ ແລະດ້ວຍເຫດນີ້ເອງ, ບາງຄັ້ງ ສາສະໜາພຸດນິກາຍນີ້ຈຶ່ງເປັນທີ່ຮູ້ຈັກກັນອີກໃນຊື່ *ຕັນຕຣະຍານ* (Tantrayana). ປັດຈຸບັນ *ວັດຊະຣະຍານ* ມີການປະຕິບັດກັນຢູ່ໃນປະເທດມົງໂກເລຍ, ຕິເບດ, ລາດັກຫ໌, ເນປາລ, ພູຖານ ແລະໃນບັນດາປະຊາຊົນຕິເບດ ທີ່ອາໄສຢູ່ໃນປະເທດອິນເດຍ.

**ຄ◌ຳຖາມ: ທັງໝົດທີ່ວ່າມານັ້ນເປັນຕາໜ້າສັບສົນແທ້ໆ. ຖ້າຫາກວ່າຂ້ານ້ອຍ ຕ້ອງການຢາກປະຕິບັດພຣະພຸດທະສາສະໜາ ຂ້ານ້ອຍຈະຮູ້ໄດ້ແນວໃດວ່າຈະເລືອກເອົາປະເພດໃດ?**

**ຄຳຕອບ:** ບາງທີພວກເຮົາອາດຈະປຽບທຽບໃສ່ກັບແມ່ນ້ຳສາຍໜຶ່ງ. ຖ້າຫາກວ່າທ່ານໄປສູ່ແຫຼ່ງກຳເນີດຂອງແມ່ນ້ຳ ແລະຫຼັງຈາກນັ້ນໄປສູ່ປາກນ້ຳ ມັນອາດຈະເບິ່ງແຕກແຕ່ງກັນແທ້. ແຕ່ຖ້າທ່ານຕິດຕາມສາຍນ້ຳຈາກຕົ້ນກຳເນີດຂອງມັນ, ຕາມທີ່ມັນໄຫຼຜ່ານພູແລະຮ່ອມພູ, ເທິງນ້ຳຕົກຕາດ ແລະຜ່ານຫຼາຍຫ້ວຍຮ່ອງນ້ອຍໆ ທີ່ໄຫຼມາສູ່ແມ່ນ້ຳນັ້ນ, ໃນທີ່ສຸດ ທ່ານກໍຈະໄປເຖິງປາກແມ່ນ້ຳ ແລະເຂົ້າໃຈວ່າ ດ້ວຍເຫດໃດມັນຈຶ່ງເບິ່ງຄືວ່າແຕກຕ່າງຈາກຕົ້ນກຳເນີດແທ້ໆ. ຖ້າຫາກທ່ານ ມີຄວາມປະສົງຈະສຶກສາພຣະພຸດທະສາສະໜາ, ຄວນຈະເລີ່ມຕົ້ນດ້ວຍພື້ນຖານຄຳສອນດັ້ງເດີມທີ່ສຸດ ນັ້ນຄືອະລິຍະສັດ(ອະຣິຍະສັຈຈະ)ສີ່, ອະລິຍະມັກ(ອະຣິຍະມັຄຄະ)ມີອົງແປດ, ພຸດທະປະຫວັດ ແລະອື່ນໆອີກ. ແລະສຶກສາຫາເຫດຜົນວ່າດ້ວຍວິທີໃດ ແລະເຫດໃດຄຳສອນ ແລະຄວາມຄິດເຫຼົ່ານີ້ ຈຶ່ງໄດ້ວິວັດທະນາການ ພ້ອມນີ້ ກໍສັງເກດເບິ່ງພຸດທະສາສະໜາ ທີ່ເຫັນວ່າມີຄວາມປະທັບໃຈທ່ານທີ່ສຸດ. ແລະແລ້ວກໍຈະເປັນໄປບໍ່ໄດ້ ສຳລັບທ່ານທີ່ຈະເວົ້າວ່າ ຕົ້ນກຳເນີດຂອງແມ່ນ້ຳ ຂີ້ຮ້າຍກວ່າປາກຂອງແມ່ນ້ຳ ຫຼືວ່າປາກຂອງແມ່ນ້ຳຜິດແປກຈາກຕົ້ນນ້ຳ.

# ໑໖. ການເປັນຊາວພຸດ

**ຄຳຖາມ: ສິ່ງທີ່ທ່ານໄດ້ເວົ້າມານັ້ນໜ້າສົນໃຈສຳລັບຂ້ານ້ອຍຫຼາຍ. ຂ້ານ້ອຍຈະເປັນຊາວພຸດໄດ້ແນວໃດ?**

**ຄຳຕອບ:** ຄັ້ງໜຶ່ງ ໄດ້ມີຊາຍຄົນໜຶ່ງຊື່ວ່າ ອຸບາລີ ຜູ້ທີ່ປະທັບໃຈໃນຄຳສອນຂອງພຣະພຸດທະເຈົ້າ ແລະຕັດສິນໃຈທີ່ຈະເປັນຜູ້ໜຶ່ງໃນສາວົກຂອງພຣະພຸດທະອົງ. ແຕ່ພຣະພຸດທະເຈົ້າກ່າວຕໍ່ທ່ານວ່າ:

" *ຈົ່ງສຳຫຼວດຢ່າງຖືກຕ້ອງເສຍກ່ອນອຸບາລີ. ການສຳຫຼວດຢ່າງຖ່ອງແທ້ ຈະເປັນຜົນດີຕໍ່ຄົນທີ່ມີຊື່ສຽງຢ່າງຕົວທ່ານເອງ."*

*M.II, 379*

ໃນພຣະພຸດທະສາສະໜາ, ຄວາມເຂົ້າໃຈເປັນສິ່ງສຳຄັນທີ່ສຸດ ແລະການເຂົ້າໃຈກໍຕ້ອງໃຊ້ເວລາ, ມັນແມ່ນຜົນຜະລິດສຸດທ້າຍຂອງຂະບວນການທັງມວນ. ດັ່ງນັ້ນ, ບໍ່ຈຳເປັນຈະຕ້ອງຮີບຮ້ອນນັບຖືພຣະພຸດທະສາສະໜາ. ໃຫ້ໃຊ້ເວລາ, ຖາມຄຳຖາມ, ພິຈາລະນາຢ່າງຖີ່ຖ້ວນເສຍກ່ອນ ແລ້ວຈຶ່ງຕັດສິນໃຈ. ພຣະພຸດທະເຈົ້າບໍ່ໄດ້ສົນພະໄທໃນການມີສາວົກຈຳນວນຫຼາຍ. ພຣະພຸດທະອົງສົນພະໄທວ່າ ຄົນຄວນປະຕິບັດຕາມຄຳສອນຂອງພຣະພຸດທະອົງ ຈາກການສຳຫຼວດຢ່າງທີ່ຖ້ວນ ແລະພິຈາລະນາໃນຫຼັກຄວາມຈິງ.

**ຄຳຖາມ: ຖ້າຂ້ານ້ອຍເຮັດແນວນີ້ ແລະພົບວ່າຄຳສອນຂອງພຣະພຸດທະເຈົ້າເປັນທີ່ຍອມຮັບນັບຖືໄດ້, ຂ້ານ້ອຍຄວນຈະເຮັດແນວໃດ ຖ້າຕອ້ງການຢາກເປັນຊາວພຸດ?**

**ຄຳຕອບ:** ເປັນການດີທີ່ສຸດ ທີ່ທ່ານຄວນເຂົ້າວັດທີ່ດີ ຫຼືກຸ່ມຊາວພຸດ, ອຸປະຖຳພວກເຂົາ, ໄດ້ຮັບອຸປະຖຳໂດຍພວກເຂົາ ແລະສືບຕໍ່ຮຽນຮູ້ຕື່ມອີກກ່ຽວກັບຄຳສອນຂອງພຣະພຸດທະເຈົ້າ. ເມື່ອໃດທ່ານພ້ອມ, ທ່ານຈຶ່ງເປັນຊາວພຸດຢ່າງເປັນທາງການ ໂດຍການຖືເອົາໄຕສະລະນະຄົມ(ໄຕສະຣະນະຄົມ)ເປັນທີ່ເພິ່ງ.

**ຄຳຖາມ:** ***ໄຕສະລະນະຄົມ*** **(ໄຕສະຣະນະຄົມ) ແມ່ນຫຍັງ?**

**ຄຳຕອບ:** *ສະຣະນະ* ໝາຍເຖິງສະຖານທີ່ ທີ່ຄົນໄປຫາເມື່ອພວກເຂົາໂສກເສົ້າ ຫຼືເມື່ອພວກເຂົາຕ້ອງການຄວາມປອດໄພ. ທີ່ເພິ່ງມີຫຼາຍປະເພດ. ເມື່ອຄົນເຮົາເສົ້າ, ພວກເຂົາຫາເພື່ອນເປັນທີ່ເພິ່ງ. ພຣະພຸດທະອົງຕັດວ່າ:

*" ການເພິ່ງພຣະພຸດ, ພຣະທຳ, ແລະພຣະສົງ ແລະການເຂົ້າໃຈແຈ້ງໃນອະລິຍະສັດ, ທຸກ, ສະມຸໄທ, ນິໂລດ(ນິໂຣທະ), ແລະອະລິຍະມັກມີອົງແປດ ນຳໄປສູ່ການດັບທຸກ, ນີ້ຄືທີ່ເພິ່ງທີ່ປອດໄພ, ນີ້ຄືທີ່ເພິ່ງອັນສູງສຸດ. ນີ້ຄືທີ່ເພິ່ງທີ່ເຮັດໃຫ້ຄົນຫຼຸດພົ້ນອອກຈາກທຸກ"*

*Dhp.189-192*

ການຖືເອົາພຣະພຸດທະເຈົ້າເປັນທີ່ເພິ່ງ ແມ່ນສັດທາການຍອມຮັບໃນຄວາມຈິງທີ່ບຸກຄົນສາມາດຕັດສະຣູ້ແຈ້ງ ແລະສົມບູນໄດ້ເໝືອນດັ່ງພຣະພຸດທະເຈົ້າ. ການຖືເອົາທຳມະເປັນທີ່ເພິ່ງ ໝາຍເຖິງການເຂົ້າໃຈອະລິຍະສັດສີ່ ແລະການດຳເນີນຊີວິດຕາມອະລິຍະມັກມີອົງແປດ. ການຖືເອົາພຣະສົງເປັນທີ່ເພິ່ງ ໝາຍເຖິງການອຸປະຖຳ, ການເປັນແຮງບັນດານໃຈ ແລະການນຳທາງຈາກທຸກຄົນຜູ້ທີ່ເດີນ ທາງອະລິຍະມັກມີອົງແປດ. ການປະຕິບັດເຊັ່ນນີ້, ຊື່ວ່າເປັນຊາວພຸດ ແລະນີ້ເປັນການກ້າວເດີນບາດທຳອິດຕາມຫົນທາງສູ່ພຣະນິບພານ.

**ຄຳຖາມ: ມີການປ່ຽນແປງຫຍັງແນ່ເກີດຂື້ນໃນຊີວິດຂອງທ່ານທຳອິດເມື່ອທ່ານຖືເອົາໄຕສະລະນະຄົມເປັນທີ່ເພິ່ງ?**

**ຄຳຕອບ:** ເໝືອນກັບຫຼາຍລ້ານຄົນອື່ນໆຕະຫຼອດ ໒໕໐໐ ປີທີ່ຜ່ານມາ, ອາຕະມາໄດ້ພົບວ່າ ຄຳສອນຂອງພຣະພຸດທະເຈົ້າ ແມ່ນເພື່ອສອນໃຫ້ຄົນອອກຈາກໂລກແຫ່ງຄວາມທຸກ. ມັນໄດ້ໃຫ້ຄວາມໝາຍກັບຊີວິດທີ່ໄຮ້ຄວາມໝາຍ. ມັນໄດ້ໃຫ້ສິລະທຳແຫ່ງຄວາມເປັນມະນຸດ ແລະມີເມດຕາກະລຸນາ ເພື່ອໃຊ້ດຳເນີນຊີວິດຂອງອາຕະມາ ແລະໄດ້ຊີ້ວິທີທາງເພື່ອເຂົ້າເຖິງຄວາມບໍລິສຸດ ແລະການສ້າງປາລະມີໃນຊາດໜ້າ. ມີບົດກະວີອິນເດຍບູຮານຂຽນກ່ຽວກັບພຣະພຸດທະເຈົ້າເອົາໄວ້ວ່າ:

*" ຂໍຖືເອົາພຣະພຸດທະອົງເປັນທີ່ເພິ່ງ, ຂໍສັນລະເສີນພຣະພຸດທະອົງ, ຂໍເຄົາລົບພຣະພຸດທະອົງ ແລະຂໍປະພຶດປະຕິບັດຕາມທັມເພື່ອຄວາມຮູ້ແຈ້ງໃນທັມ"*

ຂ້າພະເຈົ້າເຫັນດີໃນຄຳເວົ້າເຫຼົ່ານີ້.

**ຄຳຖາມ: ຂ້ານ້ອຍມີເພື່ອນຄົນໜຶ່ງ ຜູ້ທີ່ພະຍາຍາມຈະໃຫ້ຂ້ານ້ອຍປ່ຽນສາສະໜາສະເໝີ. ຂ້ານ້ອຍບໍ່ໄດ້ສົນໃຈໃນສາສະໜາຂອງລາວ ແລະຂ້ານ້ອຍກໍໄດ້ບອກລາວ ແຕ່ລາວກໍບໍ່ປະໃຫ້ຂ້ານ້ອຍຢູ່ລຳພັງ. ຂ້ານ້ອຍຈະເຮັດແນວໃດດີ?**

**ຄຳຕອບ:** ສິ່ງທຳອິດທ່ານຄວນຈະເຂົ້າໃຈວ່າ ບຸກຄົນໆນີ້ບໍ່ແມ່ນເພື່ອນທ່ານແທ້. ເພື່ອນທີ່ແທ້ຈິງ ຕ້ອງຍອມຮັບໃນສິ່ງທີ່ທ່ານເປັນ ແລະເຄົາລົບໃນຄວາມປາຖະໜາຂອງທ່ານ. ອາຕະມາຄຶດວ່າ ບຸກຄົນນີ້ພຽງແຕ່ທຳທ່າເປັນເພື່ອນຂອງທ່ານ ເພື່ອວ່າລາວຈະສາມາດປ່ຽນແປງທ່ານໃຫ້ຫັນມານັບຖືສາສະໜາຂອງລາວ. ເມື່ອບຸກຄົນນັ້ນຕ້ອງການຈະບັງຄັບໃຫ້ທ່ານເຮັດຕາມເຈຕະນາຂອງເຂົາ ແນ່ນອນວ່າ ພວກເຂົາບໍ່ແມ່ນເພື່ອນແທ້ຂອງທ່ານ.

**ຄຳຖາມ: ແຕ່ລາວເວົ້າວ່າ ລາວຢາກແລກປ່ຽນສາສະໜາກັບຂ້ານ້ອຍ.**

**ຄຳຕອບ:** ການແລກປ່ຽນສາສະໜາກັບຄົນອື່ນ ແມ່ນເປັນສິ່ງທີ່ດີ ແຕ່ອາຕະມາຂໍແນະນຳວ່າ ເພື່ອນຂອງທ່ານຍັງບໍ່ທັນຮູ້ຄວາມແຕກຕ່າງ ລະຫວ່າງການແລກປ່ຽນກັບການບັງຄັບ. ຖ້າອາຕະມາມີໝາກໂປ່ມໜ່ວຍໜຶ່ງ, ອາຕະມາແບ່ງໃຫ້ ທ່ານເຄິ່ງໜຶ່ງ ແລະທ່ານກໍຮັບເອົາ, ແລະອາຕະມາໄດ້ແບ່ງໃຫ້ທ່ານ. ແຕ່ຖ້າທ່ານ ກ່າວກັບອາຕະມາວ່າ "ຂອບໃຈ, ແຕ່ອາຕະມາໄດ້ກິນໄປແລ້ວ" ແລະອາຕະມາ ຍັງຊູຊີຢາກໃຫ້ທ່ານແບ່ງໝາກໂປ່ມມາອີກເຄິ່ງໜຶ່ງ ຈົນກວ່າໃນທີ່ສຸດ ທ່ານໄດ້ໃຫ້ອາຕະມາຕາມການບັງຄັບ, ນີ້ເປັນການຍາກທີ່ຈະເອີ້ນວ່າການແບ່ງປັນ. ມີຄົນຄືກັນກັບເພື່ອນຂອງທ່ານພະຍາຍາມທີ່ຈະເຊື່ອງໜ້າກາກແຫ່ງການປະພຶດບໍ່ດີຂອງເຂົາດ້ວຍການເອີ້ນວ່າ "ແບ່ງປັນ", " ຄວາມຮັກ" ຫຼື "ເປັນປະຈັກພະຍານ". ແຕ່ ບໍ່ວ່າເຂົາຈະໃສ່ຊື່ແນວໃດ, ການປະພຶດຂອງເຂົາ ກໍຍັງຫຍາບຄາຍຢູ່, ມາລະຍາດບໍ່ດີ ແລະເຫັນແກ່ຕົວ.

**ຄຳຖາມ: ຂ້ານ້ອຍຈະຢຸດລາວໄດ້ແນວໃດ?**

**ຄຳຕອບ:** ງ່າຍໆ. ປະການທຳອິດ, ທ່ານຕອ້ງຕັດສິນໃຈແຈ່ມແຈ້ງວ່າ ທ່ານຕ້ອງການຫຍັງ. ປະການທີສອງ, ບອກລາວຢ່າງສັ້ນໆ ແລະແຈ່ມແຈ້ງ. ປະການທີສາມ, ເມື່ອລາວຖາມທ່ານວ່າແບບນີ້ "ເຈົ້າມີຄວາມເຊື່ອແນວໃດ ກ່ຽວກັບບັນຫານີ້" ຫຼື "ເປັນຫຍັງເຈົ້າຈິ່ງບໍ່ຢາກມາປະຊຸມກັບຂ້ອຍ", ພະຍາຍາມເວົ້າປະໂຫຍກທຳອິດຂອງທ່ານຢ່າງແຈ່ມແຈ້ງ, ສຸພາບ ແລະຢ່າງຫຼໍາໄປຫຼໍາມາວ່າ "ຂອບໃຈສຳລັບການເຊື້ອເຊີນ ແຕ່ຂ້ອຍມາບໍ່ໄດ້"

"ດ້ວຍເຫດໃດ."

"ມັນແມ່ນວຽກຂອງຂ້ອຍ. ຂ້ອຍບໍ່ສາມາດມາໄດ້"

"ມີຫຼາຍຄົນທີ່ໜ້າສົນໃຈຢູ່ທີ່ນີ້"

"ຂ້ອຍໝັ້ນໃຈວ່າຈະຕ້ອງມີ ແຕ່ຂ້ອຍມາບໍ່ໄດ້."

"ຂ້ອຍເຊີນເຈົ້າກໍເພາະວ່າຫວ່ງໄຍເຈົ້າ".

"ຂ້ອຍຍິນດີຢ່າງຍິ່ງທີ່ເຈົ້າຫວ່ງໄຍຂ້ອຍ ແຕ່ຂ້ອຍມາບໍ່ໄດ້".

ຖ້າທ່ານເວົ້າຢ້ຳຢ່າງແຈ່ມແຈ້ງ, ຢ່າງອົດທົນ ແລະຢ້ຳໄປມາ ແລະປະຕິເສດທີ່ຈະໃຫ້ໂອກາດລາວເຂົ້າມາກ່ຽວຂ້ອງໃນການສົນທະນາ, ໃນທີ່ສຸດລາວກໍຈະຢຸດ. ມັນເປັນໜ້າອັບອາຍສຳລັບທ່ານ ທີ່ຈະເຮັດແບບນີ້, ແຕ່ມັນເປັນສິ່ງທີ່ສຳຄັນສຳລັບບຸກຄົນຄວນຮູ້ວ່າພວກເຂົາບໍ່ສາມາດຍັດຍູ້ຄວາມເຊື່ອຂອງເຂົາ ຫຼືຄວາມປາຖະໜາຂອງເຂົາໃຫ້ຄົນອື່ນ.

**ຄ◌ໍຖາມ: ຊາວພຸດຄວນຈະແບ່ງປັນທຳມະໃຫ້ຄົນອື່ນບໍ?**

**ຄຳຕອບ:** ພວກເຂົາຄວນຈະແບ່ງປັນ. ຖ້າຫາກມີຄົນຖາມທ່ານກ່ຽວກັບພຣະພຸດທະສາສະໜາ, ກໍບອກເຂົາໄປ. ທ່ານສາມາດບອກເຂົາ ກ່ຽວກັບຄຳສອນຂອງພຣະພຸດທະເຈົ້າແມ່ນແຕ່ພວກເຂົາຍັງບໍ່ທັນຖາມ. ແຕ່ຖ້າສັງເກດເບິ່ງຄຳເວົ້າ ແລະການກະທຳຂອງເຂົາ, ທີ່ເຮັດໃຫ້ທ່ານຮູ້ວ່າ ພວກເຂົາບໍ່ໄດ້ສົນໃຈຈິງ ແລະກໍຍອມຮັບຄວາມເຄົາລົບຄວາມປາຖະໜາຂອງພວກເຂົາ. ນອກຈາກນີ້, ສິ່ງທີ່ສຳຄັນ ຄວນຈື່ຈຳເອົາໄວ້ວ່າ ທ່ານຄວນໃຫ້ຄົນຮູ້ທຳມະ ໂດຍຜ່ານການສະແດງອອກມາທາງດ້ານການກະທຳ ຫຼາຍກວ່າພຽງແຕ່ການເທດ. ສະແດງໃຫ້ປະຊາຊົນເຫັນທຳມະ ດ້ວຍການເປັນຄົນຮູ້ຈັກເຫັນອົກເຫັນໃຈ, ເມດຕາ, ອົດທົນ, ພາກພຽນ, ເປັນຄົນກົງໄປກົງມາ, ແລະຊື່ສັດສຸຈະລິດ. ຂໍໃຫ້ທຳມະ

ເປັ່ງປະກາຍເບັ່ງບານໃນວາຈາ ແລະການກະທຳ. ຖ້າວ່າພວກເຮົາທຸກຄົນ, ທັງທ່ານ ແລະອາຕະມາ, ຮູ້ທຳມະຢ່າງເລິກເຊິ່ງ, ຝຶກປະຕິບັດຢ່າງເຕັມທີ ແລະແບ່ງປັນໃຫ້ຄົນອື່ນດ້ວຍໃຈເອື້ອເຟື້ອ, ພວກເຮົາກໍອາດຈະໄດ້ຮັບອານິສົງແກ່ຕົນເອງແລະຄົນອື່ນເຊັ່ນກັນ.



ພຣະພຸດທະຮູບ ທີ່ວັດພູສຳລີ ເມືອງໂພນທອງ ແຂວງຈຳປາສັກ *ຖ່າຍພາບໂດຍ ຄູບາ ຈອນນີ ຈັນທະວົງສີ*

## ໑໘.ບາງພຣະພຸດທະພາສິດ
## SOME SAYINGS OF THE BUDDHA

*Wisdom is purified by virtue and virtue is purified by wisdom. Where there is one there is always the other. The virtuous person has wisdom and the wise person has virtue. A combination of the two is called the highest thing in the world.*

*D.I, 84*

*ປັນຍາບໍລິສຸດດ້ວຍສິນ ແລະສິນບໍລິສຸດດ້ວຍປັນຍາ. ເມື່ອມີສິ່ງໜຶ່ງກໍຍ່ອມຈະມີ ສິ່ງອື່ນສະເໝີ. ບຸກຄົນຜູ້ມີສິນຍ່ອມມີປັນຍາ ແລະບຸກຄົນຜູ້ເປັນບັນດິດຍ່ອມມີສິນ. ຄຸນນະທຳສອງຢ່າງນີ້ ເມື່ອມີຢູ່ດ້ວຍກັນ ເອີ້ນວ່າສິ່ງທີ່ສູງສຸດໃນໂລກ.*

*ທີຄະນິກາຍ.໑.໗໘*

*The mind precedes all things, the mind dominates them, and they are all mind-made. If a person speaks or acts with a pure mind, happiness will follow him like a shadow that never leaves.*

*Dhp.2*

*ໃຈເປັນສຳຄັນກວ່າສິ່ງອື່ນໃດ, ໃຈເປັນໃຫຍ່, ແລະທຸກສິ່ງເກີດມາຈາກໃຈ. ຖ້າຫາກບຸກຄົນໃດເວົ້າ ຫຼືກະທຳດ້ວຍໃຈທີ່ບໍລິສຸດ, ຄວາມສຸກຈະຕິດຕາມເຂົາ ເໝືອນດັ່ງເງົາຕິດຕາມບໍ່ເຄີຍເຫີນຫ່າງ.*

*ທຳມະບົດຄາຖາ. ຂໍ້ ໒*

*One should not blame another or despise anyone anywhere for any reason. Do not wish pain on another out of either anger or rivalry.*

*Sn.149*

*ຄົນເຮົາບໍ່ຄວນວ່າຮ້າຍຄົນອື່ນ ຫຼືນິນທາຜູ້ໃດ ບໍ່ວ່າໃນສະຖານທີ່ໃດ ແລະດ້ວຍເຫດຜົນໃດ. ບໍ່ຄວນປາຖະໜາທຳຮ້າຍຜູ້ອື່ນດ້ວຍຄວາມໃຈຮ້າຍ ຫຼືຄວາມອິດສາລິດສະຫຍາ(ຣິສຍາ).*

*ສັງຍຸດຕະນິກາຍ. ໑໔໙*

*Just as the great ocean has but one taste, the taste of salt, so too this Dhamma has but one taste, the taste of freedom.*

*Ud.56*

*ເໝືອນດັ່ງມະຫາສະໝຸດທີ່ມີລົດ(ຣົສ)ດຽວຄື ລົດແຫ່ງຄວາມເຄັມ, ເຊັ່ນດຽວກັນ ທຳມະນີ້ກໍມີລົດ ດຽວຄື ລົດແຫ່ງວິມຸດຕິ(ລົດແຫ່ງຄວາມຫຼຸດພົ້ນ).*

*ອຸທານ. ໕໖*

*It is easy to see the faults of others but it is hard to see one's own. While winnowing other results like chaff we hide our own like a hunter concealing himself in a hide. Those who look to others faults only get irritable. Their negativities grow and are far from being destroyed.*

*Dhp.252-3*

*ໂທດຂອງຄົນອື່ນເຫັນໄດ້ງ່າຍ ແຕ່ໂທດຂອງຕົນເອງເຫັນໄດ້ຍາກ. ໃນຂະນະທີ່ ເຮົາຖິ້ມໂທດໃຫ້ຄົນອື່ນເໝືອນດັ່ງໂຮຍແກບ, ພວກເຮົາເຊື່ອງຊ້ອນໂທດຂອງຕົນເອງ ເໝືອນດັ່ງນາຍພານເຊື່ອງຊ້ອນຕົນເອງໃນທີ່ກຳບັງ. ບຸກຄົນໃດຄອງແຕ່ ເລັງໂທດຂອງຄົນອື່ນມີແຕ່ຈະທຸກໃຈ. ອາສາວະກິເລດເຂົາມີແຕ່ຈະເພີ່ມຂຶ້ນ ແລະມີແຕ່ຈະຫ່າງໄກຈາກຄວາມສູນສິ້ນແຫ່ງອາສາວະ.*

*ທຳມະບົດຄາຖາ ຂໍ້ ໒໕໒-໓*

*Many garlands can be made from a heap of flowers. Likewise, many good deeds can be done by one born human.*

*Dhp.53*

*ເໝືອນດັ່ງພວງມາລາສາມາດສ້າງຈາກກອງຂອງດອກໄມ້. ເຊັ່ນດຽວກັນ, ຄວາມດີທັງຫຼາຍທີ່ເຮົາທຳສາມາດສ້າງໄດ້ໂດຍການເກີດມາເປັນມະນຸດເທົ່ານັ້ນ.*

*ທຳມະບົດ ຂໍ້ ໕໓*

*When you speak to others, you may speak at the right time or wrong time, according to the facts or not, gently or harshly, to the point or not, with a mind full of hate or full of love. You should train yourself like this. "Our mind shall not be perverted or shall we speak evil speech but with kindness and compassion. We will live with a mind free from hatred and filled with love. We will live with suffusing firstly one person with love and starting with them suffuse the whole world with a love that is expensive, pervasive, immeasurable and utterly devoid of hatred or enmity." This is how you should train yourselves.*

*M.I, 126*

*ເມື່ອທ່ານເວົ້າກັບຄົນອື່ນ ທ່ານອາດຈະເວົ້າໃນເວລາທີ່ເໝາະສົມ ຫຼືບໍ່ເໝາະສົມ, ຕາມຄວາມຈິງ ຫຼືບໍ່ແມ່ນຄວາມຈິງ, ສຸພາບ ຫຼືຫຍາບຄາຍ, ຖືກເປົ້າ ຫຼືບໍ່ຖືກເປົ້າ, ດ້ວຍໃຈທີ່ປະກອບດ້ວຍໂທສະ ຫຼື ດ້ວຍຄວາມຮັກ. ທ່ານຄວນຈະຝຶກຕົນແບບນີ້. ໃຈຂອງເຮົາຈະບໍ່ຖືກຜິດພ້ຽນ ຫຼືພວກເຮົາຈະບໍ່ເວົ້າຄຳເວົ້າສໍ່ສຽດ ແຕ່ດ້ວຍຄວາມເມດຕາ ແລະຄວາມກະລຸນາ. ພວກເຮົາຈະຢູ່ດ້ວຍໃຈທີ່ປາສະຈາກຄວາມຍາກຮ້າຍ ແລະປະກອບດ້ວຍຄວາມຮັກ. ທຳອິດພວກເຮົາຈະຢູ່ ເພື່ອການຕື່ມຮັກແກ່ຄົນໃດໜຶ່ງ ດ້ວຍຄວາມຮັກ ແລະເລີ່ມຕື່ມຄວາມຮັກໃຫ້ໂລກທັງໂລກດ້ວຍຮັກທີ່ມີຄ່າ,ໄຮ້ຂອບເຂດ, ເໜືອປະມານຫວ່າງເປົ່າຈາກໂທດ ແລະສັດຕູຢ່າງສິ້ນເຊີງ. ນີ້ເອງຄືສິ່ງທີ່ທ່ານຄວນຝຶກຝົນຕົນເອງ.*

*ມັດຊິມະນິກາຍ.໑.໑໒໖*

*It is by three things that the wise person can be recognized. What three? He sees his own faults as they are, on seeing them he tries to correct them, when others acknowledge his faults he forgives them.*

*A.I, 103*

*ບັນດິດມີເຄື່ອງໝາຍຢູ່ສາມຢ່າງໃຫ້ຈົດຈໍາ. ສາມຢ່າງນັ້ນຄືຫຍັງ? ເຂົາເຫັນໂທດຕົນເອງຕາມຄວາມເປັນຈິງ, ເມື່ອເຫັນເຂົາພະຍາຍາມທີ່ຈະປັບປຸງ, ເມື່ອຄົນອື່ນເຫັນໂທດຂອງພວກເຂົາ, ເຂົາຍ່ອມໃຫ້ອະໄພໃຫ້ພວກເຂົາ.*

*ອັງຄຸດຕະຣະນິກາຍ.໑.໑໐໓*

*Cease to do evil, learn to do good, purify the mind. This is the teaching of the Buddhas.*

*Dhp.183*

*ການບໍ່ເຮັດບາບທັງປວງ, ການພໍ່າເພັງແຕ່ບຸນກຸສົນ, ການຊໍາລະໃຈໃຫ້ຜ່ອງໃສ. ນີ້ແມ່ນຄໍາສອນຂອງພຣະພຸດທະເຈົ້າທັງຫຼາຍ.*

*ທໍາມະບົດ. ໑໘໓*

*Learn this from the waters. In mountain clefts and chasms loud gush the streamlets. But great rivers flow silently. Empty things make a noise, the full is always quiet. The fool is like a half-filled pot, the wise person like a deep still pool.*

*Sn.7201*

*ຈົ່ງຮຽນຮູ້ສິ່ງນີ້ຈາກສາຍນໍ້າ. ໃນຮ່ອມ ແລະເຫວໃນພູຜາ ມີສຽງດັງສະໜັ່ນຂອງສາຍນໍ້າ. ແຕ່ບັນດາແມ່ນໍ້າໃຫຍ່ທັງຫຼາຍຍ່ອມໄຫຼຢ່າງງຽບສະຫງົບ. ສິ່ງຂອງທີ່ເປົ່າຍ່ອມມີສຽງດັງສະໜັ່ນຫວັ່ນໄຫວ, ສ່ວນຂອງທີ່ເຕັມຍ່ອມງຽບສະຫງັດ. ຄົນໂງ່ກໍຄືກັນກັບໄຫທີ່ເຕັມເຄິ່ງໜຶ່ງ, ສ່ວນບັນດິດປຽບເໝືອນສະນໍ້າທີ່ເລິກສະຫງົບນິ້ງ.*

*ສັງຍຸດຕະນິກາຍ.ກ.໔໐໑*

*Even if low-down criminals were to cut you limb from limb with a double-handled saw, if you filled your mind with hatred you would not be practicing my teachings.*

*M.I, 126*

*ເຖິງແມ່ນວ່າຈະເປັນຄວາມຜິດພຽງເລັກນ້ອຍ ຍ່ອມຈະຕັດແຂ່ງຕັດຂາທ່ານເທື່ອລະນ້ອຍ ດ້ວຍເລື່ອຍທີ່ກໍາສອງດ້າມ, ຖ້າພວກທ່ານມີຈິດໃຈທີ່ປະກອບດ້ວຍຄວາມໂກດ, ພວກທ່ານຈະບໍ່ໄດ້ຊື່ວ່າປະຕິບັດຕາມຄໍາສອນຂອງເຮົາ(ພຸດທະອົງ).*

*ມັດຊິມະນິກາຍ,໑.໑໘໖*

*If one is jealous, selfish or dishonest they are unattractive despite their eloquence and good features. But the person who is purged of such things and is free from hatred, it is he or she who is really beautiful.*

*Dhp. 262-3*

*ຖ້າຫາກວ່າຄົນເຮົາມີໃຈລິດສະຫຍາ, ເຫັນແກ່ຕົວ ຫຼືບໍ່ຊື່ສັດ, ພວກເຂົາຈະເປັນຄົນຮູບບໍ່ງາມ ເຖິງແມ່ນວ່າຈະເວົ້າມວ່ນ ແລະມີໜ້າຕາຜິວພັນດີກໍຕາມ. ແຕ່ບຸກຄົນໃດຖອນຖິ້ມ ເຊິ່ງສິ່ງເຫຼົ່ານັ້ນ ແລະເປັນອິດສະຫຼະຈາກຄວາມໂກດ, ບຸກຄົນນັ້ນໄດ້ຊື່ວ່າ ເປັນຜູ້ງາມຍິ່ງແທ້.*

*ທຳມະບົດ. ຂໍ້ ໒໖໒-໓*

*It is impossible that a person who is not themselves restrained, disciplined or satisfied could restrain, discipline or satisfy others. But it is very possible that one who has restrained, disciplined and satisfied themselves could help others become like that.*

*M.I, 45*

*ເປັນໄປບໍ່ໄດ້ທີ່ບຸກຄົນຜູ້ທີ່ຍັງບໍ່ທັນໄດ້ຝຶກຕົນເອງ, ບໍ່ມີລະບຽບວິໄນ ຫຼືບໍ່ພໍໃຈໃນຕົນຈະສາມາດສັ່ງສອນ, ໃສ່ວິໄນ ຫຼືເຮັດໃຫ້ຄົນອື່ນປະທັບໃຈ. ແຕ່ເປັນໄປໄດ້ສຳລັບບຸກຄົນຜູ້ທີ່ສັງວອນດີແລ້ວ, ມີວິໄນດີແລ້ວ ແລະພູມໃຈໃນຕົນເອງ ຍ່ອມສາມາດຊວ່ຍເຫຼືອຄົນອື່ນໃຫ້ເປັນແບບນັ້ນໄດ້.*

*ມັດຊິມະນິກາຍ.໑.໔໕*

*Contentment is the greatest wealth.*

*Dhp.204*

*ຄວາມສັນໂດດ(ຄວາມພໍໃຈໃນສິ່ງທີ່ຕົນມີ) ເປັນລາບຢ່າງຍິ່ງ.*

*ທຳມະບົດ.ຂໍ້ ໒໐໔*

*If others criticize me, the Dhamma or the Sangha, you should not get angry or resentful because that would cloud your judgment and you would not know whether what they said was right and wrong. If others do this, explain to them how their criticism is incorrect, saying, 'This is not correct. That is not right. This is not our way. That is not what we do.' Likewise, if others praise me or the Dhamma or the Sangha, you should not get proud or puffed up because that would cloud your judgment and you would not know whether what they said was right and wrong. So if others do this, explain to them how their praise is justified, saying, 'This is correct. That is right. This is our way. That is found in us.'*

*D.I, 3*

*ຖ້າຫາກມີຄົນວິພາກວິຈານເຮົາ, ພຣະທຳ ຫຼືພຣະສົງ, ທ່ານທັງຫຼາຍບໍ່ຄວນຢາກຮ້າຍ ຫຼື ຮູ້ສຶກເສຍໃຈເພາະວ່າ ການເຮັດເຊັ່ນນັ້ນ ອາດເປັນການບົດບັງການຕັດສິນຂອງພວກທ່ານ ແລະພວກທ່ານອາດຈະບໍ່ຮູ້ວ່າ ສິ່ງທີ່ເຂົາເຈົ້າເວົ້າໄປນັ້ນ ຖືກຕ້ອງ ຫຼືຜິດ. ຖ້າຫາກບຸກຄົນອື່ນກະທຳເຊັ່ນນີ້, ຈົ່ງອະທິບາຍສູ່*

*ພວກເຂົາວ່າ ການວິຈານຂອງພວກເຂົາເຈົ້າ ແມ່ນຜິດພາດ, ໂດຍກ່າວວ່າ, "ສິ່ງນີ້ບໍ່ຖືກ. ສິ່ງນັ້ນບໍ່ຖືກ. ສິ່ງນີ້ບໍ່ ແມ່ນຫົນທາງຂອງພວກເຮົາ. ນັ້ນບໍ່ແມ່ນສິ່ງທີ່ພວກເຮົາປະຕິບັດ." ເຊັ່ນດຽວກັນ, ຖ້າຫາກມີຄົນມາສັນລະເສີນເຮົາ ຫຼືພຣະທຳ ຫຼືພຣະສົງ, ພວກທ່ານທັງຫຼາຍບໍ່ຄວນພູມໃຈ ຫຼືດັ່ງຜື່ງໂລດ ເພາະວ່າການເຮັດແນວນັ້ນ ອາດຈະເປັນການບົດບັງການຕັດສິນຂອງພວກທ່ານ ແລະພວກທ່ານຈະບໍ່ຮູ້ວ່າ ສິ່ງທີ່ພວກເຂົາເວົ້ານັ້ນຖືກ ຫຼືຜິດ. ດັ່ງນັ້ນ, ຖ້າຫາກມີຄົນກະທຳເຊັ່ນນີ້. ຈົ່ງອະທິບາຍຕໍ່ ພວກເຂົາວ່າການສັນລະເສີນຂອງພວກເຂົາຖືກຕ້ອງພຽງໃດ, ໂດຍກ່າວວ່າ, " ສິ່ງນີ້ຖືກຕ້ອງ. ສິ່ງນີ້ ສົມຄວນແລ້ວ. ສິ່ງນີ້ແມ່ນຫົນທາງຂອງພວກເຮົາ. ນັ້ນແມ່ນສິ່ງທີ່ພົບໃນພວກເຮົາ."*

*ທີຄະນິກາຍ.໑.໓*

*If words have five marks they are not ill-spoken but well-spoken, laudable and praised by the wise. What five? They are spoken at the right time, they are true, they are spoken with gentleness, they are to the point and they are spoken with love.*

*A.III, 243*

*ຖ້າຫາກຄຳເວົ້າປະກອບດ້ວຍເຄື່ອງໝາຍຫ້າຢ່າງ, ຈະບໍ່ແມ່ນຄຳເວົ້າຮ້າຍ ແຕ່ຈະແມ່ນຄຳເວົ້າດີ, ເຊື່ອຖືໄດ້ ແລະບັນດິດຍ່ອມສັນລະເສີນ. ຫ້າຢ່າງນັ້ນແມ່ນຫຍັງ? ເວົ້າຖືກກາລະ, ເວົ້າຄວາມຈິງ, ເວົ້າດ້ວຍຄວາມສຸພາບ, ເວົ້າຖືກຂໍ້ ແລະເວົ້າດ້ວຍຄວາມເມດຕາ.*

*ອັງຄຸດຕະຣະນິກາຍ. ໓.໔໔໓*

*Just as a deep lake is clear and still, even so the wise become utterly peaceful when they hear the teachings.*

*Dhp.82*

*ວັງນໍ້າເລິກເສາະໃສ ບໍ່ຂຸ່ນມົວເປັນສັນໃດ ບັນດິດທັງຫຼາຍຟັງ(ຮູ້)ທຳທັງຫຼາຍແລ້ວຍ່ອມຜ່ອງໃສສັນນັ້ນ.*

*ທຳມະບົດ. ຂໍ້ທີ ໘໔*

*Of little importance is the loss of such things as wealth but it is a terrible thing to loose wisdom. Of little importance is the gaining of such things as wealth but it is a wonderful thing to gain wisdom.*

*A.I, 15*

*ການສູນເສຍສິ່ງຂອງເຊັ່ນຊັບສົມບັດຍັງເປັນເລື່ອງທຳມະດາ ແຕ່ການສູນເສຍປັນຍາເປັນສິ່ງທີ່ບໍ່ດີເລີຍ. ການໄດ້ມາເຊິ່ງສິ່ງຂອງ ທີ່ເປັນຊັບສົມບັດມີຄວາມສຳຄັນໜ້ອຍ ແຕ່ການໄດ້ມາເຊິ່ງປັນຍາເປັນສິ່ງທີ່ປະເສີດກວ່າ.*

*ອັງຄຸດຕະຣະນິກາຍ.໑.໑໕*

*If the heedless person recites the sacred text but does not apply what they say, they are like a cowherd counting someone else's cows; they will not enjoy the benefits of the holy life.*

*Dhp.19*

*ບຸກຄົນຜູ້ປະໝາດຢູ່ ແມ່ນແຕ່ທ່ອງຈົ່ມຄຳພີ ແຕ່ບໍ່ປະຕິບັດຕາມສິ່ງທີ່ເຂົາສອນ, ພວກເຂົາປຽບເໝືອນບຸກຄົນຜູ້ນັບຝູງງົວໃຫ້ຄົນອື່ນ; ຍ່ອມບໍ່ໄດ້ຮັບຄວາມສຸກຈາກຜົນຂອງເພດພົມມະຈັນນັ້ນ.*

*ທຳມະບົດ.ຂໍ້ທີ ໑໙*

*Just as a mother protects her only child even at risk of her own life, so too, one should have immeasurable love to all beings in the world.*

*Sn.150*

*ເໝືອນກັບມານດາຮັກສາລູກຂອງນາງ ແມ່ນແຕ່ດ້ວຍການສ່ຽງຊີວິດຕົນເອງ, ເຊັ່ນດຽວກັນ, ຄົນເຮົາຄວນມີຄວາມເມດຕາຕໍ່ສັບພະສັດໃນໂລກ.*

*ສັງຍຸດຕະນິກາຍ.໑໕໐*

*One who wants to admonish another should first ponder like this, 'Am I or am I not one who practices complete purity in body and speech? Are these qualities present in me or not?' If they are not, there will no doubt be those who say, 'Come now, why don't you practice complete purity in body and speech first?' Again, one who wants to admonish another should first ponder like this, 'Have I freed myself from ill will and developed love towards others. Is this quality present in me or not?' If they are not, there will be no doubt be those who say, 'Come now, why don't practice love yourself?'*

*Whoever practices righteousness in the morning, at noon or at night, they will have a happy morning, a happy noon and a happy night.*

*A.I, 294*

*ບຸກຄົນໃດຕ້ອງການຈະສອນຄົນອື່ນ ຄວນຄຶດພິນິດດັ່ງນີ້ເສຍກ່ອນ," ຂ້າພະເຈົ້າແມ່ນ ຫຼື ບໍ່ແມ່ນບຸກຄົນ ຜູ້ປະຕິບັດພົມມະຈັນໄດ້ຢ່າງບໍລິບູນທາງກາຍ ແລະໃຈໄດ້ແລ້ວບໍ? ຄຸນນະທຳເຫຼົ່ານີ້ ມີໃນຂ້າພະເຈົ້າ ແລ້ວຫຼືຍັງ" ຖ້າຫາກວ່າຍັງ, ຈະບໍ່ມີຄວາມສົງໄສເລີຍຕໍ່ບຸກຄົນທີ່ກ່າວວ່າ, "ມາເຖີດ, ດ້ວຍເຫດໃດທ່ານຈຶ່ງບໍ່ປະຕິບັດຄວາມບໍລິສຸດຢ່າງບໍລິບູນແຫ່ງຈິດໃນກາຍ ແລະວາຈາ?" ເຊັ່ນດຽວກັນ ,ບຸກຄົນໃດຜູ້ຕ້ອງການຈະສອນຄົນອື່ນກ່ອນອື່ນຄວນຄຶດແບບນີ້, "ຂ້າພະເຈົ້າ ເປັນອິດສະຫຼະຂອງຄວາມພະຍາບາດ ແລະມີຄວາມເມດຕາຕໍ່ຄົນອື່ນແລ້ວບໍ? ຄຸນນະທັມນີ້ມີໃນຂ້າພະເຈົ້າ ແລ້ວຫຼືຍັງ?" ຖ້າຫາກວ່າຍັງ, ກໍຍ່ອມຈະບໍ່ເປັນການເດົາເລີຍຕໍ່ບຸກຄົນທີ່ກ່າວວ່າ, "ຈົ່ງມາເຖີດ, ດ້ວຍເຫດໃດທ່ານຈຶ່ງບໍ່ປະຕິບັດຄວາມເມດຕາແກ່ຕົນເອງ."*

*ອັງຄຸດຕະຣະນິກາຍ. ໔໙໔*

*If anyone abuses you, hits you, throws stones at you or strikes you with a stick or a sword, you must put aside all worldly desires and considerations and think, ' My heart will not be moved. I shall speak no evil words. I will feel no resentment but maintain kindness and compassion for all beings.' You should think like this.*

*M.I, 126*

*ຖ້າມີຄົນທຳຮ້າຍທ່ານ, ຕີທ່ານ, ແກວ່ງກ້ອນຫີນໃສ່ທ່ານ ຫຼືໂຈມຕີທ່ານດ້ວຍໄມ້ແສ້ ຫຼືດາບ, ທ່ານຄວນຈະປ່ອຍວາງຄວາມປາຖະໜາແຫ່ງໂລກີວິໄສ ແລະການໄຕ່ຕອງ, ຈົ່ງຄຶດ, "ຫົວໃຈຂອງຂ້າພະເຈົ້າຈະບໍ່ຫວັ່ນໄຫວ. ຂ້າພະເຈົ້າຈະບໍ່ເວົ້າຄຳເວົ້າທີ່ຫຍາບຊ້າອີກ. ຂ້າພະເຈົ້າຈະບໍ່ຮູ້ສຶກເສຍໃຈ ແຕ່ຈະຍັງຄົງໄວ້ ເຊິ່ງຄວາມເມດຕາ ແລະກະລຸນາເພື່ອມວນມະນຸດຊາດ". ທ່ານຄວນຈະຄຶດເຊັ່ນນີ້.*

*ມັດຊິມະນິກາຍ. ໑໔໗*

*Irrigators lead the water, fletchers bend the shaft, and carpenters shape the wood, the wise mold themselves.*

*Dhp.80*

*ທຳມະດາຊາວນາທັງຫຼາຍຍ່ອມເປັ່ງນ້ຳເຂົ້ານາ, ຊ່າງທະນູກໍເບັດລູກສອນ(ໃຫ້ຊື່), ແລະຊ່າງໄມ້ກໍຖາກໄມ້(ໃຫ້ກົ້ງ), ບັນດິດກໍຍ່ອມເຝິກແອບຕົນເອງ(ໃຫ້ດີຢູ່ສະເໝີ).*

*ທຳມະບົດ.ຂໍ້ທີ ໘໐*

*There are four types of people found in the world. What four? Those concerned with neither their own welfare or the welfare of others, those concerned with the welfare of others but not their own, those concerned with their own welfare but not that of others and those who are concerned with both their own welfare and the welfare of others... Of there four types of people those who are concerned with their own welfare and the welfare of others are the chief, the highest, the topmost and the best.*

*A.II, 94*

*ໃນໂລກນີ້ມີຄົນຢູ່ສີ່ປະເພດດ້ວຍກັນ. ສີ່ປະເພດມີຫຍັງແນ່? ບຸກຄົນຜູ້ບໍ່ສົນໃຈທັງປະໂຫຍດຕົນ ຫຼືປະໂຫຍດຂອງຄົນອື່ນ, ບຸກຄົນຜູ້ສົນໃຈໃນປະໂຫຍດຄົນ ອື່ນແຕ່ບໍ່ສົນໃຈປະໂຫຍດຂອງຕົນ, ບຸກຄົນຜູ້ສົນໃຈໃນປະໂຫຍດຂອງຕົນ ແຕ່ບໍ່ສົນໃຈໃນປະໂຫຍດຂອງຄົນອື່ນ,ແລະບຸກຄົນຜູ້ໃສ່ໃຈທັງປະໂຫຍດຕົນ ແລະປະໂຫຍດຄົນອື່ນ...ໃນຈຳນວນບຸກຄົນສີ່ປະເພດນີ້, ບຸກຄົນຜູ້ໃສ່ໃຈທັງປະໂຫຍດຕົນ ແລະປະໂຫຍດຄົນອື່ນ ຊື່ວ່າເປັນຜູ້ປະເສີດ, ສູງສຸດ, ສຸດຍອດ ແລະດີທີ່ສຸດ.*

*ອັງຄຸດຕະຣະນິກາຍ.໔,໙໔*

*If you take refuge in the Buddha, the Dhamma and the Sangha you will be free from fear and trembling.*

*S.I, 220*

*ຖ້າຫາກທ່ານທັງຫຼາຍຖືເອົາພຣະພຸດທະເຈົ້າ, ພຣະທຳ ແລະພຣະສົງເປັນສະລະນະທີ່ເພິ່ງ, ທ່ານທັງຫຼາຍຈະຫຼຸດພົ້ນອອກຈາກຄວາມຢ້ານ ແລະຄວາມຫວາດຫວັ່ນ.*

*ສັງຍຸດຕະນິກາຍ.໑.໔໔໐*

*Conquer hatred with love, evil with good, meanness with generosity and lies with truth.*

*Dhp. 223*

*ຄົນເພິ່ງຊະນະຄົນໃຈຮ້າຍດ້ວຍຄວາມບໍ່ໃຈຮ້າຍ ເພິ່ງຊະນະຄົນບໍ່ດີດ້ວຍຄວາມດີ ເພິ່ງຊະນະຄົນຂີ້ຖີ່ດ້ວຍການໃຫ້ ເພິ່ງຊະນະຄົນເວົ້າໂລເລດ້ວຍ(ການເວົ້າ)ຄຳຈິງ.*

*ທຳມະບົດ.ຂໍ້ທີ ໘໔*

*Those whose thoughts, speech and actions are good are their own best friends. Even if they say, 'we do not care about ourselves' they are still their own best friend. And why? Because they do for themselves what a friend would do for them.*

*S.I, 71*

*ຄວາມຄຶດ, ວາຈາ ແລະ ການກະທຳຂອງບຸກຄົນເຫຼົ່າໃດທີ່ດີ ຍ່ອມເປັນເໝືອນມິດທີ່ດີທີ່ສຸດຂອງພວກເຂົາ. ແມ່ນແຕ່ພວກເຂົາເວົ້າວ່າ, " ພວກເຮົາບໍ່ສົນໃຈກ່ຽວກັບຕົນເອງ" ແຕ່ພວກເຂົາກໍຍັງຖືວ່າ ເປັນມິດ ທີ່ດີທີ່ສຸດຂອງພວກເຂົາ. ດ້ວຍເຫດໃດ? ເພາະພວກເຂົາເຮັດເພື່ອເພື່ອນ ໃນສິ່ງທີ່ເພື່ອນສາມາດກະທຳເພື່ອເຂົາໄດ້.*

*ສັງຍຸດຕະນິກາຍ.໑.໗໑*

*Do not think lightly of goodness saying, 'I can not be like that'. A drop at a time is the water pot filled and, likewise little 'by little do the wise fill themselves with good.*

*Dhp.122*

*ຄົນບໍ່ຄວນຖືເບົາຕໍ່ບຸນວ່າ "ບຸນມີປະມານໜ້ອຍດຽວໃດຈະເຫັນຜົນໄດ້" ຕັ້ງແຕ່ໄຫນ້ຳກໍຍັງເຕັມໄດ້ ຍ້ອນຍາດນ້ຳເທື່ອລະນ້ອຍຕົກໃສ່ ຜູ້ມີປັນຍາສ້າງສົມບຸນ ແມ່ນວ່າເທື່ອລະໜ້ອຍກໍຍ່ອມເຕັມດ້ວຍບຸນໄດ້ (ຄືກັນ).*

*ທຳມະບົດ.ຂໍ້ ໑໒໒*

*Now at that time a certain monk was suffering from dysentery and lay where he had fallen in his own excrement. The Lord and Ananda were visiting the lodgings and they came to where the sick monk was and the Lord asked him, 'Monk, what is wrong with you?'*
*'I have dysentery, Lord.'*
*'Is there no one to look after you?'*
*'No Lord'*
*'Then why don't the other monks look after you?'*
*'Because I am of no use to them'*
*Then the Lord said to Ananda, 'Go and fetch water and we will wash this monk.' So Ananda brought water and the Lord poured it while Ananda washed the monk all over. Then taking the monk by the head and feet they carried him and laid him on a bed. Later the Lord called the monks together and asked them, 'Why did you not look after that sick monk?'*
*'Because he was of no use to us.'*
*'Monks, you have no mother or father to take care of you. If you do not look after each other, who else will? He who would nurse me let him nurse the sick.'*

*Vin.IV, 301*

*ກາລະຄັ້ງນັ້ນ, ມີພຣະສົງອົງໜຶ່ງກຳລັງໄດ້ຮັບທຸກຂະເວທະນາຈາກພະຍາດເຈັບທ້ອງ ໄດ້ນອນແຊ່ຢູ່ກັບອຸດຈາລະຂອງຕົນເອງ. ພຣະພຸດທະອົງພ້ອມດ້ວຍພຣະອານົນສະເດັດໄປຢ້ຽມທີ່ຢູ່ຂອງທ່ານ ແລະໄດ້ມາສູ່ທີ່ຢູ່ຂອງພຣະພິກຂຸທີ່ອາພາດ ແລະພຣະພຸດທະອົງໄດ້ຕັດຖາມວ່າ," ພິກຂຸ, ທ່ານເປັນແນວໃດ?*

*" ຂ້ານ້ອຍເປັນພະຍາດເຈັບທອ້ງ, ຂ້ານ້ອຍ"*

*"ບໍ່ມີຜູ້ໃດເບິ່ງແຍງທ່ານຈັກດີ້ບໍ?"*

*" ບໍ່ມີ ຂ້ານ້ອຍ"*

*" ແລ້ວ ເປັນຫຍັງພຣະສົງອົງຄ໌ອື່ນຈຶ່ງບໍ່ເບິ່ງແຍງທ່ານ?"*

*"ເພາະວ່າຂ້ານ້ອຍບໍ່ມີປະໂຫຍດຕໍ່ພວກເຂົາ."*

*ແລະເມື່ອນັ້ນ ພຣະພຸດທະອົງຈຶ່ງກ່າວຕໍ່ພຣະອານົນວ່າ, "ໄປເອົານ້ຳມາ ແລະພວກເຮົາຈະລ້າງຊວ່ຍໃຫ້ພິກຂຸອົງນີ້." ດັ່ງນັ້ນ ພຣະອານົນ ຈຶ່ງໄດ້ໄປເອົານ້ຳ ແລະພຣະພຸດທະອົງກໍໄດ້ເທນ້ຳໃສ່ພິກຂຸອົງ ນັ້ນ ສ່ວນພຣະອານົນກໍລ້າງພຣະອົງນັ້ນທົ່ວທັງໂຕ. ຫຼັງຈາກນັ້ນຈຶ່ງໄດ້ໂຊມເອົາພຣະພິກຂຸອົງນັ້ນ ໄປສູ່ບ່ອນນອນ. ຕໍ່ມາ, ພຣະພຸດທະອົງກໍໄດ້ຮຽກພຣະສົງມາພ້ອມກັນ ແລ້ວຖາມພວກເຂົາວ່າ, "ດ້ວຍເຫດໃດ ພວກທ່ານທັງຫຼາຍຈຶ່ງບໍ່ເບິ່ງແຍງພຣະພິກຂຸຜູ້ອາພາດ?"*

*" ເພາະວ່າເພິ່ນບໍ່ໄດ້ມີປະໂຫຍດຫຍັງຕໍ່ພວກຂ້ານ້ອຍ."*

*"ດູລາພິກຂຸທັງຫຼາຍ, ພວກທ່ານທັງຫຼາຍບໍ່ມີມານດາ ແລະບິດາຄອຍເບິ່ງແຍງພວກທ່ານ. ຖ້າພວກທ່ານບໍ່ເບິ່ງແຍງດູແລກັນ ແລະກັນແລ້ວ, ໃຜຈະເປັນຜູ້ເບິ່ງແຍງ? ບຸກຄົນຜູ້ໃດຢາກອຸປະຖາກເຮົາຈົ່ງອຸປະຖາກຄົນໄຂ້ເຖີດ."*

*ວິນັຍ. ໔, ໓໐໑*

*The gift of truth excels all other gifts.*

*Dhp.354*

*ການໃຫ້ທຳມະເປັນທານ ຍ່ອມຊະນະການໃຫ້ທັງປວງ.*

*ທຳມະບົດ.ຂໍ້ທີ ໓໕໔*

*It is good from time to time to think about your own faults. It is good from time to time to think about the faults of others. It is good from time to time to think about your own virtues. It is good from time to time to think about the virtues of others.*

*A.V, 159*

*ມັນເປັນເລື່ອງດີແຕ່ອະດີດເປັນຕົ້ນທີ່ທ່ານມັກຄຶດກ່ຽວກັບໂທດຂອງຕົນ. ມັນເປັນເລື່ອງດີແຕ່ໃດໆມາ ທີ່ຈະຄຶດກ່ຽວກັບຄວາມຜິດຂອງຄົນອື່ນ. ມັນເປັນເລື່ອງດີສະເໝີມາທີ່ຈະຄຶດກ່ຽວກັບສິນຂອງຕົນ. ມັນເປັນເລື່ອງດີແຕ່ໃດມາ ທີ່ຈະຄຶດກ່ຽວກັບສິນຂອງຄົນອື່ນ.*

*ອັງຄຸດຕະຣະນິກາຍ, ໑໕໙*

*Those who do good rejoice now, they rejoice later, they rejoice both now and later. They rejoice and are happy when they think of their own good deeds.*

*Dhp.16*

*ຜູ້ໃດສ້າງບຸນໄວ້ແລ້ວ ຍ່ອມເພີງໃຈທັງສອງໂລກ ຄື ເພີງໃຈຢູ່ໃນໂລກນີ້ລວ່ງລັບໄປແລ້ວ ກໍຍັງຍ່ອມເພີງໃຈຢູ່ ເຂົາມວ່ນຊື່ນຢູ່ຍ້ອນວ່າຫຼີງເຫັນກຳ(ກັມມະ)ອັນບໍລິສຸດ(ປະຣິສຸທະ)ຂອງຕົນ.*

*ທຳມະບົດ.ຂໍ້ທີ ໑໖*

*Give up wrong. It can be done. If it were impossible, I would not ask you to do so. But it is possible and therefore I say, 'Give up wrong.' If giving up wrong led to your loss and sorrow, I would not ask you to do so. But it will be for your welfare and happiness and therefore I say, 'Give up wrong.' Nourish the good. It can be done. If it were impossible I would not ask you to do so. But it is possible and therefore I say, 'Nourish the good.' If nourishing the good led you to your loss and sorrow, I would not ask you to do so. But it will enhance your welfare and happiness and therefore I say, 'Nourish the good.'*

*A.I, 58*

*ການລະຄວາມຊົ່ວສາມາດເຮັດໄດ້. ຖ້າມັນເປັນໄປບໍ່ໄດ້, ເຮົາກໍຈະບໍ່ບອກພວກທ່ານທັງຫຼາຍໃຫ້ທຳເຊັ່ນນັ້ນ. ແຕ່ມັນເປັນໄປໄດ້ ແລະດັ່ງນັ້ນ, ເຮົາຈິ່ງກ່າວວ່າ, "ຈົ່ງລະການກະທຳຊົ່ວເຖີດ." ຖ້າຫາກການລະການທຳຊົ່ວນຳໄປສູ່ການສູນເສຍ ແລະຄວາມທຸກໂສກ, ເຮົາກໍຈະບໍ່ບອກທ່ານເຮັດເຊັ່ນນັ້ນ. ແຕ່ວ່າມັນເປັນໄປເພື່ອຄວາມເປັນຢູ່ທີ່ດີ ແລະຄວາມສຸກ ດ້ວຍເຫດນີ້ເຂົາຈິ່ງກ່າວວ່າ, "ຈົ່ງລະຄວາມຊົ່ວ". ເພີ່ມພູນຄວາມດີສາມາດເຮັດໄດ້. ຖ້າຫາກວ່າມັນເປັນໄປບໍ່ໄດ້, ເຮົາກໍຈະບໍ່ບອກພວກທ່ານທັງຫຼາຍເຮັດເຊັ່ນນັ້ນ. ແຕ່ວ່າມັນເປັນໄປໄດ້. ດັ່ງນັ້ນ, ເຮົາຈິ່ງກ່າວວ່າ, "ຈົ່ງພ່ຳເພັງຄວາມດີ." ຖ້າຫາກການພ່ຳເພັງຄວາມດີ ນຳໄປສູ່ການສູນເສຍ ແລະໂສກເສົ້າ, ເຮົາກໍຈະບໍ່ບອກພວກທ່ານທັງຫຼາຍ. ແຕ່ວ່າມັນເປັນການຍົກສູງຄວາມສະຫວັດດີພາບ ແລະຄວາມສຸກຂອງທ່ານ ດັ່ງນັ້ນ ເຮົາຈິ່ງກ່າວວ່າ, "ຈົ່ງເພີ່ມພູນຄວາມດີເຖີດ."*

*ອັງຄຸດຕະຣະນິກາຍ ໕໘*

*All tremble at punishment, life is dear to all. Therefore, do not put yourself in the place of others and neither kill nor condone killing.*

*Dhp.130*

*ສັດທັງຫຼາຍທັງປວງ ຍ່ອມຫວາດຫວັ່ນຕໍ່ການໃສ່ໂທດ ຊີວິດຍ່ອມເປັນທີ່ຮັກ ແກ່ສັດທັງຫຼາຍທັງປວງ ຄົນເຮັດຕົນໃຫ້ເປັນເຄື່ອງປຽບທຽບແລ້ວ ບໍ່ຄວນຂ້າເອງ ບໍ່ຄວນໃຊ້ຄົນອື່ນໃຫ້ຂ້າ.*

*ທຳມະບົດ. ຂໍ້ທີ ໑໓໐*

*Like the Himalayas, the good shine from afar. Like an arrow shot into the night, the bad are obscure.*

*Dhp. 304*

*ສັບບຸລຸດ(ຄົນດີ)ທັງຫຼາຍ ຍ່ອມຜາກົດໄປໄດ້ໃນໄກໆ ຄືດັ່ງດອຍເຂົາຫິມະພານ. ອະສັບບຸລຸດ(ຄົນບໍ່ດີ)ທັງຫຼາຍ(ເຖິງຢູ່ໃກ້ໆ) ໃນທີ່ນີ້ກໍບໍ່ຜາກົດຄືດັ່ງລູກສອນທີ່ຍິງໄປໃນກາງຄືນ.*

*ທຳມະບົດ. ຂໍ້ທີ ໓໐໔*

*The Lord said, ‘What do you think about this? What is the purpose of a mirror?’*
*‘It is for the purpose of reflection,’ replied Rahula.*
*Then the Lord said, ‘Even so, an action should be done with body, speech, and mind only after careful reflection.’*

*M.I, 415*

*ພຣະພຸດທະອົງຕັດວ່າ, “ທ່ານຄຶດແນວໃດກ່ຽວກັບສິ່ງນີ້? ຈຸດປະສົງຂອງແວ່ນແຍ່ນຫຍັງ?”*
*“ຈຸດປະສົງຂອງແວ່ນແຍ່ນເພື່ອສະທ້ອນເງົາ,” ລາຫຸນຕອບ*
*ເມື່ອນັ້ນພຣະພຸດທະອົງກໍກ່າວອີກ, “ແມ່ນຈະເປັນເຊັ່ນນັ້ນ, ການກະທຳຄວນຈະເປັນໄປດ້ວຍກາຍ, ວາຈາ, ແລະໃຈທີ່ເຫັນວ່າໄຕ່ຕອງຖີ່ຖ້ວນແລ້ວ.”*

*ມັດຊິມະນິກາຍ.໑.໔໑໕*

*Just as the River Ganges flows towards, inclines towards, tends towards the east, so too, one who cultivates and develops the Noble Eightfold Path flows towards , inclines towards, tends towards Nirvana.*

*S.V, 40*

*ເໝືອນດັ່ງຄືງຄາມະຫານະທີ ຍ່ອມໄຫຼໄປສູ່, ນ້ອມໄປສູ່, ມີທິດທາງໄປສູ່ທາງທິດຕາເວັນອອກສັນໃດ, ເຊັ່ນດຽວກັນ, ບຸກຄົນຜູ້ປະຕິບັດ ແລະຈະເລີນອະລິຍະມັກມີອົງແປດຍ່ອມໄຫຼໄປສູ່, ນ້ອມໄປສູ່, ກ້າວໄປສູ່ພຣະນິບພານສັນນັ້ນ.*

*ສັງຍຸດຕະນິກາຍ. ໕. ໔໐*

*Those who keep thinking, ‘He abused me!’ He struck me!’ ‘He oppressed me!’ ‘He robbed me!’ never still their hatred. But those who let go of such thoughts do. For in this world, hatred is never stilled by more hatred. It is love that stills hatred. This is an eternal truth.*

*Dhp.3-5*

*ບຸກຄົນທັງຫຼາຍເຫຼົ່າໃດໄດ້ແຕ່ຄຶດວ່າ, “ເຂົາໄດ້ດ່າກູແລ້ວ! ເຂົາໄດ້ຕີກູແລ້ວ! ເຂົ້າໄດ້ຂົ່ມເຫັງກູແລ້ວ! ເຂົາໄດ້ລັກຂອງກູແລ້ວ!” ເວນ(ເວຣະ)ທັງຫຼາຍຂອງ ບຸກຄົນເຫຼົ່ານັ້ນຍ່ອມບໍ່ດັບລົງໄດ້. ເພາະວ່າໃນໂລກນີ້, ເວນຍ່ອມບໍ່ລະງັບດ້ວຍການຈ່ອງເວນ. ແຕ່ລະງັບລົງໄດ້ຍ້ອນຄວາມຮັກ(ເມດຕາ). ທຳ(ທັມມະ) ນີ້ເປັນຄວາມຈິງອັນອະມະຕະ.*

*ທຳມະບົດ.ຂໍ້ ໓-໕*

## ພາກຜະໜວກ Appendix

ສາເຫດທີ່ກໍ່ໃຫ້ເກີດການຜິດສິນຂໍ້ທີ ໓ ຄືກ່ຽວກັບການປະພຶດຜິດໃນກາມ ຕາມທີ່ເຮົາເຄີຍໄດ້ຍິນວ່າ ຫ້າມຜິດລູກເຂົາ ເມຍເຂົານັ້ນ ແມ່ນໄດ້ຍິນຜູ້ເຖົ້າ ພໍ່ແມ່ຄູບາອາຈານເພີ່ອເວົ້າເລື້ອຍ ແຕ່ຫຼາຍຄົນກໍອາດບໍ່ຮູ້ວ່າ ເຮັດແນວໃດຈິ່ງຜິດແທ້. ໃນປຶ້ມເຫຼັ້ມນີ້ມີຄຳຖາມຢູ່ໜ້າທີ ໓໐ ຖາມວ່າ ການເສບສົມກັນກ່ອນແຕ່ງງານນັ້ນ ເປັນການຜິດສິນຂໍ້ນີ້ຫຼືບໍ່? ໃນຄຳຕອບເພິ່ນບອກວ່າ ຖ້າເປັນການຕົກລົງປົງໃຈກັນບໍ່ຜິດ ແຕ່ເຮົາມາລອງມາພິຈາລະນາຕາມ ໑໑ ຂໍ້ນີ້ ເຊິ່ງມີມາໃນ *ສາເລຍ‌ຍະກະສູດ* ດັ່ງນີ້:

໑. **ມາຕຸຣັກຂິຕາ** : ຜູ້ຍິງທີ່ຢູ່ໃນຄວາມຄຸ້ມຄອງຂອງແມ່,
໒. **ປິຕຸຣັກຂິຕາ** : ຜູ້ຍິງທີ່ຢູ່ໃນຄວາມຄຸ້ມຄອງຂອງພໍ່,
໓. **ມາຕາປິຕຸຣັກຂິຕາ** : ຜູ້ຍິງທີ່ຢູ່ໃນຄວາມຄຸ້ມຄອງຂອງພໍ່ແມ່,
໔. **ພາຕຸຣັກຂິຕາ** : ຜູ້ຍິງທີ່ຢູ່ໃນຄວາມຄຸ້ມຄອງດູແລຂອງພີ່ນ້ອງຊາຍ,
໕. **ພາຄິນີຣັກຂິຕາ** : ຜູ້ຍິງທີ່ຢູ່ໃນຄວາມຄຸ້ມຄອງດູແລຂອງພີ່ນ້ອງຍິງ,
໖. **ຍາຕິຣັກຂິຕາ** : ຜູ້ຍິງທີ່ຢູ່ໃນຄວາມດູແລຂອງຍາດພີ່ນ້ອງ,
໗. **ໂຄຕະຣັກຂິຕາ** : ຜູ້ຍິງທີ່ຢູ່ໃນຄວາມຄຸ້ມຄອງປົກປ້ອງດູແລຂອງຄອບຄົວວົງຕະກູນ,
໘. **ທັມມະຣັກຂິຕາ** :
ຜູ້ຍິງທີ່ຢູ່ໃນຄວາມຄຸ້ມຄອງປົກປ້ອງດູແລຂອງສິນທັມທາງສາສະໜາ,
໙. **ສັສສາມີກາ** : ຜູ້ຍິງທີ່ແຕ່ງງານມີສາມີແລ້ວ,
໑໐. **ສະປະຣິທັນທາ** : ຜູ້ຍິງທີ່ໄດ້ຮັບເລືອກໃຫ້ເປັນມະເຫສີຂອງພຣະຣາຊາ ຫຼືຜູ້ຍິງຂອງບຸລຸດທີ່ມີຄຸນນະທັມສູງ,
໑໑. **ມາລາກຸລະປະຣິກຂິຕາ** : ຜູ້ຍິງທີ່ໄດ້ຮັບການໃຫ້ພວງມາໄລອັນເປັນການໝັ້ນໝາຍໄວ້ແລ້ວ.

ໃນ ໑໑ ຂໍ້ຂ້າງເທິງນີ້ ຖ້າຜູ້ໃດໄປລ່ວງລະເມີດຜູ້ຍິງທີ່ຢູ່ໃນການຄຸ້ມຄອງຂອງຜູ້ທີ່ກ່າວໄວ້ ແລະການຄຸ້ມຄອງດູແລນັ້ນ ກໍບໍ່ໝາຍຄວາມວ່າຕ້ອງແມ່ນຕອນທີ່ຜູ້ຍິງຄົນນັ້ນຢູ່ເຮືອນຢ່າງດຽວ ຈິ່ງເອີ້ນວ່າຄຸ້ມຄອງ ແມ່ນແຕ່ພໍ່ແມ່ເຂົາເຈົ້າບໍ່ເຫັນ ແຕ່ຫວງແຫນລູກ ກໍຍັງໝາຍ

ຄວາມວ່າຄຸ້ມຄອງໄດ້ ນີ້ກໍອາດຈະເປັນສາເຫດໃຫ້ຜິດສິນຂໍ້ທີ ໑ ກໍເປັນໄດ້. ພານີ້ ຜູ້ແປໄດ້ນຳ ມາປະກອບ ເພື່ອເຂົ້າໃຈຕື່ມກ່ຽວກັບສິນຂໍ້ທີ ໑.

**Abbreviations: ອັກສອນຫຍໍ້ທີ່ໃຊ້ໃນປຶ້ມເຫຼັ້ມນີ້**

A: Anguttara Nikaya: ອັງຄຸຕຕະຣະນິກາຍ

Cor: Corinthians (The Bible): ໂຄຣິນທຽນ (ໃນຄຳພີໃບເບີ້ນ)

D: Digha Nikaya: ທີຄະນິກາຍ

Dhp: Dhammapada: ທັມມະບົດ

Jn: Jatakaniddanakatha: ຊາຕະກະນິດທານະກະຖາ(ນິທານຊາດົກ)

M: Majjhima Nikaya: ມັດຊິມະນິກາຍ

S: Samyutta Nikaya: ສັງຍຸຕຕະນິກາຍ

Sn: Sutta Nipata: ສຸຕຕະນິບາຕ

Ud: Udana: ອຸທານະ

Vin: Vinaya: ພຣະວິໄນ

## About the author



The author, Venerable Shravasti Dhammika, is a distinguished lecturer and Buddhist monk from Australia. He has spoken on Buddhism and Asian religions in universities and on television and radio in Australia and throughout Asia. In this book, Venerable Dhammika answers questions that people often ask about the Buddha's teachings.

## ກ່ຽວກັບຜູ້ຂຽນ

ທ່ານພຣະອາຈານ ສະວັດສະຕິ ທັມມິກະ ເປັນນັກປາຖະກະຖາທີ່ມີຊື່ສຽງຜູ້ໜຶ່ງ ເປັນພຣະສົງ ຈາກປະເທດອອດສະເຕຣເລຍ ບັນຍາຍກ່ຽວກັບພຣະພຸດທະສາສະໜາ ແລະສາສະໜາຕ່າງໆໃນເອເຊຍ ຕາມມະຫາວິທະຍາໄລ ທາງໂທລະພາບ ແລະວິທະຍຸ ໃນປະເທດອົດສະຕາລີ ແລະທົ່ວເອເຊຍ. ໃນປື້ມເຫຼັ້ມນີ້ ທ່ານພຣະອາຈານ ທັມມິກະ ຕອບຄຳຖາມທີ່ມີຄົນມັກຖາມເລື້ອຍໆ ກ່ຽວກັບຄຳສອນຂອງພຣະພຸດທະເຈົ້າ.

## About the translator



The translator, Venerable Sayadej Vongsopha, was born in Wat Nakhone village, Champasak district and province, ordained as a novice on 27 June 1994, and took higher ordination as a bhikkhu on 14 May 1998, under the preceptor of the Late Most Venerable Phrakru Bhavanabhilom Somsi Keokhiew( the Late Ecclesiastical Governor of Champasak Province) under whom he was the last disciple. He is a teacher at Sangha College, Vientiane.

## ກ່ຽວກັບຜູ້ແປ

ພຣະອາຈານ ໄຊຍະເດດ ວົງໂສພາ ເກີດທີ່ບ້ານວັດນະຄອນ ເມືອງ ແລະແຂວງຈຳປາສັກ ບວດເປັນເນນ ເມື່ອວັນທີ 27 ມິຖຸນາ 1994 ແລະອຸປະສົມບົດເປັນຄູບາ ເມື່ອວັນທີ 14 ພຶດສະພາ 1998 ໂດຍມີພຣະຄຣູພາວະນາພິລົມ ໂສມສີ ແກ້ວຂຽວ (ອະດີດປະທານ ອ.ພ.ສ ແຂວງຈຳປາສັກ) ເປັນອຸປັດຊາ ເປັນລູກສິດອົງສຸດທ້າຍຂອງເພິ່ນ ປັດຈຸບັນ ເປັນອາຈານສອນປະຈຳວິທະຍາໄລສົງ(ອົງຕື້), ນະຄອນຫຼວງວຽງຈັນ.

*"Wherever the Buddha's teachings have flourished,*

*either in cities or countrysides,*

*people would gain inconceivable benefits.*

*The land and people would be enveloped in peace.*

*The sun and moon will shine clear and bright.*

*Wind and rain would appear accordingly,*

*and there will be no disasters.*

*Nations would be prosperous*

*and there would be no use for soldiers or weapons.*

*People would abide by morality and accord with laws.*

*They would be courteous and humble,*

*and everyone would be content without injustices.*

*There would be no thefts or violence.*

*The strong would not dominate the weak*

*and everyone would get their fair share."*

~THE BUDDHA SPEAKS OF
THE INFINITE LIFE SUTRA OF
ADORNMENT, PURITY, EQUALITY
AND ENLIGHTENMENT OF
THE MAHAYANA SCHOOL~

## Taking Refuge with a mind of Bodhichitta

**In the Buddha, the Dharma and the Sangha,**
**I shall always take refuge**
**Until the attainment of full awakening.**

**Through the merit of practicing generosity**
**and other perfections,**
**May I swiftly accomplish Buddhahood,**
**And benefit of all sentient beings.**

## The Prayers of the Bodhisattvas

**With a wish to awaken all beings,**
**I shall always go for refuge**
**To the Buddha, Dharma, and Sangha,**
**Until I attain full enlightenment.**

**Possessing compassion and wisdom,**
**Today, in the Buddha's presence,**
**I sincerely generate**
**the supreme mind of Bodhichitta**
**For the benefit of all sentient beings.**

"As long as space endures,
As long as sentient beings dwell,
Until then, may I too remain
To dispel the miseries of all sentient beings."

# GREAT VOW

**BODHISATTVA EARTH-TREASURY**
**( BODHISATTVA KSITIGARBHA )**

**" Unless Hells become empty,**
**I vow not to attain Buddhahood;**
**Till all have achieved the Ultimate Liberation,**
**I shall then consider my Enlightenment full !"**

**Bodhisattva Earth-Treasury is entrusted as the Caretaker of the World until Buddha Maitreya reincarnates on Earth in 5.7 billion years.**

**Reciting the Holy Name:**
**NAMO BODHISATTVA EARTH-TREASURY**

**Karma-erasing Mantra:**
**OM BA LA MO LING TO NING SVAHA**

# The Teachings Of Great Master Yin Guang

**************************************************************

Whether one is a layperson or has left the home-life, one should respect elders and be harmonious to those surrounding him. One should endure what others cannot, and practice what others cannot achieve. One should take others' difficulties unto oneself and help them succeed in their undertakings. While sitting quietly, one should often reflect upon one's own faults, and when chatting with friends, one should not discuss the rights and wrongs of others. In every action one makes, whether dressing or eating, from dawn to dusk and dusk till dawn, one should not cease to recite the AMITABHA Buddha's name. Aside from Buddha recitation, whether reciting quietly or silently, one should not give rise to other improper thoughts. If wandering thoughts appear, one should immediately dismiss them. Constantly maintain a humble and repentant heart; even if one has upheld true cultivation, one should still feel one's practice is shallow and never boast. One should mind one's own business and not the business of others. Only look after the good examples of others instead of bad ones. One should see oneself as mundane and everyone else as Bodhisattvas. If one can cultivate according to these teachings, one is sure to reach the Western Pure Land of Ultimate Bliss.

**Homage to Amitabha! Amitabha!**

# Samantabhadra’s Admonition

**This day is done,**
**And life dwindles accordingly.**
**Like fish with little water,**
**what joy is there !**

**Endeavor for good progress,**
**As if to fight a fire burning on one’s own head.**
**Just keep impermanence in mind,**
**And guard against looseness and indifference.**

**Namo Amita Buddha !**

# TAKING REFUGE IN THE TRIPLE JEWELS

To the Buddha I return and rely,
returning from delusions and
relying upon Awareness and Understanding.

To the Dharma I return and rely,
returning from erroneous views and
relying upon Proper Views and Understanding.

To the Sangha I return and rely,
returning from pollutions and disharmony and
relying upon Purity of Mind and
the Six Principles of Living in Harmony.

※※※※※※※※※※※※※※※※※※※※※※

**Be mindful of Amitabha!**
**Namo Amitabha!**
**Homage to Amita Buddha!**

**May every living being, drowning and adrift,**
Soon return to the Pure Land of Limitless Light!

With bad advisors forever left behind,
From paths of evil he departs for eternity,
Soon to see the Buddha of Limitless Light
And perfect Samantabhadra's Supreme Vows.

The supreme and endless blessings
of Samantabhadra's deeds,
I now universally transfer.
May every living being, drowning and adrift,
Soon return to the Pure Land of Limitless Light!

**✻ The Vows of Samantabhadra ✻**

I vow that when my life approaches its end,
All obstructions will be swept away;
I will see Amitabha Buddha,
And be born in His Western Pure Land of
Ultimate Bliss and Peace.

When reborn in the Western Pure Land,
I will perfect and completely fulfill
Without exception these Great Vows,
To delight and benefit all beings.

**✻ The Vows of Samantabhadra Avatamsaka Sutra ✻**